# ນິທານພື້ນເມືອງລາວ-ກະຕູ



ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

ສະຖາບັນຄົ້ນຄ້ວາວັດທະນະທຳ

2005



ຄົນບູຮານ ບ້ານກະດອນ, ເມືອງທ່າແຕງ



ເຄື່ອງນຸ່ງພື້ນບ້ານ ເຜົ່າກະຕູ



ນາງລາວ, ທີ່ເມືອງກະລຶມ

# ນິທານພື້ນເມືອງລາວ-ກະຕູ

ກະຊວງຖະແຫຼງຂ່າວ ແລະວັດທະນະທຳ
ສະຖາບັນຄົ້ນຄວ້າວັດທະນະທຳ

2005

ພິມທີ່ ວິສາຫະກິດໂຮງພິມສຶກສາ
ຕາມ : ລທບ 196ພຈ29042005
ຈຳນວນ 1.000 ເຫຼັ້ມ

# ຄຳນຳ

ໃນສ່ວນຫຼວງຫຼາຍແລ້ວ ນິທານພື້ນເມືອງ ບັນດາເຜົ່າ ເປັນວັນນະຄະດີ ປາກເປົ່າ ທີ່ເລົ່າກັນມາຫຼາຍເຊັ່ນຄົນ ຈົນບໍ່ຮູ້ວ່າ ເກີດມາແຕ່ຍຸກໃດສະໄໝໃດ. ແມ່ນວັນນະກຳ ທີ່ມະນຸດປະດິດແຕ່ງຂຶ້ນ ບົນພື້ນຖານ ການບັນທຶກເຫດການ ຄວາມຄິດ ຄວາມເຊື່ອຖື ການຕໍ່ສູ້ກັບໄພທຳມະຊາດເພື່ອການຢູ່ລອດ ທັງສະແດງຄວາມມຸ່ງມາດປາຖະໜາຂອງຕົນ ເພື່ອເຮັດແນວໃດໃຫ້ມີຊີວິດທີ່ດີຂຶ້ນ ກ້າວເຂົ້າສູ່ສັງຄົມທີ່ສີວິໄລ ແລະຍຸດຕິທຳ. ວັນນະຄະດີປະເພດເລົ່າສືບໆກັນມານີ້ ໄດ້ໃຫ້ຄວາມຮູ້ ຄວາມຮັກ ຄວາມຊັງ ຄວາມຄຽດແຄ້ນ ຄວາມໂສກເສົ້າ ເສັຽໃຈ ຄວາມ ດີໃຈ ຄວາມບັນເທີງຕ່າງໆ ແລະໃຫ້ທັງປັດຊະຍາຄະຕິ ທີ່ອຸດົມຮັ່ງມີ ໃຫ້ແກ່ຜູ້ຟັງໄດ້ຢ່າງດູດດື່ມ. ພ້ອມໆກັນນັ້ນ ກໍ່ຍັງໄດ້ສ້າງນັກເລົ່ານິທານທີ່ດີ ມີພອນສະຫວັນເລົ່າສືບໆກັນມາຫຼາຍເຊັ່ນຄົນຈົນກາຍເປັນ ວັດທະນະທຳພື້ນບ້ານ ທີ່ຂາດບໍ່ໄດ້ໃນທຸກໆຊົນຊາດຊົນເຜົ່າ.

ທ່ານບຸນເລື່ອນ ສຸລາວັນ ແມ່ນນັກຄົ້ນຄວ້າ ວັນທະນະທຳທາງຊົນເຜົ່າຜູ້ໜຶ່ງ ທີ່ມີຄວາມມານະ ພະຍາຍາມ ດຳເນີນການເກັບກຳ ວັດທະນະທຳ ພື້ນບ້ານ ຂອງເຜົ່າກະຕູຂອງຕົນໄວ້ໄດ້ຢ່າງໜ້າຊື່ນຊົມ. ສະນັ້ນ ຂ້າພະເຈົ້າ ຈຶ່ງຂໍຊົມເຊີຍຢ່າງສຸດໃຈ ຕໍ່ນັກຄົ້ນຄວ້າທ່ານນີ້ ທີ່ເປັນເພື່ອນຮ່ວມງານຂອງສະຖາບັນຄົ້ນຄວ້າ ວັດທະນະທຳ ພ້ອມທັງ ອວຍພອນໄຊໃຫ້ທ່ານ ຈົ່ງມີຄວາມສຸກ ແລະປະສົບຜົນສຳເລັດທຸກຢ່າງໃນວຽກງານ ແລະຊີວິດສ່ວນຕົວ.

ຂ້າພະເຈົ້າ ຂໍສະແດງຄວາມຄອບໃຈຢ່າງເລິກເຊິ່ງ ຕໍ່ອົງການ ຊິດເຊ ( CIDSE ) ທີ່ປະກອບສ່ວນທຶນຮອນ ເຂົ້າໃນການປົກປັກຮັກສາ ແລະພັດທະນາ ວັດທະນະທຳຮ່ວມກັບພວກຂ້າພະເຈົ້ານະໂອກາດນີ້ດ້ວຍ.

ວຽງຈັນ ວັນທີ 5 ທັນວາ 2003

ຫົວໜ້າ ສະຖາບັນຄົ້ນຄວ້າ ວັດທະນະທຳ

ດຣ. ຈັນທະພິລິດ ຈຽມສີສຸລາດ

# ຄຳນຳ

ໃນຂະບວນການຄົ້ນຄວ້າ ເພື່ອກອບກູ້ເອົາວັດທະນະທຳອັນດັ້ງເດີມຂອງເຜົ່າໜຶ່ງໆ ຕ້ອງອາໄສເວລາຫຼາຍປີພໍສົມຄວນ ຈຶ່ງສາມາດເກັບກຳຂໍ້ມູນຫຼາຍຢ່າງເປັນລະບົບຕາມຄວາມເຊື່ອຖືຂອງເຜົ່າທີ່ສ້າງຂຶ້ນ ຫຼືເກີດຂຶ້ນໃນຍຸກໃດຍຸກໜຶ່ງ ບໍ່ມີໃຜຈະສາມາດກຳນົດ ມັນເກີດຂຶ້ນໃນປີນັ້ນປີນີ້ໄດ້ ແຕ່ລະເລື່ອງຂອງນິທານພື້ນເມືອງ ໃນແຕ່ລະເລື່ອງຂອງຮີດຄອງປະເພນີຕ່າງໆ ແມ່ນອອກມາຈາກການດຳລົງຊີວິດທີ່ລະອິດລະອຽດ, ທັງລຳບາກກາກກຳແສນທໍລະມານຈາກທຳມະຊາດ, ເຂົາເຈົ້າຂຶ້ນກັບທຳມະຊາດ ແລະ ເພິ່ງທຳມະຊາດ ແມ່ນເປັນຄວາມຈິງແທ້ທີ່ເຂົາເຈົ້າມີປະສົບປະການ ໃນຊີວິດຂອງຄົນບູຮານນັ້ນ ມັນແມ່ນວັນນະກຳແຫ່ງການພັດທະນາວັນນະຄະດີຂອງເຜົ່າກະຕູ ໃນຍຸກບູຮານທີ່ມີການສືບທອດກັນມາ. ພາກັນເລົ່າເລື່ອງປາກຕໍ່ປາກໃຫ້ກັນມາຫຼາຍຊົ່ວຄົນແລ້ວ ເຊິ່ງມະນຸດບໍ່ຄວນປະຕິເສດຈະຕ້ອງຮັບຮູ້ເອົາຄວາມເປັນມາຂອງເຜົ່ານັ້ນ.

ຂ້າພະເຈົ້າ ເຫັນບັນຫາການປົກປັກຮັກສາວັດທະນະທຳ ແລະການອະນຸຮັກຮີດຄອງປະເພນີຂອງມະນຸດບູຮານສ້າງຂຶ້ນ ເວົ້າລວມມັນແມ່ນມູນມໍລະດົກອັນລ້ຳຄ່າທີ່ອຸດົມຮັ່ງມີທາງດ້ານວັດທະນະທຳຂອງຊາດເຮົາຢ່າງສູງ ເຊິ່ງນັກຄົ້ນຄວ້າພາກັນເອົາໃຈໃສ່ຊອກຫາຂໍ້ມູນ ເພື່ອຮິບໂຮມເປັນຂໍ້ມູນອັນສົມບູນນັ້ນແມ່ນອາໄສຄວາມອົດທົນພະຍາຍາມດ້ວຍຄວາມບາກບັ່ນອີ່ຫຼີ ຈຶ່ງຈະເຫັນ ການແຕກດອກອອກຜົນໃຫ້ເຫັນໄດ້ໃນທີ່ຜ່ານມາ. ດັ່ງນັ້ນ, ມີຈຳນວນພົນລະເມືອງຂອງຄົນກະຕູໃນປະຈຸບັນນີ້ ທີ່ບໍ່ເປັນທາງການເຊິ່ງມີຈຳນວນປະມານ 25.000 ກວ່າຄົນໃນທົ່ວປະເທດ ໃນນັ້ນມີເຜົ່າກະຕູຢູ່ແຂວງເຊກອງ, ແຂວງຈຳປາສັກ ແລະ ແຂວງສາລະວັນເປັນຕົ້ນ. ຂ້າພະເຈົ້າ ໄດ້ມີເວລາເກັບກຳຂໍ້ມູນຕ່າງໆຈາກປະຊາຊົນໄດ້ສິບເອັດປີມາແລ້ວ. ຂ້າພະເຈົ້າຄິດວ່າຂໍ້ມູນດັ່ງກ່າວນີ້ເປັນປະໂຫຍດຢ່າງຍິ່ງສຳຫຼັບການອະນຸຮັກວັດທະນະທຳນີ້ໄວ້, ເພື່ອຮັບໃຊ້ໃຫ້ແກ່ການຄົ້ນຄວ້າ, ວິໄຈ ວິເຄາະທັງພາຍໃນ ແລະ ຕ່າງປະເທດຢ່າງຍາວນານອີກດ້ວຍ, ຂ້າພະເຈົ້າໄດ້ຈັດເປັນໝວດຂອງເລື່ອງມີ 13 ໝວດ; ມີ 48 ເລື່ອງ ສ່ວນຫຼາຍເປັນເທບນິຍາຍ, ນິທານເລົ່າດ້ວຍປາກເປົ່າມາບັນທຶກ ແລະ ແປອອກເປັນພາສາລາວມີຄວາມຫຍຸ້ງຍາກພໍສົມຄວນ ເພາະວ່າໄວຍາກອນ ຫຼືຄຳສັບມັນ ແຕກຕ່າງກັນ ຂ້າພະເຈົ້າຜູ້ຂຽນນັ້ນໄດ້ອະທິບາຍເພື່ອຊ່ວຍໃຫ້ທ່ານຜູ້ອ່ານເຂົ້າໃຈເລື່ອງລາວ ຕ່າງໆຂອງເຜົ່າກະຕູບູຮານ ມັນມີຄວາມມຸ່ງມາດປາດຖະໜາຢາກຄົ້ນຄວ້າ ແລະ ອະນຸຮັກນິທານບໍ່ຕ່ຳກວ່າແຕ່ 400-600 ເລື່ອງ; ຕາມທິດທາງການຄົ້ນຄວ້າຕໍ່ໆໄປອີກດ້ວຍ.

ຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງຕໍ່ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ເວົ້າລວມເວົ້າສະເພາະແມ່ນສະຖາບັນຄົ້ນຄວ້າວັດທະນະທຳ ແລະ ສະຖາບັນຄົ້ນຄວ້າພາສາສາດເປັນຜູ້ກວດແກ້ຄຳສັບ, ຮຽບຮຽງປະໂຫຍກຕ່າງໆໄດ້ຈຳນວນໜຶ່ງ, ຍັງອີກບາງປະໂຫຍກໄດ້ຮັກສາແບບວັດທະນະທຳຂອງເຜົ່າກະຕູໄວ້ອີກ. ຂ້າພະເຈົ້າພາກພູມໃຈຫຼາຍທີ່ໄດ້ຮັບການອຸປະຖຳຈາກອົງການຊິດເຊ ຖືເປັນຜົນສຳເລັດອັນສຳຄັນມາໃນນະທີ່ນີ້ອີກດ້ວຍ. ຂ້າພະເຈົ້າບໍ່ລືມບຸນຄຸນຕໍ່ອົງການສາກົນ ແລະ ການຈັດຕັ້ງ ຫຼືບຸກຄົນຢູ່ພາຍໃນປະເທດ ໂດຍສະເພາະແມ່ນຄົນເຜົ່າກະຕູທີ່ໃຫ້ກຳລັງໃຈໃຫ້ແກ່ຂ້າພະເຈົ້າໃນການຄົ້ນຄວ້າລຸລ່ວງໄປໂດຍດີ ເຖິງວ່າສະຖານະການຂອງສະພາບບ້ານເມືອງທີ່ ກຳລັງຜັນແປ ແລະປ່ຽນ ແປງໃໝ່ອີກດ້ວຍ.

ວຽງຈັນ, ວັນທີ່ 2 ເດືອນ 12 ປີ 2003

ຜູ້ຄົ້ນຄວ້າວັດທະນະທຳ ແລະພາສາລາວ-ກະຕູ

ທ່ານ ຄຳເລື່ອນ ສຸລາວັນ

CIDSE
ອົງການ ການຮ່ວມມືສາກົນເພື່ອການພັດທະນາ ແລະ ສາມັກຄີ
International Cooperation for Development and Solidarity

## ຄຳນຳ

ປຶ້ມຫົວນີ້ ໄດ້ຮັບການສະໜັບສະໜູນທຶນໃນການຈັດພິມ ຈາກອົງການຊິດເຊ-ລາວ ເຊິ່ງເອີ້ນວ່າ ໂຄງການຂະໜາດນ້ອຍ. ອົງການຊິດເຊ-ລາວ ໄດ້ຮັບທຶນຈາກບັນດາຜູ້ໃຫ້ທຶນ ໃນທະວີບເອີຣົບ, ປະເທດນິວຊີແລນ ແລະ ການາດາ, ເຊິ່ງເປັນປະຊາຊົນຄົນທຳມະດາ ທີ່ຫາເຊົ້າກິນຄ່ຳ ທີ່ປະກອບອາຊີບ ກຳມະກອນ ຊາວນາ ແລະ ນັກຮຽນນັກສຶກສາ ເປັນຜູ້ທີ່ມີນ້ຳໃຈ ຍາກຊ່ອຍເຫຼືອ ແລະ ສະແດງຄວາມສາມັກຄີກັບປະຊາຊົນລາວ ເຂົາເຈົ້າໄດ້ທ້ອນໂຮມເງິນກັນ ຜູ້ລະເລັກ ລະນ້ອຍ ເປັນກ້ອນທຶນເພື່ອປະກອບສ່ວນໃນ ການສ້າງສາພັດທະນາປະເທດລາວ.

ຖ້າຜູ້ໃດ ມີແນວຄວາມຄິດສ້າງສັນ ແລະ ຫົວຄິດປະດິດສ້າງທີ່ແປກໃໝ່ ເປັນປະໂຫຍດຕໍ່ສັງຄົມ ໂດຍສະເພາະຜູ້ທຸກ ຜູ້ດ້ອຍໂອກາດ ບໍ່ວ່າຈະເປັນການພັດທະນາຄວາມຮູ້ຄວາມສາມາດ ການຄົ້ນຄ້ວາທົດລອງ ການຂີດຂຽນເອກະສານ... ເຊິ່ງເປັນກິດຈະກຳທີ່ມີຄວາມຍືນຍົງ, ທີ່ມີຜົນປະໂຫຍດຍາວນານຕໍ່ສັງຄົມ ກະລຸນາຕິດຕໍ່ພົວພັນທີ່ ອົງການຊິດເຊ-ລາວ, ທີ່ມີຫ້ອງການຕັ້ງຢູ່ເຮືອນເລກທີ່ 164/13, ຖະໜົນສີບຸນເຮືອງ, ຕູ້ ປ.ນ 2795, ວຽງຈັນ, ສປປ ລາວ, ໂທລະສັບ: 856.21.215443/262300, ແຟັກ: 856.21.215443.

**ອົງການ ຊິດເຊ-ລາວ**
ມັງກອນ 2004

# ສາລະບານ

## ນິທານພື້ນເມືອງລາວ - ກະຕູ


| | ໜ້າ |
|---|---|
| 1. ກ່ຽວກັບໂລກ | |
| 1.1 ເຜົາກຸ້ງເຫຼືອງ | 1 - 4 |
| 1.2 ນໍ້າຖ້ວມບ້ານຊຸ້ງລາຍ | 4 - 5 |
| 1.3 ນາງຟ້າ | 5 - 9 |
| 2. ຄົນກັບສັດ | |
| 2.1 ຄົນກັບກະຕ່າຍ | 9 - 23 |
| 2.2 ເອົາໄຂ່ນົກມາເປັນເມຍ | 23 - 29 |
| 3. ຊີວິດຄອບຄົວ | |
| 3.1 ພໍ່ສອນລູກ | 30 - 32 |
| 3.2 ແມ່ໝ້າຍ | 32 - 34 |
| 3.3 ຮັ່ງມີຍ້ອນລົງໂທດລູກ | 34 - 36 |
| 4. ຊີວິດຂອງຄົນ | |
| 4.1 ແມ່ເຖົ້າກັບຫຼານ | 37 - 38 |
| 4.2 ການເບິ່ງແຍງຄົນເຈັບ | 39 - 40 |
| 4.3 ການໄປເລາະຍິງສັດ | 40 - 42 |
| 4.4 ຕາຍຍ້ອນຫຼິ້ນໜ້າ | 42 - 43 |
| 4.5 ເອົາໃຈເມຍ | 44 - 46 |
| 4.6 ຫາມຄົນເຈັບ | 47 - 48 |
| 4.7 ສາວແກ່ | 48 - 50 |
| 4.8 ຄົນຮັ່ງມີ | 50 - 52 |
| 4.9 ເອົາຊໍກະບັ້ງເປັນຄ່າຫົວ | 52 - 55 |
| 4.10 ຄົນເປັນເສືອ | 55 - 56 |
| 5. ເມື່ອຕາຍໄປແລ້ວ | |
| 5.1 ເກີດເປັນໝີ | 57 - 57 |
| 5.2 ເກີດເປັນຟານ | 58 - 59 |
| 5.3 ເກີດເປັນເສືອແມວ | 59 - 61 |


24 / VII
ຫ້າມຈຳໜ່າຍ

5.4 ຜີຫຼອກຄົນ 61 - 62

5.5 ເກີດເປັນເສືອ 62 - 65

5.6 ຕາຍເປັນຫີນ 65 - 66

6. ຄົນຂີ້ຄ້ານ

6.1 ກາຍເປັນຄົນຮັ່ງມີ 66 - 69

6.2 ເປັນຈັກຈັ່ນ 69 - 71

7. ຄົນກັບທຳມະຊາດ

7.1 ລອຍນ້ຳໝອກ 72 - 73

7.2 ກົກໜ້ອງ 73 - 74

8. ກ່ຽວກັບຊີວິດ

8.1 ຄົນໄລ່ຂ້າເງົາ 75 - 76

8.2 ຄົນຖ້າສຽງ 76 - 78

8.3 ຄົນບູຮານ 78 - 79

8.4 ຍິນແຕ່ສຽງປາກ 80 - 81

9. ສິ່ງດົນບັນດານ

9.1 ຝັນເຫັນໄຫຄຳ 81 - 84

9.2 ຝັນເຫັນຖ້ວຍ 84 - 85

9.3 ຮັ່ງມີຍ້ອນໄຊກລາງ 85 - 87

10. ກ່ຽວກັບສັດ

10.1 ເຜິ້ງມີລະບຽບ 87 - 88

10.2 ໝາໄນຮູ້ຄຸນ 88 - 89

10.3 ກະຮອກດ່ອນ 90 - 91

11. ຄົນກັບເທວະດາ

11.1 ເທວະດາກັບນາງອະບັດ 91 - 95

11.2 ເມຍຈາກເມືອງຟ້າ 95 - 97

11.3 ຮອຍຈາລຶກ 97 - 99

12. ເກີດແກ່ຊີວິດ

12.1 ຕຶກປາ 99 -101

12.2 ຜີຫົວກຸດ 101-102

13. ຄົນບູຮານ

13.1 ຕະຣີກັບຕະຣາຍ 103-106

13.2 ອະແງະກັບອະເລີນ 106-108

13.3 ອະເຈີດກັບອະຈາຍ 108-111

13.4 ຕູບເຄື່ອງທານ 111-112

13.5 ທ້າວຕຣິກໄປກ້ານກົບ 112-114

# ນິທານພື້ນເມືອງ ລາວ-ກະຕູ

## 1. ກ່ຽວກັບໂລກ

### 1.1 ເຜົາກຸ້ງເຫຼືອງ

### (ອັຣງີຊາລອະຊວມ)

ຢູ່ໃນສະໄໝດຶກດຳບັນ ທຸກສັບພະສິ່ງທັງຫຼາຍລ້ວນແລ້ວແຕ່ຮູ້ຈັກປາກເວົ້ານຳກັນ, ພວກເຂົາເຈົ້າພ້ອມພາກັນທຳມາຫາກິນຕາມຜືນແຜ່ນດິນໃນທົ່ວໂລກ. ໃນຍຸກນັ້ນມະນຸດສາມາດໂອ້ລົມກັນກັບສັດທຸກຊະນິດຢູ່ໃນໂລກ ແລະ ຈຳພວກພຶກສາຊາດ, ມີພາສາປາກເວົ້າຢ່າງຫຼາກຫຼາຍທີ່ເວົ້າຈາປາໄສໃສ່ກັນຢ່າງສະບາຍ.

ວັນເວລາໄດ້ຜ່ານພົ້ນໄປຫຼາຍສະຕະວັດ, ການດຳລົງຊີວິດຢູ່ຮ່ວມກັນ, ໃນແຕ່ລະຊະນິດສັບພະສິ່ງກໍ່ມີການຂະຫຍາຍຕົວ ໃນການທຳມາຫາກິນລ້ຽງຊີບຂອງຕົນເອງ ເພື່ອເອົາຊີວິດຢູ່ລອດໃນແຕ່ລະວັນ, ຈຳນວນຄົນນັບມື້ນັບເພີ່ມຂຶ້ນ, ຈຳນວນສັດສາວາສິ່ງກໍ່ເພີ່ມຂຶ້ນ, ພຶກສາຊາດກໍ່ແຜ່ຂະຫຍາຍຕົວຢ່າງວ່ອງໄວຢູ່ໃນໜ້າໂລກ. ສ່ວນສັດໃຫຍ່ໃຊ້ອຳນາດຕໍ່ສັດນ້ອຍ ແລະ ຄົນ. ສັດ ແລະ ຄົນຍາດຊີງບ່ອນທຳມາຫາກິນກັນຢູ່ໃນໜ້າໂລກ, ຄວາມຂັດແຍ່ງລະຫວ່າງຄົນກັບສັດນັບມື້ທະວີຄວາມຮຸນແຮງຫຼາຍຂຶ້ນຢ່າງຕໍ່ເນື່ອງກັນ, ຢ່າງຫຼາກຫຼາຍ. ຈາກນັ້ນມັນຈຶ່ງມີຄຳເວົ້າທີ່ວ່າ: ເຈົ້າເກັ່ງ, ຂ້ອຍເກັ່ງ ໝາຍຄວາມວ່າ ຄົນສາມາດເຮັດ (ອັຣງີ) ກັບສັດ ແລະ ສັດກໍ່ສາມາດເຮັດ (ອັຣງີ) ກັບ ຄົນຄືກັນ. ຈາກສະພາບດັ່ງກ່າວນີ້ ຄົນກັບສັດມີການທະເລາະວິວາດກັນຢ່າງໃຫຍ່, ຄົນເວົ້າກັບສັດວ່າຄົນສາມາດເອີ້ນເຈົ້າໄຟອອກມາໄໝ້ລາມໂລກ ເພື່ອດັບສູນສັດໃນໜ້າໂລກ ແຕ່ວ່າຈຳພວກສັດກໍ່ສາມາດເອີ້ນເຈົ້ານ້ຳອອກມາຖ້ວມລາມໂລກ ເພື່ອດັບມອດໄຟຢ່າງສະບາຍ.

ຕໍ່ມາຄົນກັບສັດຕ້ອງເຮັດ (ອັຣງີ) ໂລກດ້ວຍວິທີເຈົ້າໄຟກັບເຈົ້ານ້ຳອອກມາໄໝ້ ແລະ ຖ້ວມລາມໂລກຢ່າງແນ່ນອນ, ເພາະວ່າຄົນສາມາດເອີ້ນເຈົ້າໄຟວ່າແມ່ນຂ້ອຍເກັ່ງ, ຈະສາມາດດັບສູນທຸກສັບພະສິ່ງໃຫ້ຮາບກ້ຽງ, ສັດກໍ່ວ່າຂ້ອຍເກັ່ງຈະສາມາດດັບມອດເຈົ້າໄຟໃຫ້ສູນຫາຍໄປຈາກໂລກ. ໃນເມື່ອມີສະພາບການເປັນຄືແນວນັ້ນ, ເຈົ້າວິນຍານແຫ່ງໂລກເວົ້າວ່າ ພວກເຈົ້າເຮັດ (ອັຣງີ) ບໍ່ໄດ້ດົນ, ຕ້ອງເຮັດ (ອັຣງີ) ແບບພັບຕາແມັບດຽວໃຫ້ (ອັຣງີ) ຕ້ອງຈົບລົງໃນທັນທີ. ເຈົ້າວິນຍານແຫ່ງໂລກບອກໃຫ້ທັງສອງຝ່າຍຊອກຫາຂອງກາງມາເພື່ອ ໃຊ້ເປັນເຄື່ອງວັດແທກເວລາຂອງສົງຄາມ (ອັຣງີ) ຝ່າຍມະນຸດໄດ້ຕົກລົງເຫັນດີເປັນເອກະພາບເອົາເດັກ

ນ້ອຍເກີດໃໝ່ໄປເຜົາຖິ້ມໃສ່ກອງໄຟວ່າ ຜິວໜັງຈະອອກມີສີເຫຼືອງໄດ້ດົນປານໃດ? ແຕ່ການເອົາຄົນໄປທົດລອງກັບໄຟກ່ອນຊິອອກມີສີເຫຼືອງກໍ່ໃຊ້ເວລາດົນພໍສົມຄວນ. ຫຼັງຈາກນັ້ນ ພວກສັດສີ່ຕີນ ກໍ່ເອົາລູກຂອງຕົນເອງໄປເຜົາຖິ້ມໃສ່ກອງໄຟຍິ່ງອອກສີເຫຼືອງຊ້າກວ່າຄົນອີກ ດັ່ງນັ້ນການເຜົາສັດສີ່ຕີນອອກເປັນສີເຫຼືອງຈຶ່ງເປັນໄປບໍ່ໄດ້. ໃນເມື່ອເຫັນຄົນ, ສັດສີ່ຕີນເຜົາລູກຂອງຕົນເອງໃຫ້ເປັນສີເຫຼືອງບໍ່ໄດ້. ດັ່ງນັ້ນ ພວກສັດປີກກໍ່ເຮັດເຊັ່ນກັນອີກ ຄືເອົາໄຂ່ຂອງຕົນເອງໄປເຜົາຖິ້ມໃສ່ກອງໄຟແທນທີ່ຈະມີເນື້ອ ກາຍເກີດເປັນສີເຫຼືອງອອກມາທາງຝ່າຍສັດປີກຍິ່ງເກີດຊ້າກວ່າຄົນ ແລະ ສັດສີ່ຕີນອີກ. ຕໍ່ມາກໍ່ແມ່ນຜຽນ ຂອງສັດນ້ຳຄືປາ ແລະ ພວກພິກສາຊາດທັງຫຼາຍກໍ່ພາກັນເອົາລູກຂອງຕົນເອງເຜົາຖິ້ມໃສ່ກອງໄຟອີກ ແຕ່ສີເຫຼືອງກໍ່ບໍ່ປະກົດຕົວ ອອກມາໃຫ້ເຫັນແມ່ນແຕ່ໜ້ອຍດຽວເລີຍ (ພາສາກະຕູວ່າຊາລ). ສຸດທ້າຍແມ່ນຈຳພວກກຸ້ງ ເມື່ອເອົາລູກຂອງຕົນເອງເຜົາຖິ້ມໃສ່ກອງໄຟປັບບາດ ດຽວກໍ່ເຫັນວ່າເກີດມີສີເຫຼືອງຂຶ້ນທັນທີ, ເຈົ້າວິນຍານແຫ່ງໂລກຈຶ່ງຕົກລົງກັນວ່າໃຫ້ເອົາກຸ້ງເຜົາໄຟສາສົງຄາມ (ອັຣງີ) ຈະສິ້ນສຸດລົງໄວ, ຖ້າບໍ່ດັ່ງນັ້ນຄົນກັບສັດພ້ອມດ້ວຍທຸກສັບພະສິ່ງໃນໂລກ ຕ້ອງຖືກລ້າງຜານຊິບໍ່ມີອັນໃດເຫຼືອຄ້າງເທິງຜືນແຜ່ນດິນນີ້ເລີຍ (ພາສາກະຕູ ວ່າອັຣງີຊາລອະຊວມ ).

ຫຼັງຈາກນັ້ນ ເຈົ້າວິນຍານແຫ່ງໂລກໄດ້ຕົກລົງເຫັນດີໃຫ້ເຮັດສົງຄາມລາມລ້າງໂລກ ລະຫວ່າງຄົນກັບສັດ, ສົງຄາມກໍ່ເລີຍເກີດຂຶ້ນທັງຄົນ ແລະ ສັດໄດ້ເຊີນເຈົ້າວິນຍານແຫ່ງໂລກມາເປັນປະທານ ແລະ ເປັນກຳມະການຕັດສິນໃຫ້ທັງສອງຝ່າຍ ແລະ ຕິດຕາມສົງຄາມລາມລ້າງໂລກ. ສ່ວນເຈົ້າກຸ້ງ ກໍ່ໄດ້ມອບກຸ້ງໂຕໜຶ່ງເປັນຕົວແທນໃຫ້ແກ່ກຸ້ງ ເຮັດສົງຄາມລາມລ້າງໂລກຄັ້ງນີ້. ໃນເມື່ອເຖິງເວລາແລ້ວ ເຈົ້າວິນຍານແຫ່ງໂລກໄດ້ເຊີນເອົາມະນຸດຜູ້ໜຶ່ງເປັນຕົວແທນໃຫ້ແກ່ມະນຸດແລະ ໃຫ້ເປັນຜູ້ເອີ້ນເອົາເຈົ້າໄຟອອກມາ. ເຈົ້າວິນຍານແຫ່ງໂລກ ຈຶ່ງເຊີນເອົາທຸກສັບພະສິ່ງໃນໂລກ ໃຫ້ເລືອກເອົາສັດໂຕໜຶ່ງມາຕາງໜ້າເຮັດສົງຄາມກັບມະນຸດ ເພື່ອເປັນຜູ້ຮຽກເອີ້ນເຈົ້ານ້ຳອອກມາຖ້ວມລາມໂລກ.

ຫຼັງຈາກນັ້ນ ເຈົ້າວິນຍານແຫ່ງໂລກສັນຍານສົງຄາມ, ໃຫ້ຄົນກັບສັດເຮັດສົງຄາມໄດ້, ເຈົ້າວິນຍານແຫ່ງໂລກໄດ້ເວົ້ານຳຄົນ ແລະ ສັດວ່າ: ໃຫ້ພວກເຈົ້າຟັງການນັບແຕ່ໜຶ່ງເຖິງສາມ, ໃຫ້ພວກເຈົ້າເຮັດສົງຄາມໄດ້ໂລດ. ເຈົ້າວິນຍານແຫ່ງໂລກກໍ່ເລີ່ມນັບວ່າ ໜຶ່ງ! ສອງ! ສາມ! ເຈົ້າວິນຍານແຫ່ງໂລກກໍ່ຖິ້ມກຸ້ງໃສ່ກອງໄຟປັບຄາວດຽວ. ຄົນກໍ່ຮຽກເອີ້ນເຈົ້າໄຟອອກມາເຜົາຜານລາມລ້າງໂລກໃຫ້ໄວເທົ່າທີ່ຈະໄວໄດ້ ໃຫ້ດັບສູນທຸກສັບພະສິ່ງໃຫ້ຮາບກ້ຽງ, ສັດກໍ່ເອີ້ນເຈົ້ານ້ຳອອກມາຖ້ວມລາມລ້າງໂລກໃຫ້ໄວເທົ່າທີ່ຈະໄວໄດ້, ອອກມາດັບມອດແປວໄຟສົງຄາມລາມລ້າງເຜົາໂລກດ່ວນ. ເຈົ້າໄຟກໍ່ປະຕິບັດຕາມຄຳສັ່ງຂອງມະນຸດ ກໍ່ບອກໃຫ້ອອກມາເຜົາຜານລ້າງໜ້າໂລກຢ່າງໄວວາ ຕາມສັນຍາເຜົາກຸ້ງເຫຼືອງໃຫ້ທັນການ, ເຈົ້າໄຟໄດ້ສັງຫານລ້າງຜານສິ່ງ

ທີ່ມີຊີວິດຢ່າງຮາບກ້ຽງ. ແຕ່ເຈົ້ານ້ຳກໍ່ອອກມາຖ້ວມລາມ ລ້າງຜານດັບມອດເຈົ້າໄຟຢ່າງຮີບດ່ວນ ແລະ ທັນການ. ແລ້ວເຈົ້າວິນຍານແຫ່ງໂລກອອກ ມາປະກາດຢຸດຕິສົງຄາມເຜົາກຸ້ງເຫຼືອງລົງກັບທີ່. ສົງຄາມເຈົ້າໄຟ ແລະ ສົງຄາມເຈົ້ານ້ຳຖ້ວມ ໄໝ້ລາມລ້າງໂລກໄດ້ຈົບລົງໄປຢ່າງປ່າເຖື່ອນທີ່ສຸດ, ເຮັດໃຫ້ມະນຸດເສຍຊີວິດຢ່າງຫຼວງຫຼາຍ ແລະ ຈຳພວກສັດສາວາສິ່ງຖືກດັບສູນຫຼາຍທີ່ສຸດຢູ່ໃນໜ້າໂລກ.

ຫຼັງຈາກສົງຄາມສິ້ນສຸດລົງແລ້ວ, ກໍ່ໄດ້ເຮັດສັນຍາທັງສາມຝ່າຍຄື: ເຈົ້າວິນຍານແຫ່ງໂລກຮັບຜິດຊອບເຈົ້າໄຟ ແລະ ມະນຸດເປັນຜູ້ປົກປັກຮັກສາ ແລະ ສ້າງສາທຳມະຊາດຄືນໃໝ່, ສ່ວນສັດສາວາສິ່ງກໍ່ຮັກສາບໍ່ໃຫ້ນ້ຳຖ້ວມໂລກອີກ. ເຈົ້າວິນຍານແຫ່ງໂລກໄດ້ແບ່ງໜ້າທີ່ໃຫ້ແຕ່ລະຝ່າຍຄື: ເຈົ້າວິນຍານແຫ່ງໂລກ ເປັນຜູ້ຍົກຍ້າຍເຈົ້າໄຟນັ້ນໄປຢູ່ເມືອງຟ້າ, ເຈົ້າໄຟດັ່ງກ່າວມັນໄດ້ກັບກາຍເປັນດວງຕາເວັນຢູ່ນຳພວກເຮົາໃນທຸກມື້ນີ້. ສ່ວນມະນຸດເປັນຜູ້ປົກປັກຮັກສາການປາກເວົ້າ, ມີຊາດ ແລະ ມີພາສາເໝືອນເດີມ, ມະນຸດຂອງພວກເຮົາຈຶ່ງມີພາສາປາກເວົ້າມີຊີວິດມີຊີວາ ຈົນມາຮອດທຸກວັນນີ້. ສ່ວນສັດສາວາສິ່ງທັງຫຼາຍ ແລະ ສິ່ງທີ່ມີຊີວິດອື່ນໆ, ເຈົ້າວິນຍານແຫ່ງໂລກ ບໍ່ໃຫ້ມີພາສາປາກເວົ້າອີກ, ເຈົ້າວິນຍານແຫ່ງໂລກອະນຸຍາດໃຫ້ມີແຕ່ສຽງຮ້ອງ, ໃຫ້ຮູ້ຈັກເບິ່ງ, ໃຫ້ຮູ້ຈັກຟັງ, ໃຫ້ມີຊີວິດ, ໃຫ້ຮູ້ຄຳຮຽກຊື່, ຄຳດ່າວ່າ, ຄຳໄລ່ໜີ, ໃຫ້ຮຽນປາກຕາມມະນຸດບອກເທົ່ານັ້ນ. ຖ້າວ່າທຸກສັບພະສິ່ງທັງຫຼາຍ ມີພາສາປາກເວົ້າຢູ່ໃນໂລກ ໂລກຈະບໍ່ມີຄວາມສະຫງົບ ແລະ ຈະເກີດສົງຄາມລາມລ້າງໂລກອີກເທື່ອໃໝ່. ນອກນັ້ນເຈົ້າວິນຍານແຫ່ງໂລກໄດ້ມອບໜ້າທີ່ໃຫ້ຫີນເປັນຂອບຟ້າໂລກໃຫ້ດູດເລຍກິນນ້ຳຢູ່ທົ່ວທຸກມູນໂລກ, ບໍ່ໃຫ້ນ້ຳອັ່ງອໍຖ້ວມໂລກ, ໃຫ້ປາສະຫຼາມ ປາໂລມາ ດູດເລຍກິນນ້ຳບໍ່ໃຫ້ຂຶ້ນຖ້ວມໂລກ, ໃຫ້ພວກກະປູໃຫຍ່ທີ່ກະດົ້ງພັດເຂົ້ານັ້ນໃຫ້ແທັນກິນຕົ້ນໄມ້ທີ່ໄຫຼກ້ອງກັນຢູ່ນ້ຳທະເລ, ໃຫ້ເຈົ້າເທວະດາເຮັດໃຫ້ຝົນຕົກມາດັບມອດແປວໄຟທີ່ຕົກຄ້າງບາງບ່ອນຍັງມີຢູ່, ໄຟຕົກຄ້າງນັ້ນເອີ້ນວ່າ ພູເຂົາໄຟໃນສູ່ມື້ນີ້.

ເຈົ້າວິນຍານແຫ່ງໂລກ ໄດ້ຕັດສິນສົງຄາມລາມລ້າງໂລກສິ້ນສຸດລົງແລ້ວ, ເຈົ້າວິນຍານແຫ່ງໂລກກໍ່ສະເດັດຂຶ້ນເມືອເມືອງຟ້າຢ່າງຮຽບຮ້ອຍຈົນຮອດທຸກມື້ນີ້ ບໍ່ເຫັນເຈົ້າວິນຍານແຫ່ງໂລກກັບຄືນລົງມາອີກ. ສ່ວນມະນຸດໄດ້ເປັນເຈົ້າອຳນາດທີ່ຍິ່ງໃຫຍ່ຢູ່ໃນໂລກ, ມະນຸດເປັນສັດຕູກັບສັດ ແລະ ຈັບເອົາສັດສາວາສິ່ງມາເປັນອາຫານຂອງມະນຸດ ແລະ ສັດສາວາສິ່ງກໍ່ມາເປັນຂ້ອຍມະນຸດຈົນຮອດທຸກວັນນີ້. ນັບຕັ້ງແຕ່ມີສົງຄາມເຈົ້າໄຟ ແລະ ສົງຄາມເຈົ້ານ້ຳລາມລ້າງໂລກເປັນຕົ້ນມາ ໂລກໄດ້ເກີດມີສີສັນຫຼາກຫຼາຍຄື : ຢູ່ໃນສະໄໝໜຶ່ງໂລກຂອງພວກເຮົາມີແຕ່ດວງເດືອນ, ເຮັດໃຫ້ໂລກນີ້ ມີແຕ່ມືດກັບແຈ້ງເທົ່ານັ້ນ, ສະໄໝນັ້ນ ຄົນເຮົາສາມາດຖາກກ້ອນຫີນໄດ້, ຢຽບຫີນເປັນຮ້ອຍຕີນຄົນຢູ່ບາງບ່ອນຂອງໜ້າໂລກ, ແຕ່ກ່ອນບໍ່ມີພູເຂົາ, ຫຼັງຈາກສົງ

ຄາມລາມລ້າງໂລກຈຶ່ງມີພູເຂົາເກີດມີບ່ອນສູງບ່ອນຕ່ຳຢູ່ໃນໜ້າໂລກ, ເກີດມີຫ້ວຍນ້ຳລຳເຊລໍ່ລ້ຽງຊີວິດ ຂອງໂລກ.

ຫຼັງຈາກສິງຄາມເຜົາກຸ້ງເຫຼືອງສິ້ນສຸດລົງແລ້ວ, ຈຳພວກສັດສາວາສິ່ງ, ທຸກສັບພະສິ່ງ ວັດຖຸຕ່າງໆ ແລະ ພືກສາຊາດ ກໍ່ມີການປ່ຽນແປງຫຼາຍຮູບຫຼາຍສີຄື: ຕົ້ນໄມ້ໃບຫຍ້າເກີດມີສີສັນແຕກຕ່າງກັນຫຼາຍຢ່າງ, ຕົ້ນໄມ້ບາງຕົ້ນເປືອກເປັນເກັດ, ແລ້ວສັດສາວາສິ່ງກໍ່ປ່ຽນແປງໄປຕາມການເຜົາຜານຂອງເຈົ້າໄຟ ການຖືກເຜົາໄໝ້ໄດ້ເຮັດໃຫ້ສີຂອງມັນແຕກຕ່າງກັນ, ງູມີເກັດ, ໝີມີສີດຳ, ເສືອມີສີລາຍ ແລະອື່ນໆ. ຈຳພວກສັດໄດ້ຖືກ ແບ່ງເປັນສອງປະເພດຄື: ສັດບົກ ແລະ ສັດນ້ຳ, ສັດທີ່ຍອມຈຳນົນຮັບໃຊ້ມະນຸດໄດ້ແກ່ຊ້າງ, ຄວາຍ, ງົວ, ມ້າ. . . ສັດທີ່ຍອມຮຽນຕາມແບບມະນຸດໄດ້ແກ່ນົກສາລິກາ, ນົກແຂກ, ນົກທີ່ຍອມໃຫ້ມະນຸດກັກຂັງໄດ້ແກ່ນົກເຂົາ ແລະ ອື່ນໆ. ທຸກສິ່ງທຸກຢ່າງໃນໂລກໄດ້ຍອມຈຳນົນໃຫ້ແກ່ມະນຸດທັງໝົດ, ຍ້ອນວ່າສັດໄດ້ປະລາໄຊໃຫ້ແກ່ມະນຸດແລ້ວ, ມະນຸດຍາມໃດກໍ່ເປັນເຈົ້າໄຟຕະຫຼອດ, ສ່ວນທຸກສັບພະສິ່ງອື່ນໆຍາມໃດກໍ່ເປັນເຈົ້ານ້ຳຕະຫຼອດຊີວິດ.

## 1.2 ນ້ຳຖ້ວມບ້ານຊັງລາຍ
## (ອັຣງີຊັງລາຍ)

ສະໄໝກ່ອນນັ້ນ ນັບເປັນເວລາທີ່ດົນນານມາແລ້ວ ມີເລື່ອງເວົ້າກັນມາຫຼາຍຊົ່ວເຊັ່ນ ຄົນມາແລ້ວ ກ່ຽວກັບ(ອັຣງີ) ຢູ່ສອງບ້ານຄື: ບ້ານຊັງ ແລະ ບ້ານລາຍ, ສອງບ້ານນີ້ເກີດມີ (ອັຣງີ) ເປັນເຫດການທີ່ຄົນກະຕູແຕ່ລະຍຸກແຕ່ລະສະໄໝທີ່ມີຄວາມງຶດງໍ້ຢ່າງໜ້າມະຫາອັດສະຈັນໃຈແທ້.

ເຂົາເຈົ້າເລົ່າເລື່ອງລາວທີ່ເກີດຂຶ້ນມີ (ອັຣງີ ນ້ຳຖ້ວມບ້ານ, ເຂົາເຈົ້າເລົ່າເລື່ອງວ່າ ນ້ຳທີ່ມະນຸດເຮົາກິນເຮົາໃຊ້ໃນແຕ່ລະມື້, ເຂົາເຈົ້າເວົ້າກ່ຽວກັບນ້ຳຖ້ວມທີ່ມີຝົນຕົກແຮງ, ຝົນຕົກແກ່ຍາວເປັນເວລາຫຼາຍວັນຈຶ່ງເກີດມີນ້ຳຖ້ວມອັ່ງອໍ ແລະ ຖ້ວມບາງບ່ອນບາງທີ່ແລ້ວກໍ່ບົກລົງ ອັນນີ້ແມ່ນເຫດການຂອງ ປະກົດການທຳມະຊາດ.

ແຕ່ວ່າ (ອັຣງີຊັງລາຍ) ແມ່ນນ້ຳຖ້ວມບ້ານສອງບ້ານ, ເປັນນ້ຳໄຊກລາງຮ້າຍ, ເປັນນ້ຳອະພິນິຫານ, ນ້ຳໄຫຼທົ່ງອອກຈາກພື້ນໂລກສູ່ໜ້າດິນ, ນ້ຳໄຫຼຖ້ວມບ້ານທັງສອງຢ່າງຮຸນແຮງ, ເຮັດໃຫ້ສອງບ້ານນີ້ກາຍເປັນບ້ານໂງ່ນຫີນ ລຽນກັນເປັນແຖວຊາບລາບຈົນມາຮອດສູ່ມື້ນີ້. ເຂົາເຈົ້າເລົ່າ ເລື່ອງວ່າ ເຮືອນແຕ່ລະຫຼັງເປັນໂງ່ນຫີນ, ຄົນ, ຄວາຍ, ງົວ, ໝູ, ໝາ, ເປັດ, ໄກ່ ແລະ

ທຸກສິ່ງທຸກຢ່າງ ຢູ່ພາຍໃນບ້ານນັ້ນ ກໍ່ກາຍເປັນກ້ອນຫີນທັງໝົດ.

ຫຼັງຈາກ (ອັຣງິ) ມາໄດ້ຫຼາຍປີແລ້ວ, ຄົນກະຕູໃນເຂດນັ້ນໃຜໆກໍ່ບໍ່ກ້າເຂົ້າໄປໃກ້ບ່ອນນັ້ນ, ເຂົາເຈົ້າຢ້ານໂຊກລາງຮ້າຍນັ້ນ ຈະທຳລາຍເຂົາເຈົ້າອີກ, ດັ່ງນັ້ນ ເຂົາເຈົ້າຕ້ອງໄດ້ຫຼີກເວັ້ນຈາກເຄາະຮ້າຍທີ່ຈະມາອີກເທື່ອໃໝ່. ຕາມການເລົ່າເລື່ອງໃຫ້ຫຼາຍຄົນໄດ້ຮູ້ຈັກວ່າມາ ຮອດສູ່ມື້ນີ້, ມີແຕ່ຄົນຫວງດນາມເທົ່ານັ້ນທີ່ສາມາດເຂົ້າໄປໃກ້ບ້ານຊັງລາຍໄດ້, ເຂົາເຈົ້າຍັງໄດ້ຍິນສຽງຄົນແລ່ນ ໄລ່ຢອກຫຼິ້ນຕາມໂງ່ນຫີນ, ເຂົາເຈົ້າຍັງໄດ້ຍິນແຕ່ສຽງຄົນລົມກັນຊຸບຊິບຕາມໂງ່ນຫີນ, ແຕ່ບໍ່ປະກົດເຫັນໜ້າຄົນເລີຍ. ບ້ານຊັງລາຍແມ່ນຕັ້ງຢູ່ເທິງຍອດນ້ຳໂຕຣລ (ນ້ຳເຊໂລນ).

## 1.3 ນາງຟ້າ
## (ກະມີຣນາງ)

ໃນສະໄໝກ່ອນນັ້ນ, ເຂົາເຈົ້າເລົ່າລືກັນເລື່ອງນາງຟ້າວ່າ ເປັນຜູ້ສາວທີ່ສວຍສົດງົດງາມກວ່າໝູ່, ເຂົາເຈົ້າເລົ່າເລື່ອງກ່ຽວກັບເຮືອນຂອງນາງຟ້າ, ແມ່ນເປັນເຮືອນເສົາດຽວ, ຕັ້ງຢູ່ແຄມນ້ຳເຊແຫ່ງໜຶ່ງ, ເປັນເຮືອນທີ່ມີສະຖາປັດຕະຍະກຳພິເສດ, ການປະດັບປະດາດ້ວຍສີສັນສວຍສົດງົດງາມ ບໍ່ອາດຈະສາມາດພັນລະນາໃຫ້ຮູ້ຈັກໝົດທຸກຢ່າງໄດ້. ຕາມການບອກເລົ່າເລື່ອງເຮືອນຂອງນາງຟ້າມີສອງລັກສະນະຄື ໃນຍາມກາງຄືນມີລັກສະນະ ເໝືອນເຮືອນນົກກາງແກ ທີ່ມະນຸດໄດ້ສືບທອດເຮັດໃຫ້ນົກກາງແກຢູ່ມາຮອດສູ່ມື້ນີ້. ໃນຍາມກາງເວັນມີລັກສະນະຄືກັບທໍ່ເຈດີ, ຫໍຜີສັກສິດເສົາດຽວ ເຊິ່ງມະນຸດໄດ້ສືບທອດຮັກສາເປັນປະສາດນ້ອຍສຳລັບ ບູຊາສິ່ງສັກສິດ ຫຼືວ່າຫໍຜີຢູ່ຕໍ່ໜ້າເຮືອນ.

ນາງຟ້າໄດ້ດຳລົງຊີວິດມາໄດ້ຫຼາຍຟ້າຫຼາປີ ຢູ່ເຮືອນຫຼັງດັ່ງກ່າວທີ່ມີເສົາດຽວ, ມີຊານຄັກແນ່ສຳລັບເປັນບ່ອນນັ່ງຕໍ່າຫູກແພໄໝ, ນາງຟ້າຕໍ່າແຜ່ນແພທີ່ມີລວດລາຍສີສັນອັນສວຍ ສົດງົດງາມເປັນໜ້າງຶດງໍ້, ນາງຟ້າຕໍ່າສິ້ນ, ຕໍ່າຜ້າຫົ່ມ. ນາງຟ້າເປັນຄົນສະຫຼາດຫຼັກແຫຼມດີ, ພວກຜູ້ບ່າວໃຜໆກໍ່ຢາກໄດ້ນາງຟ້າມາເປັນເມຍມາຢູ່ຄອງເຮືອນ.

ນາງຟ້າລົມກັບພວກຜູ້ບ່າວວ່າ ສຳລັບຕົນເອງແລ້ວກໍ່ຍິນດີຮັບຕ້ອນທຸກຄົນສະເໝີ ນາງຟ້າເວົ້າວ່າ ຂ້ອຍບໍ່ຕິເຂົ້າເປືອກບໍ່ເລືອກເຂົ້າສານດອກສຸດແລ້ວ ແຕ່ນ້ຳໃຈຄົນດີທີ່ມີ ຄວາມອົດທົນຈັ່ງຊິໄດ້ມາເປັນຜົວມາຄອບຄອງໝາກຫົວໃຈຂອງຍິງຄົນນີ້, ນາງຟ້າເວົ້າອີກວ່າ: ຖ້າຫາກວ່າຜູ້ບ່າວຄົນໃດໄດ້ບັກ ປຳເສົາເຮືອນຂອງຂ້ອຍຂາດ ແລ້ວເຮືອນລົ້ມລົງສູ່ແມ່ນ້ຳ ແລະ ເຄື່ອງຂອງດີໆທີ່ມີຄຸນຄ່າສູງຈະຫຼັ່ງໄຫຼເຂົ້າຫຼີເຂົ້າຕ້ອນເຂົ້າໄຊຂອງຜູ້ໃດ, ຂ້ອຍກໍ່ຈະໄດ້ກາຍເປັນເມຍ

ຂອງຊາຍຄົນນັ້ນໂລດ.

ກ່ອນຈະບັກປຳເສົາເຮືອນນາງຟ້ານັ້ນ ເຂົາເຈົ້າໄດ້ທ້າງຫາກະກຽມເຮັດເຄື່ອງຂອງສຳລັບໂຕ່ງເອົາເຄື່ອງຂອງດີໆທີ່ມີຄຸນຄ່າສູງຂອງນາງຟ້າທີ່ຈະໄຫຼລົງ, ເຂົາເຈົ້າຍາດຊີງກັນເຮັດຫຼີ້, ເຮັດຕ້ອນ, ເຮັດໄຊຢູ່ຫົວຫາດ, ລູກພວກຜູ້ມີອຳນາດວາດສະໜາລູກຜູ້ໃຫຍ່ໄມ້ສູງ, ເຂົາເຈົ້າເລືອກເຮັດຫຼີ້, ເຮັດຕ້ອນ, ເຮັດໄຊຢູ່ບ່ອນນ້ຳເລິກ, ນ້ຳໄຫຼແຮງ. ສ່ວນລູກຄົນຮັ່ງມີ, ບຸກຄົນມີຖານະທາງເສດຖະກິດດີນັ້ນ ເຂົາເຈົ້າກໍ່ເລືອກເຮັດຫຼີ້ເຮັດຕ້ອນ ແລະ ເຮັດໄຊຕິດກັບລູກຫຼານມີອຳນາດ ວາດສະໜາ, ສ່ວນຄົນຜູ້ທຸກຍາກ, ຄົນກຳພ້າກຳພອຍນັ້ນ ເຮັດຫຼີ້, ເຮັດຊ້ອນ ແລະ ເຮັດໄຊຕາມແຄມນ້ຳ, ເຮັດບ່ອນນ້ຳຕື້ນ, ນ້ຳໄຫຼບໍ່ແຮງ, ເຄື່ອງຂອງດີໆທີ່ມີຄຸນຄ່າສູງບໍ່ສາມາດໄຫຼເຂົ້າໄດ້, ເຂົາເຈົ້າຍັງດູຖູກຄົນບໍ່ມີຖານະໃນສັງຄົມ, ປະເພດຄົນແບບນີ້ ພວກນາງຟ້າບໍ່ມັກດອກ.

ໃນເມື່ອໄດ້ຍິນຄຳເວົ້າຂອງນາງຟ້າແລ້ວ ພວກຜູ້ບ່າວໃຜໆກໍ່ຕື່ນເຕັ້ນ ແລະ ດີໃຈຫຼາຍວ່າຕົນເອງຕ້ອງມີຄວາມສາມາດບັກປຳເສົາເຮືອນຂອງນາງຟ້ານີ້ໄດ້, ພວກຜູ້ບ່າວຄົນຮັ່ງມີ ແລະພວກລູກເຈົ້າຫຼານນາຍທັງຫຼາຍ ກໍ່ພາກັນຍາດຊີງກັນໄປບັກປຳເສົາເຮືອນຂອງນາງຟ້າທຸກໆມື້. ແຕ່ລະຄົນບັກ ປຳເສົາເຮືອນໃກ້ຈະຂາດແລ້ວ, ນາງຟ້າຖອກນ້ຳຢາວິເສດ ຫຼື ເອີ້ນວ່າ ນ້ຳຢາຈອດ, ໃນເມື່ອນາງຟ້າຖອກລົງໄຫຼຕາມເສົາ, ນ້ຳຢາຈອດກໍ່ຈະຈອດຄືນ ຮອຍຟັນທີ່ຖືກບັກປຳນັ້ນຖືກລຶບອອກໄປໝົດ, ເສົາກໍ່ຄືເກົ່າເໝືອນເດີມອີກ. ນາງຟ້າເວົ້ານຳພວກຜູ້ບ່າວທີ່ຮັ່ງມີ ແລະລູກຫຼານຜູ້ມີອຳນາດວາດສະໜາວ່າ ຖ້າພວກເຈົ້າບັກປຳເສົາເຮືອນຂອງຂ້ອຍບໍ່ໄດ້ແລ້ວ, ໃຫ້ພວກເຈົ້າຂຶ້ນໄປບັກຕົ້ນໄຮຢູ່ເທິງສະຫວັນຊັ້ນຟ້າພຸ້ນສາ. ພະຍາເຈົ້າເມືອງ ຈຶ່ງແຕ່ງຕັ້ງໃຫ້ເຈົ້າລົງຂຶ້ນໄປບັກຕົ້ນໄຮຢູ່ເທິງສະຫວັນຊັ້ນຟ້າ, ເຈົ້າລົງຂຶ້ນໄປບັກຕົ້ນໄຮຢູ່ເທິງສະຫວັນຊັ້ນຟ້າຈົນຮອດທຸກມື້ນີ້ກໍ່ບໍ່ໄດ້ ແລ້ວເຈົ້າລົງກໍ່ບໍ່ເຫັນກັບຄືນສູ່ພື້ນໂລກອີກ.

ວັນເວລາໄດ້ຜ່ານພົ້ນໄປຫຼາຍປີມາແລ້ວ, ການສູ້ຊົນບຸກບືນພະຍາຍາມບັກປຳເສົາເຮືອນກໍ່ບໍ່ໄດ້, ໃຜໆກໍ່ບໍ່ຄິດຈະບັກປຳອີກ, ຫຼາຍຄົນເສຍກຳລັງໃຈຕົນເອງບັກປຳບໍ່ໄດ້, ບໍ່ຮູ້ວິທີຈະເຮັດແນວໃດອີກຈະບັກປຳເສົາເຮືອນຂອງນາງຟ້ານັ້ນໄດ້. ແຕ່ວ່າທ້າວກຳພ້າໄດ້ຕິດຕາມພວກລູກເຈົ້າຫຼານນາຍໄປບັກປຳເສົາເຮືອນຂອງນາງຟ້າບໍ່ໄດ້, ກໍ່ຍ້ອນວ່ານາງຟ້າມີນ້ຳຢາວິເສດຈອດຄືນໄດ້. ທ້າວກຳພ້າ ນັ່ງຄິດນອນຄິດວ່າຕົນເອງເປັນຄົນທຸກຍາກຈະເຮັດໄດ້ບໍ່? ຖ້າເຮັດໄດ້ບໍ່ຮູ້ວ່າ ນາງຟ້າ ຈະຕ້ອງການຄົນທຸກຍາກແບບຕົນເອງນີ້ບໍ່? ເວົ້າແລ້ວທ້າວ ກຳພ້າ ກໍ່ຄິດຊອກວິທີຈະເຮັດແນວໃດ ທີ່ຫຼອກລໍ້ໃຫ້ ນາງຟ້າຫຼົງລືມເບິ່ງ ແລະ ລືມຖອກນ້ຳຢາວິເສດຈອດເສົາເຮືອນ, ທ້າວກຳພ້າ ນັ່ງເບິ່ງນິໄສໃຈຄໍຂອງນາງຟ້າເປັນຄົນເຢືອກເຢັນນິໄສອ່ອນໂຍນ, ນາງມັກຍິ້ມມັກຫົວສະອິກສະອື້ນ. ທ້າວກຳພ້າຄິດວ່າຖ້າຕົນເອງແຕ່ງຕົວ ແລະ ນຸ່ງເຄື່ອງຄືແບບນີ້

ຈະເຮັດໃຫ້ນາງຟ້າຢາກຫົວເຢາະເຢີ້ຍຕໍ່ຕົນເອງຫຼາຍ, ອາດຈະເຮັດນາງຟ້າຫຼົງລືມຖອກນ້ຳຢາວິເສດຈອດໃສ່ເສົາເຮືອນຂອງນາງອີກດ້ວຍ.

ຫຼັງຈາກນັ້ນ ທ້າວກ່ຳພ້າ ຄິດຊອກຫາວິທີໄດ້ແລ້ວ, ທ້າວກ່ຳພ້າ ກໍ່ຫົວຍຸ້ມຢູ່ໃນໃຈວ່າຕົນເອງຈະໄດ້ນາງຟ້າ ນັ້ນມາເປັນເມຍ. ທຳອິດທ້າວກ່ຳພ້າຕີຂວານ, ເຮັດດ້າມຂວານຍາວປະມານເຄິ່ງວາ, ເຮັດຂວານແລ້ວ, ທ້າວກ່ຳພ້າ ພັນກອກຢາ, ເຮັດໄມ້ທີ່ຄາບຍາວປະມານເຄິ່ງວາ, ພັນກອກຢາແລ້ວ, ທ້າວກ່ຳພ້າ ກໍ່ໄປເອົາໝາມກົກໝາກສົ້ມໂອ, ມາບ່ອງຫູຕົນເອງ, ບ່ອງຫູແລ້ວທ້າວກ່ຳພ້າໄປຊອກຫາຂີ້ກະເດືອນໃຫຍ່ໃຫ້ໄດ້ໜຶ່ງໂຕ, ກ່ຳພ້າຈັບຂີ້ກະເດືອນມາຕັດຫົວອອກ, ແລ້ວແຫກຕົວຂີ້ກະເດືອນ, ລາວຂູດຂີ້ຂອງມັນອອກໃຫ້ໝົດແລ້ວ ເອົາຕາກໃຫ້ແຫ້ງ, ແລ້ວລາວຈັບເອົາຂີ້ກະເດືອນນ້ອຍສອງໂຕມາຕາກແຫ້ງໄວ້. ເມື່ອລາວກະກຽມຄົບຖ້ວນແລ້ວລໍຖ້າແຕ່ຂີ້ກະເດືອນແຫ້ງ, ພວກລູກເຈົ້າຫຼານນາຍ ຜູ້ຮັ່ງມີກໍ່ພາກັນມາຫົວເຢາະເຢີ້ຍລາວຢ່າງສະອຶກສະອື້ນວ່າ: ກ່ຳພ້າເອີຍ! ເຊົາເຈົ້າບໍ່ຕ້ອງເຮັດກໍ່ໄດ້ ! ສ່ຳເຈົ້ານັ້ນບໍ່ສາມາດບັກປຳ້ເສົາເຮືອນຂອງນາງຟ້າລົ້ມໄດ້ດອກ? ທ້າວກ່ຳພ້າ ຕອບວ່າຂ້ອຍເຮັດທົດລອງຫຼິ້ນຊື່ໆດອກ, ຄືນຄືຂ້ອຍນີ້ໄປໃກ້ເຮືອນນາງຟ້າບໍ່ໄດ້ດອກ ຖ້າຫາກວ່າຂ້ອຍໄປໃກ້ເຮືອນນາງຟ້າກໍ່ ນັບວ່າເປັນບຸນວາດສະໜາ ແລະ ໂຊກອັນສູງສົ່ງຂອງຂ້ອຍແລ້ວ.

ໃນເມື່ອມີໂອກາດດີ ທ້າວ ກ່ຳພ້າ ກໍ່ລັກອອກຈາກເຮືອນຂອງລາວໄປຫາເຮືອນຂອງນາງຟ້າ ໂດຍບໍ່ໃຫ້ຜູ້ອື່ນຮູ້ຈັກວ່າຕົນເອງໄປບັກປຳ້ເສົາເຮືອນນາງຟ້າ, ເພາະວ່າຕົນເອງບໍ່ສົມກັບຖານະທີ່ຈະມາບັກປຳ້ເສົາເຮືອນຂອງ ນາງຟ້າ ຄືກັບລູກເຈົ້າຫຼານນາຍຜູ້ຮັ່ງມີ. ທ້າວກ່ຳພ້າ ກໍ່ເດີນທາງໄປຫາເຮືອນນາງຟ້າແລ້ວ, ລາວແກ້ເຄື່ອງນຸ່ງຫົ່ມຂອງຕົນອອກແລ້ວ, ລາວເອົາຂີ້ກະເດືອນແຫ້ງອອກມານຸ່ງເຮັດເປັນກະຕ່ຽວ, ແລ້ວລາວເອົາໜ່ວຍໝາກໄຂ່ຫຳ (ແຕນແກູນ) ເຮັດຢ່ອນອອກມາ, ລາວເອົາຂີ້ກະເດືອນນ້ອຍສອດໃສ່ຫູສອງເບື້ອງ, ເອົາກອກຢາມາຄາບໃສ່ປາກ, ເອົາຂວານແບກໃສ່ບ່າ ແລ້ວຍ່າງໄປຫາເຮືອນນາງຟ້າ, ເມື່ອໄປເຖິງເຮືອນຂອງນາງຟ້າແລ້ວ, ນາງຟ້າ ເຫັນກໍ່ອົດຫົວບໍ່ໄດ້, ນາງຟ້າເລີຍ ຫົວສະອຶກສະອື້ນໃສ່ລາວ, ລາວຖືເປັນໂອກາດດີ, ແລ້ວລາວກໍ່ເຂົ້າກ້ອງເຮືອນໄປບັກປຳ້ເສົາເຮືອນ ຂອງນາງຟ້າ, ລາວບັກປຳ້ເສົາເຮືອນນາງຟ້າຢ່າງມີຈັງຫວະເຮັດແອວອ່ອນເນືອດໆ, ລາວເຮັດເໝືອນນົກກະແດບເດົ້າງດິນ. ລາວບັກປຳ້ເສົາເຮືອນຢ່າງຕັ້ງອົກຕັ້ງໃຈໃສ່ແທ້ໆ, ແຕ່ເບື້ອງນາງຟ້າພັດເອົາໃຈໃສ່ຫົວເຢາະເຢີ້ຍລາວຈົນຕາຕູບຕາໂປ, ນາງຟ້າ ພັດຫົວໄຂ່ຫຳທີ່ຢ່ອນອອກມາ ແລະ ໝອຍກໍ່ຢ່ອນອອກພໍມະຍ່ອມມະແຍ່ມ, ຜົມກໍ່ເຕື່ອຍຕົກປົກໜ້າ ເຮັດແຕະແຊະຕະຊະເປັນຕາຢາກຫົວແທ້ໆ. ໃນເມື່ອຫົວຫຼາຍນາງຟ້າເລີຍລືມຕິດຕາມ ການບັກ ປຳ້ເສົາເຮືອນຂອງຕົນເອງມັນເຮັດຮອດໃສແລ້ວ? ນາງຟ້າກໍ່ລືມຖອກນ້ຳຢາວິເສດລົງຈອດ, ທ້າວກ່ຳພ້າ ກໍ່ບັກປຳ້ເສົາເຮືອນນາງຟ້າລົ້ມລົງສູ່ແມ່ນ້ຳແຫ່ງນັ້ນໄດ້,

ລາວບັກປຳລົ້ມລົງໄດ້ແລ້ວລາວກັບເມືອເຮືອນຢ່າງມິດງຽບ, ນອນຟັງເອົາໂຊກເອົາໄຊລາວຈະໄດ້ນາງຟ້າມາເປັນເມຍຫຼືບໍ່? ຕື່ນເຊົ້າມາລູກເຈົ້າຫຼານນາຍຜູ້ຮັ່ງມີ ເຫັນເຮືອນນາງຟ້າລົ້ມລົງແລ້ວ, ເຂົາເຈົ້າໂຮພາກັນໄປຢາມຫຼີ້ຢາມຊ້ອນ ແລະ ຢາມໄຊຂອງຕົນ, ໃຜໆຄິດວ່າ ເຄື່ອງຂອງດີໆທີ່ມີຄຸນຄ່າສູງຂອງນາງຟ້າໄຫຼເຂົ້າໃສ່? ແຕ່ວ່າໃຜໆກໍ່ບໍ່ເຫັນມີຫຍັງຖືກ. ຫຼັງຈາກ ນັ້ນ ພວກເຂົາເຈົ້າກໍ່ພາກັບບ້ານທ້າວກຳພ້າ ລຸກຕື່ນຈາກບ່ອນນອນແລ້ວໄປຢາມຫຼີ້ຢາມຊ້ອນ ແລະຢາມໄຊຢູ່ແມ່ນ້ຳກໍ່ເຫັນເຄື່ອງຂອງດີໆທີ່ມີຄຸນຄ່າສູງຂອງນາງຟ້າ ໄຫຼມາຖືກຊ້ອນເຕັມອະຍະຢູ່, ລາວເກັບເມືອມ້ຽນໄວ້ຢູ່ເລົ້າເຂົ້າຂອງລາວ, ມື້ລຸນມານາງຟ້າກໍ່ນຳເມືອຫາເສື້ອຜ້າຢູ່ເລົ້າເຂົ້າ, ເພື່ອລໍຖ້າທ້າວກຳພ້າມາຕ້ອນຮັບເອົາ, ທ້າວກຳພ້າໄປເອົາເຂົ້າຢູ່ເລົ້າກໍ່ເຫັນນາງຟ້າມາຢູ່ແລ້ວ, ລາວເມືອລາຍງານແມ່ເຖົ້າວ່າ ໄດ້ນາງຟ້າມາແລ້ວແມ່ເຖົ້າເອີຍ ! ແມ່ເຖົ້າບອກໃຫ້ຫຼານນຸ່ງເສື້ອຜ້າງາມໆໄປຕ້ອນຮັບເອົານາງຟ້າມາເຮືອນ, ລາວແຕ່ງຕົວແລ້ວ ລາວຍ່າງໄປຕ້ອນຮັບເອົານາງຟ້າມາເຮືອນ, ນາງຟ້າບໍ່ມາ ນາງປະຕິເສດບໍ່ແມ່ນຜົວຂ້ອຍ, ຜົວຂ້ອຍເປັນຄົນທຸກຍາກນຸ່ງສອດກະຕ່ຽວຂີ້ກະເດືອນ, ເຈົ້າບໍ່ແມ່ນຜົວຂອງຂ້ອຍ. ທ້າວກຳພ້າໄດ້ຍິນຄຳເວົ້າຂອງນາງຟ້າປະຕິເສດຕົນເອງແລ້ວ, ກໍ່ກັບເມືອເຮືອນແລ້ວປ່ຽນເຄື່ອງນຸ່ງໃນເວລາຕົນເອງໄປບັກປຳເສົາເຮືອນຂອງນາງ, ແລ້ວໄປຕ້ອນຮັບເອົານາງ, ນາງຟ້າກໍ່ມານຳໂລດ, ທ້າວກຳພ້າ ແລະ ແມ່ເຖົ້າກໍ່ມີຄວາມພາກພູມໃຈຫຼາຍທີ່ສຸດທີ່ຕົນເອງໄດ້ລູກໄພ້ຂອງເທວະດາຟ້າແຖນມາເຮືອນແມ່ນໂຊກລາບອັນໃຫຍ່ຫຼວງຂອງຄົນທຸກຍາກ, ນັບຕັ້ງນັ້ນມາ ລາວຈຶ່ງເປັນຄົນມີຊື່ສຽງ ແລະ ມີຖານະໃນສັງຄົມຄົນທັງຫຼາຍກໍ່ຮັບຮູ້ຄວາມສາມາດ, ຄວາມສະຫຼາດສະຫຼຽວ, ມີພິກໄຫວອັນສູງສົ່ງຂອງລາວ ຈຶ່ງສາມາດເອົາຊະນະໃຈນາງຟ້າໄດ້ຢ່າງງ່າຍດາຍ.

ຫຼັງຈາກທີ່ທ້າວກຳພ້າໄດ້ເມຍ ລູກເຈົ້າເທວະດາຟ້າແຖນຍ້ອນການບ່ອງຫູ ແລະ ນຸ່ງສອດກະຕ່ຽວຂີ້ກະເດືອນ ຈຶ່ງສາມາດເອົາຊະນະໃຈນາງຟ້າໄດ້, ເປັນກຽດ ແລະ ຊື່ສຽງອັນຍິ່ງ, ທັງເປັນບົດຮຽນ, ເປັນຄວາມກະຕືລືລົ້ນດ້ານຈິດໃຈຂອງໄວໜຸ່ມ, ໃຜໆຢາກພົບຢາກເຫັນນາງຟ້າ, ໃຜໆກໍ່ຢາກເອົາແບບຢ່າງຈາກທ້າວກຳພ້າ. ນັບຕັ້ງແຕ່ນັ້ນມາຜູ້ຊາຍຄົນກະຕູຈຶ່ງລິເລີ່ມນິຍົມບ່ອງຫູ, ນຸ່ງສອດກະຕ່ຽວ, ການບ່ອງຫູ ແລະ ສອດກະຕ່ຽວນັ້ນ ໄດ້ກັບກາຍເປັນປະເພນີ, ວັດທະນະທຳຂອງຊົນເຜົ່າກະຕູ. ໃນຕໍ່ມາການບ່ອງຫູກາຍເປັນປະເພນີ ທີ່ມີການຈຳແນກກັນລະຫວ່າງເພດຊາຍ ແລະເພດຍິງ. ເພດຍິງການບ່ອງຫູແມ່ນພໍ່ແມ່ ເປັນຜູ້ບ່ອງຫູໃຫ້ໂລດເລີ່ມແຕ່ມື້ເກີດມາ, ການບ່ອງຫູຂອງແມ່ຍິງມີສາມລະດັບຄື: ລະດັບ ທີ່ໜຶ່ງແມ່ນເດັກນ້ອຍ, ເຂົາເຈົ້າບ່ອງຫູແລ້ວ, ເຂົາເຈົ້າເອົາເສັ້ນຝ້າຍສອດມັດໄວ້, ລະດັບທີ່ສອງແມ່ນພວມຂຶ້ນສາວ, ເຂົາເຈົ້າໃສ່ຕຸ້ມຫູເປັນບ້ວງ ຫຼືເປັນວົງ, ເພື່ອເປັນສັນຍະລັກວ່າເປັນສາວແລ້ວ, ລະດັບທີ່ສາມແມ່ນພວກສ້າງຄອບຄົວແລ້ວ ແລະ ຜູ້ເຖົ້າເຂົາເຈົ້າໃສ່ບ້ວງຫູວົງໃຫຍ່, ຕຸ້ມຫູໃຫຍ່ຈົນເຮັດໃຫ້ໃບຫູຂາດ ຫຼື

ອາດຈະຂາດບ່ອນຮູບ່ອງກໍ່ມີ. ສ່ວນຜູ້ຊາຍແມ່ນການບ່ອງຫູຕາມໄວໜຸ່ມ ແລະ ບໍ່ແມ່ນພໍ່ແມ່ບ່ອງຫູໃຫ້ອີກ. ບາງເທື່ອຄົນໄວດຽວກັນບ່ອງຫູໃຫ້ກັນ ຫຼືຜູ້ເປັນອ້າຍບ່ອງໃຫ້, ການບ່ອງຫູຜູ້ຊາຍແມ່ນຂຶ້ນກັບຄວາມນິຍົມຂອງພວກໄວໜຸ່ມຢາກເຮັດ, ບໍ່ແມ່ນປະເພນີຂອງພໍ່ແມ່ເຂົາເຈົ້າດອກ. ການບ່ອງຫູຂອງຜູ້ຊາຍມີສາມລະດັບຄື: ລະດັບທີ່ໜຶ່ງແມ່ນ ເດັກນ້ອຍມີອາຍຸປະມານສິບເອັດ ຫຼື ສິບສອງປີແມ່ນບ່ອງຫູໂລດ, ໃນເບື້ອງຕົ້ນເຂົາເຈົ້າໃສ່ຕຸ້ມຫູເສັ້ນຝ້າຍສາກ່ອນ, ລະດັບທີ່ສອງແມ່ນເປັນຜູ້ຊາຍທີ່ຂຶ້ນບ່າວໃໝ່ ເຂົາເຈົ້າໃສ່ຕຸ້ມຫູບ້ວງເປັນວົງ, ລະດັບທີ່ສາມແມ່ນພວກຜູ້ບ່າວໃຫຍ່ ແລະ ຜູ້ຊາຍທີ່ສ້າງຄອບຄົວແລ້ວ, ເຂົາເຈົ້າໃສ່ຕຸ້ມຫູເປັນກະຈອນຊະນິດໜຶ່ງ, ພາສາກະຕູເອີ້ນວ່າ ຕາຍ, ກະຈອນໂຕນີ້ໃສ່ຫາງຫາງເປັນກະຈອນທົວມົນ. ການໃສ່ລະຫວ່າງເພດຍິງ ກັບເພດຊາຍແມ່ນມີແຕກຕ່າງກັນຫຼາຍ. ການນຸ່ງສອດກະຕ່ຽວກໍ່ມີສາມລະດັບຄື: ລະດັບທີ່ໜຶ່ງແມ່ນການນຸ່ງສອດກະຕ່ຽວຂອງເດັກນ້ອຍ, ລະດັບທີ່ສອງແມ່ນການນຸ່ງສອດກະຕ່ຽວຜູ້ບ່າວ ຫຼື ຜູ້ຊາຍທີ່ສ້າງຄອບຄົວແລ້ວ, ລະດັບທີ່ສາມແມ່ນການນຸ່ງສອດກະຕ່ຽວຂອງຄົນຜູ້ຮັ່ງມີ, ແມ່ນການນຸ່ງຖືໃນຍາມງານບຸນປະເພນີຕ່າງໆເທົ່ານັ້ນ, ສ່ວນໃນວັນທຳມະດາແມ່ນເຂົາເຈົ້າຈະບໍ່ນຸ່ງ. ເຂົາເຈົ້າສືບທອດປະຕິບັດກັນມາຫຼາຍຊົ່ວເຊັ່ນຄົນມາແລ້ວ. ການບ່ອງຫູ ແລະ ການນຸ່ງສອດກະຕ່ຽວ, ເປັນປະເພນີການເຊື່ອຖືຂອງເຜົ່າກະຕູເທົ່ານັ້ນ ມັນໄດ້ຫ່າງຫາຍໄປ ແລະ ໄດ້ຈິບລົງເລີ່ມແຕ່ມີການປະຕິວັດມາຮອດເຂົາເຈົ້າ. ມາຮອດສູ່ມື້ນີ້ ປະເພນີການບ່ອງຫູ ແລະ ການນຸ່ງສອດກະຕ່ຽວ ຍັງເຫຼືອພຽງແຕ່ຮ່ອງຮອຍ ແລະ ຮູບພາບເທົ່ານັ້ນ. ສິ່ງທີ່ເວົ້າມາຂ້າງ ເທິງນັ້ນມັນເປັນປະຫວັດສາດແຫ່ງຄວາມຈື່ຈຳຂອງພວກລູກຫຼານເຫຼັນຫຼ້ອນຂອງເຜົ່າກະຕູ ທີ່ຮູ້ຄວາມເປັນມາຂອງຕົນເອງເທົ່ານັ້ນ.

# 2. ຄົນກັບສັດ

# (ຄູຍເລີງບວດ)

## 2.1 ຄົນກັບກະຕ່າຍ

## (ຄູຍເລີງອະໂຢນ)

ແມ່ເຖົ້າຄົນໜຶ່ງ ຜົວຕາຍປະແຕ່ດົນນານມາແລ້ວ, ແມ່ເຖົ້າຈຳເປັນຕ້ອງດີ້ນຮົນແຕ່ ພຽງຜູ້ດຽວເອົາຫຼັງສູ້ຟ້າເອົາໜ້າສູ້ດິນຢູ່ທຸກມື້, ແມ່ເຖົ້າເຮັດໄຮ່ປູກເຂົ້າຄົນດຽວຕະຫຼອດມາ. ( ເຈົ້າອະ

ໂຢນແປວ່າ ຊຽງໝ້ຽງ ຫຼື ກະຕ່າຍ ) ເຫັນຄວາມທຸກຍາກຂອງແມ່ເຖົ້າກໍ່ເລີຍມີແນວຄິດ**ຢາກ** ເຮັດວຽກຊ່ອຍບາງເລັກໜ້ອຍ ແລະ ຮຽກຮ້ອງຄ່າຕອບແທນບາງເລັກໜ້ອຍຈາກແມ່ເຖົ້າ. ກະຕ່າຍເວົ້າອ້ອນວອນກັບແມ່ເຖົ້າວ່າຈະເສຍຫຍ້າຊ່ອຍແມ່ເຖົ້າ, ແມ່ເຖົ້າຕອບແທນຄ່າແຮງງານໃຫ້ຂ້ອຍບໍ່ຫຼາຍດອກ, ແມ່ເຖົ້າພຽງແຕ່ຂ້າໄກ່ຜູ້ໜຶ່ງໂຕ, ເຂົ້າໜຽວໜຶ່ງຫວດກໍ່ພໍແລ້ວ, ແມ່ເຖົ້າຕົກລົງຈະຂ້າໄກ່ ແລະ ໜຶ້ງເຂົ້າໃຫ້, ກະຕ່າຍ ກໍ່ຕົກລົງຈະໄປເສຍຫຍ້າໄຮ່ແຕ່ເຊົ້າຮອດທ່ຽງວັນໃຫ້ແລ້ວ.

ກະຕ່າຍອອກຈາກບ້ານໄປແຕ່ເຊົ້າໆ ເພື່ອໄປໄຮ່ແມ່ເຖົ້າ, ແມ່ເຖົ້າກໍ່ດີອົກດີໃຈຫຼາຍກໍ່ຟ້າວ ຕື່ນແຕ່ເຊົ້າໆ, ເພື່ອໜຶ້ງເຂົ້າ ແລ້ວກໍ່ຈັບໄກ່ຜູ້ມາຂ້າ ແລະ ຄົວໄກ່ ເມື່ອຄົວແລ້ວໆ, ລາວກໍ່ຕົ້ມໄກ່ໝົດໂຕ. ສ່ວນກະຕ່າຍກໍ່ຕັ້ງໜ້າຕັ້ງຕາ ເສຍຫຍ້າໄຮ່ຢ່າງເອົາໃຈໃສ່ຊ່ອຍແມ່ເຖົ້າເອົາແທ້ເອົາວ່າ. ແຕ່ໃນເມື່ອແສງແດດສ່ອງອອກມາສູ່ພື້ນໄຮ່, ແສງແດດແກ່ກ້າແຮງຂຶ້ນ ແລະ ຕາເວັນຂຶ້ນສູງ, ກະຕ່າຍກໍ່ເລີ່ມຄິດກະວົນກະວາຍໃຈ ຢ້ານຕົນເອງຈະເຮັດວຽກບໍ່ຫຼ້ອນຕາມຄຳສັນຍາໄວ້ກັບແມ່ເຖົ້າ, ກະຕ່າຍ ຈຶ່ງຄິດວ່າກູບໍ່ຕ້ອງເສຍຫຍ້າ, ແຕ່ກູຕ້ອງເສຍຫຍ້າ ແລະ ຕົ້ນເຂົ້າໄປພ້ອມໆກັນມັນຈຶ່ງແລ້ວໄວ, ກະຕ່າຍປະຕິບັດຕາມແນວຄິດອັນຊົ່ວຊ້ານັ້ນ ກໍ່ເຮັດໄດ້ສຳ ເລັດລົງ, ກະຕ່າຍເສຍຣະເສຍຣາມເສຍລາມໄປທົ່ວພື້ນໄຮ່ແມ່ເຖົ້າຈົນໝົດກັ້ງ, ຮອດຍາມຕາເວັນທ່ຽງກໍ່ກັບເມືອບ້ານ, ໃນເມື່ອເມືອຮອດບ້ານແລ້ວ ກະຕ່າຍ ກໍ່ລາຍງານແມ່ເຖົ້າວ່າ ຂ້ອຍເສຍຫຍ້າກັ້ງຮຽບຮ້ອຍດີແລ້ວ, ແມ່ເຖົ້າເຫັນກະຕ່າຍມາລາຍງານຕົນເອງເຮັດກັ້ງດີແລ້ວ, ກໍ່ຟ້າວເອົາໄກ່ຕົ້ມມາວາງໃຫ້, ພ້ອມຕິບເຂົ້າໜຽວມາໃຫ້ກະຕ່າຍ ແລ້ວຂອບໃຈກະຕ່າຍເປັນຄົນດີທີ່ຊ່ອຍແມ່, ບໍ່ເປັນຫຍັງດອກວຽກເລັກໜ້ອຍແມ່ເຖົ້າເອີຍ ! ຂ້ອຍຊິນັ່ງກິນເຂົ້າ, ຂໍໃຫ້ແມ່ເຖົ້າອອກບ້ານໄປເບິ່ງໂລດຂ້ອຍເສຍຫຍ້າໄຮ່ໃຫ້ເຈົ້າແລ້ວໆ ແມ່ເຖົ້າຄືຊິດີໃຈຫຼາຍເນາະ, ແມ່ເຖົ້າອອກບ້ານໄປເບິ່ງໄຮ່ ແລ້ວສັ່ງຄວາມກັບກະຕ່າຍວ່າ ກິນໃຫ້ໝົດເດີຢ່າຈົ່ງຈຽມເດີ, ບໍ່ເປັນຫຍັງດອກແມ່ເຖົ້າ, ລູກຈະກິນໃຫ້ໝົດ, ເພາະວ່າລູກກໍ່ເສຍຫຍ້າໄຮ່ກັ້ງໝົດແລ້ວ. ແມ່ເຖົ້າໄປຮອດພື້ນໄຮ່ເຫັນຕົ້ນເຂົ້າໃບຫຍ້າທີ່ກະຕ່າຍເສຍກັ້ງເອີດເຕີດ, ແມ່ເຖົ້ານັ່ງໄຫ້ລົງກັບບ່ອນຢ່າງສະອຶກສະອື້ນ, ພ້ອມທັງຈົ່ມດ່າວ່າ ບັກຈິບຫາຍ, ບັກຂີ້ຕົວະມຶງຕ້ອງຕາຍຍ້ອນກູ ສ່ວນກະຕ່າຍຮີບຟ້າວກິນເຂົ້າໃຫ້ແລ້ວ, ແລ້ວວາງແຜນໃໝ່ຕໍ່ໄປອີກ, ກະຕ່າຍເກັບໝໍ້ແຫກ ແຕກກະໂປະ, ກະບັ້ງນ້ຳ, ຖ້ວຍຈານນັ້ນເອົາມາກອງຍາວຢຽດ, ກະຕ່າຍເຮັດຄືກັນກັບຄົນນອນ, ເອົາສາດ, ຜ້າຫົ່ມປົກໄວ້ແລ້ວ, ກະຕ່າຍເອົາກົ້າສາຍເບັດມາມັດໃສ່ແລ້ວ ເອົາເບັດເກາະໃສ່ຜ້າຫົ່ມໄວ້ ກະຕ່າຍກໍ່ຂຶ້ນນອນຢູ່ເທິງເພດານ ແລະ ຕິດຕາມແມ່ເຖົ້າກັບມາແຕ່ໄຮ່ຢ່າງເອົາໃຈໃສ່ທີ່ສຸດ. ແມ່ເຖົ້າກັບມາແຕ່ພື້ນໄຮ່ດ້ວຍຄວາມຄຽດແຄ້ນຈົນເຂົ້າຮອດກະດູກດຳ, ພ້ອມທັງແບກໄມ້ຄ້ອນມາພ້ອມເພື່ອຫວັງຈະຕີຫົວກະຕ່າຍໃຫ້ຕາຍ, ແມ່ເຖົ້າຂຶ້ນເຮືອນມາເຫັນກະຕ່າຍນອນຕຸ້ມຜ້າຫົ່ມຢູ່, ກະຕ່າຍເຫັນແມ່

ເຖົ້າແບກໄມ້ຄ້ອນຂຶ້ນມາ ກະຕ່າຍກໍ່ດຶງສາຍເບັດເຮັດໃຫ້ຜ້າຫົ່ມຕຶງຍິດໆ, ແມ່ເຖົ້າເຫັນຜ້າຫົ່ມເໜັງຕິງຢູ່ຍິດໆ ກໍ່ຄຶດວ່າມັນແມ່ນບັກກະຕ່າຍ ແທ້ໆ, ມຶງຕ້ອງຕາຍ, ແມ່ເຖົ້າເອົາໄມ້ຄ້ອນຕີຟາດໃສ່ທາງຫົວບາດໜຶ່ງກະຕ່າຍກໍ່ຮ້ອງເຈັບຂຶ້ນໂອຍໆ ! ແມ່ເຖົ້າທັງຕີທັງຮ້ອງໃສ່ວ່າ ມຶງຕ້ອງຕາຍຍ້ອນກູ, ແມ່ເຖົ້າຕີກອງເຄື່ອງທີ່ນອນຢູ່ນັ້ນ ຈົນວ່າເມື່ອຍແລ້ວກໍ່ເລີຍໄປເປີດເບິ່ງເຫັນຕັ້ງແຕ່ໝໍ້, ຖ້ວຍຈານ, ກະບັ້ງນ້ຳແຕກຊະຊາຍຈົນໝົດກັ້ງງ, ບໍ່ເຫັນໜ້າກະຕ່າຍຕາຍເລີຍ. ກະຕ່າຍ ກໍ່ຫົວອິກອັກໆຢູ່ເທິງເພດານເຮືອນໃສ່ແມ່ເຖົ້າແລ້ວເວົ້າວ່າ ແມ່ເຖົ້າເອີຍ ! ເປັນໜ້າອີ່ດູສິງສານແທ້, ເຂົ້າໜຶ້ງຕົ້ມໄກ່ຂ້ອຍກໍ່ກິນໝົດກັ້ງງລ້າໆ ຫຍ້າ ແລະ ຕົ້ນເຂົ້າໃນໄຮ່ຂ້ອຍເສຍກັ້ງງເອີດເຕີດ, ໝໍ້, ຖ້ວຍຈານ ແລະ ກະບັ້ງນ້ຳແຮງບໍ່ວ່າ ຕີແຕກດັງປົວະໆ, ຈົນມຸ່ນທະລາຍໝົດກັ້ງງ ບໍ່ມີແນວຈະໃຊ້ຈັກຢ່າງເລີຍ, ເວົ້າຊ້ຳແລ້ວຊ້ຳອີກແມ່ເຖົ້າໄດ້ຍິນ ກໍ່ໃຈຮ້າຍກໍ່ເລີຍເອົາໄມ້ຄ້ອນໄປທັ່ງເພດານເຮືອນບ່ອນທີ່ກະຕ່າຍ ນອນຢູ່ນັ້ນ, ກະຕ່າຍກໍ່ກະໂດດເຕັ້ນອອກມາແຕ່ເທິງເພດານ, ແລ້ວແລ່ນຂຶ້ນເທິງຫຼັງຄາເຮືອນ. ແມ່ເຖົ້າແລ່ນໄປເອົາໜ້າມາເພື່ອໄປຍິງກະຕ່າຍ, ກະຕ່າຍເວົ້າວ່າ ແມ່ເຖົ້າເອີຍ ! ເຈົ້າຢ່າຍິງຂ້ອຍເສຍດາຍລູກໜ້າຂອງເຈົ້າລ້າໆ, ເຈົ້າຢູ່ເບື້ອງນີ້, ຂ້ອຍຢູ່ເບື້ອງນັ້ນ, ເຈົ້າຊິຍິງບ່ອນນັ້ນຂ້ອຍກໍ່ປີ້ນໄປຢູ່ເບື້ອງພຸ້ນ, ຖ້າເຈົ້າຢາກຂ້າຂ້ອຍແທ້ໆນັ້ນແມ່ນບໍ່ຍາກດອກ, ໃຫ້ເຈົ້າເອົາໄຟ ມາຈູດອ້ອມເຮືອນຂອງເຈົ້າຂ້ອຍກໍ່ຈະຕາຍໂລດ, ແມ່ເຖົ້າຟັງຄວາມກະຕ່າຍເວົ້າ ກໍ່ແລ່ນໄປເອົາໄຟມາຈູດອ້ອມເຮືອນ ແລ້ວກະຕ່າຍໂດດເຕັ້ນອອກຈາກເຮືອນໄປ, ແລ້ວເວົ້າອີກວ່າ ເສຍສອງຕໍ່ບໍ່ແລ້ວຍັງເສຍສາມຕໍ່ອີກ. ກະຕ່າຍແລ່ນເຂົ້າປ່າແລ້ວເຂົ້າໄປລີ້ຢູ່ໂກນໄມ້, ແມ່ເຖົ້າແນມເຫັນກະຕ່າຍແລ່ນເຂົ້າລີ້ໃນໂກນໄມ້, ແມ່ເຖົ້າເອົາຫຍ້າເອົາໄມ້ຕັນໄວ້ ແລ້ວບອກຫຼານສອງຄົນເຝົ້າເບິ່ງກະຕ່າຍບໍ່ໃຫ້ມັນອອກ, ແລ້ວແມ່ເຖົ້າກັບເມືອບ້ານ ເພື່ອເອົາໄຟມາຈູດອູດຮູໂກນໄມ້ ໃຫ້ກະຕ່າຍຕາຍ ໃນເວລາ ທີ່ແມ່ເຖົ້າຍ່າງເມື່ອນັ້ນ ກະຕ່າຍເວົ້າກັບເດັກນ້ອຍທັງສອງຄົນວ່າ : ໂອຍ ! ຂ້ອຍໄດ້ກິນນ້ຳເຜີ້ງໂກນ ຫວານຫຼາຍ ! ແຊບຫຼາຍ ເດັກທັງສອງຄົນໄດ້ຍິນແລ້ວຕອບວ່າ : ຂີ້ຕົວະ, ກະຕ່າຍເວົ້າວ່າເອົາພວກເຈົ້າມາລອງ ຊີມເບິ່ງແມ່, ກະຕ່າຍເອົາມືຕ້ອຍຂີ້ດັງໃຫ້ເດັກທັງສອງຄົນກິນ ແລ້ວຖາມວ່າຫວານບໍ່? ເຂົາເຈົ້າທັງສອງຕອບວ່າ ຫວານແທ້, ແລ້ວກະຕ່າຍກໍ່ຖາມຕໍ່ໄປອີກວ່າ ພວກເຈົ້າຢາກກິນບໍ່? ຄັນພວກເຈົ້າຢາກກິນ ພວກເຈົ້າຈິ່ງໄຂຂ້ອຍອອກຈາກໂກນໄມ້ນີ້ແມ່ ຂ້ອຍຈະໃຫ້ພວກເຈົ້າເຂົ້າມາກິນໂລດ, ເດັກທັງສອງຄົນກໍ່ໄຂໂກນໄມ້ ທັກະຕ່າຍອອກມາ, ແລ້ວໃຫ້ເດັກທັງສອງຄົນກໍ່ເຂົ້າໂກນໄມ້ແທນກະຕ່າຍເພື່ອກິນນ້ຳເຜີ້ງ ແລ້ວກະຕ່າຍກໍ່ອັດຕັນໂກນໄມ້ໄວ້, ກະຕ່າຍກໍ່ກະໂດດເຕັ້ນໄປລີ້ຢູ່ພຸ່ມໄມ້ລໍຖ້າແມ່ເຖົ້າກັບມາ, ໃນບໍ່ຊ້າແມ່ເຖົ້າກໍ່ມາຮອດແລ້ວເອີ້ນໃສ່ຫຼານວ່າ ຫຼານເອີຍ ! ຫຼານ ເອີຍ ! ກະຕ່າຍຂານຕອບແທນວ່າ: ເອີ ! ເອີ ! ແມ່ເຖົ້າໄປຮອດບ່ອນໂກນໄມ້ຢ່າງບໍ່ຄິດເບິ່ງໜ້າເບິ່ງຫຼັງ ກໍ່ຟ້າວເອົາໄຟມາຈູດໂກນໄມ້ໂລດ, ເດັກທັງສອງຄົນຮ້ອງ

ໄຫ້ໃສ່ແມ່ເຖົ້າວ່າ ຢ່າຈູດໆພວກຫຼານຢູ່ໃນ ນີ້ແມ່ເຖົ້າເອີຍ ! ມັນບໍ່ແມ່ນກະຕ່າຍໃດ ! ແມ່ເຖົ້າບໍ່ເຊື່ອອີກກໍ່ຈູດອູດໂກນໄມ້ອີກ ແລ້ວ ແມ່ເຖົ້າໄຂເບິ່ງໂກນໄມ້ເຫັນຫຼານຕົນເອງນອນຕາຍຢູ່, ແມ່ເຖົ້າໝົດປັນຍາໄດ້ແຕ່ນັ່ງໄຫ້ສະອຶກສະອື້ນ ຄິດອາໄລອາວອນເສຍດາຍນຳຫຼານທີ່ຕາຍ, ກະຕ່າຍຂຶ້ນງອຍໂພນແນມເບິ່ງ ເຫັນແມ່ເຖົ້າ ນັ່ງເຝົ້າຫຼານຕາຍ ຢູ່ແລ້ວເວົ້າວ່າ: ແມ່ເຖົ້າເອີຍ ! ເສຍສາມຕໍ່ບໍ່ແລ້ວພັດໄດ້ມາເສຍສີ່ຕໍ່ອີກ.

ໃນມື້ຕໍ່ມາ ແມ່ເຖົ້າແຫ່ງມີຄວາມຄຽດແຄ້ນຢ່າງແຮງກ້າຕໍ່ກະຕ່າຍ, ແມ່ເຖົ້າໄດ້ຊອກຫາວິທີທາງຈະຂ້າກະຕ່າຍໃຫ້ໄດ້, ແມ່ເຖົ້າໄດ້ເຮັດກະຕ່ຳຫີນ, ກະຕ່ຳໄມ້, ແຮ້ວ, ກະຕ່ຳໂຕ້ນ ແລະອື່ນໆ. ກະຕ່າຍໄດ້ປົບໜີໄປລີ້ຢູ່ໃນປ່າໄດ້ຫຼາຍເດືອນແລ້ວ, ມີບາງຄັ້ງກໍ່ຊອກຫາກິນບໍ່ໄດ້, ເກີດມີຄວາມຫິວໂຫຍຫຼາຍ, ມີມື້ໜຶ່ງກະຕ່າຍອອກຫາກິນຢູ່ປ່າ, ກະຕ່າຍເລີຍໄປພົບກະຕ່ຳຫີນ, ກະຕ່າຍເລີຍຖາມ ເປັນແນວໃດລູງຄືນັ່ງອ້າປາກຢູ່ຜູ້ດຽວ, ກະຕ່ຳຫີນຈຶ່ງຕອບວ່າ ກະຕ່ຳຫີນເຊີນກະຕ່າຍເຂົ້ານັ່ງຢູ່ໃນ ບ່ອນທີ່ມີອາຫານການກິນ, ກະຕ່າຍເຂົ້ານັ່ງກິນກໍ່ພໍດີກະຕ່ຳລັ່ນທັບກະຕ່າຍ, ກະຕ່າຍໃຊ້ຄວາມພະຍາມຍົກກະຕ່ຳນັ້ນຂຶ້ນ ແຕ່ບໍ່ຫຼ້ອນເພາະວ່າແຮງບໍ່ເຖິງ ກໍ່ເລີຍເຮັດຕີຕາຍ, ນອນໝູບຫຼັບຕາແລ້ວເຮັດຂີ້, ຂີ້ມູກ, ນ້ຳລາຍຍ້ອຍອອກມາ, ເຮັດໃຫ້ພວກແມງມີ້, ແມງວັນ, ແມງເຜິ້ງ, ແມງຕໍ່, ແມງແຕນພາກັນມາຕອມກະຕ່າຍຫຶ້ນໆຢູ່, ແມ່ເຖົ້າໄປຢາມກະຕ່ຳ ກໍ່ເລີຍເຫັນກະຕ່າຍຖືກກະຕ່ຳນອນຕາຍແອກແລກຢູ່, ແມ່ເຖົ້າຍົກກະຕ່ຳຂຶ້ນແລ້ວຈັບເອົາກະຕ່າຍຖິ້ມໃສ່ກະຕ່າ ແລ້ວເວົ້າວ່າມຶງບໍ່ເຫັນລອດມືກູໄປໄດ້, ບາດແມ່ເຖົ້າຫຼຽວເບິ່ງກະຕ່າຍອີກພັດເຫັນກະຕ່າຍລຸກແລ່ນໜີໄປ ແລ້ວໂບກມືບ່າຍໆໃສ່ແມ່ເຖົ້າຢ່າງສະບາຍ.

ຫຼັງຈາກນັ້ນ ເຂົາເຈົ້າຂຸດຂຸມໄວ້ເພື່ອໃຫ້ກະຕ່າຍຕົກລົງຂຸມແລ້ວຂຶ້ນມາບໍ່ໄດ້, ເຂົາເຈົ້າແຕ່ງຕັ້ງໃຫ້ເຈົ້າເສືອເປັນຜູ້ຕິດຕາມເບິ່ງກະຕ່າຍຕົກຂຸມ, ຖ້າກະຕ່າຍຕົກຂຸມເວລາໃດໃຫ້ມາລາຍງານໃຫ້ຊາວບ້ານຮູ້ດ່ວນ, ແຕ່ໃນສຸດທ້າຍກະຕ່າຍ ກໍ່ໄດ້ແຮກສ່ຽວກັບເສືອເປັນຢ່າງດີ, ກະຕ່າຍເວົ້າກັບເສືອວ່າພວກເຮົາເປັນເພື່ອນກັນແມ່ນເປັນສິ່ງທີ່ດີ, ພວກເຮົາຢູ່ນຳກັນ, ຫາກິນນຳກັນ, ເສືອກໍ່ເຫັນດີຕາມການເວົ້າຂອງກະຕ່າຍ, ກະຕ່າຍກັບເສືອຢູ່ນຳກັນມາໄດ້ຫຼາຍປີແລ້ວ, ກະຕ່າຍບອກໃຫ້ເສືອໄປຊອກຫາຊີ້ນສັດຢູ່ໃນປ່າ, ສ່ວນກະຕ່າຍໄປຫາຄວາຍເຖິກຕູ້ ເພື່ອຫຼອກໃຫ້ຄວາຍສອງໂຕຜິດກັນແລ້ວຊົນກັນຕາຍ, ກະຕ່າຍເວົ້ານຳຄວາຍເຖິກຕູ້ວ່າ ມີຄວາຍບັກເຂົາເລໂຕໜຶ່ງມັນຢາກຊົນກັບເຈົ້າ, ເຂົາຂອງມັນແຫຼມອີ່ຫຼີ, ຄວາຍເຖິກຕູ້ຖາມວ່າ ຈະເຮັດແນວໃດເຂົາຂອງຂ້ອຍຈຶ່ງຊິແຫຼມ, ກະຕ່າຍເວົ້າບໍ່ຍາກຂ້ອຍຈະແຫຼມໃຫ້, ກະຕ່າຍແຫຼມເຂົາຄວາຍເຖິກຕູ້ໃຫ້ແຫຼມທີ່ສຸດ, ແລ້ວກະຕ່າຍກໍ່ໄປເວົ້າກັບຄວາຍເຖິກໂຕໜຶ່ງອີກວ່າ: ບັກຄວາຍຕູ້ນັ້ນມັນຢາກຊົນກັບເຈົ້າແຕ່ເຂົາຂອງມັນແຫຼມ, ຄວາຍບັກເຂົາເລຖາມວ່າ ເຮັດແນວໃດເຂົາຂອງຂ້ອຍຈຶ່ງຊິແຫຼມ ກະຕ່າຍເວົ້າວ່າບໍ່ຍາກດອກ, ຂ້ອຍຈະແຫຼມໃຫ້, ກະຕ່າຍແຫຼມໃຫ້ຄວາຍ ທັງສອງໂຕ

ຮຽບຮ້ອຍແລ້ວໆ ກະຕ່າຍ ກໍ່ພາຄວາຍທັງສອງໂຕມາຊີ້ນກັນຈີນຕາຍຄາທີ່. ເສືອກັບມາຫາຊີ້ນສັດບໍ່ໄດ້, ຖືກກະຕ່າຍດ່າຊ້ຳວ່າ ມຶງໂງ່ຫຼາຍຫາກິນບໍ່ສະຫຼາດ, ກະຕ່າຍເອົາຊີ້ນຄວາຍໃຫ້ເສືອກິນ, ແລ້ວກະຕ່າຍເວົ້າວ່າ ໄທບ້ານຂ້າຄວາຍແລ້ວປັນມາໃຫ້ພວກເຮົາກິນ.

ມື້ຕໍ່ມາເສືອກໍ່ໄປຊອກຫາຊີ້ນສັດຢູ່ໃນປ່າອີກ, ເສືອຊີ້ນໝູປ່າໄດ້ໂຕໜຶ່ງ, ເສືອກໍ່ກັບມາບອກກະຕ່າຍໄປຫາມເອົາໝູປ່າຊ່ອຍເສືອ, ກະຕ່າຍໄປຕັດໄມ້ຫາມ, ພັດແມ່ນໄມ້ຕິ້ວທີ່ມີໜາມ, ເສືອຖາມກະຕ່າຍວ່າເປັນຫຍັງບໍ່ລິໜາມມັນອອກ ບາດຫາມໜາມມັນຊິປັກໃດ, ກະຕ່າຍເວົ້າວ່າ ບໍ່ເປັນຫຍັງດອກ. ໃນເມື່ອໄປຫາມໝູປ່າກະຕ່າຍໃຫ້ເສືອຫາມຢູ່ທາງໜ້າ ທາງກົກໄມ້ທີ່ມີໜາມ, ເສືອຫາມໝູ ປ່າກັບກະຕ່າຍຮ້ອງເຈັບໂອຍ, ຖ້າເຈົ້າຮ້ອງເຈັບຊີ້ນໝູມັນຈະຝາດຂົມກິນບໍ່ແຊບໃດ, ຫາມໄປໄດ້ ຄາວໜຶ່ງເສືອຮ້ອງເຈັບຂຶ້ນໂອຍໆ, ກະຕ່າຍເວົ້າໃສ່ວ່າ ຢ່າຮ້ອງໃຫ້ອົດທົນເອົາແມ, ເມື່ອຫາມຮອດບ່ອນຢູ່ແລ້ວ, ກະຕ່າຍຖາມເສືອເຮັດແນວໃດຈຶ່ງຈະມີໄຟ, ພໍດີເປັນຍາມແລງແລ້ວຕາເວັນໃກ້ຕົກດິນ, ກະຕ່າຍເລີຍບອກໃຫ້ເສືອ ໄປນຳເອົາຖ່ານໄຟນຳພໍ່ພຸ້ນເຈົ້າເຫັນບໍ່? ເສືອຕອບວ່າ ເຫັນຫັ້ນແລ້ວ ຄັນເຫັນເຈົ້າໄປເອົາສາແລ້ວກັບມາໄວໆ, ເສືອນຳໄປຂຶ້ນພູໜ່ວຍນີ້ລົງພູໜ່ວຍ ນັ້ນ ກໍ່ຍັງບໍ່ເຫັນຖ່ານໄຟ, ເສືອນຳໄປຈົນບໍ່ເຫັນຖ່ານໄຟແດງອີກ, ແທ້ໆກໍ່ແມ່ນດວງຕາເວັນກຳລັງ ຈະຕົກລົງດິນເຫັນຄືກັບຖ່ານໄຟ, ເສືອໄປຫວິດແລ້ວກະຕ່າຍກໍ່ແລ່ນເຂົ້າເມືອໃນບ້ານ, ກະຕ່າຍໄປຂໍໄຟນຳເດັກນ້ອຍໄດ້ແລ້ວກະຕ່າຍກັບມາຄົວກິນຊີ້ນໝູປ່າສອງສາມມື້ຊີ້ນໝູຈຶ່ງໝົດ ກະຕ່າຍໄປກໍ່ເລີຍໄປເກັບເອົາປີກ້ວຍມາຫຼາມ ໃສ່ກະບັ້ງແລ້ວເອົາໄວ້ໃຫ້ເສືອກິນເວລາເສືອກັບມາ, ມື້ຕໍ່ມາເສືອກໍ່ມາຮອດກະຕ່າຍ, ເສືອບອກວ່າໄປ ນຳເອົາຖ່ານໄຟບໍ່ໄດ້ໄຟມັນໜີໄປເລື້ອຍໆ, ກະຕ່າຍ ເວົ້າກັບເສືອວ່າ ບໍ່ເປັນຫຍັງຂ້ອຍຄົວແລ້ວ, ໃຫ້ເຈົ້າເອົາໄປກິນຊີ້ນຢູ່ໃນກະບັ້ງນັ້ນ, ເສືອກໍ່ເອົາມາກິນທັງຝາດທັງຂົມອີກ, ເສືອເວົ້າກັບກະຕ່າຍວ່າຊີ້ນຝາດຂົມຫຼາຍ, ເບິ່ງຂ້ອຍຈະຊີມຊີ້ນຂອງກະຕ່າຍກິນນັ້ນ ຈັ່ງແມ່ນແຊບນົວອີ່ຫຼີ, ກະຕ່າຍເວົ້າໃຫ້ເສືອວ່າ ຂ້ອຍບອກເຈົ້າແລ້ວຢ່າຮ້ອງເຈັບ, ເຈົ້າກໍ່ບໍ່ຟັງຂ້ອຍ ເຫັນບໍ່ຊີ້ນໝູປ່າມັນຈຶ່ງຂົມ ແລະກິນບໍ່ແຊບ.

ກະຕ່າຍ ແລະ ເສືອຢູ່ນຳກັນໄດ້ຫຼາຍວັນແລ້ວ, ເສືອຊອກຫາຊີ້ນສັດປ່າບໍ່ໄດ້ຈັກໂຕ, ມື້ໃໝ່ກະຕ່າຍບອກກັບເສືອວ່າ ໃຫ້ເຈົ້າອອກໄປຫາຊີ້ນສັດປ່າອີກ, ຖ້າເຈົ້າຊອກຫາຊີ້ນສັດບໍ່ໄດ້ແລ້ວ, ພວກເຮົາຈະຕ້ອງປາດກິນຊີ້ນຂອງໃຜຂອງມັນກິນໃດ? ກະຕ່າຍຢູ່ຕິດຕາມເບິ່ງເສືອກັບມາແຕ່ຫາ ຊີ້ນສັດໄດ້ຫຼືບໍ່ໄດ້? ໃນເມື່ອເສືອກັບມາບໍ່ໄດ້ສັດແທ້, ກະຕ່າຍຮີບເອົາຊີ້ນໝູ ທີ່ເຊື່ອງຕາບໄວ້ໃສ່ໃນຂາທັງສອງເບື້ອງອອກມາຮຽບຮ້ອຍແລ້ວ, ເສືອມາຮອດກໍ່ບອກກະຕ່າຍວ່າຊີ້ນສັດບໍ່ໄດ້, ກະຕ່າຍເວົ້າວ່າດີແລ້ວຄັນບໍ່ໄດ້ຊີ້ນ ພວກເຮົາກໍ່ປາດກິນຊີ້ນຂອງຕົນເອງສາ, ກະຕ່າຍເອົາມີດມາປາດຊີ້ນຢູ່ໃນຂາອອກມາກິນ, ເສືອເຫັນກະຕ່າຍປາດຊີ້ນໃນຂາຂອງຕົນເອງອອກກິນ,

ເສືອກໍ່ເອົາມີດ ມາປາດຊີ້ນຢູ່ໃນຂາຂອງຕົນເອງຄືກັນ, ທັງປາດທັງຮ້ອງເຈັບໂອຍ ! ກະຕ່າຍເວົ້າວ່າ ຢ່າຮ້ອງຈັກໜ້ອຍຊີ້ນມັນຈະຂົມໃດ? ເສືອກໍ່ປາດຊີ້ນຕົນເອງກິນໄດ້ແລ້ວ, ກະຕ່າຍເວົ້ານຳເສືອວ່າ ຂ້ອຍຈະປາດຊີ້ນຂອງຂ້ອຍເອງໃຫ້ເຈົ້າກິນສາ, ກະຕ່າຍກໍ່ປາດຊີ້ນຢູ່ໃນຂາອອກມາໃຫ້ເສືອກິນຕ່ອນໜຶ່ງ.

ກະຕ່າຍຊັກຊວນເສືອ ໄປຊອກຫາກິນໃນແຕ່ລະໜ່ວຍພູ ເພື່ອໃຫ້ເສືອຊອກຂົບສັດປ່າມາກິນແຕ່ບໍ່ພົບສັດຈັກໂຕເລີຍ. ຕື່ນເຊົ້າມາແສງແດດອ່ອນໆດີແລ້ວ ກະຕ່າຍເຫັນງູເຫົ່ານອນຕາກແດດຢູ່ກາງທາງຍາວອູດຫຼູດ, ກະຕ່າຍບອກເສືອ ໄປເກັບເອົາໄມ້ຄ້ອນເທົ້າທີ່ພໍ່ຂ້ອຍປະໄວ້ຢູ່ໃນກາງທາງນັ້ນ, ກະຕ່າຍບອກເສືອໄປຈັບແບກເອົາໄມ້ຄ້ອນເທົ້າ, ເສືອຟັງຄວາມກະຕ່າຍບອກ ກໍ່ໄປຈັບແບກໂຕງູເຫົ່າຂຶ້ນບ່າ, ແລ້ວງູເຫົ່າກໍ່ຕອດເສືອທັນທີ, ເສືອຖາມກະຕ່າຍວ່າ ໄມ້ຄ້ອນເທົ້າພໍ່ເຈົ້າຄືຮູ້ຈັກຕອດ ແລະ ຮ້າຍແທ້, ມັນຕີຂ້ອຍ, ກະຕ່າຍເວົ້າວ່າຄັນມັນຮ້າຍເຈົ້າ, ໃຫ້ເຈົ້າຖິ້ມມັນແມ່, ເສືອຈິ່ງແກວ່ງງູເຫົ່າຖິ້ມໄປ, ນັບຕັ້ງແຕ່ນັ້ນມາ ເສືອເຈັບປວດຫຼາຍມື້ຈຶ່ງຄ່ອຍດີຂຶ້ນ. ໃນມື້ຕໍ່ມາ ກະຕ່າຍຊັກຊວນເສືອໄປຫາກິນອີກ, ກະຕ່າຍກັບເສືອໄປຮອດພູໜ່ວຍ ໜຶ່ງ ພໍດີເຫັນຮັງຕໍ່ຢູ່ເທິງຕົ້ນໄມ້, ກະຕ່າຍບອກເສືອວ່າ ເຈົ້າເຫັນບໍ່ກອງຂອງພໍ່ຂ້ອຍຫ້ອຍໄວ້ຢູ່ເທິງຕົ້ນໄມ້ແຕ່ດົນນານມາແລ້ວ, ຂ້ອຍຂີ້ຄ້ານໄປເອົາ, ຂ້ອຍຂີ້ຄ້ານໄປຕີກອງໜ່ວຍນີ້. ກະຕ່າຍບອກເສືອຂຶ້ນຕີກອງໃຫ້ຂ້ອຍແດ່, ຖ້າເຈົ້າຕີບາດທີ່ໜຶ່ງມັນມີສຽງດັງອື່ງ, ຕ້ອງຕີອີກບາດທີ່ສອງບາດທີ່ສາມມັນຈິ່ງດັງແຮງ, ເສືອຕີຫຼາຍຄັ້ງ ໂຕຕໍ່ກໍ່ແຮງບິນອອກມາຫຸ້ມຕອດເຕັມໂຕ ເສືອໆກໍ່ໂດດລົງມາແຕ່ເທິງຕົ້ນໄມ້ ແລ້ວເສືອກໍ່ຖາມກະຕ່າຍວ່າ ກອງຂອງພໍ່ເຈົ້າຄືມີແມ່ຮູ້ຈັກຕອດຂົບຂ້ອຍ, ກະຕ່າຍຕອບວ່າ ບາງທີ່ເຈົ້າໄປເຮັດຜິດຮີດຂອງພໍ່ຂ້ອຍ, ມັນຈິ່ງອອກມາຫ້າມເຈົ້າ ບໍ່ໃຫ້ຕີອີກ. ເສືອນອນເຈັບປວດສອງສາມມື້ພິດຕໍ່ຕອດຈິ່ງຫາຍດີ.

ຕາມຄວາມຈິງແລ້ວ ແມ່ເຖົ້າບອກໃຫ້ເສືອຕິດຕາມ ກະຕ່າຍຕົກຂຸມເວລາໃດໃຫ້ມາລາຍງານປະຊາຊົນຢູ່ໃນບ້ານໃຫ້ຮູ້ຈັກດ່ວນ, ແຕ່ໃນສຸດທ້າຍເສືອກໍ່ຖືກກະຕ່າຍນຳໃຊ້ ແລະເປັນເພື່ອນຮັກແພງເປັນໝູ່ເພື່ອນທີ່ຮ່ວມສຸກຮ່ວມທຸກກັບກະຕ່າຍອີກດ້ວຍ. ມີມື້ໜຶ່ງກະຕ່າຍເຕັ້ນເລາະຫຼິ້ນຕາມດອນປ່າຫຍ້າຄາ, ພໍດີກະຕ່າຍຕົກລົງຂຸມ, ເສືອເຫັນກະຕ່າຍຕົກລົງຂຸມແລ້ວ ເສືອເວົ້ານຳກະຕ່າຍວ່າ ກູຈະເມືອລາຍງານຊາວບ້ານໃຫ້ຮູ້ວ່າ ມຶງຕົກຂຸມແລ້ວ, ເຂົາເຈົ້າຈະມາຂ້າມຶງ, ກະຕ່າຍໄດ້ຍິນຄຳເວົ້າຂອງເສືອວ່າ ຈະເມືອລາຍງານຊາວບ້ານໃຫ້ຮູ້, ກະຕ່າຍເວົ້າກັບເສືອວ່າ ເຈົ້າເບິ່ງແມ່ຄັນເຈົ້າເມືອຮອດບ້ານ, ເຈົ້າເງີຍໜ້າຂຶ້ນເບິ່ງທ້ອງຟ້າເຈົ້າຈະເຫັນຟ້າມາທັບເຈົ້າ, ຂ້ອຍລົງຢູ່ໃນຂຸມບໍ່ຕາຍໃດ? ເສືອເງີຍໜ້າເບິ່ງ ເຫັນເມກເລື່ອນລອຍໄປຢູ່ເທິງທ້ອງຟ້າຄິດວ່າແມ່ນມັນຈະ ຫຼົ່ນລົງມາທັບຕົນເອງແລ້ວຈິ່ງໂດດລົງຂຸມກັບກະຕ່າຍ. ກະຕ່າຍກັບເສືອຢູ່ໃນຂຸມນຳກັນເປັນເວລາດົນເຕີບ, ເສືອນອນຫຼັບແທ້, ກະຕ່າຍກໍ່ມາກອດປາຍຫາງເສືອໃຫ້ແໜ້ນ, ແລ້ວ

ເອົາໄມ້ຄວັດຫູເສືອ, ເສືອກະດຸງມຕົວສັ່ນແກວ່ງຫາງປິດໄປ, ກະຕ່າຍ ເກືອບຟົ້ງຂຶ້ນຈາກປາກຂຸມ, ກະຕ່າຍຄວັດຫູເສືອເທື່ອທີ່ສອງອີກ, ເສືອແກວ່ງຫາງແຮງຫຼາຍເຮັດໃຫ້ກະຕ່າຍຟົ້ງຂຶ້ນຈາກປາກຂຸມແລ້ວ, ກະຕ່າຍນັ່ງຄິດວ່າເຮັດແນວໃດຈະເຮັດໃຫ້ເສືອເຂົ້າໃຈກະຕ່າຍອີກ, ຊາວບ້ານຈະແຕ່ງຕັ້ງເສືອຕິດຕາມເບິ່ງຕົນເອງ, ກະຕ່າຍໄດ້ຍິນຄຳເວົ້າຫວ່າງກີ້ນີ້ ຕອນຕົນເອງຕົກລົງໄປໃນຂຸມ, ເສືອໄປລາຍງານໃຫ້ຊາວບ້ານມາຂ້າຕົນເອງ. ຈາກບ່ອນນັ້ນ ກະຕ່າຍຄິດຈະຫຼອກຊາວບ້ານໃຫ້ມາຂ້າເສືອ ກະຕ່າຍຊອກເກັບຟືດໄມ້ປົກປາກຂຸມໄວ້ແລ້ວກັບເມືອຫາຊາວບ້ານ ແລ້ວຈົ່ມໄປຕາມທາງວ່າ: ກະຕ່າຍຕົກລົງໃນຂຸມແລ້ວໃຫ້ຊາວບ້ານໄປຂ້າແດ່, ຊາວບ້ານໄດ້ສຽງເອີ້ນກໍ່ຟ້າວແລ່ນເອົາຫອກ, ດາບ ແລະ ງ້າວ ແລ້ວເຂົາເຈົ້າກໍ່ພາກັນແລ່ນໄປຮອດຂຸມແລ້ວເອົາຫອກ, ດາບ ແລະ ງ້າວຟັນແທງທັນທີໂລດ ຈິກຈັກ ! ຈິກຈັກ ! ເສືອຮ້ອງຄາງທັງເຈັບທັງປວດ ແລ້ວຮ້ອງຂຶ້ນວ່າ "ນີ້ແມ່ນເສືອ" ມັນບໍ່ແມ່ນກະຕ່າຍ, ແຕ່ຊາວບ້ານກໍ່ບໍ່ເຊື່ອ, ຟັນແທງຈົນບໍ່ໃຫ້ມີສຽງຮ້ອງອີກ, ແລ້ວເຂົາເຈົ້າກໍ່ດຶງຟືດໄມ້ອອກມາ ເຫັນເສືອນອນຕາຍອາກລາກຢູ່, ໃຜໆກໍ່ຫຼັ່ງນ້ຳຕາຄິດອີ່ດູຕົນເສືອທີ່ຕາຍແທນກະຕ່າຍ.

ຫຼັງຈາກເສືອຕາຍໄປແລ້ວ, ກະຕ່າຍຂາດເພື່ອນຮ່ວມທາງ, ກະຕ່າຍໃຊ້ຊີວິດແຕ່ຜູ້ດຽວແລ້ວ, ຢູ່ກິນຢ່າງໂດດດ່ຽວ, ໄປໃສ່ກໍ່ບໍ່ມ່ວນໃຈ. ມື້ໜຶ່ງກະຕ່າຍກໍ່ຂ້າມນ້ຳໄປຢູ່ຫົວຫາດ, ກະຕ່າຍພົບນາກ, ກະຕ່າຍ ຖາມນາກເຈົ້າຊິໄປໃສ? ນາກຕອບວ່າຂ້ອຍໄປຊອກຫາພ້າ, ຂວານ ແລະ ມີດ, ປະຊາຊົນຂ້ອຍອຶດເຄື່ອງໃຊ້ຫຼາຍ, ນາກຖາມກະຕ່າຍວ່າ ເຈົ້າຊິໄປໃສ? ກະຕ່າຍຕອບວ່າໄປຊອກຫາຝ້າຍ ໃຫ້ປະຊາຊົນຂ້ອຍອຶດເຄື່ອງນຸ່ງຖືເສື້ອຂາດໜ້າຜ້າຂາດຫຼັງ. ກະຕ່າຍລົມນາກວ່າ ໂອ ! ໂຊກດີແລ້ວ ທີ່ພວກເຮົາໄດ້ພົບກັນ ແລະ ເປັນໂອກາດໃຫ້ພວກເຮົາໄດ້ແລກປ່ຽນສິນຄ້ານຳກັນ, ກະຕ່າຍຈະຊອກຫາພ້າ, ຂວານ ແລະ ມີດໃຫ້ນາກ, ສ່ວນນາກກໍ່ຈະຊອກຫາຝ້າຍໃຫ້ກະຕ່າຍ. ຫຼັງຈາກຕົກລົງກັນໄດ້ແລ້ວ, ກະຕ່າຍກໍ່ນັດວັນມາພົບກັນ ເພື່ອເປັນບ່ອນແລກປ່ຽນສິ່ງຂອງດັ່ງກ່າວຢູ່ເທິງລະຫວ່າງກາງໜ່ວຍພູ ແລະກຳນົດວັນເວລາສາມວັນໃຫ້ມີໜ້າຢູ່ບ່ອນນັ້ນ. ກະຕ່າຍກໍ່ເມືອຕີພ້າຍາວໜຶ່ງຄືບ, ແລ້ວກະຕ່າຍເຮັດຝັກພ້າຍາວເຄິ່ງວາ, ສ່ວນນາກສານກະຕ່າຝ້າຍ, ນາກຊອກຫາເກັບຂີ້ຊ້າງແຫ້ງຍັດໃສ່ກະຕ່າເກືອບເຕັມແລ້ວເອົາຝ້າຍມາປົກໜ້າ. ໃນເມື່ອຮອດມື້ນັດແລ້ວ ທັງສອງກໍ່ອອກເດີນທາງໄປຫາຈຸດທີ່ນັດໝາຍ, ກະຕ່າຍມາຮອດກ່ອນ ແລະ ນາກມາຮອດຕາມຫຼັງ. ກະຕ່າຍມອບພ້າ ແລະ ມີດໃຫ້ນາກ,ນາກກໍ່ມອບກະຕ່າຝ້າຍໃຫ້ ທັງສອງກໍ່ກັບເມືອຕາມເສັ້ນທາງໃຜເສັ້ນທາງມັນໄປໄດ້ໄກເຕີບ, ນາກຄິດວ່າ ອາດຈະແມ່ນຜູ້ນີ້ແຫຼະຄື ຊຽງໝັ່ງ ທີ່ສະຫຼາດສະຫຼຽວທີ່ມີຊື່ສຽງດັ່ງດັງ, ນາກຖອດພ້າມາເບິ່ງ ເຫັນສັ້ນກຸດດຸດຢູ່ ນາກຈຶ່ງຮູ້ວ່າຊຽງໝັ່ງແລ້ວ ນາກແລ່ນປົບໜີຢ່າງໄວວາ ກະຕ່າຍກໍ່ຍ່າງອອກໄປ

ໄດ້ໄກເຕີບ, ຄິດວ່າອາດຈະແມ່ນຜູ້ນີ້ແລ້ວ ແມ່ນພະຍານາກຜູ້ທີ່ມີເວດມົນຄາຖາ ກະຕ່າຍ ຈຶ່ງຈົກເບິ່ງກະຕ່າຝ່າຍກໍ່ເຫັນແຕ່ຂີ້ຊ້າງແຫ້ງ, ກະຕ່າຍ ກໍ່ຖິ້ມກະຕ່າແລ້ວປົບໜີໄປຢ່າງໄວວາຄືກັນ.

ມື້ໜຶ່ງມີແມ່ແບ້ໂຕໜຶ່ງ ໄປເລາະຫາກິນຢູ່ໃກ້ແຄມປ່າແຫ່ງໜຶ່ງ, ແມ່ແບ້ປະລູກໄວ້ຢູ່ໃກ້ແຄມນ້ຳແຫ່ງໜຶ່ງ, ເພື່ອໄປຊອກຫາຜັກຫຍ້າໃຫ້ລູກກິນ, ໃນມື້ນັ້ນ ກະຕ່າຍກໍ່ເຕັ້ນເລາະຕາມແຄມນ້ຳຫຼິ້ນຄືກັນກໍ່ພໍດີພົບກັບລູກແບ້ນັ່ງຮ້ອງໄຫ້ຫາແມ່ມັນຢູ່ ແບະ ! ແບະ ! ກະຕ່າຍຖາມລູກແບ້ວ່າ ແມ່ມຶງໄປໃສ ? ລູກແບ້ຕອບກະຕ່າຍວ່າ ແມ່ຂ້ອຍເຂົ້າປ່າໄປຫາຂອງກິນໃດອ້າຍກະຕ່າຍເອີຍ ! ກະຕ່າຍກໍ່ຊັກຊວນລູກແບ້ວ່າ ພວກເຮົາພາກັນໄປເລາະຫຼິ້ນຢູ່ຟາກນ້ຳເບື້ອງນັ້ນເທາະ ຈຶ່ງເຫັນແມ່ຂອງເຈົ້າ, ລູກແບ້ຟັງຄວາມກະຕ່າຍກໍ່ເລີຍໄປນຳກະຕ່າຍ ພາຂ້າມນ້ຳໄປ ບໍ່ດົນປານໃດແມ່ແບ້ກັບມາຫາລູກຂອງຕົນເອງ, ໃນເມື່ອມາເຖິງບ່ອນແລ້ວແມ່ແບ້ກໍ່ບໍ່ເຫັນລູກຂອງຕົນເອງ, ແມ່ແບ້ ກໍ່ເລາະຕາມແຄມນ້ຳຊອກຮ້ອງຫາ ລູກຂອງຕົນເປັນເວລາດົນພໍສົມຄວນ ກະຕ່າຍບອກລູກແບ້ວ່າ ເຈົ້າບໍ່ຕ້ອງຕອບແມ່ເຈົ້າເດີ ? ແຕ່ລູກແບ້ເອີ້ນຕອບແມ່ວ່າລູກຢູ່ຟາກເບື້ອງພີ້ແມ່, ແມ່ແບ້ໄດ້ຍິນສຽງຮ້ອງຂອງລູກຢູ່ຟາກນ້ຳກໍ່ເລີຍຕົກໃຈຫຼາຍວ່າລູກຂອງຕົນເກັ່ງກ້າຫຼາຍສາມາດລອຍນ້ຳເປັນ ແມ່ແບ້ຕັດສິນໃຈລອຍນ້ຳໄປຫາລູກ, ໄປຮອດລູກເຫັນກະຕ່າຍຈັບລູກຕົນເອງໄວ້, ກະຕ່າຍຫົວຍຸ້ມໆໃສ່ແມ່ແບ້ແລ້ວເວົ້າວ່າ ຕັ້ງແຕ່ເຈົ້າເກີດມາບໍ່ໄດ້ອາບນ້ຳຈັກເທື່ອບໍ ? ມື້ນີ້ ເຈົ້າຈຶ່ງໄດ້ອາບນ້ຳກໍ່ຖືວ່າເປັນວັນມື້ສິລິມຸງຄຸນຂອງເຈົ້າແທ້ໆ, ນັບຕັ້ງແຕ່ມື້ນັ້ນມາ ແບ້ຈຶ່ງຮູ້ຈັກລອຍນ້ຳເປັນມາຮອດສູ່ມື້ນີ້.

ຫຼັງຈາກນັ້ນ ກະຕ່າຍກໍ່ໄປຢູ່ນຳພວກກະຕູ, ແລ້ວກະຕ່າຍກໍ່ທ່ຽວໄປຫຼິ້ນນຳພະຍາເຈົ້າເມືອງ ແລະ ພະຍາເຈົ້າເມືອງເວົ້າກັບກະຕ່າຍວ່າ ເຈົ້າຜູ້ສະຫຼາດຫຼັກແຫຼມມີຊື່ສຽງລືຊື່ໃນວົງສັງຄົມ, ໃຫ້ເຈົ້າຕົວະກິນເຂົ້າຂອງຂ້ອຍແມ, ກະຕ່າຍຕອບວ່າ ຂ້ານ້ອຍຕົວະບໍ່ໄດ້ເຈົ້ານາຍເອີຍ, ຄັນຊັ້ນເຈົ້າບໍ່ສະຫຼາດ, ກະຕ່າຍຈື່ຈຳໄວ້ຄຳເວົ້າຂອງພະຍາເຈົ້າເມືອງ. ໃນມື້ຕໍ່ມາ ກະຕ່າຍກໍ່ເຕັ້ນມາຈອບເບິ່ງ ຄົນໃຊ້ພະຍາເຈົ້າເມືອງຈະກະກຽມ ກິນເຂົ້າແລ້ວບໍ? ກະຕ່າຍເຫັນຄົນໃຊ້ຍົກພາເຂົ້າມາແລ້ວ, ກະຕ່າຍຟ້າວເຕັ້ນແລ່ນໄປຫາເຮືອນພະຍາເຈົ້າເມືອງແລ້ວກໍ່ຂຶ້ນເຮືອນພະຍາເຈົ້າເມືອງຈຶ່ງເວົ້າວ່າ ຂ້ານ້ອຍເຫັນຄວາຍພະຍາເຈົ້າເມືອງຕົກຂຸມ ນອນຕາຍອາກລາກຢູ່. ພະຍາເຈົ້າເມືອງໄດ້ຍິນຄຳເວົ້າຂອງກະຕ່າຍວ່າ ຄວາຍຕົກຂຸມຕາຍກໍ່ຟ້າວແລ່ນໄປເບິ່ງຄວາຍຕົກຂຸມຕາຍ, ເມື່ອພະຍາເຈົ້າເມືອງໄປແລ້ວ, ກະຕ່າຍຟ້າວຂຶ້ນນັ່ງກິນເຂົ້າພະຍາເຈົ້າເມືອງທັນທີໂລດ, ພະຍາເຈົ້າເມືອງໄປຮອດບ່ອນ ກໍ່ບໍ່ເຫັນຄວາຍຕົກຂຸມຕາຍ, ພະຍາເຈົ້າເມືອງຈຶ່ງຮູ້ສຶກວ່າ ບັກກະຕ່າຍມັນຕົວະກິນເຂົ້າຂອງກູແລ້ວພະຍາເຈົ້າເມືອງຈຶ່ງກັບເມືອເຮືອນເຫັນກະຕ່າຍຈົ້ມແຂ້ວຢູ່, ກະຕ່າຍກໍ່ອັນເຊີນພະຍາເຈົ້າເມືອງກິນເຂົ້າ ຂ້ານ້ອຍກິນອີ່ມແລ້ວ.

ໃນເດືອນຕໍ່ມາ ກະຕ່າຍກໍ່ໄປຫາພະຍາເຈົ້າເມືອງອີກ ກະຕ່າຍໄປຮອດແຄມເຮືອນພະຍາເຈົ້າເມືອງ ກະຕ່າຍຍ່າງໄປເບິ່ງຄົນໃຊ້ຫ້າງຫາພາເຂົ້າ ໃຫ້ພະຍາເຈົ້າເມືອງແລ້ວບໍ? ກະຕ່າຍເຫັນຄົນໃຊ້ຍົກຊາມນໍ້າລ້າງມືແລ້ວ, ກະຕ່າຍໄປເກັບໃບໄມ້ແຫ້ງມາກອງໄວ້ໃກ້ໆເລົ້າເຂົ້າຂອງພະຍາເຈົ້າເມືອງ, ກະຕ່າຍແນມເຫັນພະຍາເຈົ້າເມືອງຍ່າງມາໃກ້ຈະນັ່ງລົງກິນເຂົ້າ, ກະຕ່າຍກໍ່ຟ້າວຈູດກອງໃບໄມ້ແຫ້ງໄຟລຸກຂຶ້ນຕວດໆ, ກະຕ່າຍຮ້ອງຂຶ້ນວ່າ ໄຟໄໝ້ເລົ້າເຂົ້າຂອງພະຍາເຈົ້າເມືອງແລ້ວ, ພະຍາເຈົ້າເມືອງຢືນຂຶ້ນ ເຫັນຄວັນໄຟພຸ່ງຂຶ້ນກາຍຫຼັງຄາເລົ້າເຂົ້າກໍ່ຟ້າວແລ່ນໄປມອດໄຟ, ກະຕ່າຍກໍ່ຟ້າວແລ່ນຂຶ້ນເຮືອນພະຍາເຈົ້າເມືອງແລ້ວນັ່ງກິນເຂົ້າເສີຍຢູ່, ພະຍາເຈົ້າເມືອງໄປຮອດເລົ້າເຂົ້າ ກໍ່ເຫັນໄຟລຸກຂຶ້ນທາງຂ້າງເລົ້າເຂົ້າຊື່ໆ, ບໍ່ແມ່ນໄຟໄໝ້ເລົ້າເຂົ້າ, ພະຍາເຈົ້າເມືອງກັບເມືອເຮືອນຕົນເອງ ກໍ່ເຫັນກະຕ່າຍນັ່ງບ້ວນປາກເສີຍຢູ່. ກະຕ່າຍກໍ່ອັນເຊີນພະຍາເຈົ້າເມືອງ ກິນເຂົ້າ ຂ້ານ້ອຍກິນເຂົ້າອີ່ມແລ້ວ, ພະຍາເຈົ້າເມືອງນັ່ງງຶກຫົວໃສ່ກະຕ່າຍງຶກໆ, ແລ້ວເວົ້າວ່າ ກະຕ່າຍ ເຈົ້າຊ່າງມາສະຫຼາດຫຼັກແຫຼມແທ້ນໍ.

ໃນມື້ໜຶ່ງ ກະຕ່າຍກັບພະຍາເຈົ້າເມືອງ ພາໄປຕັດໄມ້ໄຜ່ມາເຮັດຕອກມັດຮົ້ວນາ, ຫຼັງຈາກຕັດໄມ້ຕອກແລ້ວ ພະຍາເຈົ້າເມືອງ ແລະ ກະຕ່າຍກໍ່ພາກັນກັບບ້ານ, ກະຕ່າຍເວົ້າກັບພະຍາເຈົ້າເມືອງວ່າ ຂ້ານ້ອຍກິນເຂົ້າຫຼາມທໍ່ນິ້ວກ້ອຍກໍ່ບໍ່ໝົດ, ກິນທັງນັ່ງທັງນອນກໍ່ບໍ່ໝົດ, ພະຍາເຈົ້າເມືອງເວົ້ານຳກະຕ່າຍວ່າ ເຈົ້າຫຼາມຈັກສິບບັ້ງໃຫ້ຂ້ອຍກິນລອງເບິ່ງດູຈະໝົດບໍ? ໃນມື້ຕໍ່ມາກະຕ່າຍໄປຕັດກະບັ້ງເພື່ອຫຼາມເຂົ້າໃຫ້ພະຍາເຈົ້າເມືອງກິນ, ກະຕ່າຍເອົາເຊືອກແທກຮອບນິ້ວກ້ອຍ, ແລ້ວຕັດໄມ້ກະບັ້ງປາກກວ້າງ ສໍ່າການແທກນິ້ວກ້ອຍ, ກະຕ່າຍຫຼາມເຂົ້າແລ້ວ, ກະຕ່າຍກໍ່ແບກກະບັ້ງເຂົ້າຫຼາມໄປໃຫ້ພະຍາເຈົ້າເມືອງກິນ, ເມື່ອຮອດເຈົ້າເມືອງເຫັນກະບັ້ງເຂົ້າຫຼາມໃຫຍ່, ເຈົ້າເມືອງເວົ້າກັບກະຕ່າຍວ່າ ຢູ່ໃສ ເຂົ້າຫຼາມໃຫຍ່ທໍ່ນິ້ວກ້ອຍ, ກະຕ່າຍຕອບວ່າອັນນີ້ເດ? ພະຍາເຈົ້າເມືອງເວົ້າວ່າ ກະບັ້ງເຂົ້າຫຼາມມັນໃຫຍ່ ສໍ່າແຂນແລ້ວເຈົ້າພັດເວົ້າວ່າ ສໍ່ານິ້ວກ້ອຍຊັ້ນບໍ? ກະຕ່າຍເອົາເຊືອກມາແທກປາກກະບັ້ງແລ້ວມາແທກໃສ່ນິ້ວກ້ອຍເທົ່າກັນປັບ, ເຫັນບໍ່ພະຍາເຈົ້າເມືອງ, ກະບັ້ງເຂົ້າຫຼາມໃຫຍ່ເທົ່າກັບນິ້ວກ້ອຍແປະບໍ່ລື່ນບໍ່ຫຼຸດຈັກໜ້ອຍເລີຍ, ພະຍາເຈົ້າເມືອງບໍ່ປາກຈັກຄໍາ,

ພະຍາເຈົ້າເມືອງ ບອກກະຕ່າຍໄປຊອກຫາຢາກໍາລັງແຮງ, ກະຕ່າຍກໍ່ບອກພະຍາເຈົ້າເມືອງວ່າຢາກໍາລັງໃຫ້ມີເຫື່ອມີແຮງນັ້ນມັນບໍ່ຍາກດອກ, ຂ້ານ້ອຍຈະພາພະຍາເຈົ້າເມືອງໄປຫາຊອກຢາກໍາລັງຢູ່ເທິງພູພຸ້ນ ພະຍາເຈົ້າເມືອງກັບກະຕ່າຍກໍ່ພາກັນອອກຈາກບ້ານເດີນທາງໄປຫາໜ່ວຍພູນີ້ໜ່ວຍພູນັ້ນ ກະຕ່າຍພາພະຍາເຈົ້າເມືອງຂຶ້ນພູລົງຫ້ວຍຊອກຫາຢາກໍາລັງ ໝົດ ທຸກໆໜ່ວຍພູແຕ່ເຊົ້າຮອດຄໍ່າກໍ່ບໍ່ໄດ້, ພະຍາເຈົ້າເມືອງອິດເມື່ອຍຫຼາຍແລ້ວກໍ່ຊວນກະຕ່າຍກັບບ້ານ, ເມື່ອເມືອຮອດເຮືອນແລ້ວ ພະຍາເຈົ້າເມືອງອິດເມື່ອຍຫຼາຍຢາກນອນແຮງ, ເພິ່ນນອນແຕ່

ທີວຄໍ່າຊໍ້າພັດຕື່ນສວາຍ, ກະຕ່າຍໄປຫາພະຍາເຈົ້າເມືອງ, ພະຍາເຈົ້າເມືອງເວົ້ານຳກະຕ່າຍວ່າ ມື້ນີ້ຂ້ອຍນອນຫຼັບດີຫຼາຍ, ກະຕ່າຍເວົ້າວ່າ ອັນນັ້ນແລ້ວຢາກຳລັງ, ພະຍາເຈົ້າເມືອງຈຶ່ງຮູ້ຈັກວ່າ ກະຕ່າຍຕົວະຕົນເອງ.

ພະຍາເຈົ້າເມືອງອອກຈາກບ້ານໄປຢ້ຽມຢາມປະຊາຊົນໃນໝູ່ບ້ານຕ່າງໆ, ພະຍາເຈົ້າເມືອງໄປໄດ້ຫຼາຍໝູ່ບ້ານກໍ່ຊວນກະຕ່າຍກັບບ້ານ, ໃນເມື່ອກັບເມືອຮອດເຮືອນແລ້ວພະຍາເຈົ້າເມືອງພັດຢາກສູບຢາຊອກຫາກອກຢາບໍ່ເຫັນ, ພະຍາເຈົ້າເມືອງພັດຮ້າຍກະຕ່າຍວ່າ ຂາດຄວາມຮັບຜິດຊອບເບິ່ງເຄື່ອງຂອງພະຍາເຈົ້າເມືອງບໍ່ໄດ້, ກະຕ່າຍເວົ້າວ່າ ຂ້ານ້ອຍເຫັນກອກຢາຕົກເຮ່ຍຢູ່ກາງທາງພຸ້ນ, ແຕ່ຂ້ານ້ອຍຄິດວ່າ ພະຍາເຈົ້າເມືອງຖິ້ມແລ້ວ ຫຼື ຢ່າສູບຢາແລ້ວຊັ້ນດອກ. ພະຍາເຈົ້າເມືອງເວົ້າວ່າ ກະຕ່າຍເອີຍ ! ມື້ໜ້າຖ້າພວກເຮົາເດີນທາງອອກໄປທາງໃດຖ້າເຫັນສິ່ງຂອງ ພະຍາເຈົ້າເມືອງຕົກເຮ່ຍເຈົ້າຕ້ອງເກັບມາໃຫ້ໝົດ ກະຕ່າຍຕອບວ່າ ໂດຍຂ້ານ້ອຍ ຂ້ານ້ອຍເຫັນສິ່ງຂອງຕົກເຮ່ຍຢູ່ບ່ອນໃດຂ້ານ້ອຍຈະເກັບເອົາໃຫ້ໝົດດອກ. ໃນມື້ຕໍ່ມາພະຍາເຈົ້າເມືອງໄດ້ອອກເດີນທາງໄປຢ້ຽມຢາມປະຊາຊົນໃນແຕ່ລະໝູ່ບ້ານອີກ, ພະຍາເຈົ້າເມືອງຂີ່ມ້າໄປ, ສ່ວນກະຕ່າຍຍ່າງໄປຕາມຫຼັງເຈົ້າເມືອງ. ຫຼັງຈາກຢ້ຽມຢາມປະຊາຊົນແລ້ວໆ ພະຍາເຈົ້າເມືອງກັບເມືອບ້ານກ່ອນ, ແຕ່ກະຕ່າຍຍ່າງເມືອຕາມຫຼັງ, ກະຕ່າຍເຫັນແຕ່ຂີ້ມ້າ ຂອງພະຍາເຈົ້າເມືອງເຮ່ຍຊະຊາຍຍາຍ ຕາມທາງເມືອບ້ານ ກະຕ່າຍກໍ່ເກັບໃສ່ກະຕ່າແລ້ວຫາບເມືອບ້ານ, ກະຕ່າຍກັບເມືອບ້ານຊ້າຫຼາຍ ພະຍາເຈົ້າເມືອງຖາມກະຕ່າຍວ່າ ເປັນຫຍັງເຈົ້າກັບມາຮອດບ້ານຊ້າແທ້ ກະຕ່າຍຕອບວ່າ ໂດຍຂ້ານ້ອຍໆເກັບສິ່ງຂອງພະຍາເຈົ້າເມືອງທີ່ຕົກເຮ່ຍ ພະຍາເຈົ້າເມືອງເວົ້າວ່າດີຫຼາຍ, ເຈົ້າໄປເອົາມາໃຫ້ຂ້ອຍເບິ່ງດູ, ກະຕ່າຍຟ້າວໄປຫາບມາໃຫ້ພະຍາເຈົ້າເມືອງເບິ່ງແລ້ວເຫັນແຕ່ຂີ້ມ້າເຕັມກະຕ່າ, ພະຍາເຈົ້າເມືອງຮ້າຍດ່າກະຕ່າຍວ່າ ອັນນີ້ມັນບໍ່ແມ່ນສິ່ງຂອງເຮ່ຍດອກ. ກະຕ່າຍເວົ້າວ່າ ຂ້ານ້ອຍໄດ້ຍິນພະຍາເຈົ້າເມືອງເວົ້າວ່າ ມື້ໜ້າຖ້າເຫັນສິ່ງຂອງພະຍາເຈົ້າເມືອງຕົກເຮ່ຍໃຫ້ຂ້ານ້ອຍເກັບເອົາໝົດ, ຂ້ານ້ອຍຄິດວ່າຂີ້ມ້າກໍ່ແມ່ນສິ່ງຂອງຕົກເຮ່ຍ ເພາະວ່າມ້າແມ່ນພະຍາເຈົ້າເມືອງຂີ່ມາ, ພະຍາເຈົ້າເມືອງເວົ້າວ່າ ໄດ້ແລ້ວຍ້ອນວ່າຂ້ອຍເວົ້າບໍ່ຈະແຈ້ງ.

ໃນມື້ລຸນມາ ພະຍາເຈົ້າເມືອງບອກກະຕ່າຍໄປເຝົ້າເຮືອນໃຫ້, ພະຍາເຈົ້າເມືອງຂີ່ມ້າມາເມື່ອຍຫຼາຍ, ກະຕ່າຍເຝົ້າເຮືອນປ່ອຍໃຫ້ໄກ່ເຂົ້າຂີ້ໃສ່ຊະເຕັມກາງເຮືອນ, ໄປໃສມາໃສແນມເຫັນແຕ່ກອງຂີ້ໄກ່ທົ່ວໄປໝົດ ພະຍາເຈົ້າເມືອງກັບມາຮອດເຮືອນ ເຫັນແຕ່ຂີ້ໄກ່ເຕັມທົ່ວເຮືອນກໍ່ຮ້າຍ ດ່າໃຫ້ກະຕ່າຍ ວ່າ ຢູ່ເຮືອນບໍ່ມີຕາບໍ ສັງມາປະປ່ອຍໃຫ້ໄກ່ມາຂີ້ໃສ່ເຮືອນ? ກະຕ່າຍຕອບວ່າ ຂ້ານ້ອຍໄລ່ໄກ່ບໍ່ຫຼ້ອນ, ມື້ໜ້າຖ້າໄກ່ມາຂີ້ໃສ່ເຮືອນອີກໃຫ້ເຈົ້າເລຍກິນໃຫ້ໝົດ, ກະຕ່າຍຕອບວ່າ ໂດຍຂ້ານ້ອຍ. ມື້ຕໍ່ມາ ພະຍາເຈົ້າເມືອງບອກກະຕ່າຍເຝົ້າເຮືອນໃຫ້ອີກ ກະ

24/VII

ຕ່າຍຄຽດໃຫ້ພະຍາເຈົ້າເມືອງທີ່ເວົ້າໃຫ້ຕົນເອງເລຍກິນຂີ້ໄກ່, ກະຕ່າຍຄິດວ່າ ຂ້ອຍຈະໃຫ້ພະຍາເຈົ້າເມືອງກິນຂີ້ໄກ່ໃນມື້ນີ້, ຫຼັງຈາກນັ້ນ ກະຕ່າຍເອົາໝາກງາດຳ ແລະ ເຂົ້າໜຽວສຸກມາຕຳປົນກັນແລ້ວ ກະຕ່າຍປັ້ນເຮັດເປັນກອງອິ່ມລິ້ມແອມແລ້ມເໝືອນກັບກອງຂີ້ໄກ່ແທ້. ພະຍາເຈົ້າເມືອງກັບມາເຮືອນ ແນມເຫັນຂີ້ໄກ່ຊະຊາຍເຕັມກາງເຮືອນກໍ່ເລີຍບອກກະຕ່າຍວ່າ ເຈົ້າຕ້ອງເລຍກິນໃຫ້ໝົດດຽວນີ້, ກະຕ່າຍຕອບວ່າ ໂດຍຂ້ານ້ອຍ, ກະຕ່າຍກໍ່ເລຍກິນປຸບປັບໆຕາມຄຳສັ່ງ, ພະຍາເຈົ້າເມືອງແນມເຫັນກະຕ່າຍກິນຄືຊິແຊບແທ້, ເອົາມາກູຊິມເບິ່ງດູ, ກະຕ່າຍກໍ່ເອົາໃຫ້ພະຍາເຈົ້າເມືອງຊີມວ່າແຊບຫຼາຍ, ພະຍາເຈົ້າເມືອງຊອກຫາເລຍກິນຖືກບ່ອນຂີ້ໄກ່ແທ້ໆ, ພະຍາເຈົ້າເມືອງຮາກອອກມາກັບທີ່, ອັນນີ້ເຂົາເຈົ້າເລົ່າເລື່ອງ ພະຍາເຈົ້າເມືອງກິນຂີ້ໄກ່.

ໃນມື້ຕໍ່ມາ ກະຕ່າຍກໍ່ໄປຫາພະຍາເຈົ້າເມືອງ ພໍໄປຮອດພະຍາເຈົ້າເມືອງບອກວຽກກັບກະຕ່າຍວ່າ ພວກເຮົາມີວຽກຈະອອກເດີນທາງແຕ່ເຊົ້າໆ. ດັ່ງນັ້ນ, ກະຕ່າຍເຈົ້າຕ້ອງມາຫາພະຍາເຈົ້າເມືອງກ່ອນໄກ່ເດີ. ກະຕ່າຍຕອບວ່າໂດຍຂ້ານ້ອຍ, ຂ້ານ້ອຍຈະມາຫາພະຍາເຈົ້າເມືອງກ່ອນໄກ່ດອກ, ພະຍາເຈົ້າເມືອງວ່າດີແລ້ວ. ກະຕ່າຍເມືອນອນເລີຍຕື່ນສວາຍ, ກະຕ່າຍເລີຍ ໄປຈັບເອົາໄກ່ຜູ້ໂອກແລ້ວຈູງໄປຫາພະຍາເຈົ້າເມືອງ, ໃນເມື່ອໄປຮອດເຮືອນພະຍາເຈົ້າເມືອງແລ້ວ, ພະຍາເຈົ້າເມືອງບອກວ່າ ເຈົ້າຕ້ອງມາກ່ອນໄກ່ເຈົ້າບໍ່ປະຕິບັດຕາມຄຳສັ່ງ, ກະຕ່າຍເວົ້າວ່າ ໂດຍຂ້ານ້ອຍ, ດຽວນີ້ຂ້ານ້ອຍມາກໍ່ມາກ່ອນໄກ່ແລ້ວ, ໄກ່ກໍ່ມາຕາມຫຼັງຂ້ານ້ອຍຢູ່ແລ້ວ, ພະຍາເຈົ້າເມືອງບໍ່ເຊື່ອເບິ່ງແມ ໄກ່ມັນຕາມຫຼັງຂ້ານ້ອຍແທ້ໆ. ພະຍາເຈົ້າເມືອງວ່າ ຂ້ອຍບອກເຈົ້າມາກ່ອນໄກ່ໝາຍຄວາມວ່າ ເຈົ້າຕ້ອງຕື່ນກ່ອນໄກ່ບໍ່ທັນຂັນເດີ! ຂ້ານ້ອຍຂໍໂທດພະຍາເຈົ້າເມືອງ, ພະຍາເຈົ້າເມືອງ ຕອບວ່າບໍ່ເປັນຫຍັງດອກ ຍ້ອນວ່າຂ້ອຍເວົ້າງ່າຍແຕ່ເຈົ້າເຂົ້າໃຈຍາກ.

ພະຍາເຈົ້າເມືອງກັບກະຕ່າຍລົມກັນເລື່ອງການສຶກສາຮ່ຳຮຽນໜັງສື, ພະຍາເຈົ້າເມືອງຖາມກະຕ່າຍວ່າ ກະຕ່າຍເຈົ້າຮູ້ໜັງສືບໍ? ກະຕ່າຍຕອບວ່າໂດຍຂ້ານ້ອຍ, ຂ້ານ້ອຍຮູ້ຈັກເລັກໜ້ອຍ, ພະຍາເຈົ້າເມືອງເວົ້າກັບກະຕ່າຍວ່າ ມື້ໜ້າໃຫ້ກະຕ່າຍຂຽນໜັງສືໃຫ້ພະຍາເຈົ້າເມືອງເບິ່ງແດ່. ຫຼັງຈາກນັ້ນ ກະຕ່າຍກໍ່ກັບເມືອເຮືອນ, ກະຕ່າຍນອນຄິດນັ່ງຄິດເຮັດແນວໃດຈິ່ງຈະຂຽນໜັງສືໄດ້ ເພື່ອໃຫ້ພະຍາເຈົ້າເມືອງເບິ່ງ, ກະຕ່າຍໄປອາບນ້ຳແລ້ວມານອນຄິດຢູ່ ກໍ່ເຫັນກະປູໄຕ່ຕາມພະລານຫີນເປັນຮອຍຕີນຕາມພະລານຫີນ ກະຕ່າຍຫົວຍຸ້ມແລ້ວຈັບກະປູເມືອເຮືອນກະຕ່າຍຖອກນ້ຳເມິກໃສ່ຖ້ວຍ ແລ້ວເອົາກະປູຈຸ່ມໃສ່ນ້ຳເມິກ ແລ້ວປ່ອຍກະປູໄຕ່ ໄປຕາມກະດົ້ງ, ກະປູໄຕ່ໄປໄຕ່ມາເປັນຮອຍຄືຕົວໜັງສື, ແລ້ວກະຕ່າຍຄິດວ່າຕົນເອງຈະອ່ານແບບໃດ? ຄາວໜຶ່ງກະຕ່າຍຄິດອອກວ່າຕ້ອງອ່ານວ່າ : ກະເປທະລູກະປູຢູ່ນາ. ກະຕ່າຍອອກເຮືອນພ້ອມເອົາກະດົ້ງພາຍໃສ່ບ່າ ແລ້ວຍ່າງໄປຫາເຮືອນພະຍາເຈົ້າເມືອງ ເມື່ອມາເຖິງເຮືອນພະຍາເຈົ້າເມືອງແລ້ວ, ກະຕ່າຍຂໍໂທດພະຍາເຈົ້າເມືອງວ່າ ຂ້ານ້ອຍໄດ້ຂຽນໃສ່ກະດົ້ງຍ້ອນວ່າຂ້ານ້ອຍບໍ່ມີ

ເຈ້ຍ, ພະຍາເຈົ້າເມືອງເບິ່ງໄປເບິ່ງມາກໍ່ອ່ານບໍ່ອອກແກວ່ງຫົວຢູ່ ກະຕ່າຍເລີຍຖາມວ່າ ພະຍາເຈົ້າເມືອງອ່ານອອກບໍ? ບໍ່ເປັນຫຍັງດອກ? ຂ້ານ້ອຍຈະອ່ານແທນກໍ່ໄດ້ ພະຍາເຈົ້າເມືອງໃຫ້ກະຕ່າຍອ່ານ ກະຕ່າຍອ່ານວ່າ: ກະເປທະລູກະປູຢູ່ນາໄຕ່ເຈ້ຍ. ກະຕ່າຍອະທິບາຍການຂຽນໜັງສືຂອງຕົນເອງ ແມ່ນເລື່ອງກະປູໄຕ່ນັ້ນເອງ, ພະຍາເຈົ້າເມືອງໄດ້ແຕ່ເວົ້າວ່າ: ໂອຍ! ໂອຍ !

ຕໍ່ມາພະຍາເຈົ້າເມືອງເຮັດບຸນເຮືອນ ກະຕ່າຍກໍ່ອອກໄປຫາພະຍາເຈົ້າເມືອງແຕ່ເຊົ້າໆ, ໃນເມື່ອໄປຮອດເຮືອນພະຍາເຈົ້າເມືອງແລ້ວ, ພະຍາເຈົ້າເມືອງບອກກະຕ່າຍໄປເກັບໝາກເຜັດຢູ່ສວນ, ກະຕ່າຍຕອບວ່າໂດຍຂ້ານ້ອຍ ພະຍາເຈົ້າເມືອງບອກວ່າເກັບໝາກເຜັດໄດ້ແລ້ວໃຫ້ຮີບກັບ ມາເຮືອນ, ກະຕ່າຍຕອບວ່າໂດຍຂ້ານ້ອຍ ກະຕ່າຍຄິດເຫັນຄຳເວົ້າຂອງພະຍາເຈົ້າເມືອງທີ່ບອກຕົນເອງວ່າ ເກັບໝາກເຜັດ ຫຼື ປິດເອົາໝາກເຜັດ. ກະຕ່າຍໄປຮອດສວນແລ້ວເລາະເບິ່ງຕົ້ນໝາກເຜັດກໍ່ບໍ່ເຫັນມີໝາກເຜັດຕົກຫຼົ່ນລົງຈັກໜ່ວຍ, ກະຕ່າຍກໍ່ເລີຍນອນລໍຖ້າໝາກເຜັດຫຼົ່ນລົງຈຶ່ງເກັບເອົາ, ແຕ່ບໍ່ເຫັນໝາກ ເຜັດຕົກລົງຈັກໜ່ວຍເລີຍ. ພະຍາເຈົ້າເມືອງລໍຖ້າເອົາໝາກເຜັດນຳກະຕ່າຍກໍ່ບໍ່ເຫັນກັບມາເລີຍແຕ່ງເສນາໄປເບິ່ງວ່າກະຕ່າຍມັນໄປໃສ? ພວກເສນາໄປຮອດສວນກໍ່ເຫັນກະຕ່າຍນອນຢ່າງສະບາຍ, ກະຕ່າຍເວົ້າວ່າ ໝາກເຜັດບໍ່ຫຼົ່ນຈັກໜ່ວຍກໍ່ເລີຍນອນລໍຖ້າໝາກເຜັດຫຼົ່ນ, ພວກເສນາເຂົາເຈົ້າພາກັນເກັບເອົາໝາກເຜັດ, ກະຕ່າຍເວົ້າວ່າເຮັດແບບນີ້ມັນບໍ່ແມ່ນເກັບໝາກເຜັດ, ເຂົາເຈົ້າເອີ້ນວ່າ ປິດເອົາໝາກເຜັດໃດ? ຄັນພະຍາເຈົ້າເມືອງບອກຂ້ອຍໄປປິດໝາກເຜັດ ຂ້ອຍກໍ່ປິດແລ້ວແຕ່ດົນແລ້ວ, ຂ້ອຍກໍ່ກັບບ້ານເມືອເຮືອນແຕ່ດົນແລ້ວ, ເຂົາເຈົ້າພາກັນຫົວຂວັນຢ່າງສະອຶກສະອື້ນ, ເມືອຮອດບ້ານ ເສນາກໍ່ເລົ່າເລື່ອງລາວທີ່ກະຕ່າຍນອນລໍຖ້າໝາກເຜັດຕົກຫຼົ່ນຈຶ່ງເກັບເອົາ, ພະຍາເຈົ້າເມືອງ ເວົ້າວ່າ ແມ່ນຄວາມກະຕ່າຍມັນຖືກຕ້ອງແລ້ວຄວາມຜິດແມ່ນ ຢູ່ນຳພະຍາເຈົ້າເມືອງບໍ່ແມ່ນຄຳຜິດນຳກະຕ່າຍດອກ.

ພະຍາເຈົ້າເມືອງຊວນກະຕ່າຍໄປຄ້າຂາຍຢູ່ເມືອງແຫ່ງໜຶ່ງ, ພະຍາເຈົ້າເມືອງຊື້ສິນຄ້າຢ່າງໜຶ່ງຄືສີສຽດ, ພະຍາເຈົ້າເມືອງໃຫ້ກະຕ່າຍເປ້ແດ່, ຕ່າງໃສ່ມ້າແດ່, ພະຍາເຈົ້າເມືອງເວົ້ານຳກະຕ່າຍວ່າ ພວກເຮົາໄປຕ້ອງມີການຂ້າມນ້ຳຂ້າມໄນ, ກະຕ່າຍມີຄວາມສົນໃຈນຳຄຳເວົ້າຂອງພະຍາເຈົ້າເມືອງວ່າ ຂ້າມນ້ຳຂ້າມໄນ ກະຕ່າຍຄິດວ່າຖ້າເຮົາໄປມີນ້ຳເຊັ່ນນັ້ນເຮົາຕ້ອງຂີ່ເຮືອໄປ, ຂີ່ແພໄປ, ເຮົາຕ້ອງລອຍນ້ຳໄປ ແລະ ເຮົາຢັ່ງນ້ຳໄປແຕ່ເປັນຫຍັງ? ພະຍາເຈົ້າເມືອງວ່າ ຂ້າມນ້ຳຂ້າມໄນ ກະຕ່າຍທັງຍ່າງໄປທັງຄິດໄປນຳ, ພະຍາເຈົ້າເມືອງກັບກະຕ່າຍໄປຮອດແມ່ນ້ຳແລ້ວ, ພະຍາເຈົ້າເມືອງແກ້ຜ້າສະໂຫຼງແລ້ວຢັ່ງນ້ຳໄປຈວາກໆ. ໃນເມື່ອຂ້າມນ້ຳແລ້ວ ກະຕ່າຍຖາມພະຍາເຈົ້າເມືອງວ່າຢູ່ໃສພະຍາເຈົ້າເມືອງວ່າຂ້າມນ້ຳ, ຂ້ານ້ອຍເຫັນພະຍາເຈົ້າເມືອງແກ້ຜ້າສະໂຫຼງລົງຢັ່ງນ້ຳ, ຄັນວ່າຂ້າມນ້ຳຕ້ອງເອົາຕີນຢຽບແຄມນ້ຳເບື້ອງນີ້, ແລ້ວເອົາຕີນເບື້ອງໜຶ່ງ

ໄປຢຽບແຄມນ້ຳເບື້ອງພຸ້ນ ເຂົາຈຶ່ງເອີ້ນວ່າ ຂ້າມນ້ຳ, ພະຍາເຈົ້າເມືອງບໍ່ຮູ້ຈັກຊິຕອບກັບກະຕ່າຍວ່າແນວໃດ? ພະຍາເຈົ້າເມືອງຕອບວ່າຈັ່ງວ່າລະເດີ? ພາສາລາວເວົ້າງ່າຍຟັງຍາກໃດກະຕ່າຍເອີຍ.

ໃນເມື່ອມີຊື່ສຽງໂດ່ງດັງ ໄປຫຼາຍແຫ່ງຫຼາຍທີ່ນ ກ່ຽວກັບຄວາມສະຫຼາດສະຫຼຽວຂອງກະຕ່າຍ, ການໃຊ້ສະຕິປັນຍາກັບຄູ່ຕໍ່ສູ້ດ້ວຍຄວາມຫຼັກແຫຼມ. ເພາະສະນັ້ນ ມີສອງສ່ຽວໂອ້ລົມກັນວ່າ ກະຕ່າຍມີຄວາມສະຫຼາດໃດສ່ຽວ, ສ່ຽວຜູ້ໜຶ່ງວ່າຄັນມັນສະຫຼາດຫຼາຍ ພວກເຮົາເອົາຕົດອັດໃສ່ກະບັ້ງໄວ້ໃຫ້ມັນດົມສ່ຽວເອີຍ, ສອງສ່ຽວກໍ່ເລີຍໄປຕັດເອົາກະບັ້ງໄມ້ ແລ້ວຕົດໃສ່ກະບັ້ງດັ່ງກ່າວແລ້ວອັດໄວ້, ສອງສ່ຽວລົມກັນຢ່າງເອົາຈິງເອົາຈັງວ່າມັນສະຫຼາດມັນດົມຕົດດົມຂີ້ເຮົາໃດສ່ຽວ. ພວກເຂົາເດີນທາງໄປໄກເຕີບ ບໍ່ທັນຮອດບ່ອນກະຕ່າຍຢູ່ ແລະ ເຂົາເຈົ້າກໍ່ບໍ່ທັນເຄີຍເຫັນໜ້າກະຕ່າຍຈັກເທື່ອ, ເມື່ອໄປຮອດບ່ອນໜຶ່ງຈຶ່ງພົບກັບກະຕ່າຍແຕ່ບໍ່ຮູ້ຈັກກັນ, ກະຕ່າຍເລີຍຖາມວ່າ ພວກສ່ຽວຊິໄປໃສ? ພວກເຂົາເຈົ້າຕອບວ່າ ພວກເຮົາຊິໄປຫາຜູ້ສະຫຼາດທີ່ມີຊື່ສຽງລຽງນາມວ່າ ກະຕ່າຍ, ເອົາ ! ຊິໄປຫາມັນເຮັດຫຍັງ? ພວກເຮົາຢາກໃຫ້ມັນດົມບັ້ງປາແດກ? ບໍ່ແມ່ນບັ້ງປາແດກ ຂ້ອຍຄິດວ່າກະບັ້ງພວກເຈົ້າແບກມານັ້ນເປັນກະບັ້ງຕົດແມ່ນບໍ? ພວກເຂົາເຈົ້າຕອບວ່າແມ່ນແລ້ວ ກະຕ່າຍຖາມວ່າພວກເຈົ້າບໍ່ແມ່ນມາແຕ່ທາງໄກບໍ່? ເຂົາເຈົ້າຕອບວ່າແມ່ນແລ້ວ, ພວກເຈົ້າໄດ້ຂ້າມນ້ຳເຊ, ນ້ຳຫ້ວຍມາບໍ່? ເຂົາເຈົ້າຕອບວ່າພວກເຮົາໄດ້ຂ້າມແທ້, ຖ້າໄດ້ຂ້າມມາແນວນັ້ນມັນ ອາດຈະເຫີຍອາຍອອກແລ້ວໃດ໋ ! ຄັນບໍ່ເຊື່ອໃຫ້ພວກເຈົ້າເປີດອອກມາດົມລອງເບິ່ງດູ? ເຂົາເຈົ້າເປີດຝາອັດບັ້ງຕົດຂອງຕົນເອງອອກມາດົມແລ້ວ ກໍ່ຍັງເໝັນຢູ່, ກະຕ່າຍກໍ່ເລີຍສະເໜີຕົວວ່າ ຂ້ອຍນີ້ແລ້ວກະຕ່າຍຜູ້ສະຫຼາດທີ່ພວກເຈົ້າຈະຊອກຫາໃຫ້ດົມກະບັ້ງຕົດຂອງພວກເຈົ້ານັ້ນ, ໃນທີ່ສຸດກໍ່ແມ່ນ ພວກເຈົ້າເອງເປັນຜູ້ດົມຕົດຂອງຕົນເອງ ກໍ່ບໍ່ເປັນຫຍັງດອກດີກວ່າຊິໄປດົມຕົດຂອງຜູ້ອື່ນ, ເຂົາເຈົ້າທັງສອງຕົກຕະລຶງໃຈແລ້ວສອງສ່ຽວກໍ່ຍັງຂໍໂທດນຳກະຕ່າຍອີກດ້ວຍ.

ໃນມື້ໜຶ່ງ ກະຕ່າຍຂ້າງູແລ້ວເອົາງູຍັດໃສ່ຮູໄວ້ປະມານເຄິ່ງໂຕອີກເຄິ່ງໜຶ່ງຍັງຂວາງທາງຕາບຊາບຢູ່, ຊາວບ້ານເຫັນງູນອນຢຽດຕົວຢູ່ໃຜໆກໍ່ຢ້ານຫຼາຍ, ພວກເຂົາຈຶ່ງຈົ່ມຫາກະຕ່າຍ, ຖ້າກະຕ່າຍຢູ່ມັນສາມາດຂ້າງູໄດ້, ກະຕ່າຍໄດ້ຍິນຊາວບ້ານຄິດຮອດຕົນເອງ, ກະຕ່າຍຈຶ່ງຮ້ອງຂຶ້ນໃຊ້ສຽງອອກມາແຕ່ໄກໆວ່າ ຂ້ອຍມາແລ້ວຊາວບ້ານເອີຍ ! ເຂົາເຈົ້າບອກຂ້ອຍມາຂ້າງູ, ກະຕ່າຍ ແລ່ນມາຂ້າງູທັນທີ ແລະ ເອົາງູອອກຈາກເສັ້ນທາງຂອງຊາວບ້ານທີ່ຫຽວໄປມານັ້ນ, ແລ້ວມັນກໍ່ ແລ່ນໜີເຂົ້າປ່າໄປ.

ໃນເດືອນຕໍ່ມາ ກະຕ່າຍກໍ່ອຶດຫິວຫຼາຍຈິດໃຈກະວົນກະວາຍ, ອາຫານການກິນກໍ່ອຶດຫຼາຍ, ກະຕ່າຍກໍ່ເລີຍໄປພົບກັບງູເຫົ່າໂຕໜຶ່ງ ແລະ ມັນກໍ່ຂ້າງູໂຕດັ່ງກ່າວນັ້ນ ແລ້ວກໍ່ເອົາໄປ

ປະໄວ້ໃນ ກາງທາງຊາວບ້ານທັງຫຼາຍທີ່ຍ່າງໄປມາເຫັນກໍ່ເລີຍຢ້ານ, ເຂົາເຈົ້າຊອກຫາກະຕ່າຍມາຂ້າງູອີກພໍ ກະຕ່າຍມາຮອດ, ມັນຈຶ່ງຮ້ອງຊາວບ້ານເອົາເຂົ້າປາອາຫານມາໃຫ້ມັນກິນ, ຖ້າບໍ່ໃຫ້ມັນກິນກ່ອນ ມັນກໍ່ບໍ່ສາມາດຂ້າງູນັ້ນໄດ້, ຊາວບ້ານກໍ່ພາກັນເກັບເຂົ້າປາອາຫານມາໂຮມກອງກັນໄວ້ໃຫ້ມັນຮຽບຮ້ອຍແລ້ວ, ກະຕ່າຍຈຶ່ງໄດ້ຈັບໄມ້ຄ້ອນແລ່ນໄປຕີງູທີ່ຕາຍແລ້ວນັ້ນ ແລະເອົາອອກຈາກທາງໃຫ້ຊາວບ້ານໄປມາໄດ້ຢ່າງສະດວກສະບາຍ.

ວັນເດືອນປີໄດ້ຜ່ານພົ້ນໄປ ກະຕ່າຍໄດ້ອະໄສຢູ່ໃນເຂດທົ່ງພຽງໄດ້ຫຼາຍປີພໍສົມຄວນ, ກະຕ່າຍຢູ່ຮັບໃຊ້ພະຍາເຈົ້າເມືອງ, ແຕ່ກະຕ່າຍກໍ່ບໍ່ລືມເລື່ອງເກົ່າຄາວຫຼັງ, ກະຕ່າຍຈຶ່ງຕັດສິນໃຈກັບມາຢູ່ໃນເຂດກະຕູເໝືອນເດີມ, ກະຕ່າຍຄິດວ່າ ທຸກສິ່ງທຸກຢ່າງທີ່ຕົນເອງໄດ້ກະທຳຜ່ານມານັ້ນ ມັນເປັນເລື່ອງອະດີດໄປແລ້ວ, ແຕ່ວ່າເລື່ອງຄວາມຄຽດແຄ້ນນັ້ນ ມັນບໍ່ແມ່ນເລື່ອງທີ່ຈະຈືດຈາງຫ່າງຫາຍໄປແບບງ່າຍດາຍດອກ, ການຫວັງທຳລາຍຂ້າກະຕ່າຍຍັງມີຢູ່. ກະຕ່າຍ ໃນເມື່ອມາຮອດເຂດກະຕູແລ້ວບໍ່ກ້າເຂົ້າບ້ານຂອງຄົນກະຕູ, ມັນລີບຫຼີກລີ້ຕົວຢູ່ໃນປ່າ, ກະຕ່າຍຊອກຫາກິນຍາກຫຼາຍ ແລະ ຄວາມທຸກຍາກປາກໝອງກໍ່ເກີດມີຂຶ້ນ, ກະຕ່າຍ ອອກຊອກຫາກິນຕາມໂນນພູແລ້ວໄປພົບກະຕ່ຳໂຕນ, ກະຕ່ຳໂຕນເລີຍເອີ້ນວ່າ ກະຕ່າຍເຂົ້າມາຫາຂ້ອຍແດ່, ຂ້ອຍໄດ້ຖ້າເຈົ້າມາຫຼາຍປີແລ້ວ, ກະຕ່າຍຫຼຽວເຫັນມັນຕົ້ນ ທີ່ປະໄວ້ຢູ່ເທິງໄມ້ບ່ອນຫ້າງກະຕ່ຳໂຕນຊາບລາບຢູ່, ກະຕ່າຍເລີຍຫຼົງເຊື່ອຕາມຄຳເຊີນຂອງກະຕ່ຳໂຕນ ຈຶ່ງໂຕນລົງ, ປະຕິບັດຕາມຄຳສັ່ງຂອງຄົນທີ່ ບອກວ່າ ໃຫ້ຢູ່ລໍຖ້າກະຕ່າຍມາແລ້ວພະຍາຍາມຂ້າກະຕ່າຍໃຫ້ໄດ້, ກະຕ່າຍໄດ້ໂຕນລົງໄປໃນ ກະຕ່ຳໂຕນແລ້ວ ກະຕ່ຳໂຕນກໍ່ເລີຍລັ່ນທັບມັນຕາຍຄາກັບທີ່, ກະຕ່ຳໂຕນຄິດວ່າກະຕ່າຍຕາຍແລ້ວ, ກະຕ່າຍກໍ່ຮູ້ສຶກຕົນເອງວ່າກູຕ້ອງຕາຍແທ້ໆມື້ນີ້ ມັນເລີຍເອົາກອກຢາມາຄາບໄວ້, ກະຕ່ຳໂຕນໄດ້ເອີ້ນເອົາຊາວບ້ານໃຫ້ມາເອົາກະຕ່າຍຊ່ວຍ ເພາະວ່າກະຕ່າຍຕາຍແລ້ວ, ຊາວບ້ານກໍ່ບໍ່ກ້າມາເອົາກະຕ່າຍໄປຄົວ, ປະໄວ້ຈົນຮອດສອງມື້ ແລ້ວຊາວບ້ານກໍ່ພາກັນມາເອົາກະຕ່າຍໄປຄົວ, ເຂົາເຈົ້າເອົາຊີ້ນກະຕ່າຍມາຟັກເປັນຕ່ອນໆແລ້ວຍັດໃສ່ກະບັ້ງແລະເອົາໄປຫຼາມ, ເຂົາເຈົ້າຄິດວ່າເຮັດແບບນີ້ ກະຕ່າຍຈຶ່ງຈະຕາຍ ແລະ ດັບຊື່ສຽງໝົດໄປ, ແຕ່ວ່າໃນເວລາຫຼາມຢູ່ນັ້ນຊີ້ນກະຕ່າຍຕອນໜຶ່ງໄດ້ທົ່ງອອກມາຈາກກະບັ້ງດັ່ງປຸດສະເດັນຂຶ້ນສູງໆແລ້ວຕົກລົງມາສູ່ໜ້າດິນຈຶ່ງກາຍເປັນມະນຸດ, ເປັນຜູ້ຊາຍທີ່ສວຍສົດງົດງາມກັບຄືນມາຢູ່ນຳຄົນເຮົາອີກ.

ພາຍຫຼັງກະຕ່າຍຕາຍໄປແລ້ວ ໄດ້ມີວິນຍານຂອງມັນເກີດຂຶ້ນມາເປັນຄົນ ແລະ ເຂົາເຈົ້າເວົ້າວ່າເປັນມະນຸດຜູ້ທີສອງ. ເຂົາເຈົ້າເລົ່າເລື່ອງວ່າ ມະນຸດຜູ້ທີໜຶ່ງແມ່ນຜູ້ທີ່ສັດຊື່ບໍລິສຸດເປັນຄົນ ທີ່ບໍ່ມັກຂີ້ຕົວະ ບໍ່ມີແນວຄິດມັກລັກໂລບໂລພາ ບໍ່ໃຊ້ຄວາມສະຫຼາດເປັນວິຊາຫາລ້ຽງຊີບ ຄັນເປັນຜູ້ຊາຍແມ່ນສັດຊື່ຕໍ່ເມຍຕໍ່ລູກ, ຖ້າເປັນແມ່ຍິງແມ່ນເປັນຄົນສັດຊື່ຕໍ່ຜົວຕໍ່ລູກ. ເຂົາ

ເຈົ້າເລົ່າເລື່ອງຕໍ່ອີກວ່າ ເປັນມະນຸດທີ່ກຳເນີດມາຈາກເຈົ້າວິນຍານຈະເປັນຜູ້ເນລະມິດໃຫ້ມາສ້າງໂລກ. ຈຳພວກມະນຸດທີ່ສະຫຼາດສະຫຼຽວຫຼາຍມີວິຊາອາຊີບຫາລ້ຽງຊີວິດຕົນເອງແມ່ນຈຳພວກທີ່ເກີດມາຈາກກະຕ່າຍ, ຄົນຈຳພວກນີ້ ເປັນຄົນມັກສໍ້ລາດບັງຫຼວງ, ເວົ້າຈາປາໄສ ນີ້ມນວນອ່ອນຫວານ, ເວົ້າມ່ວນນວນຫູຄົນ ແຕ່ການກະທຳແມ່ນຂົມຂື່ນທີ່ສຸດເໝືອນກັບກະຕ່າຍນີ້ແຫຼະ.

ຊົນເຜົ່າກະຕູໃນສະໄໝກ່ອນ ເຄີຍໄດ້ເລົ່ານິທານກ່ຽວກັບເລື່ອງ ແມ່ເຖົ້າກັບກະຕ່າຍແມ່ນນິທານເລື່ອງ ຊຽງໝ້ຽງ ພາສາກະຕູເວົ້າວ່າ: ອະໂຢນ ແລະ ອະໂຢນແປວ່າ ຊຽງໝ້ຽງ. ກະຕູທຸກຄົນໄດ້ເອົານິທານເລື່ອງຂອງຊຽງໝ້ຽງ (ອະໂຢນ) ມານຳໃຊ້ໃນຊີວິດປະຈຳວັນນັບຕັ້ງແຕ່ປູ່ເຍີຍ່າເຍີຂອງພວກເຮົາຈົນຮອດສະໄໝປະຈຸບັນນີ້. ຄົນກະຕູມັກຈະຟັງຄຳເວົ້າຄຳລົມ, ການລາຍງານ, ການເຮັດວຽກງານທີ່ມີລັກສະນະສິງໄສ, ແມ່ນຄຳເວົ້າທີ່ບໍ່ເປັນຕາເຊື່ອຖືປານໃດ ເຂົາເຈົ້າມັກຈະເວົ້າວ່າ ເປັນຄຳເວົ້າຂອງຊຽງໝ້ຽງ, ເຈົ້າເຮັດວຽກແບບຊຽງໝ້ຽງ, ການຫາກິນແບບຊຽງໝ້ຽງ, ເຈົ້າໄປຄືອະໂຢນ, ເຈົ້ານອນຄືອະໂຢນ, ເຈົ້າສະຫຼາດສະຫຼຽວແບບອະໂຢນ. ໃນເມື່ອຄົນອື່ນເວົ້າໃຫ້ວ່າເຈົ້າແມ່ນ ຊຽງໝ້ຽງ ແລ້ວຄົນທີ່ເວົ້າເລື່ອງນັ້ນຈະຕ້ອງເນັ້ນຄວາມສັດຊື່ຂອງຕົນເອງບໍ່ແມ່ນ ຊຽງໝ້ຽງດອກ, ການເວົ້າການເຮັດ, ການຫາກິນຕາມຄວາມຈິງແທ້, ເຮັດໃຫ້ຜູ້ອື່ນເຊື່ອໝັ້ນ, ຄຳເວົ້າກໍ່ໜັກແໜ້ນຂຶ້ນຕື່ມ.

## 2.2 ເອົາໄຂ່ນົກມາເປັນເມຍ
## (ອຽລກະລອງອະແຈ້ະ)

ສອງອ້າຍນ້ອງກຳພອຍ, ພໍ່ແມ່ຕາຍປະແຕ່ຍັງເປັນເດັກນ້ອຍ, ເປັນກຳພ້າກຳພອຍໄດ້ດຳລົງຊີວິດຢ່າງລຳບາກຍາກເຂັນທີ່ສຸດ. ກຳພອຍທັງສອງຄົນໄດ້ເຂົ້າໄປປ່າຫາຂຸດເຜືອກຂຸດມັນເພື່ອ ມາລ້ຽງຊີບພໍສືບມື້ສືບວັນ. ການດຳລົງຊີວິດແບບຕາມມີຕາມເກີດຂອງທຳມະຊາດ ຂາດຄວາມອົບອຸ່ນຈາກຜູ້ເປັນພໍ່ແມ່. ຜູ້ເປັນອ້າຍໄດ້ພານ້ອງທຳມາຫາກິນດ້ວຍການ ເຮັດໄຮ່ເຮັດສວນຕາມເຫື່ອແຮງທີ່ມີ ແລະ ພວກເຮົາຍັງໜຸ່ມນ້ອຍຢູ່ນ້ອງເອີຍ, ພະຍາຍາມອົດຢູ່ອົດກິນໄປນີ້ແລ້ວ.

ມີມື້ໜຶ່ງ ຜູ້ເປັນອ້າຍຊວນນ້ອງເຂົ້າປ່າ ເພື່ອໄປຊອກຫາຂຸດມັນອ້ອນມາກິນ ຊອກຫາຂຸດມັນໃນມື້ນັ້ນໄດ້ຫຼາຍທັງຄິດແປກມື້ນີ້ ຂຸດມັນໄດ້ດີຊອກຫາງ່າຍຂຸດຢູ່ບ່ອນໃດກໍ່ໄດ້ມັນໄວ ຜູ້ເປັນ

ອ້າຍເລີຍຊວນນ້ອງກັບເມືອບ້ານບຸປ່າຜ່າດົງເມືອ ກໍ່ພໍດີເຫັນຮັງນົກມີໄຂ່ນົກໜ່ວຍໜຶ່ງເລີຍພາກັນເອົາທັງຮັງ ແລະ ໄຂ່ນົກເມືອແຂວນໄວ້ຢູ່ຝາເຮືອນກ່ອນຈະອອກເຮືອນໄປໃສຕ້ອງໄດ້ໄປເບິ່ງໄຂ່ນົກສາກ່ອນແລ້ວຈຶ່ງໄປ, ໃນເວລາກັບມາແຕ່ເຮັດວຽກງານກໍ່ຕ້ອງໄປເບິ່ງໄຂ່ນົກນັ້ນກ່ອນແລ້ວຈຶ່ງເຂົ້າໃນເຮືອນໄດ້.

ເຂົາທັງສອງຄົນ ໄດ້ເອົາໃຈໃສ່ຢ່າງຖະໜຸຖະໜອມໄຂ່ນົກເປັນຢ່າງດີ ຫຼາຍເດືອນຜ່ານໄປ ເຂົາເຈົ້າໄປເບິ່ງໄຂ່ນົກບໍ່ເຫັນເບາະຈັກເທື່ອ. ມີມື້ໜຶ່ງສອງອ້າຍນ້ອງມາແຕ່ເຮັດໄຮ່ ຜູ້ເປັນນ້ອງຊາຍໄດ້ເຂົ້າໄປເບິ່ງໄຂ່ນົກຍັງຄືເກົ່າຢູ່, ແຕ່ວ່າພັດເຂົ້າໄປໃນເຮືອນຂອງຕົນເອງຄືຈັ່ງວ່າຜິດປົກກະຕິທຳມະດາບໍ່ຄືກັບທຸກໆວັນ ເຫັນວ່າມີຄົນມາປັດກວາດເຮືອນຊານ, ມີຄົນຕັກນ້ຳໄວ້, ມີຄົນແຕ່ງກິນໄວ້ໃຫ້, ສອງອ້າຍນ້ອງເລາະຖາມຄົນເຮືອນໃກ້ຄຽງວ່າແມ່ນມີຜູ້ໃດມາຊ່ອຍພວກເຮົາ, ຂໍຂອບໃຈເດີ. ກາໍພ້າທັງສອງຄົນນີ້ມີຄວາມສົນໃຈຫຼາຍວ່າແມ່ນໃຜແທ້ມາອີ່ດູສົງສານ, ແມ່ນໃຜແທ້ທີ່ມາ ເຫັນອົກເຫັນໃຈຄົນທຸກຍາກຄືຢ່າງພວກເຮົາຄືແນວນີ້.

ຫຼາຍມື້ຫຼາຍວັນຕໍ່ມາ, ສອງອ້າຍນ້ອງເປີກສາຫາລືກັນວ່າ ຈະຕ້ອງຕິດຕາມເບິ່ງວ່າມັນແມ່ນໃຜແທ້. ທັງສອງຄົນພາກັນໄປໄຮ່ແຕ່ເຊົ້າໆ ໄດ້ເອົາໃຈໃສ່ເສຍຫຍ້າໄຮ່ໃຫ້ແລ້ວ ແລະກໍ່ຟ້າວກັບບ້ານກ່ອນເວລາເລີກວຽກ. ໃນເມື່ອກັບເມືອຮອດບ້ານແລ້ວ ກໍ່ຄ່ອຍໆຍ່າງໄປຢືນລີ້ຢູ່ແຄມຮົ້ວ ບ້ານແລ້ວແນມເບິ່ງເຮືອນຂອງຕົນເອງ ກໍ່ເລີຍແນມເຫັນຜູ້ສາວທີ່ສວຍສົດງົດງາມຜູ້ໜຶ່ງກຳລັງເຮັດວຽກເຮືອນໃຫ້ຢູ່, ແລ້ວພວກເຂົາກໍ່ກັບໄປຢູ່ທາງໜ້າເຮືອນ ແລ້ວຍ່າງຂຶ້ນເມືອເທິງເຮືອນຂອງຕົນເອງ. ໃນມື້ລຸນມາຜູ້ເປັນອ້າຍກັບແຕ່ໄຮ່ໄວກ່ອນໝູ່, ລາວມາຕິດຕາມເບິ່ງນາງສາວຜູ້ນັ້ນລາວຈະລີ້ຊ້ອນຕົນເອງຢູ່ບ່ອນໃດ? ຫຼັງຈາກເຮັດວຽກເຮືອນແລ້ວຜູ້ສາວຄົນນັ້ນໄດ້ຍ່າງໄປທາງຮັງໄຂ່ນົກທີ່ຫ້ອຍຢູ່ຝາແລ້ວກໍ່ ຫາຍຕົວໄປ.

ຢູ່ມາໄດ້ຫຼາຍເດືອນ ສອງອ້າຍນ້ອງເຂົາເຈົ້າຢ້ານວ່າ ຜູ້ສາວມາລີ້ຢູ່ເຮືອນຂອງຕົນເອງອາດຈະມີໂທດ ເຂົາເຈົ້າຢ້ານຈະໄດ້ຖືກປັບໄໝເອົາງົວຄວາຍ ແລະ ຈະຊອກຫາມາແຕ່ໃສໃຫ້? ແນວວ່າຕົນເອງເປັນຄົນທຸກຍາກ. ໃນມື້ຕໍ່ມາ ເຂົາເຈົ້າເຫັນມີເສື້ອຜ້າແມ່ຍິງຫ້ອຍໄວ້ຢູ່ໃນແຈເຮືອນມີຫູກຕ່ຳສິ້ນກາງປະໄວ້ຢູ່ກາງເຮືອນ. ດ້ວຍຄວາມຢ້ານກົວຫຼາຍ ຜູ້ເປັນອ້າຍເລີຍໄດ້ຕັດສິນໃຈວ່າຂ້ອຍຈັບນາງໃຫ້ໄດ້ ແລະ ຂ້ອຍຈະຕ້ອງສືບສວນວ່ານາງມາແຕ່ໃສກັນແທ້? ຜູ້ເປັນອ້າຍເຮັດຕີໄປເຮັດໄຮ່ ແຕ່ພໍວິດບ້ານໄປລາວກໍ່ກັບຄືນມາລີ້ຢູ່ແຄມຮົ້ວບ້ານ, ເພື່ອຈອບ ເບິ່ງນາງສາວຄົນນັ້ນໆຄິດວ່າເຂົາເຈົ້າໄປໄຮ່ໝົດແລ້ວ ລາວກໍ່ອອກມາດັງໄຟໜຶ້ງເຂົ້າ, ໄປຕັກນ້ຳ, ຕຳເຂົ້າ ແລະ ນັ່ງຕ່ຳຫູກຢູ່ກົບກັບໆ, ທ້າວກຳພ້າທັງສອງກໍ່ເຮັດຕີຍ່າງມາແຕ່ໄຮ່, ນາງແນມເຫັນທ້າວກຳພ້າທັງສອງຍ່າງມາ ກໍ່ຮີບຟ້າວມ້ຽນຫູກ ແລ້ວແລ່ນໄປຫາຮັງໄຂ່ນົກນັ້ນ ແຕ່ຖືກທ້າວກຳພ້າທັງສອງຍ່າງມາລັດທາງທັນ ແລະ ຈັບນາງໄດ້ແລ້ວ ຖາມນາງວ່າ ເຈົ້າມາແຕ່ໃສ? ນາງຕອບ

ວ່າຂ້ອຍມາພ້ອມພວກ ເຈົ້າທັ້ນເດ, ຂ້ອຍເປັນນາງສາວໄຂ່ນົກທີ່ພວກເຈົ້າເກັບມາໄວ້ນັ້ນ, ຂ້ອຍອີ່ດູຕົນສົງສານພວກເຈົ້າ ເພາະວ່າພວກເຈົ້າເປັນຄົນດີ, ຮູ້ຮັກແພງຂ້ອຍດັ່ງນັ້ນຂ້ອຍຈຶ່ງໄດ້ເກີດຈາກໄຂ່ນົກມາເປັນມະນຸດ ເພື່ອຮັບໃຊ້ພວກເຈົ້າທັງສອງ, ຂ້ອຍຈະຢູ່ຕອບບຸນແທນຄຸນພວກເຈົ້າທີ່ມີຕໍ່ຂ້ອຍ. ໃນເມື່ອທ້າວກໍ່າພ້າທັງສອງ ຮູ້ກົກປາຍສາເຫດຂອງນາງແລ້ວທ້າວກໍ່າພ້າທັງສອງກໍ່ບໍ່ວ່າຫຍັງອີກເລີຍ ນາງກໍ່ຢູ່ນໍາສອງອ້າຍນ້ອງຢ່າງພາກພູມໃຈຫຼາຍ.

ນາງໄຂ່ນົກພ້ອມກັບສອງອ້າຍນ້ອງໄດ້ພາກັນດໍາລົງຊີວິດຢ່າງອົບອຸ່ນ, ທ້າວກໍ່າພ້າທັງສອງຄົນກໍ່ມີຄວາມສຸກຫຼາຍໃນຊີວິດ, ຍ້ອນວ່າມີຜູ້ມາແຕ່ງຢູ່ຄົວກິນ, ຕັກນໍ້າ ແລະ ຕໍາເຂົ້າໃຫ້, ມີຜູ້ຕໍ່າເສື້ອຜ້າໃຫ້ນຸ່ງຢູ່ບໍ່ຂາດເຂີນ ການນຸ່ງຖືແຕ່ລະປີແມ່ນມີພຽງພໍ. ໃນປີຕໍ່ມາພວກລູກພະຍາເຈົ້າເມືອງ ໄປທ່ຽວຫຼິ້ນຢູ່ບ້ານນອກຂອກນາ ເລີຍມາພົບພໍ້ເຫັນນາງງາມຫຼາຍ ກໍ່ຢາກໄດ້ເອົານາງມາເປັນເມຍ, ແລ້ວຕູ່ຫາວ່າ ທ້າວກໍ່າພອຍທັງສອງໄປລັກເອົາຄົນຂອງພວກເພິ່ນມາເຊື່ອງໄວ້ຢູ່ໃນເຮືອນ, ແລ້ວໄປບອກພໍ່ຂອງຕົນມາເວົ້ານໍາທ້າວກໍ່າພອຍທັງສອງວ່າ ໃຫ້ສົ່ງລູກສາວຂອງກູມາໃຫ້ກູຄືນ, ຖ້ນບໍ່ສົ່ງພວກສູຈະຄໍຂາດໃດ? ທ້າວກໍ່າພອຍທັງສອງໄດ້ບອກກັບນາງວ່າ ໃຫ້ນ້ອງໄປຢູ່ເຮືອນພະຍາເຈົ້າເມືອງສາ, ແຕ່ວ່ານາງປະຕິເສດຢູ່ຕະຫຼອດເວລາ, ນາງຕອບວ່າຂ້ອຍຈະຢູ່ນໍາທ້າວກໍ່າພອຍທັງສອງ, ຂ້ອຍຈະບໍ່ໄປໃສອີກ ພະຍາເຈົ້າເມືອງເວົ້າກັບທ້າວກໍ່າພອຍທັງສອງມາໄດ້ຫຼາຍເດືອນ ຫຼາຍປີແລ້ວ ແຕ່ບໍ່ໄດ້ຮັບຜົນຫຍັງເລີຍ. ພະຍາເຈົ້າເມືອງຈຶ່ງໄດ້ວາງກົນອຸບາຍໃໝ່ ຖ້າວ່ານາງຄົນນີ້ເປັນຄົນຂອງພວກເຈົ້າແທ້ ໃຫ້ພວກເຈົ້າໄປເອົານໍ້ານົມນໍາເຈົ້າແມ່ນາງເງືອກ ແລະ ນໍ້ານົມງູເຫົ່າມາໃຫ້ຂ້ອຍເບິ່ງ, ທ້າວກໍ່າພອຍທັງສອງໄດ້ຍິນຄໍາເວົ້າຂອງພະຍາເຈົ້າເມືອງຄືແນວນັ້ນ. ທ້າວທັງ ສອງກໍ່ກັບຄືນມາຫານາງແລ້ວໄຫ້ສະອຶກສະອື້ນຕໍ່ໜ້ານາງ ແລ້ວນາງຈຶ່ງຖາມວ່າ ພວກເຈົ້າໄຫ້ນໍາຂ້ອຍເຮັດຫຍັງ ? ນາງບອກໃຫ້ທ້າວກໍ່າພອຍທັງສອງໄປໄຫ້ຢູ່ແຄມນໍ້າວັງເລິກສາ, ເພາະວ່າຢູ່ໃກ້ແຄມນໍ້າວັງເລິກບ່ອນມີເຈົ້າແມ່ນາງເງືອກພຸ້ນ ແລ້ວເຈົ້າແມ່ນາງເງືອກກໍ່ອອກມາຖາມວ່າ ພວກເຈົ້າໄຫ້ເຮັດຫຍັງ? ພວກເຂົາຕອບວ່າ ພະຍາເຈົ້າເມືອງບອກໃຫ້ ພວກຂ້ອຍໄປຊອກນໍ້ານົມເງືອກ, ເຈົ້າແມ່ນາງເງືອກຄິດອີ່ດູສົງສານແລ້ວກໍ່ບີບນໍ້ານົມໃຫ້ແລ້ວ ທ້າວກໍ່າພອຍທັງສອງກໍ່ໄປ ຢືນໄຫ້ຢູ່ໂພນທີ່ມີຮູງູເຫົ່າຢູ່, ລາວນັ່ງໄຫ້ກົກໆຢູ່ ງູເຫົ່າລັກໄລ່ກໍ່ເລີຍອອກມາເບິ່ງ, ເຫັນທ້າວກໍ່າພອຍທັງສອງນັ່ງໄຫ້ເລີຍຖາມວ່າເຈົ້າໄຫ້ເຮັດຫຍັງ? ພວກເຂົາທັງສອງຕອບວ່າພະຍາເຈົ້າເມືອງ ບອກພວກຂ້ອຍເອົານໍ້ານົມງູເຫົ່າ, ງູເຫົ່າອີ່ດູສົງສານເລີຍເອົານໍ້ານົມໃຫ້ ຫຼັງຈາກໄດ້ນໍ້ານົມແລ້ວກໍ່ກັບເມືອບ້ານເອົາກະບັ້ງນໍ້ານົມເງືອກ ແລະ ນໍ້ານົມງູເຫົ່າໄປໃຫ້ພະຍາເຈົ້າເມືອງເບິ່ງ.

ທ້າວກໍ່າພອຍທັງສອງ ຊອກໄດ້ນໍ້ານົມເງືອກກັບນໍ້ານົມງູເຫົ່າໄດ້ແລ້ວ, ພະຍາເຈົ້າເມືອງກໍ່ ຊອກຫາກົນອຸບາຍແບບໃໝ່ອີກ, ພະຍາເຈົ້າເມືອງເວົ້າກັບທ້າວກໍ່າພ້າທັງສອງວ່າ ຖ້າແມ່ນຜູ້

ສາວ ຂອງພວກເຈົ້າແທ້ໃຫ້ເອົາໄກ່ມາຕີກັນໃຜຊິຊະນະ, ຖ້າວ່າໄກ່ພະຍາເຈົ້າເມືອງຕີຊະນະ, ຜູ້ສາວຕ້ອງຕົກເປັນຄົນຂອງພະຍາເຈົ້າເມືອງ, ຖ້າຫາກວ່າໄກ່ພວກເຈົ້າຕີຊະນະແມ່ນຜູ້ສາວ ເປັນຂອງພວກເຈົ້າ. ຫຼັງຈາກໄດ້ຍິນຄຳເວົ້າຂອງພະຍາເຈົ້າເມືອງໃຫ້ເອົາໄກ່ມາຕີກັນເອົາແພ້ເອົາຊະນະກັນ. ທ້າວກຳພອຍທັງສອງຄິດວ່າຈະເອົາໄກ່ມາແຕ່ໃສ? ທັງໆທີ່ວ່າພວກເຂົາບໍ່ເຄີຍເຫັນຮອດຂີ້ໄກ່, ທ້າວກຳພອຍທັງສອງກໍ່ກັບເມືອໄຫ້ສະອຶກສະອື້ນຕໍ່ໜ້ານາງ, ແລ້ວນາງສາວຖາມທ້າວກຳພອຍທັງສອງວ່າ ພວກເຈົ້າໄຫ້ເຮັດຫຍັງ ? ແມ່ນໃຜຕີພວກເຈົ້າ? ທ້າວກຳພອຍທັງສອງຕອບວ່າບໍ່ມີ ຜູ້ໃດຕີດອກ! ພະຍາເຈົ້າເມືອງໃຫ້ຂ້ອຍເອົາໄກ່ໄປຕີກັນກັບໄກ່ເພິ່ນ ແລ້ວພວກຂ້ອຍຈະເອົາໄກ່ມາແຕ່ໃສ? ນາງບອກວ່າບໍ່ຍາກດອກ ! ໃຫ້ພວກເຈົ້າລົງເຮືອນໄປຫາຕົ້ນໝາກເຜັດແລ້ວໃຫ້ພວກ ເຈົ້ານັ່ງໄຫ້ແລ້ວໄກ່ຈະອອກມາຫາທັນທີ, ທ້າວກຳພອຍ ທັງສອງພາກັນໄປນັ່ງໄຫ້ກົກໆ ແລ້ວໄກ່ນ້ອຍກໍ່ອອກມາຮ້ອງຈຽບໆ, ພວກເຂົາຈຶ່ງຈັບເອົາໄກ່ນ້ອຍໄປແຂ່ງກັບໄກ່ຜູ້ໂອກຂອງພະຍາເຈົ້າເມືອງ, ພະຍາເຈົ້າເມືອງເຫັນໄກ່ຂອງພວກເຂົານ້ອຍ ກໍ່ເລີຍຫົວເຍາະເຢີ້ຍພວກເຂົາຢ່າງສະອຶກສະອື້ນ. ພິທີແຂ່ງຂັນຕີໄກ່ກໍ່ໄດ້ເລີ່ມຂຶ້ນ ພະຍາເຈົ້າເມືອງປ່ອຍໄກ່ຜູ້ໂອກອອກມາຢືນຢູ່ກາງເດີ່ນ ທ້າວກຳພອຍທັງສອງກໍ່ປ່ອຍໄກ່ນ້ອຍຂອງພວກຕົນເອງອອກໄປຢືນຢູ່ກາງເດີ່ນຄືກັນ, ໄກ່ສອງໂຕຕີກັນ ໃນທ່າມກາງສາຍຕາຂອງຜູ້ທີ່ມາຊົມມາເບິ່ງຢ່າງຫຼວງຫຼາຍ, ໃຜໆກໍ່ຮ້ອງວ່າ: ເອົາມັນ ! ເອົາມັນ ! ແລ້ວຕົບມືພ້ອມໆກັນ, ໄກ່ທ້າວກຳພອຍທັງສອງໄດ້ເຕັ້ນຂຶ້ນຂີ່ຫຼັງພ້ອມທັງຕອດສັບຫົວໄກ່ຜູ້ໂອກຂອງພະຍາເຈົ້າເມືອງດິ້ນຕາຍຄາກັບທີ່. ຈາກນັ້ນ ພະຍາເຈົ້າເມືອງກໍ່ບໍ່ພໍໃຈກັບທ້າວກຳພອຍທັງສອງແລ້ວຈຶ່ງຊອກຫາວິທີ ແລະ ກົນອຸບາຍໃໝ່ ເພື່ອໃຊ້ກົນອຸບາຍໃໝ່ຕີເອົາຊະນະພວກ ເຂົາໃຫ້ໄດ້.

ພະຍາເຈົ້າເມືອງ ໄດ້ປະລາໄຊເລື່ອງໄກ່ຕີໄກ່ກັບທ້າວກຳພອຍທັງສອງແລ້ວ, ພະຍາເຈົ້າເມືອງເຊີນເອົາພວກເຂົາມາຫາພະຍາເຈົ້າເມືອງ, ພວກເຂົາກໍ່ໄດ້ໄປຫາພະຍາເຈົ້າເມືອງອີກ, ໃນເມື່ອມາເຖິງ ແລ້ວພະຍາເຈົ້າເມືອງເວົ້າວ່າ ພວກເຮົາຕ້ອງເອົາຄວາຍຊົນຄວາຍກັນອີກ, ຖ້າວ່າຄວາຍຂອງທ້າວກຳພອຍທັງສອງຊົນບໍ່ຊະນະ ຜູ້ສາວຄົນນັ້ນຈະເປັນຂອງກູ, ຖ້າວ່າຄວາຍຂອງພະຍາເຈົ້າເມືອງຊົນບໍ່ຊະນະຜູ້ສາວຄົນນັ້ນແມ່ນເປັນຂອງທ້າວກຳພ້າທັງສອງນັ້ນເອງ. ຫຼັງຈາກໄດ້ຍິນຄຳເວົ້າຂອງພະຍາເຈົ້າເມືອງເວົ້າວ່າ ເອົາຄວາຍຊົນຄວາຍແລ້ວ, ທ້າວກຳພອຍທັງສອງກໍ່ຄິດວ່າຈະເອົາຄວາຍມາແຕ່ໃສມາ ຊົນກັບຄວາຍພະຍາເຈົ້າເມືອງ, ແຕ່ເກີດມາບໍ່ເຄີຍເຫັນຮອດຂີ້ຄວາຍອີກຊ້ຳ. ທ້າວກຳພອຍທັງສອງ ກໍ່ກັບເມືອລາຍງານໃຫ້ນາງສາວນັ້ນຮູ້ວ່າ ພະຍາເຈົ້າເມືອງໃຫ້ເອົາຄວາຍໄປຊົນກັນ ເພື່ອເອົາແພ້ເອົາຊະນະກັນອີກ. ນາງສາວ ບອກທ້າວກຳພອຍທັງສອງວ່າ ໃຫ້ພວກເຈົ້າທັງສອງໄປຢືນໄຫ້ຢູ່ກົກໝາກເຂືອນັ້ນ ໂຕຄວາຍ ມັນຈະຍ່າງ

ອອກມາຈາກກົກໝາກເຂືອພວກເຈົ້າບໍ່ຕ້ອງຢ້ານ, ພວກເຂົາກໍ່ພາກັນໄປນັ່ງໄຫ້ຢູ່ກົກໝາກເຂືອນັ້ນ ກໍ່ເຫັນຄວາຍນ້ອຍອອກມາຢືນຢູ່ຕໍ່ໜ້າທ້າວກ່ຳພອຍທັງສອງທັນທີໂລດ.

ທ້າວກ່ຳພອຍທັງສອງກໍ່ໄປລາຍງານໃຫ້ພະຍາເຈົ້າເມືອງຊາບວ່າ ຂ້ານ້ອຍໄດ້ຄວາຍນ້ອຍແລ້ວ, ໃນມື້ຕໍ່ມາ ພະຍາເຈົ້າເມືອງກັບພວກທ້າວກ່ຳພອຍໄດ້ຈັດພິທີແຂ່ງຂັນຄວາຍຊົນຄວາຍຢູ່ ເດີ່ນຫຍ້າແຫ່ງໜຶ່ງ.ໃນງານດັ່ງກ່າວກໍ່ມີເສນາອາມາດ ແລະ ປະຊາຊົນມາເບິ່ງຢ່າງຫຼວງຫຼາຍ. ພະຍາເຈົ້າເມືອງໄດ້ປ່ອຍຄວາຍຂອງຕົນເອງອອກມາຢືນຢູ່ກາງເດີ່ນ ແລະ ພວກ ທ້າວກ່ຳພອຍກໍ່ປ່ອຍຄວາຍຂອງຕົນເອງອອກມາກາງເດີ່ນຄືກັນ ແລ້ວພາກັນຕົບມື ແລະ ເບິ່ງຄວາຍຊົນຄວາຍ. ພວກຜູ້ຄົນທີ່ມາເບິ່ງນັ້ນພາກັນຕົບມືຮ້ອງໂຮກັນແຊວໆ ເພື່ອປຸກກຳລັງໃຈໃຫ້ຄວາຍຂຶ້ນໃຈແລ້ວຊົນກັນດັງກົບກັບ ! ກົບກັບ ! ຄວາຍພະຍາເຈົ້າເມືອງຊົນຄວາຍທ້າວກ່ຳພອຍ, ຄວາຍທ້າວກ່ຳພອຍກໍ່ຊົນຄວາຍພະຍາເຈົ້າເມືອງຄືກັນ, ຄວາຍຊົນກັນໄຖກັນໄປມາຢ່າງດຸເດືອດ ແລະແກ່ຍາວ ເວລາໄປດົນເຕີບເຮັດໃຫ້ຄວາຍຂອງພະຍາເຈົ້າເມືອງ ເມື່ອຍຫຼາຍເລີຍລົ້ມຕາຍຄາກັບທີ່. ພະຍາເຈົ້າເມືອງເຫັນຄວາຍຕົນເອງລົ້ມຕາຍແລ້ວ ກໍ່ແຫ່ງມີຄວາມຄຽດແຄ້ນຂຶ້ນໃຫ້ກັບທ້າວກ່ຳພອຍທັງ ສອງອີກເທື່ອໃໝ່.

ພະຍາເຈົ້າເມືອງ ໄດ້ເຊີນທ້າວກ່ຳພອຍທັງສອງມາຫາທີ່ເຮືອນຂອງພະຍາເຈົ້າເມືອງອີກ, ພວກທ້າວກ່ຳພອຍໄດ້ໄປຫາພະຍາເຈົ້າເມືອງ, ໃນເມື່ອໄປເຖິງເຮືອນຂອງພະຍາເຈົ້າເມືອງແລ້ວ, ພະຍາເຈົ້າເມືອງໄດ້ເວົ້າວ່າ ຂ້ອຍເອີ້ນພວກເຈົ້າມານີ້ກໍ່ບໍ່ມີຫຍັງດອກ, ພະຍາເຈົ້າເມືອງເວົ້າເລື່ອງການແຂ່ງຂັນເຮືອກັນ. ຖ້າວ່າເຮືອຜູ້ໃດເຂົ້າໄປເຖິງຫຼັກໄຊກ່ອນແມ່ນເຮືອຜູ້ນັ້ນຊະນະ. ເມື່ອພະຍາເຈົ້າເມືອງເວົ້າສຸດຄວາມແລ້ວ, ພວກທ້າວກ່ຳພອຍກໍ່ນ້ຳຕາຕົກໃນ ຍ້ອນຄິດວ່າຈະເອົາເຮືອມາແຕ່ໃສທີ່ຈະມາແຂ່ງຂັນກັບເຮືອຂອງພະຍາເຈົ້າເມືອງ. ທ້າວກ່ຳພອຍທັງສອງກັບເມືອເຮືອນແລ້ວລາຍງານໃຫ້ນາງສາວຟັງວ່າ ພະຍາເຈົ້າເມືອງ ບອກໃຫ້ເອົາເຮືອໄປແຂ່ງຂັນກັບເຮືອຂອງເພິ່ນ. ນາງກໍ່ຫົວຍຸ້ມໃສ່ພວກທ້າວກ່ຳພອຍແລ້ວເວົ້າວ່າ ມັນຊິຍາກອີ່ຫຍັງ ! ໃຫ້ພວກເຈົ້າພາກັນໄປນັ່ງໄຫ້ຢູ່ແຄມແມ່ນ້ຳນັ້ນເດ ແລ້ວເຮືອກໍ່ຈະອອກມາໃຫ້ທັນທີໂລດ. ທ້າວກ່ຳພອຍທັງສອງກໍ່ປະຕິບັດຕາມຄຳບອກຂອງນາງສາວພວກເຂົາໄປຮອດແຄມແມ່ນ້ຳແລ້ວກໍ່ພາກັນນັ່ງໄຫ້ສະອຶກສະອື້ນຢູ່, ບໍ່ພໍຄາວພະຍາເງືອກກໍ່ອອກມາຖາມວ່າ ພວກເຈົ້າມາໄຫ້ເຮັດຫຍັງໃນທີ່ນີ້, ພວກເຂົາຕອບວ່າ ພະຍາເຈົ້າເມືອງບອກໃຫ້ເອົາເຮືອໄປແຂ່ງຂັນກັບເພິ່ນ, ແຕ່ພວກຂ້ອຍບໍ່ມີເຮືອຈະແຂ່ງຂັນກັບເພິ່ນ ພະຍາເງືອກຫົວແລ້ວມຸດລົງນ້ຳໄປ, ຄາວໜຶ່ງກໍ່ເຫັນເຮືອພົ້ນຂຶ້ນອອກມາຈາກໜ້ານ້ຳຢ່າງສວຍງາມແທ້.

ທ້າວກ່ຳພອຍທັງສອງໄປລາຍງານໃຫ້ພະຍາເຈົ້າເມືອງຊາບວ່າ ຕົນເອງມີເຮືອແລ້ວສາມາດແຂ່ງຂັນກັບເຮືອພະຍາເຈົ້າເມືອງ. ໃນມື້ຕໍ່ມາພວກທ້າວກ່ຳພອຍກັບພະຍາເຈົ້າເມືອງກໍ່

ພ້ອມພາກັນຊ່ວງເຮືອແຂ່ງຂັນກັນ, ພະຍາເຈົ້າເມືອງໄດ້ຈັດພິທີງານແຂ່ງຂັນຢ່າງຍິ່ງໃຫຍ່ ເຊິ່ງມີຜູ້ຄົນມາຮ່ວມເບິ່ງຢ່າງຫຼວງຫຼາຍ. ພະຍາເຈົ້າເມືອງເອົາເຮືອມາຈອດທຽບທ່າ ແລ້ວປ່ອຍເຮືອລົງນັບໜຶ່ງສອງສາມ, ພະຍາເຈົ້າເມືອງກັບພວກທ້າວກ່ຳພອຍຕ່າງຝ່າຍຕ່າງກໍ່ອອກແຮງພາຍເຮືອຢ່າງເອົາຈິງເອົາຈັງ, ຜ່ານການແຂ່ງຂັນຊ່ວງເຮືອນັ້ນ ແມ່ນເຮືອຂອງພວກທ້າວກ່ຳພອຍ ໄດ້ເຂົ້າໄປເຖິງຫຼັກໄຊກ່ອນໝູ່. ຖືວ່າພວກທ້າວກ່ຳພ້າເປັນຜູ້ໄດ້ຮັບໄຊຊະນະໃນການຊ່ວງເຮືອແຂ່ງຂັນລະຫວ່າງພະຍາເຈົ້າເມືອງກັບພວກທ້າວກ່ຳພອຍ, ແຕ່ວ່າພະຍາເຈົ້າເມືອງ ກໍ່ບໍ່ລົດລະໃນຄວາມພະຍາຍາມ ຊອກຫາວິທີການໃໝ່ເພື່ອເອົາຊະນະພວກທ້າວ ກ່ຳພອຍ.

ພະຍາເຈົ້າເມືອງໄດ້ອອກຄຳສັ່ງໃຫ້ປະຊາຊົນ ໄປຖາງປ່າເຮັດໄຮ່ໃຫ້ພະຍາເຈົ້າເມືອງ, ປະຊາຊົນໄດ້ປະຕິບັດຕາມຄຳສັ່ງຂອງພະຍາເຈົ້າເມືອງ, ພະຍາເຈົ້າເມືອງໃຫ້ປະຊາຊົນຖາງປ່າໃຫ້ກວ້າງແລ້ວໃຫ້ປະຕົ້ນໄມ້ໃຫຍ່ໄວ້ຢູ່ເຄິ່ງກາງຜືນໄຮ່, ພວກປະຊາຊົນຖາມພະຍາເຈົ້າເມືອງເປັນຫຍັງຈຶ່ງປະຕົ້ນໄມ້ໃຫຍ່ຢູ່ກາງຜືນໄຮ່, ພະຍາເຈົ້າເມືອງຕອບວ່າ ພະຍາເຈົ້າເມືອງຈະໄປພັກຜ່ອນເອົາອາກາດສົດຊື່ນໃນຍາມແລງ. ປະຊາຊົນທັງຫຼາຍບໍ່ມີໃຜເຂົ້າໃຈວ່າ ແມ່ນແຜນການຂອງພະຍາເຈົ້າເມືອງ. ຫຼັງຈາກຖາງປ່ານັ້ນແລ້ວໆປະຕາກແດດເປັນເວລາສອງສາມເດືອນຕົ້ນໄມ້ໃບຫຍ້າຈຶ່ງຈະຫ້ຽວແຫ້ງຕາຍ. ໃນເມື່ອເຖິງເດືອນສາມ ຫຼື ເດືອນສີ່ ແມ່ນລະດູການຈູດໄຮ່, ພະຍາເຈົ້າເມືອງອອກຄຳສັ່ງໃຫ້ພວກທ້າວກ່ຳພອຍ ໄປຢູ່ໃນຮົ່ມໄມ້ຢູ່ກາງຜືນໄຮ່ທີ່ຖາງແລ້ວນັ້ນ, ພວກທ້າວກ່ຳພອຍຈຶ່ງຖາມພະຍາເຈົ້າເມືອງວ່າ ທ່ານເຮັດຄືແນວນັ້ນຊິບໍ່ຂ້າພວກຂ້ານ້ອຍບໍ? ພະຍາເຈົ້າເມືອງຕອບວ່າແມ່ນແລ້ວ, ຖ້າຜູ້ສາວຜູ້ນັ້ນແມ່ນຂອງເຈົ້າພວກເຈົ້າຊິບໍ່ຕາຍດອກ, ຖ້າຜູ້ສາວຜູ້ນັ້ນເປັນຂອງພະຍາເຈົ້າເມືອງແມ່ນພວກເຈົ້າຕ້ອງຕາຍແນ່ນອນ. ທ້າວກ່ຳພອຍທັງສອງກັບເມືອເຮືອນ ເຮັດນ້ຳຕາໄຫຼອອກເຍື້ອຍໆ, ນາງຖາມພວກທ້າວກ່ຳພອຍວ່າເປັນຫຍັງພວກເຈົ້າຈຶ່ງພາກັນຫຼັ່ງນ້ຳຕາຫຼາຍແທ້ ພວກເຈົ້າບໍ່ເສຍດາຍນ້ຳຕາບໍ? ພວກເຈົ້າບໍ່ເຂົ້າໃຈນ້ຳຕາແມ່ນສິ່ງທີ່ມີລາຄາແພງໃດ? ພວກທ້າວກ່ຳພອຍຕອບນາງວ່າ ຊິບໍ່ຫຼັ່ງນ້ຳຕາເຮັດແນວໃດ ພະຍາເຈົ້າເມືອງບອກໃຫ້ຂ້ອຍໄປຢູ່ຮົ່ມໄມ້ກາງໄຮ່, ແລ້ວໃຫ້ເຂົາເຈົ້າຈູດໄຟອ້ອມໄຮ່ ໄຟຈະໄໝ້ສຸມອ້ອມເຂົ້າກາງໄຮ່ເຈົ້າວ່າຂ້ອຍຊິບໍ່ຕາຍບໍ? ໃນເມື່ອເຖິງເວລາແລ້ວ ພະຍາເຈົ້າເມືອງສັ່ງພວກທ້າວກ່ຳພອຍໄປຢູ່ຮົ່ມໄມ້ກາງໄຮ່, ນາງສາວກໍ່ຕັກນ້ຳໃສ່ກະບັ້ງໃຫ້ແລ້ວບອກພວກເຂົາວ່າ: ຖ້າວ່າແປວໄຟມາຮອດພວກເຈົ້າແລ້ວໃຫ້ຖອກນ້ຳສະໄປອ້ອມໆພວກເຈົ້າເດີ ແລະ ນາງບອກຕື່ມອີກວ່າ ໃຫ້ພວກເຈົ້າຮ້ອງຂຶ້ນດັງໆວ່າ : ຢາກໄດ້ເຮືອນສອງສາມຊັ້ນເດ, ຢາກໄດ້ຕົວເມືອງມີປະຊາຊົນອາໄສຢູ່ຢ່າງຫຼວງຫຼາຍກໍ່ພໍແລ້ວ. ໃນເວລານັ້ນ ໄຟກໍ່ໄໝ້ອ້ອມໄຮ່ມາ ໄຟລຸກຂຶ້ນຢ່າງບໍ່ເຫັນຟ້າບໍ່ເຫັນໝອກເລີຍ. ພະຍາເຈົ້າເມືອງຫົວເຍາະຫົວເຍີ້ຍທັງເວົ້າວ່າ ພວກມັນແຈບມັບບໍ່ເຫຼືອຫຍັງອີກ, ນາງສາວຕ້ອງເປັນຂອງກູຄັກໆ ບາດນີ້. ໃນມື້ອື່ນພະຍາເຈົ້າເມືອງຕື່ນແຕ່ເຊົ້າໆ

ນຸ່ງຜ້າສະໂຫຼງແລ້ວຍ່າງໄປເບິ່ງໄຮ່ທີ່ຈູດນັ້ນ ໄດ້ເຫັນເປັນຕົວເມືອງມີເຮືອນຊານທີ່ສວຍສົດງົດງາມ ຕັ້ງລຽນກັນເປັນແຖວຊາບລາບຢູ່, ພະຍາເຈົ້າເມືອງຍ່າງໄປເບິ່ງໃກ້ໆກໍ່ເຫັນພວກທ້າວກໍ່າພອຍເປັນຄົນຮັ່ງມີສີສຸກແລ້ວ, ພວກເຂົາຂອບໃຈນຳພະຍາເຈົ້າເມືອງຫຼາຍໆ ທີ່ເຮັດໃຫ້ຂ້ານ້ອຍມີຖານະອຸດົມຮັ່ງມີຂຶ້ນ, ມີທັງເຮືອນຊານສອງ ສາມຊັ້ນດີໆອີກດ້ວຍ.

ໃນຫຼາຍປີຕໍ່ມາ ພະຍາເຈົ້າເມືອງຈຶ່ງມີແນວຄິດໃໝ່ ຢາກຈະເຮັດຄືກັນກັບພວກທ້າວກໍ່າພອຍ, ພະຍາເຈົ້າເມືອງໄດ້ສັ່ງໃຫ້ປະຊາຊົນໄປຖາງປ່າເຮັດໄຮ່ແລ້ວຈຶ່ງຕົ້ນໄມ້ໃຫຍ່ໄວ້ຢູ່ເຄິ່ງກາງພື້ນໄຮ່ ໃນເມື່ອຕົ້ນໄມ້ທີ່ຖາງໄປນັ້ນຫ່ຽວແຫ້ງຕາຍແລ້ວ ເຖິງຍາມລະດູການຈູດໄຮ່ ພະຍາເຈົ້າເມືອງກໍ່ພາເມຍພາລູກໄປຫາພວກທ້າວກໍ່າພອຍ ແລະ ບອກໃຫ້ລູກສາວຫຼ້າຂອງ ຕົນເອງໃຫ້ຢູ່ເຝົ້າເຮືອນ, ພະຍາເຈົ້າເມືອງພ້ອມຄອບຄົວກໍ່ເຂົ້າໄປຢູ່ຮົ່ມໄມ້ກາງພື້ນໄຮ່ ແລ້ວພວກທ້າວກໍ່າພອຍຈູດໄຮ່, ທວນໄຟລຸກຂຶ້ນຕວດໆ, ພະຍາເຈົ້າເມືອງພ້ອມຄອບຄົວພາກັນຮ້ອງເອົາຕົວເມືອງ, ເອົາເຮືອນຊານບ້ານຊ່ອງຫຼັງດີໆງາມໆ, ພະຍາເຈົ້າເມືອງພ້ອມຄອບຄົວຖືກໄຟເຜົາຜານໄໝ້ກ້ຽງເອີດເຕີດບໍ່ເຫຼືອຫຍັງຈັກແນວ ແລະ ສິ່ງທີ່ຮຽກຮ້ອງເອົານັ້ນກໍ່ບໍ່ເກີດ ຂຶ້ນມາມີໃຫ້ເຫັນເລີຍ.

ພະຍາເຈົ້າເມືອງຕາຍແລ້ວ,ສ່ວນທ້າວກໍ່າພອຍ ຜູ້ເປັນອ້າຍກໍ່ໄດ້ແຕ່ງງານກັບນາງສາວໄຂ່ນົກເອົາກັນເປັນຜົວແກ້ວຜົວທິບ, ຜົວຫຍິບເມຍແສ່ວ, ເອົາກັນແລ້ວໄດ້ລູກເຕັມບ້ານໄດ້ຫຼານເຕັມເມືອງ. ສ່ວນນ້ອງຊາຍກໍ່ແຕ່ງງານກັບລູກສາວຫຼ້າຂອງພະຍາເຈົ້າເມືອງ, ເອົາກັນແລ້ວກໍ່ໄດ້ສ້າງບ້ານແປງເມືອງເຮັດໃຫ້ປະຊາຊົນຢູ່ດີກິນດີ, ບ້ານເມືອງມີຄວາມຮຸ່ງເຮືອງສີວິໄລຈະເລີນຂຶ້ນເລື້ອຍໆ ຊີວິດຂອງສອງອ້າຍນ້ອງ ພ້ອມທັງປະຊາຊົນມີຄວາມຜາສຸກຕະຫຼອດໄປ.

ພວກເຂົາເຈົ້າພາກັນພັດທະນາບ້ານເມືອງ, ດິນດອນຕອນຫຍ້າໃຫ້ມີຄວາມສວຍສົດງົດງາມ, ຍັງເຫຼືອໄວ້ແຕ່ບ່ອນຈູດເຮັດໄຮ່ຂອງພະຍາເຈົ້າເມືອງນັ້ນແປນເອີດເຕີດຢູ່. ນາງສາວໄຂ່ນົກບອກໃຫ້ຜົວໄປຕັດເອົາໄມ້ດົ້ວເຮັດດວງ, ຢາກໃຫ້ສິ່ງທັງປວງລຸກຂຶ້ນມາມີຊີວິດ. ທ້າວກໍ່າພອຍ ຈຶ່ງ ໄດ້ໄປຕັດເອົາໄມ້ມາເຮັດເຕົ້າແຄນແປດລູກ, ນາງໄດ້ບອກທ້າວກໍ່າພອຍເປົ່າແຄນປຸກຕົ້ນໄມ້ໃບຫຍ້າທີ່ຖືກເຜົາຜານນັ້ນໃຫ້ລຸກຂຶ້ນມາ, ສຽງແຄນຂອງທ້າວກໍ່າພອຍທີ່ເປົ່າເລາະສຽງດັງ ແລນແຕ ! ແລນແຕ ! ທີ່ມີຄວາມໝາຍປຸກຈຳພວກຕົ້ນໄມ້ໃບຫຍ້າໃຫ້ລຸກຂຶ້ນມາແມ ! ເຈົ້າຕົ້ນໄມ້ໃບຫຍ້າ ເອີຍ !, ຈຳພວກຕົ້ນໄມ້ຈຶ່ງລຸກຕັ້ງຂຶ້ນປຸບປັບ ຢາຍລຽນກັນເປັນແຖວຊາບລາບຢູ່. ໃນເມື່ອນັ້ນ ຈຳ ພວກຕົ້ນໄມ້ກໍ່ມີຄວາມພາກພູມໃຈກັບຄອບຄົວທ້າວກໍ່າພ້າ, ນັບຕັ້ງແຕ່ນັ້ນມາຄົນທຸກຈຶ່ງໄດ້ສືບທອດຕະກຸນພະຍາເຈົ້າເມືອງຕໍ່ໆມາ.

# 3. ຊີວິດຄອບຄົວ

## (ອະມົງອະແປັຣ)

## 3.1 ພໍ່ສອນລູກ

### (ອີກົນຍພະຈອມກອນ)

ຄົນເຮົາ ທີ່ເກີດມາຢູ່ໃນໂລກນີ້ ໃຜໆກໍ່ລ້ວນແລ້ວແຕ່ຢາກສ້າງໂລກມະນຸດດ້ວຍກັນທັງນັ້ນ ແຕ່ໃນ ຕົວຈິງແລ້ວ ຢູ່ໃນສັງຄົມມະນຸດເຮົາໄດ້ເກີດມີສອງເພດຢ່າງຈະແຈ້ງຄື: ເພດຊາຍ ແລະ ເພດຍິງ. ມະນຸດຈຳພວກໜຶ່ງຢູ່ໃນສັງຄົມມັກເບິ່ງໂລກຢູ່ໃນແງ່ຮ້າຍ ຢາກຢູ່ນຳໂລກຊື່ໆເທົ່ານັ້ນ ບໍ່ຕ້ອງການມີດິນດອນເປັນຂອງຕົນເອງ ບໍ່ຢາກມີເຮືອນເປັນຂອງຕົນເອງ ບໍ່ຢາກມີຄູ່ຮ່ວມຄຽງຂ້າງຂອງຕົນເອງຕະຫຼອດຊີວິດ ບໍ່ຢາກມີລູກມີຫຼານ ຄົນຈຳພວກນີ້ບໍ່ຢາກມີຄອບຄົວ ແລະ ບໍ່ຢາກມີຄົນສືບທອດວົງຕະກຸນແລ້ວເຊື້ອສາຍກໍ່ຈະຖືກດັບສູນພັນໄປເລີຍ. ຄົນເຮົາເມື່ອສ້າງໂລກມະນຸດ ຂຶ້ນມາ ກໍ່ເພື່ອຫວງເລື່ອງເຊື້ອສາຍວົງຕະກຸນ ແລະ ຕ້ອງການສ້າງຄອບຄົວ ມີຄວາມປາຖະໜາຢາກໃຫ້ມີລູກເຕັມບ້ານມີຫຼານເຕັມເມືອງ, ຢາກມີດິນມີເຮືອນເປັນຂອງຕົນເອງ. ໃນເມື່ອມີເມຍມີລູກແລ້ວກໍ່ ຮັກແພງລູກເມຍຢູ່ສະເໝີ.

ຜູ້ເປັນພໍ່ເຫັນລູກໃຫຍ່ຂຶ້ນເປັນສາວແລ້ວ ພໍ່ນັ້ນມັກມີແນວຄິດຫ່ວງລູກສາວ ເພິ່ນປາຖະໜາຢາກໃຫ້ລູກສາວໄດ້ມັກຮັກພົວພັນກັບຜູ້ບ່າວທີ່ມີຖານະຮັ່ງມີວົງຕະກຸນສູງ ແລະ ວົງຕະກຸນທີ່ມີຊື່ສຽງກວ້າງຂວາງ. ດັ່ງນັ້ນ ພໍ່ຈຶ່ງເປັນຫ່ວງລູກສາວຫຼາຍ ໃນເມື່ອຄ່ຳຄືນຂອງແຕ່ລະມື້ ຜູ້ເປັນພໍ່ບໍ່ໃຫ້ລູກອອກຈາກເຮືອນໄປ ຄ່ຳມາແລ້ວລູກຕ້ອງຢູ່ເຮືອນຢູ່ຊານ ບໍ່ໃຫ້ລູກສາວລົມບ່າວຫຼາຍຄົນ ລູກສາວພົບໄດ້ພຽງຜູ້ດຽວ ຜູ້ເປັນພໍ່ຕ້ອງຕິດຕາມເບິ່ງແຍງລູກສາວຢູ່ຕະຫຼອດເວລາບໍ່ວ່າຈະໄປໃສມາໃສ. ລູກສາວຄິດວ່າ ຜູ້ເປັນພໍ່ບັງຄັບຈິດໃຈຂອງຕົນເອງ.

ມີມື້ໜຶ່ງພໍ່ກັບລູກສາວອອກຈາກບ້ານໄປນຳກັນ ເພື່ອພ້ອມພາກັນໄປເສຍຫຍ້າໄຮ່, ຄົນກະຕູເຂົາເຈົ້າມັກຈະບອກສອນ ຫຼືຕັກເຕືອນລູກສາວໃນເວລາເດີນທາງໄປ, ພໍ່ເວົ້ານຳລູກສາວວ່າ ລູກເອີຍ! ດຽວນີ້ລູກໃຫຍ່ຂຶ້ນມາເປັນແສ້ເປັນສາວແລ້ວ ແລະ ດຽວນີ້ລູກບໍ່ແມ່ນເດັກນ້ອຍອີກແລ້ວ. ດັ່ງນັ້ນ ພໍ່ຢາກເວົ້ານຳລູກວ່າ ຄົນເຮົາຢູ່ໃນໂລກນີ້ ຊອກຄົນຮ່ວມຫາກິນມັນງ່າຍແຕ່ວ່າຊອກຄົນຮ່ວມຕາຍມັນຍາກໃດລູກເອີຍ ຢູ່ບ້ານເຮົາມີຄົນຢູ່ຮ່ວມກັນຫຼາຍຄົນທີ່ມີຖານະແຕກຕ່າງກັນ ແຕ່ມີຜູ້ບ່າວຫຼາຍຄົນນັ້ນ ບາງຄົນເປັນກຳພ້າ, ກຳພອຍບໍ່ມີພໍ່ແມ່ເປັນຜູ້ລ້ຽງດູ, ລູກຕ້ອງໄດ້ຄິດເບິ່ງໃດ. ພໍ່ໄດ້ເວົ້າຕໍ່ໄປວ່າ ເລື່ອງຂອງຄວາມຮັກນັ້ນມັນບໍ່ມີການເລືອກຊັ້ນ

ວັນນະໃດລູກ. ຖ້າຄົນເຮົາບໍ່ມີສະຕິລະວັງຕົວ, ຖ້າວ່າຊາຍ-ຍິງ ສະແດງອາລົມຈິດວິນຍານແຫ່ງຄວາມຮັກຕໍ່ກັນແລ້ວ ເຮັດໃຫ້ຄວາມເຂົ້າໃຈເຊິ່ງກັນ ແລະ ກັນແລ້ວຄວາມຮັກກໍ່ຈະມີຂຶ້ນທັນທີໂລດ. ແຕ່ວ່າພໍ່ຢາກຕັກເຕືອນ ລູກວ່າ ລູກຕ້ອງເຮັດຄືຜູ້ສາວຄົນໃນບ້ານ, ແຕ່ວ່າລູກຢ່າເຮັດຄືຜູ້ສາວຄົນໃນບ້ານເດີລູກ. ລູກສາວຟັງພໍ່ເວົ້າຍືດຍາວຫຼາຍກໍ່ເລີຍຕັດຄວາມພໍ່ວ່າ ພໍ່ເອີຍ! ພໍ່ເອີຍ! ອີ່ພໍ່ສອນລູກຫຼາຍໂພດ ລູກຈື່ຈຳບໍ່ໄດ້ໝົດດອກ, ຜູ້ເປັນພໍ່ກໍ່ເລີຍເຊົາລົມ ກັບລູກ.

ໃນມື້ລຸນມາ ພໍ່ກັບລູກສາວພ້ອມພາກັນໄປເຮັດໄຮ່ອີກ, ຜູ້ເປັນພໍ່ຍາມໃດກໍ່ຄິດເປັນຫ່ວງລູກສາວ, ພໍ່ຢາກໃຫ້ລູກເລືອກເອົາຜູ້ຊາຍຄົນໃດຄົນໜຶ່ງ ໃນຊີວິດທີ່ສົມຫວັງຂອງລູກ. ພໍ່ສອນລູກເລື່ອງຄົນດຸໝັ່ນພາກພຽນໃນການເຮັດໄຮ່ສວນ ແມ່ນສະແດງອອກຢູ່ໃນຝາມືນີ້ທັງໝົດ. ລູກສາວຖາມພໍ່ວ່າ ເຮັດແນວໃດຈຶ່ງຈະຮູ້ຈັກວ່າຄົນດຸໝັ່ນພາກພຽນ ຫຼື ຄົນຂີ້ຄ້ານພໍ່ເອີຍ! ພໍ່ຕອບລູກວ່າ ວິທີທີ່ໜຶ່ງນັ້ນ ເວລາຜູ້ບ່າວເຂົາເຈົ້າເອົາມືມາຈິກລູກ, ລູກຕ້ອງລູບບາຍ ແລະ ຈັບຝາມືຂອງເຂົາເຈົ້າສາກ່ອນ, ຄັນວ່າລູບບາຍມືຈ່ອຍແຫຼມທາງປາຍ ແລະ ມີເລັບມືຍາວແມ່ນຄົນຂີ້ຄ້ານ, ບໍ່ໃຫ້ລູກລົມກັບເຂົາ. ວິທີທີ່ສອງເວລາຜູ້ບ່າວມາຈິກລູກນັ້ນ ໃຫ້ລູກຈັບຝາມືແລ້ວລູບຝາມືຄັນວ່າມັນກ້ຽງດີແມ່ນຄົນຂີ້ຄ້ານໂລດ. ວິທີສາມຄັນຜູ້ບ່າວມາຈິກລູກ ໃຫ້ລູກຈັບຝາມືແລ້ວລູບເບິ່ງວ່າຝາມືສີຊາໆ ນັ້ນແຫຼະເພິ່ນວ່າຄົນດຸໝັ່ນຫຼາຍ ຄົນແບບນັ້ນໃຫ້ລູກລົມເອົາໂລດ. ໃນເວລາພໍ່ກັບລູກສາວລົມກັນຕາມທາງຢ່າງສະໜຸກສະໜານຢູ່ນັ້ນ ກໍ່ພໍດີບັງເອີນມີຜູ້ບ່າວຄົນຂີ້ຄ້ານຜູ້ໜຶ່ງ ມາລັກຟັງແລ້ວຮູ້ຄວາມລັບຂອງສອງພໍ່ລູກ.

ຫຼັງຈາກຮູ້ຄວາມລັບ ການສອນລູກສາວຂອງພໍ່ເຖົ້າແລ້ວ ຄົນຂີ້ຄ້ານຜູ້ນັ້ນຄິດວ່າ ຂ້ອຍຮຽນເອົາແບບຄວາມເວົ້າຂອງພໍ່ເຖົ້ານັ້ນໃຫ້ໄດ້. ໃນເມື່ອຄ່ຳມາແລ້ວ ຜູ້ບ່າວຄົນນັ້ນກໍ່ເອົາເຂົ້າສຸກມາ ໜ່ຽງໃສ່ຝາມືໃຫ້ເຂົ້າຕິດມືຢ່າງຄັກແນ່ແລ້ວ, ໃນເມື່ອມາລາວໄປຈີກຜູ້ສາວຄົນນັ້ນໂລດ. ຜູ້ສາວຄົນນັ້ນປະຕິບັດຕາມຄຳສອນຂອງພໍ່ໂລດ, ໃນເມື່ອຜູ້ບ່າວເອົາມືຈິກໃສ່ບ່ອນຜູ້ສາວໃຫ້ເຖິງແລ້ວ ຜູ້ສາວກໍ່ຈັບລູບຝາມືໂລດ ກໍ່ໄດ້ຄວາມຮູ້ສຶກວ່າຝາມືຊາໆຫຼາຍ ຈຶ່ງສະແດງອາລົມຄວາມອ່ອນໂຍນຈາກນ້ຳໃສໃຈຈິງໃຫ້ຜູ້ບ່າວຮູ້ຕົນເອງມັກຮັກກັນແລ້ວ ແລະ ແບບເອົາກັນເລີຍໂລດ.

ຫຼັງຈາກຜູ້ບ່າວກັບຜູ້ສາວເອົາກັນເປັນຜົວເມຍແລ້ວ, ຜູ້ເປັນຜົວແຕ່ລະມື້ມີແຕ່ເຮັດຕີເຈັບທ້ອງຕະຫຼອດ ບອກເມຍວ່າ ຂ້ອຍເຈັບທ້ອງຫຼາຍຂ້ອຍນອນພັກຜ່ອນຢູ່ບ້ານກ່ອນ, ມື້ໜ້າຜົວເຮັດຕີເຈັບທ້ອງ, ນອນຮ້ອງຄາງໂອຍ! ໂອຍ!ເຂົາເຈົ້າຢູ່ຮ່ວມຊີວິດໄດ້ຫຼາຍປີໄປ, ຜູ້ເປັນເມຍຈຶ່ງເຂົ້າໃຈຜົວແມ່ນຄົນຂີ້ຄ້ານ, ນັບຕັ້ງແຕ່ນັ້ນມາຜົວເມຍມີແຕ່ຜິດຖຽງກັນຕະຫຼອດ, ແລ້ວພໍ່ເວົ້າໃຫ້ລູກວ່າບໍ່ຟັງຄວາມພໍ່ສອນ, ແລ້ວພໍ່ບອກລູກປະຜົວຂີ້ຄ້ານໄປ. ໃນເວລາເວົ້າຄວາມກັນການຢ່າຮ້າງນັ້ນຕ່າງຝ່າຍກໍ່ອອກມາເວົ້າການພົບກັນທຳອິດ. ພໍ່ເວົ້າໃຫ້ລູກວ່າ ຂ້ອຍບອກລູກແລ້ວໃຫ້ລູບກຳມືຊາໆແມ່ນດຸໝັ່ນ. ສ່ວນລູກສາວກໍ່ເວົ້າໃຫ້ພໍ່ຮູ້ວ່າເວລາຜູ້ບ່າວຈິກນັ້ນ ຕົນເອງໄດ້ລູບ ຄຳແລ້ວກໍ່ມີ

ຄວາມຮູ້ສຶກວ່າມືຂອງມັນຊາໆແທ້. ແລ້ວເຈົ້າບ່າວກໍ່ເວົ້າວ່າຕົນເອງແມ່ນຄົນຂີ້ຄ້ານແທ້, ແຕ່ຍ້ອນຕົນເອງໄດ້ລັກຟັງຄວາມລັບພໍ່ສອນລູກ, ພໍ່ບອກໃຫ້ລູກຈັບເບິ່ງມືສີຊາໆແມ່ນຄົນດຸໝັ່ນ, ຕົນເອງຈຶ່ງເອົາເຂົ້າໜຽວມາໜ່ຽງໃສ່ມືໃຫ້ມັນຕິດໃນຝາມືແລ້ວຈຶ່ງໄປຈົກຜູ້ສາວ, ຫຼັງຈາກເວົ້າຄວາມຈິບລົງ ຜົວເມຍກໍ່ປະກັນຕາມເຫດຜົນຢ່າງເປັນເອກະສັນທັງສອງຝ່າຍອີກດ້ວຍ.

## 3.2 ແມ່ໝ້າຍ
## (ອີກັນກະໝາຍ)

ເລື່ອງຊີວິດຜົວເມຍ ສອງຊີວິດທີ່ແຕກຕ່າງກັນໂຮມເຂົ້າກັນເປັນອຸດົມການອັນດຽວກັນ ແຕ່ວ່າໃນເມື່ອເອົາກັນແລ້ວຈຶ່ງເອີ້ນວ່າ ຄອບຄົວ, ໃນຄອບຄົວໜຶ່ງມີຜູ້ໜຶ່ງເປັນຊາຍເອີ້ນວ່າ ພໍ່ເຮືອນ ແລະ ຜູ້ໜຶ່ງເປັນແມ່ຍິງເອີ້ນວ່າ ແມ່ເຮືອນທັງສອງຄົນນີ້ຢູ່ຮ່ວມກັນຕາມຮີດຄອງປະເພນີຂອງເຜົ່າກະຕູ ແມ່ນຜູ້ເຖົ້າຜູ້ແກ່ພາຍໃນບ້ານຮັບຮູ້ ໂດຍຊ່ອງໜ້າພໍ່ແມ່ທັງສອງກໍ້ສອງຝ່າຍເປັນຫຼັກຖານນຳກັນ.

ໃນເມື່ອ ເປັນຜົວເມຍຢູ່ນຳກັນແລ້ວ ແມ່ນເຂົາເຈົ້າສ້າງອຸດົມການຂອງຊີວິດຄອບຄົວຄິດເລື່ອງການຮ່ວມຮັກແມ່ນ ບັນຫາສຳຄັນຂອງຊີວິດ, ແລ້ວຄິດຫາເລື່ອງເຮັດໃຫ້ມີລູກຊາຍ ຫຼື ລູກສາວສາກ່ອນ, ໃນເມື່ອມີລູກແລ້ວຈຶ່ງຄິດຫາຊີວິດຄອບຄົວ ຢາກມີບຸນວາດສະໜາດີ ເຈົ້າວິນຍານເປັນຜູ້ຊ່ອຍມີເຊື້ອສາຍສືບທອດວົງຕະກຸນຂອງຕົນເອງ ຄວາມຮັກໃນເວລານີ້ແມ່ນເລິກເຊິ່ງກວ່າເກົ່າດູດດື່ມຫຼາຍທີ່ສຸດ, ເຮັດໃຫ້ຊີວິດຄອບຄົວມີກຳລັງໃຈຢ່າງສູງ, ສອງຄົນເຮັດໜ້າທີ່ຄອບຄົວທີ່ດີແລ້ວ. ໃນເມື່ອມີລູກເຂົາເຈົ້າຈຶ່ງເວົ້າເລື່ອງກິນ, ເຄື່ອງໃຊ້, ລ້ຽງດູເບິ່ງແຍງລູກເຮັດແນວໃດໃຫ້ລູກເຕີບໃຫຍ່ມີຄວາມຮູ້ຄວາມສະຫຼາດຫຼັກແຫຼມສຸຂະພາບແຂງແຮງດີ, ພໍ່ແມ່ມີຄວາມສຸກກາຍສະບາຍໃຈຫຼາຍແລ້ວຈຶ່ງຢາກຮັ່ງຢາກມີດີໄດ້ອີກ.

ຊີວິດຄອບຄົວ ມັນບໍ່ແມ່ນຫວານຊື່ນເໝືອນດັ່ງຍາມບ່າວສາວດອກ, ແຕ່ວ່າຊີວິດບາງຄັ້ງຄາວກໍ່ຂົມຂື່ນພັນລະນານັບບໍ່ໄດ້, ບາງຄັ້ງຄາວຄວາມເຈັບເປັນພັດມາບັງບຽດ, ບາງເທື່ອຄວາມທຸກຍາກລຳບາກເຂົ້າມາແຊກແຊງຊີວິດຄອບຄົວ, ບາງເທື່ອນິດໄສໃຈຄໍບໍ່ເຂົ້າກັນເຮັດໃຫ້ຜິດຂ້ອງ ຕ້ອງຖຽງກັນ, ບາງເທື່ອຜົວບໍ່ຮັກພໍ່ແມ່ເມຍ, ແຕ່ບາງເທື່ອເມຍບໍ່ຮັກແພງປູ່ຍ່າ ເຮັດໃຫ້ຜົວເມຍເຂົ້າໃຈຜິດກັນ, ແລ້ວຊີວິດຄອບຄົວກໍ່ຖືກຜ່າມ້າງ, ບາງເທື່ອຜູ້ໜຶ່ງເປັນຄົນດຸໝັ່ນ, ຜູ້ໜຶ່ງພັດເປັນຄົນຂີ້ຄ້ານນອນລ້າກິນດາຍ ແລະ ອື່ນໆກີດຕັນຂັດຂວາງເສັ້ນທາງຊີວິດຂອງຄອບຄົວ, ເສັ້ນທາງຊີວິດຂອງຄອບຄົວມີລຸບໆໂນນໆ, ບາງເທື່ອກໍ່ຮັກແພງກັນດີ ແຕ່ບາງເທື່ອຄຽດຊັງກັນ

ຈົນເບິ່ງໜ້າກັນບໍ່ໄດ້, ຈົນວ່າມີແນວຄິດຜົວຢາກໃຫ້ເມຍຕາຍສາ ຫຼື ເມຍຢາກໃຫ້ຜົວຕາຍສາ ຍ້ອນວ່າສາເຫດຄວາມຄຽດຊັງກັນຫຼາຍໂພດ ຈົນກະທັ່ງບໍ່ສາມາດຢູ່ນຳກັນໄດ້.

ໃນເມື່ອຊີວິດຄອບຄົວນັ້ນ ຫາກພັງທະລາຍຍ້ອນຜູ້ເປັນຜົວໄດ້ຕາຍຈາກເມຍໄປແລ້ວ, ນັບຕັ້ງແຕ່ຜົວຕາຍປະເມຍນັ້ນ ເຮັດໃຫ້ເມຍເຮັດສອງໜ້າທີ່ຄື: ເປັນຫົວໜ້າຄອບຄົວ ແລະ ເປັນແມ່ເຮືອນອີກດ້ວຍ, ທຸກສິ່ງທຸກຢ່າງແມ່ນເມຍເປັນຜູ້ຮັບຜິດຊອບຊີວິດຂອງຕົນເອງ ແລະ ລູກຊາຍ. ນາງເປັນຜູ້ຖາງປ່າເຮັດໄຮ່, ຕັກແຫໃສ່ມອງ, ນາງດຳລົງຊີວິດຢູ່ຢ່າງທຸກຍາກລຳບາກຫຼາຍ, ຂາດຄູ່ຊີວິດ, ຂາດຜູ້ເອົາອົກເອົາໃຈ ແລະ ຂາດຜູ້ດູແລເບິ່ງແຍງຊີວິດປະຈຳວັນ. ນັບຕັ້ງແຕ່ນັ້ນມານາງຄິດຢາກໄດ້ຜົວອີກ, ນາງຄິດຢາກໄດ້ຄູ່ພໍ່ໄດ້ມາເບິ່ງແຍງຊີວິດຂອງຕົນເອງ ດີກວ່າຕົນເອງຢູ່ຄົນດຽວ.

ໃນມື້ໜຶ່ງ ນາງໄປເສຍຫຍ້າໄຮ່ບົວລະບັດຕົ້ນເຂົ້າເໝືອນດັ່ງນາງຖະໜຸຖະໜອມ ລ້ຽງລູກຊາຍຂອງຕົນເອງ. ນາງຄິດເຫັນຜູ້ອື່ນ ທີ່ຍັງບໍ່ມີພໍ່ແມ່ແມ່ນໄດ້ກິນຊີ້ນຕ່ອນໜາປາຕ່ອນໃຫຍ່. ນາງຄິດວ່າ ຕົນເອງຕ້ອງຈັບເອົາແມງຕັກແຕນເຂົ້າ, ແມງມ້າເຂົ້າກໍ່ພໍແລ້ວ, ໃນເມື່ອຄິດເປັນຫ່ວງລູກແລ້ວ ນາງເຫັນຕັກແຕນຈັບຕົ້ນເຂົ້ານາງໝ້າຍຄົນນັ້ນ ກໍ່ຈັບຕັກແຕນ, ແມງມ້າເກັບໃສ່ຖົງຫົວສິ້ນ ຫຼື ແມງໄມ້ທີ່ກິນເປັນນາງໝ້າຍກໍ່ເກັບໃສ່ຖົງຫົວສິ້ນຄືກັນ. ຫຼັງຈາກເສຍຫຍ້າແລ້ວໆ ນາງໝ້າຍຟ້າວກັບຄືນເມືອບ້ານເພື່ອເມືອຫາລູກຢູ່ເຮືອນ, ໃນເມື່ອເມືອຮອດເຮືອນແລ້ວໆ ນາງໝ້າຍກໍ່ຈີກເອົາແມງຕັກແຕນ, ແມງມ້າໃຫ້ລູກຈີ່ກິນກັບເຂົ້າ. ໃນຍາມຄ່ຳນາງໝ້າຍພາລູກນອນແຕ່ຫົວຄ່ຳ, ນາງໝ້າຍລະເມີຫາຜູ້ຊາຍຄົນໃດຄົນໜຶ່ງທີ່ສົນໃຈນຳຕົນເອງ ແຕ່ບໍ່ເຫັນໜ້າໃຜຈັກຄົນເລີຍ, ນາງໝ້າຍນອນຫຼັບເຊືອບໄປແລ້ວ ນາງໝ້າຍກໍ່ຮູ້ສຶກເຈັບປາບໆຢູ່ທ້ອງນ້ອຍຂອງຕົນເອງ, ນາງໝ້າຍກໍ່ຟ້າວລຸກຂຶ້ນມານັ່ງໂອ ! ຄິດວ່າ ຜູ້ບ່າວເອົາໄມ້ມາແທງ ປຸກໃຫ້ຕົນເອງລຸກໄປຫາ, ນາງຄິດອອກແລ້ວ ກໍ່ລຸກປຶດຂຶ້ນລູກຂອງນາງຕື່ນແລ້ວໄຫ້ຂຶ້ນແງກໆ, ນາງໝ້າຍຕົບຕີລູກເປັຍໆແລ້ວກໍ່ລົງໄປກ້ອງຕະລ່າງເຮືອນ ກໍ່ບໍ່ເຫັນມີຜູ້ບ່າວຄົນໃດມາ, ນາງຂຶ້ນເຮືອນໄປແລ້ວນອນນຳລູກອີກ, ໃນເມື່ອນອນຫຼັບໄປແລ້ວກໍ່ຮູ້ສຶກມີຄົນເອົາໄມ້ແຫຼມມາແທງຂຶ້ນແຕ່ກ້ອງຕະລ່າງ, ລາວກໍ່ລຸກໄປອີກ ລຸກເທື່ອໃດລູກຊາຍກໍ່ໄຫ້ນຳເທື່ອນັ້ນ, ນາງເອົາຝ່າມືຕົບຕີ ແລະ ທັງປ້ອຍດ່າລູກ, ໃນຄືນນັ້ນ ນາງທັງລຸກທັງຂຶ້ນລົງໆແຕ່ເຮືອນຫຼາຍຄັ້ງ ທັງຕີລູກທຸກຄັ້ງທີ່ນາງລຸກໄປ.

ໃນມື້ຕໍ່ມາ ນາງໝ້າຍຄົນນັ້ນ ໄດ້ໄປອາບນ້ຳແລ້ວ ເອົາສິ້ນຜືນທີ່ນຸ່ງອາບນ້ຳນັ້ນໄປຕາກແດດໃຫ້ແຫ້ງ, ໃນເມື່ອສິ້ນແຫ້ງແລ້ວ ນາງໝ້າຍກໍ່ຊອກຫາໂຕເມັນຕາມຮອຍຫຍິບ, ນາງຊອກຫາລົບໄປລົບມາແລ້ວ ນາງໝ້າຍເຫັນແມງມ້າຕາຍຢູ່ຖົງຫົວສິ້ນ, ນາງຈຶ່ງຄິດເຫັນວ່າ ໃນມື້ຄືນນັ້ນ ບໍ່ແມ່ນຄົນທາງໃດມາແທງຄົງຕົນເອງດອກ, ຕັ້ງແມ່ນແມງມ້ານີ້ຂົບຕົນເອງ, ແລ້ວນາງໝ້າຍ

ຈຶ່ງຮູ້ສຶກຕົນເອງຕີລູກຫຼາຍຄັ້ງແລ້ວ ຍ້ອນຕົນເອງຄິດລະເມີເພີ້ຝັນໄປຄິດຢາກມີຜົວນຳເພິ່ນ, ຫຼັງຈາກນັ້ນ ນາງໝ້າຍຟ້າວແລ່ນໄປຫາລູກທັງກອດທັງໄຫ້ສະອຶກສະອື້ນຂຶ້ນ ຍ້ອນຕົນເອງຕີລູກ ແລະ ຍ້ອນຕົນເອງຮູ້ເທົ່າບໍ່ເຖິງການ, ຊາວບ້ານເຫັນນາງໝ້າຍໄຫ້ກອດລູກເຂົາເຈົ້າກໍ່ແລ່ນໄປຖາມນາງວ່າ ລູກເຈົ້າເປັນຫຍັງ ມັນເປັນໄຂ້ບໍ່? ນາງແກວ່ງຫົວ, ຊາວບ້ານຖາມອີກວ່າລູກເຈົ້າເຈັບທ້ອງບໍ່? ນາງບໍ່ປາກເຂົາເຈົ້າກໍ່ເລີຍຖາມອີກວ່າ ລູກເຈົ້າຫິວເຂົ້າບໍ່? ດົນເຕີບນາງຕອບຊາວບ້ານວ່າ ບໍ່ແມ່ນຄືພວກເຈົ້າຄິດດອກ, ລາວບອກວ່າ ມື້ຄືນວານນັ້ນຂ້ອຍໄດ້ຕີລູກໝົດຄືນ, ຂ້ອຍຄິດວ່າຜູ້ບ່າວມາແທງມາແຍ່ຂ້ອຍ ເພື່ອໃຫ້ຂ້ອຍລຸກໄປຫາ, ຂ້ອຍເອງຂຶ້ນລົງໆເຮືອນຕັ້ງຫຼາຍເທື່ອ, ແຕ່ວ່າໃນມື້ສຸດທ້າຍຕົນເອງຕາກສິ້ນໃຫ້ແຫ້ງແລ້ວຊອກຫາໂຕເມັ້ນກໍ່ບໍ່ເຫັນໆ ແຕ່ແມງມ້າຕາຍຄາຢູ່ຖົງຫົວສິ້ນນັ້ນ, ຕົນເອງຈຶ່ງຄິດເຫັນການຕີລູກ ແລະ ປ້ອຍດ່າອີ່ດູຕົນລູກຈຶ່ງໄຫ້ກອດລູກ, ໃນເມື່ອຊາວບ້ານຟັງຄຳເວົ້າຂອງນາງແລ້ວ ເຂົາເຈົ້າກໍ່ພາກັນຫົວຈົນເຈັບທ້ອງເຈັບໄສ້, ຫົວຈົນນ້ຳຕາອອກ ແລ້ວພາກັນໄຫ້ກັບນາງໝ້າຍຄົນນັ້ນ, ນັບຕັ້ງແຕ່ນັ້ນມາ ຄົນກະຕູບູຮານໃຜໆກໍ່ຮັກແພງຜົວ ບໍ່ປ້ອຍດ່າ ແລະ ຮ້າຍຜົວ ເຂົາເຈົ້າຢ້ານຜົວຕາຍປະແລ້ວຊີວິດຈະເໝືອນແມ່ໝ້າຍຄົນນີ້ອີກ.

## 3.4 ຮັ່ງມີຍ້ອນລົງໂທດລູກ
## (ອະຈັກໂທດແກ໊ດພັຣຍາ)

ສະໄໝກ່ອນ ມີບ່າວສາວມັກຮັກກັນຢ່າງຈິງໃຈແທ້, ພົວພັນມັກຮັກຕາມຮີດຄອງປະເພນີຢ່າງຖືກຕ້ອງ. ລູກຄົນຜູ້ຮັ່ງສ່ວນຫຼາຍບໍ່ເອົາຄົນທຸກມາເປັນເມຍ ຫຼືເປັນຜົວ. ແຕ່ວ່າລູກສາວຄົນຜູ້ຮັ່ງມີບໍ່ເລືອກວ່າທຸກຍາກດອກ, ຫາກວ່າວາດສະໜາສາຍຕາຕ້ອງກັນເຂົ້າສາຍຫູສາຍຕາຂອງບ່າວສາວແລ້ວ ຄວາມຮັກນັ້ນກໍ່ບໍ່ຈຳແນກຊັ້ນວັນນະຈະທຸກ ຫຼື ຮັ່ງແມ່ນເອົາກັນໄດ້ໝົດແລ້ວຈະພາໃຫ້ມີຄວາມສຸກກວ່າຄົນຮັ່ງຕໍ່ຄົນຮັ່ງເອົາກັນກໍ່ມີ.

ໃນເມື່ອຄວາມຮັກນັ້ນໄດ້ອອກມາເປີດເຜີຍຜ່ານສາຍຕາຂອງພໍ່ແມ່ແລ້ວ ພໍ່ແມ່ຝ່າຍຍິງກໍ່ເກືອດຫ້າມລູກສາວບໍ່ໃຫ້ພົວພັນກັບຄົນທີ່ບໍ່ມີຖານະຢູ່ໃນສັງຄົມຢ່າງສິ້ນເຊີງ, ແຕ່ວ່າລູກສາວພັດຕໍ່ວ່ານຳພໍ່ແມ່ຂ້ອຍມັກຂ້ອຍເອົາ, ຂ້ອຍຮັກແລ້ວຂ້ອຍຕ້ອງເອົາຊີວິດແລກຊີວິດ, ຂ້ອຍເອົາເຂົາມາແມ່ນຂ້ອຍເປັນຜູ້ຢູ່ກັບເຂົາ ບໍ່ແມ່ນພໍ່ແມ່ຈະຢູ່ກັບເຂົາ ແລ້ວບໍ່ແມ່ນພໍ່ແມ່ເປັນຜູ້ນອນກັບເຂົາ, ຜູ້ທີ່ນອນກັບເຂົາແມ່ນລູກເອງ, ພໍ່ແມ່ຈະເວົ້າແນວໃດລູກກໍ່ປະບໍ່ໄດ້ແລ້ວ.

ພໍ່ແມ່ເວົ້າວ່າ ຂ້າເຂົາເຈົ້າທັງສອງໄຫຼນໍ້າສາ, ຖ້າວ່າຂ້າເຂົາເຈົ້າໄຫຼນໍ້າແບບນັ້ນ ຂວັນວິນຍານຂອງພວກເຂົາຈະບໍ່ຢູ່ນຳກັນໄດ້, ຜູ້ສາວຖາມວ່າຈະເຮັດແນວໃດຊັ້ນ? ຜູ້ຊາຍຕອບວ່າພວກເຮົາຕ້ອງພ້ອມກັນຕາຍບ່ອນດຽວກັນ, ລູກຈະໄປບັກເອົາໄມ້ກຸງ (ໄມ້ປຣິກ) ເປັນໄມ້ເນື້ອອ່ອນ ແລະ ໄມ້ເບົາທີ່ສາມາດເຮັດກອງຍາວໜຶ່ງວາ ແລ້ວພວກລູກຈະເຂົ້າຢູ່ໃນກອງນັ້ນ ແລ້ວພໍ່ແມ່ເອົາໜັງງົວຫຍິບອັດປາກກອງທັງສອງເບື້ອງ ແລ້ວໃຫ້ພໍ່ແມ່ເອົາໄປໄຫຼນໍ້າມັນຊິດີ ກວ່າ. ຜູ້ເປັນພໍ່ແມ່ເຫັນດີຕົກລົງເຮັດຕາມລູກເວົ້າ, ຜູ້ຊາຍອອກບ້ານໄປຕັດໄມ້ກຸງ (ໄມ້ປຣິກ) ຖາກເປືອກອອກ ແລະເຈາະທາງໃນໃຫ້ໂກນ ເໝືອນກອງຕີຢ່າງຮຽບຮ້ອຍແລ້ວ, ພໍ່ແມ່ກວດກາເບິ່ງໄດ້ແລ້ວຈຶ່ງໃຫ້ລູກທັງສອງຄົນເຂົ້າໄປໃນກອງ ແລ້ວພໍ່ແມ່ຫຍິບໜັງງົວອັດ ຕໍ່ຈາກນັ້ນ ຈຶ່ງເອົາໄປໄຫຼນໍ້າໃຫ້ທັງສອງຄົນຕາຍໝົດ, ໃນເມື່ອກະແສນໍ້າໄຫຼພັດກອງໄປໄກແສນໄກ ໄປຮອດວັງນໍ້າບ່ອນໜຶ່ງສອງຄົນເບິ່ງ ກອງບໍ່ຕີງແລ້ວ, ນາງໄດ້ຈົກເອົາມີດນ້ອຍທີ່ເຊື່ອງໄວ້ໃນຫົວສິ້ນເອົາອອກມາແຫກໜັງງົວອອກໄດ້ແລ້ວກໍ່ພາກັນຂຶ້ນບົກໄປ ແລ້ວເຂົາເຈົ້າທັງສອງໄດ້ຕັ້ງຕູບນ້ອຍ ເພື່ອເປັນບ່ອນຢູ່ອາໄສ ເພື່ອທຳ ມາຫາກິນ. ເຂົາເຈົ້າທັງສອງຄົນຢູ່ບ່ອນນັ້ນ, ໄດ້ອອກໄປຫາຂຸດມັນຢູ່ປ່າມາຕົ້ມກິນລ້ຽງຊີວິດໃນແຕ່ລະມື້, ເຂົາເຈົ້າດຳລົງຊີວິດຢູ່ບ່ອນນັ້ນໄດ້ຫຼາຍຟ້າ ຫຼາຍປີແລ້ວ, ມີມື້ໜຶ່ງຜູ້ເປັນຜົວຖືກບາດເຈັບເປັນແຜຢູ່ໜ້າແຄ່ງຈຳເປັນຕ້ອງນອນປິ່ນປົວບາດແຜ, ສ່ວນຜູ້ເປັນເມຍອອກໄປຫາຂຸດມັນຢູ່ປ່າ, ຜູ້ເປັນຜົວນອນຫຼັບແລ້ວເຈົ້ານົກກາບິນມາ ແຕ່ໄກລົງຕອດກິນອາຫານທີ່ເຮ່ຍ, ແລ້ວໄປຕອດກິນບາດແຜລາວໆກໍ່ຈັບມັນໄດ້, ລາວຈຶ່ງເວົ້າວ່າ ເຈົ້າເປັນອະທານແລງຂອງຂ້ອຍ, ບາດເມຍຂ້ອຍມາແຕ່ຫາຂຸດມັນແລ້ວ ຂ້ອຍຈະຂ້າເຈົ້າກິນ, ນົກກາໄດ້ຍິນວ່າ ຂ້າກິນນົກການົບໄຫວ້ລາວ ແລະອ້ອນວອນໃຫ້ລາວໄວ້ຊີວິດອິນຊີຂ້ານ້ອຍແດ່ ຂ້ານ້ອຍຈະຊ່ອຍເຈົ້າບໍ່ໃຫ້ທຸກຍາກຄືແນວນີ້ດອກ, ເຈົ້າເປັນນົກການັ້ນຫວະຈະຊ່ອຍຂ້ອຍໄດ້? ນົກກາເວົ້າວ່າ ຂ້ານ້ອຍມີກອງວິເສດໜ່ວຍໜຶ່ງຊິເອົາໃຫ້ເຈົ້າ, ຖ້າເຈົ້າຕີກອງວິເສດໜ່ວຍນັ້ນແລ້ວ ເຈົ້າທັງຕີທັງອະທິຖານຕາມຄວາມຕ້ອງການຂອງເຈົ້າມັນຈະຫຼັ່ງໄຫຼອອກມາລຸດໆໂລດ. ຫຼັງຈາກນັ້ນ ນົກກາຮ້ອງຂຶ້ນດັງໆວ່າ ກອງວິເສດໃຫ້ເຈົ້າບິນອອກມາຫາຂ້ອຍດຽວນີ້ ກອງກໍ່ບິນລົງມາດັງແປະຕໍ່ໜ້າຜູ້ຊາຍຄົນນັ້ນ, ຫຼັງຈາກນັ້ນ ລາວມັດນົກກາໄວ້ແລ້ວ, ລາວຈຶ່ງຕີກອງທັງອະທິຖານວ່າ ຢາກໄດ້ເຂົ້າສຸກໄກ່ຕົ້ມແລ້ວເຂົ້າສຸກໄກ່ຕົ້ມ ດັ່ງກ່າວນັ້ນອອກມາຈາກ ກອງແທ້ໆ. ຫຼັງຈາກນັ້ນ ລາວກໍ່ປ່ອຍນົກກາໄປ.

ໃນເມື່ອຕາເວັນອຳລາຈາກຂອບຟ້າໄປແລ້ວ ເມຍລາວກໍ່ກັບມາແຕ່ໄປຫາຂຸດມັນຮົກມັນແຊງ, ມັນອ້ອນລົງໄດ້ເຄິ່ງກະພາ, ໃນເມື່ອມາຮອດຕູບຜົວຢູ່ແລ້ວ ລາວກໍ່ຟ້າວເຮັດກິນໃຫ້ຜົວເພາະຢ້ານຜົວຫິວ, ເມຍລາວຍົກເອົາມັນສຸກມາໃຫ້ຜົວກິນ, ສຸດທ້າຍຜົວນາງຈັບໂຍນຖິ້ມໄປໝົດ, ຜູ້ເປັນເມຍໄຫ້ສະອຶກສະອື້ນຂຶ້ນ ແລ້ວຖາມຜົວວ່າເປັນຫຍັງເຈົ້າຈຶ່ງຖິ້ມມັນຂອງຂ້ອຍ ເຈົ້າ

ບໍ່ອີ່ດູ ຕົນຂ້ອຍບໍ? ຜົວເວົ້າວ່າ ດຽວນີ້ພວກເຮົາບໍ່ກິນມັນອີກແລ້ວ, ເພາະວ່າເຮົາມີກອງວິເສດຊ່ອຍພວກເຮົາ, ເຈົ້າຈິ່ງເບິ່ງຂ້ອຍຕີກອງນີ້ເດີ ລາວຈັບເອົາກອງອອກມາຕີແລ້ວເວົ້າວ່າ ເຂົ້າປາອາຫານ ເຈົ້າຈິ່ງອອກມາດຽວນີ້, ແລ້ວເຂົ້າປາອາຫານການກິນກໍ່ອອກມາແທ້ໆ, ທັງບອກເມຍວ່າເຈົ້າກິນແມ, ເມຍລາວກິນແລ້ວຖາມກົກປາຍສາເຫດວ່າ ເຈົ້າໄດ້ກອງວິເສດ ນີ້ມາແຕ່ໃສ ? ລາວເລົ່າໃຫ້ເມຍຟັງວ່າ ກອງນີ້ໄດ້ມາຈາກນົກກາທີ່ຕອດບາດແຜ ຂ້ອຍວ່າຈະຂ້າມັນກິນແລ້ວເລີຍມັນເວົ້າວ່າຈະເອົາກອງນົກກາວິເສດຊ່ອຍຊູເອົາຊີວິດຂອງພວກເຮົາໄວ້.

ຫຼັງຈາກໄດ້ກອງນົກກາວິເສດແລ້ວ ຊີວິດຂອງສອງຜົວເມຍກໍ່ມີຄວາມສຸກຄວາມສຳລານຫຼາຍເທົ່າ ແລະ ສອງຜົວເມຍບໍ່ໄດ້ເຂົ້າປ່າຫາຂຸດມັນອີກແລ້ວ. ເຂົາເຈົ້າທັງສອງຕີກອງນົກກາວິເສດ ຮຽກເອີ້ນອະທິຖານຢາກໄດ້ຕົວເມືອງໃຫຍ່ໆມີພົນລະເມືອງຫຼາຍໆແລ້ວຕີກອງນົກກາວິເສດອະທິຖານເອົາເຮືອນຊານບ້ານຊ່ອງເປັນຖັນເປັນແຖວຢ່າງສວຍງາມຫຼາຍ ແລະ ມີຖະໜົນຫົນທາງໃນຕົວເມືອງອັນຈົບງາມຫຼາຍ. ຫຼັງຈາກມີບ້ານເມືອງຂອງຕົນເອງແລ້ວ ເຂົາເຈົ້າທັງສອງຄົນກໍ່ແຕ່ງຕົວຢ່າງສຸພາບຮຽບຮ້ອຍ ແລະ ຈົບງາມຫຼາຍ ແລ້ວໄປເຊື້ອເຊີນພໍ່ແມ່ທັງສອງຝ່າຍມາຢ້ຽມຢາມບ້ານເມືອງຂອງພວກລູກແດ່, ແຕ່ວ່າຫຼາຍຄົນບໍ່ເຊື່ອວ່າສອງຄົນກັບຄືນມາມີຊີວິດອີກ, ດັ່ງນັ້ນສອງຄົນເຂົາຈິ່ງອະທິບາຍເຫດຜົນແຕ່ກົກສຸດປາຍ ແລ້ວພໍ່ແມ່ຈິ່ງເຊື່ອລູກຂອງຕົນເອງ. ພວກພໍ່ແມ່ໄປຢາມບ້ານເມືອງຂອງລູກ ກໍ່ເຫັນມີພົນລະເມືອງຢ່າງຫຼວງຫຼາຍ, ມີເຮືອນຊານບ້ານຊ່ອງອັນສວຍງາມຢາຍກັນເປັນແຖວຢູ່, ພໍ່ແມ່ລະອາຍຕໍ່ລູກທັງສອງຄົນ ທີ່ຕົນເອງໄດ້ທຳໂທດໄປນັ້ນ, ພໍ່ແມ່ເລີຍຂໍອະໄພໂທດນຳລູກ, ແຕ່ລູກທັງສອງຄົນເວົ້າວ່າ ປະໃຫ້ມັນເປັນເລື່ອງຂອງອະດີດໄປສາ. ເວລາໄດ້ຜ່ານພົ້ນໄປຫຼາຍຊົ່ວຄົນ, ບໍ່ມີໃຜຮູ້ຈັກວ່າການຊຸກເຊື່ອງກອງນົກກາວິເສດນັ້ນຢູ່ໃສ? ໃນສະໄໝລົບລ້າງຮີດຄອງປະເພນີໃນປີ 1958 ນັ້ນ ເຂົາເຈົ້າຈິ່ງເຫັນກອງນົກກາວິເສດເປັນສີດຳ, ມັນໜັກຫຼາຍ, ມີລວງຍາວປະມານໜຶ່ງວາຢູ່ເຄິ່ງກາງມີຮູສຳລັບສອດເຊືອກຫ້ອຍມັນໄວ້. ເຂົາເຈົ້າເອົາໄປປະຖິ້ມຢູ່ແຄມປ່າແຮ້ວບ້ານອາຫົງເອງ.

# 4. ຊີວິດຂອງຄົນ

## (ອະມົງອໍຄູຍ)

## 4.1 ແມ່ເຖົ້າກັບຫຼານ

## (ອີກະເລິງອີມອນ)

ແມ່ເຖົ້າລ້ຽງຫຼານ ຕັ້ງແຕ່ຄາວຍັງເປັນໄວເດັກນ້ອຍຢູ່, ແມ່ເຖົ້າເຮັດໄຮ່ໃນແຕ່ລະປີເຂົ້າບໍ່ພໍກິນ, ໃນແຕ່ລະມື້ຊີວິດຂອງແມ່ເຖົ້າກັບຫຼານແມ່ນບໍ່ມີກິນຂາດໆເຂີນໆ. ເຖິງຈະມີສະພາບການດຳລົງຊີວິດແບບນັ້ນກໍ່ຕາມແຕ່ແມ່ເຖົ້າກໍ່ພາຫຼານເອົາຊີວິດສູ້ໃຫ້ຢູ່ລອດກໍ່ເປັນພໍ. ເຖິງຈະມີຄວາມທຸກຍາກຫຼາຍປະການ ກີດຂວາງຊີວິດຂອງແມ່ເຖົ້າກໍ່ຕາມ ແຕ່ແມ່ເຖົ້າກໍ່ຍັງມີກຳລັງໃຈສູງຍ້ອນຕົນເອງມີຫຼານນ້ອຍຜູ້ດຽວ, ໃນຄວາມຫວັງຂອງແມ່ເຖົ້ານັ້ນແມ່ນເມື່ອໃດຫຼານໃຫຍ່ແລ້ວ ຜູ້ເປັນຫຼານຈະ ເຮັດໄຮ່ແທນແມ່ເຖົ້າ. ດັ່ງນັ້ນ, ຈິດໃຈຂອງແມ່ເຖົ້າຈຶ່ງເຂັ້ມແຂງຕະຫຼອດມາ.

ມີມື້ໜຶ່ງ ແມ່ເຖົ້າກັບຫຼານໄປເສຍຫຍ້າໄຮ່, ໃນເວລາເສຍຫຍ້າໄຮ່ຢູ່ນັ້ນ ແມ່ເຖົ້າບອກຫຼານວ່າ: ຫຼານເອີຍ! ຢູ່ນຳບ້ານນຳເມືອງເພິ່ນໃຫ້ຫຼານເຮັດຄືເພິ່ນເດີ ແຕ່ຢ່າເຮັດຄືເພິ່ນເດີຫຼານ. ຜູ້ເປັນຫຼານບໍ່ໃສ່ໃຈປານໃດ ເພາະວ່າແມ່ເຖົ້າເວົ້າເປັນ, ລົມດຸຫຼາຍ, ຄຳເວົ້າຂອງແມ່ເຖົ້າຫຼານບໍ່ເຂົ້າໃຈຈັກຢ່າງ, ແມ່ເຖົ້າສອນຫຼານ ເພື່ອໃຫ້ຫຼານຄິດເຖິງເສັ້ນທາງຂອງຊີວິດ ມັນລະອິດລະອ້ຽວຄົດລ້ຽວ ຄືທີບສອກກໍ່ມີຫຼານ, ຊີວິດມີຍາມຫວານຊື່ນ ແລະ ຂົມຂື່ນ ມັນບໍ່ແມ່ນຈະຫວານຊື່ນທຸກມື້ດອກ ຊີວິດຄົນເຮົາກໍ່ເໝືອນຊີວິດຂອງທຳມະຊາດນັ້ນແຫຼະ.

ແມ່ເຖົ້າກັບຫຼານ ພາກັນໄປໄຮ່ອີກ ເພື່ອເສຍຫຍ້າຂ້າບົ້ງ, ບົ່ວລະບັດຕົ້ນສາລີໃຫ້ງອກງາມດີ, ໃນເມື່ອໄປຮອດໄຮ່ແລ້ວ ຫຼານບໍ່ໄປເສຍຫຍ້າໄຮ່ນຳແມ່ເຖົ້າ ຫຼານຊາຍເລາະຫຼິ້ນໄປຕາມແຄມນ້ຳຫຼານເຕັ້ນໄປຈາກໂງ່ນຫີນນີ້ໄປຫາໂງ່ນຫີນນັ້ນແລ້ວລົງໄປຢູ່ຫາດຫີນແຮ່, ລາວເກັບກ້ອນຫີນໂຍນລົງນ້ຳສຽງດັງຕຸມຕຳຕຸມຕຳ. ແມ່ເຖົ້າຮ້ອງໃສ່ຫຼານວ່າ: ຢ່າເຮັດມັນຊິຖືກຫົວເຈົ້າສັກສິດ, ມັນຊິຖືກລູກຫຼານເຈົ້າວິນຍານນ້ຳ, ເຈົ້າວິນຍານເງືອກໃດ, ຫຼານຊາຍບໍ່ຟັງຄວາມ ເວົ້າແມ່ເຖົ້າຈັກໜ້ອຍເລີຍ.

ຫຼານຊາຍກໍ່ເລີ່ມຕົ້ນເກັບກ້ອນຫີນໂຍນລົງນ້ຳ ແລະ ເລາະໄປເລາະມາແຕ່ໃຕ້ຂຶ້ນເໜືອລາວເກັບກ້ອນຫີນໂຍນໃສ່ຫົວຫາດຫົວແກ້ງ, ໂຍນໃສ່ກາງວັງດັງຕຸມຕຳໆ ຢ່າງບໍ່ຢ້ານກົວຫຍັງ? ລາວເກັບກ້ອນຫີນຖິ້ມຫຼາຍໆ ແຕ່ວ່າກ້ອນຫີນໜ່ວຍນີ້ຄືວ່າແປກປະຫຼາດແທ້, ລາວຈັບຊິໂຍ່ນລົງນ້ຳແຕ່ລາວເບິ່ງແປກປະຫຼາດເປັນກ້ອນຫີນສີເຫຼືອງ, ລາວກໍ່ກຳໄວ້ໃນມືຂອງລາວເທິງໆ ລາວ

ຢາກຖິ້ມລົງນ້ຳ ແຕ່ຄິດວ່າຂ້ອຍຕ້ອງຮັກສາມັນໄວ້ເພາະວ່າມັນງາມຫຼາຍ, ໃນທີ່ສຸດລາວບໍ່ຖິ້ມເລີຍ ເກັບເອົາເມືອໃຫ້ແມ່ເຖົ້າເບິ່ງບາງທີເປັນກ້ອນຫີນມີລາຄາ? ໃນເມື່ອມາຮອດ ແມ່ເຖົ້າລາວເວົ້າວ່າແມ່ເຖົ້າເອີຍເບິ່ງກ້ອນຫີນນີ້ຈັ່ງແມ່ນມັນງາມຫຼາຍ, ແມ່ເຖົ້າເວົ້າວ່າເອົາມາໃຫ້ແມ່ເບິ່ງດູ ແຕ່ເຫັນແລ້ວແມ່ເຖົ້າຈັບເບິ່ງແມ່ນກ້ອນຄຳ, ແມ່ເຖົ້າເອົາເຊື່ອງໄວ້ໃນຫຼືບຫຍ້າມຸງເຮືອນແລ້ວໃນແຕ່ລະມື້ແມ່ເຖົ້າຕັດໄປຂາຍ, ຫຼັງຈາກຂາຍຄຳຄອບຄົວກໍ່ມີຊີວິດການເປັນຢູ່ດີຂຶ້ນກວ່າເກົ່າຫຼາຍ.

ໃນປີຕໍ່ມາ ພະຍາເຈົ້າເມືອງໃນທ້ອງຖິ່ນ ກໍ່ເກີດລະແວງສົງໄສແມ່ເຖົ້າວ່າ ໄປລັກໄຫເງິນໄຫຄຳຂອງພະຍາເຈົ້າເມືອງ. ດັ່ງນັ້ນ, ພະຍາເຈົ້າເມືອງຈຶ່ງສືບຖາມແມ່ເຖົ້າວ່າ : ເຈົ້າເອົາມາແຕ່ໃສ່ເງິນຄຳ ຈຶ່ງມີກິນມີໃຊ້ໃນແຕ່ລະມື້ແຕ່ລະວັນ ລາຍງານໃຫ້ຟັງແດ່ດູ, ຖ້າບໍ່ລາຍງານແມ່ນເຈົ້າຈະຄໍຂາດຢ່າງແນ່ນອນ, ແມ່ເຖົ້າລາຍງານໃຫ້ພະຍາເຈົ້າເມືອງຟັງເລື່ອງຕົ້ນປາຍສາເຫດ ທີ່ຕົນເອງມີກິນມີຢູ່ມາຈາກຫຼານຊາຍເກັບກ້ອນຫີນຄຳ, ຍ້ອນຫຼານຂອງຂ້ານ້ອຍມັນຂີ້ດື້ຫຼາຍ ມັນເກັບກ້ອນຫີນຖິ້ມໃສ່ນ້ຳຕຸມຕຳ. ໃນທີ່ສຸດມັນກໍ່ເກັບກ້ອນນີ້ແຕກຕ່າງກັນກັບກ້ອນຫີນອື່ນ ມັນຈຶ່ງບໍ່ຖິ້ມແລ້ວຮັກສາໄວ້ໃຫ້ຂ້ານ້ອຍເບິ່ງມັນກໍ່ງາມ, ກ້ອນຫີນຄຳໜ່ວຍນີ້ໄດ້ຕັດໄປຂາຍເທື່ອລະໜ້ອຍ, ພະຍາເຈົ້າເມືອງບັງຄັບໃຫ້ເອົາອອກມາເບິ່ງ, ແມ່ເຖົ້າເອົາອອກມາໃຫ້ພະຍາເຈົ້າເມືອງເບິ່ງແລ້ວຍາດຈັບເອົາເລີຍ. ມັນເປັນກ້ອນຄຳຂອງພໍ່ເພິ່ນຝັງໄວ້ຢູ່ແຄມນ້ຳຕັ້ງແຕ່ດົນນານຈົນລືມບ່ອນ. ພະຍາເຈົ້າເມືອງເອົາເມືອໄວ້ເຮືອນຂອງຕົນເອງ. ຫຼັງຈາກນັ້ນ ແມ່ເຖົ້າກັບຫຼານກໍ່ຕົກທຸກໄດ້ຍາກອີກຕື່ມ, ສ່ວນພະຍາເຈົ້າເມືອງໄດ້ບອກລູກຊາຍຂອງເພິ່ນໄປຢ່າງເລາະຫຼິ້ນແຄມນ້ຳແລ້ວເກັບກ້ອນຫີນໂຍນຖິ້ມລົງນ້ຳ ເຮັດຕາມແບບຫຼານຊາຍຂອງແມ່ເຖົ້ານັ້ນບໍ່ພົບເຫັນກ້ອນຫີນຄຳເລີຍ.

ໃນມື້ຕໍ່ມາ ລູກຊາຍພະຍາເຈົ້າເມືອງໄປເລາະລຽບຕາມແຄມນ້ຳ ເກັບກ້ອນຫີນໃຫຍ່ນ້ອຍຖິ້ມລົງນ້ຳຕຸມຕຳ ແຕ່ເໜືອລົງໃຕ້ຢ່າງເນືອງນັນຫຼາຍ, ເຮັດໃຫ້ພະຍາເງືອກຢູ່ພື້ນນ້ຳບໍ່ພໍໃຈ ມັນລັກໄລ່ຫູຫຼາຍ, ບອກລູກຫຼານຂຶ້ນມາເບິ່ງດູ ແມ່ນໃຜມາລົບກວນຈິດໃຈຂອງພວກເຮົາ, ພວກລູກເງືອກຂຶ້ນມາເບິ່ງເຫັນບັກນ້ອຍເລາະຖິ້ມກ້ອນຫີນຫຼິ້ນ, ລູກເງືອກກັບມາລາຍງານໃຫ້ພໍ່ຂອງຕົນຮູ້ແລ້ວພໍ່ເງືອກຄຽດໃຫ້ລູກຊາຍພະຍາເຈົ້າເມືອງຫຼາຍ. ພະຍາເງືອກເສກສັນປັ້ນແຕ່ງໃຫ້ມີຝົນຕົກຟ້າລົມແດງກະທັນ ຫັນຂຶ້ນຢູ່ຕາມລຳນ້ຳແຫ່ງນັ້ນ, ເພື່ອພັດປັ່ນເອົາລູກພະຍາເຈົ້າເມືອງລົງນ້ຳໄປ ລົມພັດຕີໄປຕີມາສົມທົບກັບກະແສຝົນຕົກແຮງຂຶ້ນເຮັດໃຫ້ນ້ຳນອງຖ້ວມ ຂຶ້ນຢ່າງໃຫຍ່, ກະແສນ້ຳພັດເອົາລູກພະຍາເຈົ້າເມືອງກໍ່ຖືກຈົມລົງນ້ຳໄປ.

# 4.2 ການເບິ່ງແຍງຄົນເຈັບ
# (ການແລີຍຄູຍໄອ)

ເຂົາເຈົ້າເລົ່າເລື່ອງລາວ, ເລື່ອງຊີວິດຂອງມະນຸດເໝືອນຄວາມຝັນ, ບາງເທື່ອຝັນດີມີໂຊກກໍ່ມີ ເຮັດໃຫ້ຄົນມີກຳລັງໃຈສູງຕໍ່ຕົນເອງ. ຄິດວ່າໂອເຈົ້າບຸນເຈົ້າວາດສະໜາ ເຈົ້າຜູ້ສັກສິດຄຸ້ມຄອງຕົນເອງໄດ້ດີ ແລ້ວຈຶ່ງມີຄວາມຢູ່ເຢັນເປັນສຸກ ຍ້ອນສິ່ງສັກສິດເອົາໃຫ້ ແລະ ເບິ່ງແຍງຊີວິດຂອງຕົນເອງ. ແຕ່ວ່າບາງຄັ້ງຄວາມຝັນພົບກັບຄວາມຊົ່ວຮ້າຍເປັນໜ້າຢ້ານກົວ, ເຮັດໃຫ້ຊີວິດການເປັນຢູ່ພົບກັບອຸປະສັກຄວາມທຸກຍາກ, ບາງຄົນມັກເຈັບເປັນ ແລະ ມັກເສຍກຳລັງໃຈແລ້ວຄິດໄປຫຼາຍແງ່ຫຼາຍມຸມວ່າ ຕົນເອງບໍ່ມີບຸນວາດສະໜາ, ດວງຊາຕາກໍ່ຕົກຕ່ຳ, ຄິດເຖິງແຕ່ວ່າຕົນເອງເຮັດຜິດພາດອັນໃດກັບເຈົ້າວິນຍານ ສິ່ງສັກສິດຈຶ່ງບໍ່ຄຸ້ມຄອງເອົາຊີວິດ.

ມີຄອບຄົວໜຶ່ງຢູ່ໃນສະໄໝກ່ອນ, ພໍ່ແມ່ບອກລູກເຂົ້າປ່າຊອກຫາຂຸດມັນ ເພື່ອລ້ຽງຊີວິດປະຈຳວັນ, ລູກແຕ່ລະຄົນ, ສອນອອກບອກເຮັດ, ພໍ່ແມ່ບອກໄດ້ໃຊ້ຟັງໝົດທຸກຄົນ. ດັ່ງນັ້ນສອງອ້າຍນ້ອງພາກັນເຂົ້າປ່າເລາະຊອກຫາຂຸດເຜືອກຂຸດມັນຢູ່ຕາມປ່າດົງ ຕາມແຕ່ລະໜ່ວຍ ພູ, ໄປໜ່ວຍພູນ້ອຍແລ້ວໄປໜ່ວຍພູໃຫຍ່ໝົດມື້, ເຂົາເຈົ້າໄດ້ມັນແລ້ວກໍ່ພາກັນກັບເມືອບ້ານ. ໃນໄລຍະເສັ້ນທາງກັບເມືອນັ້ນ ຜູ້ເປັນອ້າຍເສືອກໄປຕົກລົງຂຸມຂອງຕໍ່ຂຸມ, ຝູງຕໍ່ຫຸ້ມຕອດ ອ້າຍ ແລະສອງອ້າຍນ້ອງພາກັນປົບແຕກຊະກັນໄປ, ອ້າຍແລ່ນໄປຫານ້ອງແຕ່ບໍ່ພົບນ້ອງ, ນ້ອງແລ່ນໄປເມື່ອຍແລ້ວກໍ່ນັ່ງຢູ່ເທິງຂອນໄມ້ໂດກກໍ່ຖືກຂີ້ເຂັບຂົບຕົນ, ແລ່ນປົບໜີໄປເພື່ອຊອກຫາທາງເອົາຕົວລອດ, ແລ້ວ ສອງອ້າຍນ້ອງພໍດີພົບກັນຢູ່ຫ້ວຍແຫ່ງໜຶ່ງ, ອ້າຍຮ້ອງຄາງໂອຍໆຢູ່ ຜູ້ເປັນນ້ອງກໍ່ຮ້ອງຄາງພໍນ້ອງວ່າເຈັບໆ. ສອງອ້າຍນ້ອງກໍ່ເຈັບ ພໍໃຜພໍລາວ ແລະ ພ້ອມທັງພາກັນເດີນທາງກັບເມືອບ້ານ ເພື່ອເອົາຕົວລອດ.

ໃນເມື່ອເມືອຮອດບ້ານແລ້ວ ພໍ່ແມ່ກໍ່ຖາມວ່າ ພວກເຈົ້າເປັນຫຍັງ? ໂຕຫຍັງຕອດຂົບພວກເຈົ້າ, ຜູ້ເປັນອ້າຍເວົ້າວ່າ ຕໍ່ຂຸມຕອດ, ຜູ້ເປັນນ້ອງເວົ້າວ່າ ຖືກຂີ້ເຂັບຂົບ. ຫຼັງຈາກນັ້ນກໍ່ເອົາອ້າຍນອນບ່ອນໜຶ່ງ ແລະ ນ້ອງກໍ່ນອນບ່ອນໜຶ່ງ, ທັງສອງຮ້ອງຄາງດ້ວຍຄວາມເຈັບປວດຈາກພິດຕໍ່ ແລະຂີ້ເຂັບ. ແລ້ວອ້າຍນອນມິດຢູ່ດົນໆຈຶ່ງຮ້ອງຄາງເຈັບເທື່ອໜຶ່ງ, ພໍ່ແມ່ກໍ່ບໍ່ຄອຍເບິ່ງແຍງປານໃດ? ຜູ້ເປັນພໍ່ແມ່ຄິດວ່າ ອ້າຍບໍ່ມີອາການເຈັບປວດໜັກພໍເທົ່າໃດ? ແມ່ໄດ້ເອົາໃຈໃສເບິ່ງແຍງຜູ້ເປັນນ້ອງ ເພາະວ່າຜູ້ເປັນນ້ອງນອນຮ້ອງຄາງໂວຍວາຍຫຼາຍ, ດັ່ງນັ້ນ ພໍ່ແມ່ຈຶ່ງໄດ້ເອົາໃຈໃສ່ປິ່ນປົວໃສ່ຢຸກຢາທານັງ, ທັງພໍ່ແມ່ ນັ່ງເບິ່ງຕະຫຼອດຄືນເປັນຫ່ວງຜູ້ເປັນນ້ອງຫຼາຍ, ຄິດວ່າຢ້ານຜູ້ເປັນນ້ອງຕາຍ. ພໍ່ແມ່ເວົ້າວ່າຜູ້ເປັນອ້າຍບໍ່ເຈັບໜັກຈຶ່ງບໍ່ຮ້ອງຄາງຫາພໍ່ແມ່, ແຕ່ວ່າໃນຕົວຈິງຜູ້

ເປັນອ້າຍເຈັບປວດໜັກຈົນຮ້ອງຄາງບໍ່ໄດ້**ຈາກພິດຕໍ່ຂຸມ** ແຕ່ພັດຕອດ ຫຼາຍແນ່, ດັ່ງນັ້ນ **ຈຶ່ງບໍ່ສາ** ມາດຮ້ອງຄາງ ແລະ ທົນຕໍ່ອາການເຈັບປວດໄດ້ ເພາະວ່າຕົນໂຕກໍ່ນູມເນົ່າໄປໝົດ, ໃນຄືນຕໍ່ມາ ຜູ້ເປັນອ້າຍໄດ້ເສຍຊີວິດໄປ ຫຼັງຈາກອ້າຍຕາຍໄປແລ້ວ ຜູ້ເປັນພໍ່ແມ່ຈຶ່ງຮູ້ເມື່ອວ່າ ຜູ້ເຈັບໜັກ ແມ່ນອ້າຍ ມີທາດພິດກະທົບຫຼາຍ, ແຕ່ປະປ່ອຍໄປຢ່າງບໍ່ໄດ້ເບິ່ງແຍງເຕັມເມັດເຕັມໜ່ວຍ, ຈຶ່ງ ເຮັດໃຫ້ຊີວິດຂອງພໍ່ແມ່ກິນແໜງຕໍ່ລູກ ທີ່ບໍ່ໄດ້ເອົາໃຈໃສ່ປິ່ນປົວ. ພໍ່ແມ່ຖືເບົາຕໍ່ອາການເຈັບຂອງ ລູກ ຈຶ່ງເຮັດໃຫ້ລູກຕາຍຈາກໄປຢ່າງໜ້າເສຍໃຈຫຼາຍ.

# 4.3 ການໄປເລາະຍິງສັດ
# (ຊູພະເປັນຍ)

ເຂົາເຈົ້າເລົ່າເລື່ອງລາວ, ເລື່ອງສອງອ້າຍນ້ອງອອກເດີນທາງ, ເຂົາເຈົ້າຊັກຊວນກັນເຂົ້າປ່າ ດົງໃຫຍ່ ເພື່ອຊອກຫາຍິງສັດຢູ່ພູທີ່ສູງ, ເຂົາເຈົ້າເອົາເຄື່ອງຂອງນຸ່ງຖືໄປນຳ, ເອົາໜ້າ, ລູກໜ້າ ແຕ່ສິບລູກຮອດຫ້າສິບລູກ, ລູກໜ້າແຕ່ລະລູກລ້ວນແລ້ວແຕ່ໃສ່ຢາພິດໜ້ອງທັງໝົດ, ເອົາເຂົ້າ ສານ, ເກືອ, ທັງອ້າຍ ແລະ ນ້ອງເປັກະຕ່າສາມຖົງ ທີ່ເອົາໃສ່ເຄື່ອງຂອງນັ້ນຈຶ່ງໝົດ, ການໄປຫາ ຍິງສັດປ່າຕ້ອງເສຍເວລາສອງສາມຄືນ ຈຶ່ງກັບບ້ານໄດ້.

ສອງອ້າຍນ້ອງກໍ່ຊອກຫາຍິງສັດນ້ອຍໃຫຍ່ໄປ ຖ້າພົບພໍ້ສັດປະເພດໃດກໍ່ຕ້ອງຍິງໃຫ້ໄດ້ບໍ່ ໃຫ້ພາດຈັກໂຕ, ເຂົາເຈົ້າລົມກັນວ່າ ຖ້າເຫັນກະຮອກຕ້ອງຍິງເອົາ, ເຫັນສັດສີ່ຕີນຕ້ອງຍິງໃສ່ຕາ ຂອງມັນຈຶ່ງຕາຍ, ນ້ອງຖາມອ້າຍວ່າ ຖ້າພວກເຮົາເຫັນສັດໃຫຍ່ເດ່ ຈະຍິງມັນບໍ? ເຊັ່ນຊ້າງ, ເສືອ, ງົວປ່າ ແລະ ຄວາຍປ່າເດ່ ພວກເຮົາຈະເຮັດແນວໃດ? ຖ້າວ່າພວກເຮົາພົບເຫັນສັດໃຫຍ່ ເຫຼົ່ານັ້ນ ພວກເຮົາບໍ່ຕ້ອງຍິງມັນ ຖ້າວ່າເຮົາຍິງມັນຖືກແຕ່ວ່າມັນບໍ່ຕາຍ, ພວກເຮົາເສຍລູກ ໜ້າໄປລ້າໆ. ອ້າຍເພິ່ນວ່າ ການໄປຊອກຫາຍິງສັດເທິງຕົ້ນໄມ້ເຊັ່ນ: ລິງ, ຂ່າງ, ທະນີ, ກະຮອກ ພຸກ, ເສືອແມວ ແລະຕະຫຼາງຈຳພວກສັດດັ່ງກ່າວນັ້ນ ຖ້າເຮົາຍິງຖືກແລ້ວພິດໜ້ອງຈະສັງຫານຊີ ວິດຕາຍບາດດຽວ ໂລດ.

ເຂົາເຈົ້າຊອກຫາຍິງໝົດມື້ແຕ່ເຊົ້າຮອດແລງກໍ່ເລີຍຍິງໄດ້ລິງໂຕໜຶ່ງເທົ່ານັ້ນ, ໃນເມື່ອຕາ ເວັນໃກ້ຈະຕົກລົງສູ່ຂອບຟ້າແລ້ວ. ອ້າຍກໍ່ບອກນ້ອງຊາຍວ່າ ນ້ອງເມືອກ່ອນສາ ອ້າຍລໍຖ້າຍິງລິງ ອີກກ່ອນ ໃຫ້ນ້ອງກະກຽມແຕ່ງເອົາເຄື່ອງຂອງຄືນຖ້ວນ ແລ້ວຈຶ່ງເມືອລໍຖ້າອ້າຍຢູ່ໃນ (ກູແມັຣ) ຖ້ຳນັ້ນ, ອ້າຍຈະກັບຕາມຫຼັງ. ຜູ້ເປັນນ້ອງກໍ່ປະຕິບັດຕາມຄຳສັ່ງຂອງອ້າຍ ໃຫ້ກັບເມືອຫາຖ້ຳ

ໃນເມື່ອຮອດຖ້ຳແລ້ວຜູ້ເປັນນ້ອງບໍ່ເຂົ້າໃຈຄຳບອກຂອງອ້າຍວ່າແນວໃດ? ອ້າຍບອກ ວ່າ ໃຫ້ກະກຽມເຄື່ອງຂອງໃຫ້ຄົບຖ້ວນ ນ້ອງຊາຍພັດເຂົ້າໃຈວ່າ ອ້າຍບອກໃຫ້ກະກຽມເຄື່ອງຂອງອ້າຍນັ້ນແລ້ວເອົາເຄື່ອງຂອງອ້າຍນັ້ນໃຫ້ລີງນຸ່ງ ນ້ອງຄິດວ່າເອົາເຄື່ອງນຸ່ງຂອງອ້າຍນັ້ນນຸ່ງໃຫ້ລີງ, ແຕ່ງເຄື່ອງຂອງໃຫ້ລີງນຸ່ງໝົດ, ແລ້ວເຮັດໃຫ້ລີງຢືນຂຶ້ນຈົກຈັກໂລດ. ຜູ້ເປັນອ້າຍກັບເມືອຫານ້ອງ ກໍ່ເຫັນນ້ອງເອົາເຄື່ອງນຸ່ງຂອງຕົນໃຫ້ລີງນຸ່ງ, ອ້າຍຄິດວ່ານ້ອງເຮັດຜິດກົດເກນທຳມະຊາດແລ້ວ, ມັນຈະໄດ້ອັນຕະລາຍແລ້ວ, ອ້າຍເວົ້າໃຫ້ນ້ອງວ່າ ເປັນຫຍັງເຈົ້າຈຶ່ງເຮັດແບບນີ້? ນ້ອງຈຶ່ງແກ້ເຄື່ອງນຸ່ງອອກຈາກລີງໃຫ້ໝົດເດີ, ອາຍເພິ່ນໄດ ໄປຊອກຫາຟືນດັງກອງໄວ້ຢູ່ປາກຖ້ຳໃຫ້ຫຼາຍ, ນ້ອງຊາຍຖາມອ້າຍວ່າ ເປັນຫຍັງອ້າຍຈຶ່ງເອົາດົ້ນຟືນມາຫຼາຍແທ້, ຜູ້ເປັນອ້າຍບໍ່ບອກໃຫ້ນ້ອງຮູ້ຈັກເທື່ອ, ອ້າຍກະກຽມໜ້າ, ງ້າວ ປະໄວ້ປາກຖ້ຳແລ້ວ, ຄ່ຳມາຜູ້ເປັນນ້ອງມີແຕ່ຢາກນອນຕະຫຼອດ, ອ້າຍບອກນ້ອງຢ່ານອນເດີນ້ອງ, ແຕ່ວ່ານ້ອງພັດນອນແປ ນອນແປດ, ແລ້ວປຸກສັ່ນໂຕນ້ອງເຮັດແນວໃດກໍ່ບໍ່ຕື່ນ, ເດິກເຂົ້າມາແລ້ວ, ຜູ້ເປັນອ້າຍກໍ່ເຫັນເສືອມານັ່ງເຈີນເທີນຢູ່ຕໍ່ໜ້າປາກຖ້ຳ, ແລ້ວເສືອຍົກມືຈະຈົກເອົານ້ອງຊາຍຂອງເພິ່ນ, ອ້າຍເອົາງ້າວຈະຕັດມືເສືອ, ແຕ່ເສືອເຕັ້ນໜີໄປ, ຈັກໜ້ອຍກໍ່ເຫັນເສືອມານັ່ງຢູ່ປາກຖ້ຳອີກ. ຜູ້ເປັນອ້າຍເກີດອາການເຫງົານອນຄືກັນແລ້ວ, ອ້າຍເຂົ້າໃຈວ່າຕົນເອງເຫງົານອນຍ້ອນຖືກມົນຄາຖາຂອງເສືອ ມາກ່ອມຈິດໃຈຂອງຕົນເອງ, ເພິ່ນດັງໄຟອັດປາກຖ້ຳ, ໄຟລຸກຮຸ່ງແຈ້ງດີແລ້ວອູ້ມເອົານ້ອງໄປໄວ້ໃນຖ້ຳຢ່າງຮຽບຮ້ອຍ, ອ້າຍນອນຫຼັບໄປ, ໃນເມື່ອອ້າຍນອນຫຼັບແລ້ວ, ເສືອໄປຄວັດດິນ, ກັດຕົ້ນໄມ້ປ່ອງຂ້າງຖ້ຳແລ້ວຈົກກັດກິນຫົວນ້ອງຊາຍໄປ, ຜູ້ເປັນອ້າຍນອນກອດນ້ອງເບື້ອງຕົນ, ໄກ່ປ່າຂັນແລ້ວເອີກອີເອີ! ເອີກອີເອີ! ສຽງນົກຮ້ອງສັນຍານເຕືອນວ່າ ທ້ອງຟ້າໃກ້ຈະຮຸ່ງແຈ້ງແລ້ວ, ອ້າຍເພິ່ນກໍ່ຊວາດຮູ້ສຶກຕົວເລີຍໄປປຸກເບິ່ງນ້ອງຊາຍບໍ່ລຸກ, ອ້າຍລຸກເບິ່ງນ້ອງກໍ່ເລີຍບໍ່ເຫັນຫົວ, ຫົວຂາດໄປແລ້ວ, ເສືອເອົາໄປກິນຍາມໃດກໍ່ບໍ່ຮູ້ເມື່ອ.

ເຫັນນ້ອງຕາຍແລ້ວ, ລາວເສຍໃຈນຳນ້ອງທີ່ບໍ່ຟັງຄຳເວົ້າຂອງຕົນເອງ, ດັ່ງນັ້ນ ຈຶ່ງເກີດມີເຫດລາງສູ່ຕົນເອງ. ຕາມຈິດໃຈຂອງອ້າຍບອກນ້ອງນັ້ນ ໃຫ້ເມືອຫາຖ້ຳກະກຽມບ່ອນນອນ, ກຽມເກັບດົ້ນຟືນ, ດັງໄຟຖ້າອ້າຍ, ຕັດກະບັ້ງໄວ້, ຖ້າດັງໄຟໃຫ້ລຸກ, ເກັບຜັກແລ້ວໃຫ້ຄົວລີງກໍ່ຍິ່ງດີ. ແຕ່ຕົວຈິງແລ້ວນ້ອງບໍ່ເຮັດ, ເຮັດຜິດກົດເກນຂອງທຳມະຊາດ, ຕາມຮີດຄອງຂອງຄົນກະຕູ ບໍ່ວ່າສະໄໝໃດກໍ່ຕາມ ຖ້າເວົ້າເລື່ອງການນຸ່ງຖືມີແຕ່ມະນຸດເທົ່ານັ້ນ, ສ່ວນສັດສາວາສິ່ງແມ່ນບໍ່ມີຮີດຄອງແບບນີ້, ຖ້າວ່າຄົນຫາກເອົາເຄື່ອງຂອງຄົນໃຫ້ສັດນຸ່ງແມ່ນຖືກຟ້າຜ່າຫົວ ຫຼືເສືອຂົບກິນຫົວຢ່າງແນ່ນອນ.

ເຖິງວ່ານ້ອງຂອງຕົນເອງເສຍຊີວິດໄປ ຍ້ອນສິມືຂອງເສືອໃຈຮ້າຍນັ້ນກໍ່ຕາມ, ເພາະວ່ານ້ອງຂອງຕົນເຮັດຜິດປະເພນີຂອງເສືອ, ເສືອຈຶ່ງຂົບກິນຫົວນ້ອງຂອງຕົນຢ່າງໜ້າເສຍດາຍ.

ລາວຄຽດແຄ້ນເສືອຫຼາຍ, ລາວຕັດເອົາໄມ້ມາເຮັດຄອກເສືອ ແລະ ເຮັດຄອກຂ້າຢ່າງໄວທີ່ສຸດ, ຫຼັງຈາກເຮັດແລ້ວລາວເອົາຊາກສົບນ້ອງມາເຮັດເຫຍື່ອອ່ອຍເສືອ, ຕາເວັນໃກ້ຈະຕົກດິນແລ້ວ, ເສືອກໍ່ຍ່າງມາວົນວຽນຢູ່ຖໍ້າ, ດົມກິ່ນເໝັນບໍ່ມີ, ເສືອວົນວຽນຢູ່ປາກຖໍ້າແລ້ວ, ເສືອຈຶ່ງໄດ້ຖືກກິ່ນຫອມຂອງມະນຸດ, ເສືອໝົ້ນເຂົ້າຄອກທີ່ອ້າຍຫ້າງໄວ້ຢ່າງຮຽບຮ້ອຍ, ເຂົ້າໄປຮອດຄືນແລ້ວເສືອກໍ່ດຶງຄືນຕາຍອອກມາ ກໍ່ພໍດີຝາອັດລັ່ນລົງອັດເສືອໄວ້ຢ່າງແໜ້ນ, ຜູ້ເປັນອ້າຍເຫັນເສືອຖືກຄອກແລ້ວກໍ່ຮີບຟ້າວກັບບ້ານ ເພື່ອບອກຊາວບ້ານໄປຂ້າເສືອ ເພື່ອແກ້ແຄ້ນແທນນ້ອງ, ພວກຊາວບ້ານພາກັນລັ່ງໄຫຼໄປຜູ້ຖືຫອກກໍ່ມີ, ຜູ້ຖືດາບງ້າວກໍ່ມີ, ເມື່ອໄປເຖິງຄອກແລ້ວເສືອເຫັນຄົນຫຼາຍມັນນອນແນບທົ່ວລົງເພາະຢ້ານຄົນ, ບາງຄົນໄຕ້ໄຟຈູດໜ້າເສືອ, ບາງຄົນເອົາຫອກແທງ, ແຕ່ມີບາງຄົນເອົາດາບງ້າວແທງເສືອຈົນຕາຍ, ແລ້ວເຂົາເຈົ້າເອົານ້ອງຊາຍໄປຝັງຢູ່ປ່າແຫ່ງນັ້ນ ສ່ວນເສືອໂຕນັ້ນກໍ່ເຜົາຖິ້ມຕາມຄວາມຄຽດແຄ້ນຂອງຄົນ.

## 4.4 ຕາຍຍ້ອນຫຼິ້ນໜ້າ
## (ເປືອຮພະເມັນຍພາເຈັດ)

ເລື່ອງທ້າວກໍ່າພ້າຢາກເຮັດໜ້າຍິງ, ທ້າວກໍ່າພ້າກໍ່ຕິດຕາມເບິ່ງຜູ້ອື່ນເຮັດໜ້າ ເຂົາເຈົ້າໄປຕັດເອົາໄມ້ຊະນິດໃດ? ທ້າວກໍ່າພ້າກໍ່ຕິດຕາມເບິ່ງ ເຂົາເຈົ້າເຮັດເຊືອກໜ້ານັ້ນ ເອົາເຊືອກຫຍັງມາເຮັດເຊືອກໜ້າ, ທ້າວກໍ່າພ້າຢາກຮູ້ຢາກເຫັນຢາກຮຽນເຮັດໃຫ້ໄດ້, ເພາະວ່າທ້າວກໍ່າພ້າຄິດວ່າໜ້າແມ່ນອາວຸດຊະນິດໜຶ່ງ ເພື່ອປ້ອງກັນຕົວໄດ້ດີເປັນອາວຸດສາມາດຍິງໄດ້ໄກໃນຍຸກນັ້ນເປັນອາວຸດທີ່ທັນສະໄໝຂອງຄົນບູຮານນະການໃນຄາວກ່ອນ.

ຫຼັງຈາກຊອກຮູ້ໄດ້ແລ້ວ, ທ້າວກໍ່າພ້າຈຶ່ງອອກບ້ານໄປເພື່ອຊອກຕັດໄມ້ແກ່ນຊະນິດໜຶ່ງ ທີ່ດີເປັນໄມ້ເນື້ອແຂງສີສັນງາມ, ທ້າວກໍ່າພ້າຖາກແມ່ໜ້າ, ຖາກຂ້າງໜ້າທັງສອງເບື້ອງແມ່ນເຮັດກ່ອນໝູ່, ແລ້ວທ້າວກໍ່າພ້າຕັດຊຸ່ມທົ່ວໜ້າໃຫ້ກົງງາມ, ແລ້ວລາວຈຶ່ງເຮັດຫາງ ຫຼືກົ້ນໜ້າໃຫ້ຖືກແບບຂອງໜ້າ. ຫຼັງຈາກນັ້ນ ທ້າວກໍ່າພ້າຈຶ່ງຖາກຫຼັງໜ້າເຮັດແອນເຂົ້າ, ເຮັດຫາງຫຼັງຂອງໜ້າແລ້ວທ້າວຈຶ່ງເຈາະຮູຄັນໜ້າ, ລາວເຮັດໄມ້ຄັນໜ້າຍາວປະມານເຄິ່ງວາ, ແລ້ວເອົາເຂົ້າໃສ່ແມ່ໜ້າໃຫ້ກົງດີ, ທ້າວກໍ່າພ້າແປງສົ້ນຄັນໜ້າ, ເຮັດບັກທ້ອຍເກາະເຊືອກໜ້າ, ແລ້ວລາວກໍ່ຖາກໜ້າຂອງໜ້າໃຫ້ກົງດີ, ຄວັດຮ່ອງໃສ່ລູກໜ້າ, ຕິດຕັ້ງຈຽງຈັບກົ້ນລູກໜ້າ, ວຽກສຸດທ້າຍແມ່ນການເຈາະຮູຂໍເກາະໄກລູກໜ້າ. ທ້າວກໍ່າພ້າເຮັດໜ້າຮຽບຮ້ອຍແລ້ວ,ຈຶ່ງຝັ້ນສາຍເຊືອກຄັນໜ້າໄດ້ຢ່າງຮຽບຮ້ອຍ ແລ້ວຈຶ່ງເຄັ່ງເຊືອກໄວ້ເປັນຢ່າງດີ.

ໃນມື້ຕໍ່ມາ ທ້າວກໍ່າພ້າຈຶ່ງເອົາສາຍເຊືອກໜ້ານັ້ນໄປເກາະໃສ່ຄັນເບື້ອງໃຕ້ ສ່ວນສົ້ນເບື້ອງເທິງແມ່ນສຸບໃສ່ບໍ່ທັນເກາະກັບບັກເທື່ອ, ທ້າວກໍ່າພ້າດີໃຈຫຼາຍ ທີ່ຕົນເອງສາມາດເຮັດໜ້າຍິງເປັນແລ້ວ, ລາວເອົາໜ້າມາຂຶ້ນເຊືອກບໍ່ໄດ້, ເພາະວ່າໄມ້ຄັນໜ້າແຂງຫຼາຍຈຶ່ງບໍ່ຂຶ້ນໄດ້ເຖິງບັກ, ລາວເລີ່ມຕົ້ນຂຶ້ນເທື່ອທີ່ສອງເອົາຕີນຊ້າຍຢັນຄັນໜ້າ, ຕີນຂວາຢຽບດິນ, ລາວຢັນຄັນເຂົ້າໃຫ້ມັນກົ່ງ ມີເບື້ອງໜຶ່ງຊຸກເຊືອກຂຶ້ນບັກແຕ່ບໍ່ໄດ້ຄັນໜ້າເລີຍລັ່ນທັ່ງຂຶ້ນຖືກຄໍຫອຍກໍ່ຕາຍຄາທີ່. ຫຼັງຈາກທ້າວກໍ່າພ້າຕາຍແລ້ວ, ຜູ້ໃຫຍ່ພາຍໃນບ້ານຖາມກັນວ່າແມ່ນມັນເຮັດແນວໃດ ? ປາຍຄັນໜ້າຈຶ່ງທັ່ງໃສ່ຄໍຫອຍພຸ້ນ, ລາວເຮັດແບບຢ່າງຂອງກໍ່າພ້າຜູ້ຕາຍ, ລາວຂຶ້ນເຊືອກໜ້າເປັນແບບນີ້, ແລ້ວລາວກໍ່ຖືກຄັນໄມ້ໜ້າທັ່ງໃສ່ຄໍຫອຍດິ້ນຕາຍວັບໆ, ແລ້ວມີຄົນແລ່ນມາຖາມວ່າມັນເຮັດຈັ່ງໃດຂຶ້ນເຊືອກໜ້າກໍ່ພາໃຫ້ຕາຍແບບງ່າຍດາຍແທ້, ຄົນທີ່ສາມຈັບເອົາໜ້າມາເຮັດຕົວຢ່າງ ລາວວ່າເຮັດແບບນີ້, ແບບນີ້, ເອົາຕີນຢັນໄມ້ຄັນໜ້າ, ມືຊ້າຍເອົາເຊືອກໜ້າຂຶ້ນມືຂວາຈັບໄມ້ຄັນໜ້າ, ຢັນເຂົ້າໝົດແຮງແລ້ວເວົ້າວ່າລາວເຮັດແບບນີ້ ໄມ້ຄັນໜ້າດີດທັ່ງຂຶ້ນຖືກຄໍຫອຍດິ້ນຕາຍວັບໆ, ຫຼາຍຄົນແລ່ນມາຫຸ້ມເບິ່ງຄົນຕາຍແລ້ວ ໃຜໆກໍ່ໂສເຫຼັກັນເລື່ອງ ລາວເຮັດແນວໃດເອົາເຊືອກໜ້າຂຶ້ນນັ້ນ ມາ ເຮັດໃຫ້ຕາຍໄວວາແທ້ ໄມ້ຄັນໜ້າຂ້າຄົນຈັ່ງແມ່ນຕາຍໄວແທ້ໆ. ມີຜູ້ໜຶ່ງອອກມາສະແດງແບບ ລາວວ່າ ລາວເຮັດກັບໄມ້ຄັນໜ້າເປັນແບບນີ້ເດີ, ລາວຈັບໜ້າແລ້ວເອົາຕີນຢັນໄມ້ຄັນໜ້າແລ້ວ ລາວເອົາຂຶ້ນເປັນແນວນີ້, ລາວຢັນໄມ້ຄັນໜ້າຍິດໆແລ້ວເວົ້າວ່າແບບນີ້ໆ, ໃນສຸດທ້າຍລາວເອງກໍ່ເຮັດໄມ້ຄັນໜ້າດີດທັ່ງຖືກຄໍຫອຍລົ້ມລົງຕາຍ ປັບກັບບ່ອນເລີຍ, ຫຼັງຈາກການຕາຍຂອງທ້າວກໍ່າພ້ານັ້ນເຮັດໃຫ້ຄົນຢູ່ບ້ານພາກັນວຸ້ນວາຍຫຼາຍ ມີເຫດລາງບໍ່ດີເຂົ້າມາບ້ານ ແລ້ວຈຶ່ງມີຄົນຕາຍເປັນແນວນີ້.

ຫຼັງເຫດການເກີດຂຶ້ນທີ່ເປັນຕາໜ້າຢ້ານກົວແລ້ວ ມີພໍ່ເຖົ້າຜູ້ໜຶ່ງຍ່າງມາບ່ອນທ້າວກໍ່າພ້າຕາຍນັ້ນ ພໍ່ເຖົ້າເວົ້ານໍາລູກໆຫຼານໆວ່າ ເລື່ອງຂຶ້ນເຊືອກໜ້າເອົາເຂົ້າບັກໄມ້ຄັນໜ້ານັ້ນ ແມ່ນມັນມີວິທີຂອງມັນໃດລູກຫຼານເອີຍ! ການຂຶ້ນເຊືອກໜ້າຕ້ອງເຮັດແບບນີ້: ປາຍໄມ້ຄັນໜ້າເບື້ອງໜຶ່ງຕ້ອງຕັ້ງໃສ່ດິນ ແລ້ວເອົາຕີນຊ້າຍຢຽບໄວ້ ໂຕແມ່ໜ້ານັ້ນປະໄວ້ທາງຂ້າງຊ້າຍຄືກັນ ສ່ວນຫົວຂອງໜ້າກັບໄມ້ຄັນໜ້າຫງ່ຽງໄປເບື້ອງຂວາ ໃນເວລາເອົາເຊືອກຂຶ້ນໜ້າ ເຮົາຕ້ອງຫງ່ຽງຫົວໄປເບື້ອງຊ້າຍຫຼາຍໝາຍຄວາມວ່າ ຄົນເຮົາຕ້ອງຫຼີກປາຍແຫຼມຂອງໄມ້ຄັນໜ້ານັ້ນເອງ ມືຊ້າຍຊຸກເຊືອກຂຶ້ນຫາບັກໄມ້ ມືຂວາຈັບປາຍໄມ້ຄັນໜ້າແລ້ວຕີນເບື້ອງຂວາຢຽບຢັນໄມ້ຄັນໜ້າໃຫ້ມັນກົ່ງເຂົ້າໄປ ແລ້ວຄົນເຮົາຈຶ່ງສາມາດຊຸກເຊືອກຂຶ້ນເອົາເຂົ້າບັກປາຍໄມ້ຄັນໜ້ານັ້ນໄດ້ຢ່າງສະບາຍ ພໍ່ເຖົ້າເວົ້າວ່າຢາກເຮັດຫຍັງຕ້ອງຄິດຫາວິທີຫຼີກລ່ຽງຄວາມຕາຍ ຄວາມອັນຕະລາຍ ການປາກເວົ້າກໍ່ເໝືອນກັນຕ້ອງຫຼີກລ່ຽງຄວາມຜິດພາດກັບຜູ້ອື່ນໃຫ້ໄດ້ ຄົນເຮົາທີ່ມີຄວາມສະຫຼາດແລ້ວນັ້ນ ຕົນເອງກໍ່ສາມາດຫຼີກເວັ້ນຈາກຄວາມອັນຕະລາຍໄດ້ທຸກຢ່າງ.

# 4.5 ເອົາໃຈເມຍ

## (ຂຽນລອນອິດຽລ)

ສະໄໝກ່ອນ ມີເລື່ອງສອງອ້າຍນ້ອງ ພໍ່ແມ່ຕາຍປະຕັ້ງແຕ່ຍັງນ້ອຍໆຢູ່, ເຂົາເຈົ້າທັງສອງຄົນອາໄສກິນນຳຊາວບ້ານຊາວເມືອງ ຊ່ອຍເຫຼືອເກື້ອກູນເປັນສ່ວນໜຶ່ງຂອງຊີວິດປະຈຳວັນ. ໃນຕໍ່ມາ ຜູ້ເປັນອ້າຍສາມາດພານ້ອງໄປຖາງປ່າເຮັດໄຮ່ ເພື່ອລ້ຽງຊີບໃຫ້ຢູ່ລອດ ເຂົາເຈົ້າຕ້ອງການມີເຂົ້າກິນມີເຮືອນຢູ່ກໍ່ຖືວ່າໄດ້ແລ້ວ ມີເຂົ້າກໍ່ຄືມີຊີວິດອ້າຍໄດ້ເວົ້າກັບນ້ອງວ່າ ພວກເຮົາໄດ້ເຂົ້າມາກິນກໍ່ຖືວ່າພວກເຮົາໄດ້ມີອະນາຄົດ ໄດ້ເສັ້ນທາງໃໝ່ຂອງຊີວິດແລ້ວ.

ເພື່ອສ້າງສາຊີວິດຂອງຕົນເອງໃຫ້ມີກິນມີຢູ່ໃນຫຼາຍປີຜ່ານມາ ຜູ້ເປັນອ້າຍໄດ້ເຕີບໃຫຍ່ເປັນບ່າວຂຶ້ນຍາມໃດກໍ່ບໍ່ຮູ້ເມື່ອ ທັງສອງຄົນຢູ່ຮ່ວມສຸກທຸກນຳກັນດ້ວຍຄວາມຮັກແພງ ສາມັກຄີກັນ ຊ່ອຍເຫຼືອເຊິ່ງກັນແລະກັນ ສອງອ້າຍນ້ອງເປັນຄົນດຸໝັ່ນຂະຫຍັນ ເຮັດວຽກໄຮ່ນາສວນຢ່າງບໍ່ຮູ້ອິດເມື່ອຍ ເອົາຊີວິດເຂົ້າສູ້ທຸກຢ່າງເພື່ອຜ່ານຜ່າອຸປະສັກ ທີ່ກີດຂວາງໃຫ້ໄດ້ຈະແມ່ນເຄື່ອງນຸ່ງຖື,ການແຕ່ງຢູ່ຄົວກິນ, ການຕັກນ້ຳຕຳເຂົ້າແມ່ນເຮັດດ້ວຍຕົນເອງທັງໝົດບໍ່ເລືອກວຽກເຮັດງານທຳ ເຖິງຈະໜັກ ຫຼືເບົາກໍ່ຕ້ອງເຮັດ ຈາກຄວາມພາກພຽນດຸໝັ່ນເປັນຄືແນວນັ້ນ ເຈົ້າສັກສິດຈຶ່ງຊ່ອຍກອບກູ້ເອົາຊີວິດຢູ່ນຳກັນໄດ້ເປັນບໍ່ເກີດແຫ່ງມະຫາອຳນາດຂອງກຳລັງໃຈນັ້ນເອງ. ທັງສອງອ້າຍນ້ອງນັ້ນ ເຂົາເຈົ້າໃຫຍ່ຂຶ້ນມາເຕັມສະກັນແລ້ວ, ຜູ້ຄົນທີ່ມີລູກສາວເຂົາເຈົ້າຄ່ອຍໆຫຍັບເຂົ້າມາໃກ້ຊິດຕິດແທດກັບຜູ້ເປັນອ້າຍ, ຢາກໃຫ້ຜູ້ເປັນອ້າຍເອົາລູກສາວຂອງເຂົາຄືຊິດີຫຼາຍ, ເພາະວ່າລາວເປັນຄົນທີ່ແຂງແຮງດີທັງຮູ້ຈັກຄວາມ, ຮ່າງຄີງໃຫຍ່ ເປັນຄົນພາກພຽນດຸໝັ່ນເຮັດໄຮ່ສວນຫຼາຍ, ເປັນຄົນທີ່ເອົາເຫື່ອແຮງແລກກັບສິ່ງຕ່າງໆ ເພື່ອໃຫ້ມີຊີວິດ ຢູ່ລອດ ໃນບໍ່ນານປານໃດນັ້ນ ຜູ້ເປັນອ້າຍໄດ້ສ້າງຄອບຄົວກັບນາງສາວຄົນໜຶ່ງທີ່ມີຖານະຊື່ສຽງໂດ່ງດັງໃນສັງຄົມ. ຫຼັງຈາກໄດ້ເມຍແລ້ວ ກໍ່ມີລູກນຳກັນໜຶ່ງຄົນ, ຜູ້ເປັນນ້ອງຊາຍກໍ່ຢູ່ນຳອ້າຍດ້ວຍຄວາມຮັກແພງກັນດີ. ແຕ່ວ່າເມຍຂອງຜູ້ເປັນອ້າຍນັ້ນ ໃນເມື່ອມີລູກເຕົ້າແລ້ວກໍ່ຫຍຸ້ງຍາກນຳວຽກຫຼາຍຢ່າງຫຼາຍອັນອີກ.

ໃນສອງສາມປີຜ່ານມາ ຜູ້ເປັນນ້ອງໄດ້ມີຄວາມຮັກມັກກັບນາງສາວຄົນໜຶ່ງ ຢູ່ໃນບ້ານດຽວກັນນັ້ນ, ໃນຕໍ່ມານ້ອງຊາຍກໍ່ໄດ້ແຕ່ງງານໄປ. ນັບຕັ້ງແຕ່ນ້ອງຊາຍມີເມຍແລ້ວ ການຊອກຫາປູປາ, ນົກໜູ ຫຼື ສັດປ່າອື່ນໆນ້ອງຊາຍຕ້ອງເອົາໃຫ້ເມຍຂອງຕົນເອງ, ບໍ່ໄດ້ໃຫ້ເອື້ອຍໃພ້ອີກ, ຍາມລາວບໍ່ທັນສ້າງຄອບຄົວນັ້ນ ການຊອກຫາປູປາ, ນົກໜູໄດ້ແລ້ວກໍ່ລ້ວນແຕ່ມາມອບໃຫ້ເອື້ອຍໃພ້ທັງໝົດ. ຈາກສະພາບເປັນຄືແນວນັ້ນ ເອື້ອຍໃພ້ເລີ່ມຄຽດຊັງນ້ອງຊາຍຂອງຜົວຕະ

ຫຼອດມາ, ນາງມັກເວົ້ານຳຜົວວ່າ ພວກເຮົາຕ້ອງແຍກກັນຢູ່ຄົນລະບ່ອນ, ຕ້ອງໃຫ້ນ້ອງເຈົ້າລົງເຮືອນໄປ, ລາວມີເມຍແລ້ວໃຫ້ໄປຕັ້ງບ້ານເຮືອນຢູ່ບ່ອນໃໝ່ສາ, ຢູ່ນຳກັນມັນຫຍຸ້ງຍາກຫຼາຍໄດ້ແບ່ງເຂົ້າແບ່ງຊີ້ນປາອາຫານໃຫ້ກັນ, ພວກເຮົາກໍ່ມີລູກເຕົ້າມັນສັບສົນຫຍຸ້ງຍາກຫຼາຍ, ເຈົ້າບອກໃຫ້ນ້ອງຂອງເຈົ້າອອກເຮືອນສາ, ພວກເຮົາຈຶ່ງຈະສະບາຍອົກສະບາຍໃຈ, ພວກເຮົາຢູ່ນຳກັນຈຶ່ງມີຄວາມສຸກ, ມີຄວາມເປັນອິດສະລະເສລີໃນຄອບຄົວອີກດ້ວຍ.

ຜູ້ເປັນອ້າຍໄດ້ຍິນ ແລະ ໄດ້ຟັງຄຳເວົ້າຂອງເມຍ ເວົ້າຢູ່ຕະຫຼອດບໍ່ວ່າເຊົ້າ ຫຼືແລງກໍ່ເວົ້າແຕ່ເລື່ອງນ້ອງຊາຍຂອງຕົນເອງ ຍາມໃດກໍ່ເວົ້າເລື່ອງແຍກກັນອອກແຕ່ງກິນຄົນລະບ່ອນ, ແຍກກັນເລື່ອງພາເຂົ້າກ້າວໄປເຖິງແຍກເຮືອນຢູ່, ແລ້ວກ່າວໄປເຖິງເວົ້າເລື່ອງແບ່ງປັນໄຮ່ສວນອີກດ້ວຍ. ຈາກນັ້ນສະພາບຄອບຄົວຂອງອ້າຍນ້ອງກໍ່ບໍ່ສະຫງົບ ຍ້ອນຟັງຄວາມເມຍຫຼາຍໂພດ, ຜູ້ເປັນອ້າຍໄດ້ບອກໃຫ້ນ້ອງຊາຍພາເມຍອອກເຮືອນໄປຢູ່ເຮືອນໃໝ່ມັນສານ້ອງເອີຍ. ແຕ່ຜູ້ເປັນນ້ອງຂໍອ້ອນວອນນຳອ້າຍວ່າ ຖ້ານ້ອງພາເມຍອອກເຮືອນໄປນັ້ນ ນ້ອງເອງກໍ່ບໍ່ທັນມີພື້ນຖານເທື່ອຈະຢູ່ລອດບໍ່? ແຕ່ວ່າຜູ້ເປັນອ້າຍບໍ່ສົນໃຈນຳອີກ ເພາະວ່າຟັງຄວາມເມຍໄປນຳເມຍຢ່າງໜັກ, ຈຶ່ງບອກນ້ອງຊາຍອອກເຮືອນສາ, ໃຫ້ໄປຕັ້ງຖິ່ນຖານບ່ອນໃໝ່, ນ້ອງຖາມອ້າຍວ່າ ເຈົ້າບໍ່ປັນຂອງທີ່ພວກເຮົາສ້າງໄວ້ນຳກັນບໍ່? ອ້າຍຕອບນ້ອງວ່າ ເມຍຂອງອ້າຍບໍ່ໃຫ້ປັນຈັກຢ່າງເລີຍ.

ໃນປີຕໍ່ມາ ນ້ອງຊາຍກໍ່ອອກຈາກບ້ານໄປດ້ວຍຄວາມທຸກຍາກ, ສອງຜົວເມຍນັ້ນກືນນ້ຳຕາຕົກໃນ, ເຂົາເຈົ້າໄປຫາບ່ອນດິນທີ່ມີບ່ອນທຳການຜະລິດໄດ້ ມີຫ້ວຍນ້ຳພໍກິນພໍໃຊ້ໃນຊີວິດປະຈຳວັນກໍ່ໄດ້ແລ້ວ. ເຂົາເຈົ້າເລືອກບ່ອນຢູ່ໄດ້ແລ້ວຈຶ່ງພາກັນຕັດໄມ້ມາປຸກຕູບຢູ່ ແລະ ພາກັນຖາງປ່າເຮັດໄຮ່ໄດ້ໜ້ອຍໜຶ່ງ, ພາກັນຢູ່ທີ່ນັ້ນບຸກເບີກດິນດອນແຫ່ງນັ້ນໄດ້ຫຼາຍປີ ສອງຜົວເມຍພ້ອມພາ ກັນເຮັດສວນປູກໝາກເຜັດ, ເຮັດສວນໝາກນັດ, ເຮັດສວນໝາກຫຸ່ງ, ອ້ອຍ, ກ້ວຍ ແລະ ອື່ນໆຫຼາຍຢ່າງ.

ເຂົາເຈົ້າເຮັດໄຮ່ສວນແຕ່ລະບ່ອນນັ້ນລຳບາກຫຼາຍຍ້ອນວ່າ ສັດສາວາສິ່ງມາບຸກລຸກກິນ ແລະ ທຳລາຍພືນລະປູກໃນທຸກໆປີ ແຕ່ລະປີເກັບກ່ຽວໄດ້ບາງເລັກໜ້ອຍເທົ່ານັ້ນ. ໃນເມື່ອມີສະພາບສັດທຳລາຍຮົ້ວສວນເປັນຄືແນວນັ້ນ, ເມຍບອກຜົວວ່າເຮັດເຄື່ອງດັກສັດ, ແລ້ວຫ້າງໄວ້ທຸກຕົ້ນພືນລະປູກທີ່ສັດມັກມາກິນ, ຜູ້ເປັນຜົວຟັງຄວາມເມຍ, ຈຶ່ງເຮັດກັບໜີບຄໍ, ເຮັດແຮ້ວຮັດຄໍ, ເຮັດແຮ້ວຮັດຕີນ, ແລ້ວໄປຫ້າງໄວ້ແຕ່ລະຈຸດແຕ່ລະຕົ້ນໝາກໄມ້ຢ່າງດີ ແລ້ວຕິດຕາມເບິ່ງສັດໂຕໃດຈະມາຖືກເຄື່ອງດັກສັດນັ້ນ, ໃນມື້ໃໝ່ຕໍ່ມາ ລາວກໍ່ລຸກແຕ່ເຊົ້າໆໄປສວນເພື່ອຕິດຕາມສັດຫຍັງມາກິນພືນລະປູກຂອງຕົນ, ໃນເມື່ອໄປເຖິງສວນ ກໍ່ພໍດີຕາເວັນຂຶ້ນພົ້ນຂອບຟ້າ, ແສງແດດກະຈາຍໄປທົ່ວທຸກທີ່ແລ້ວ, ລາວນັ່ງລີ້ຢູ່ແຄມສວນກໍ່ເຫັນຝູງສັດບິນມາຫຸ້ມຕອດກິນພືນລະປູກ, ປຶບປັບກໍ່ພໍດີນົກເຂົາຖືກແຮ້ວຮັດຕີນດິ້ນໂຍງເຍງລາວກໍ່ປິດເອົາ, ແລ້ວໜ້ອຍໜຶ່ງແຫຼວ ແລະ ທຶງ

ກໍ່ບິນມາຕອດກິນໝາກໄມ້ຖືກແຮ້ວອີກສາຍແຮ້ວຮັດຄໍຢືນເຄງເຢງຢູ່, ລາວລຸກຂຶ້ນແລ່ນໄປຈັບຕົນແຫຼວ ແລະ ທິງແລ້ວເອົາເຊືອກມັດຕີນມັນໄວ້ ລາວແລ່ນໄປຈັບເອົານົກເຂົາໄດ້ແລ້ວ ລາວມາມັດໄວ້ຮຽບຮ້ອຍຄືກັນ, ລາວເວົ້າວ່າເຈົ້າຕ້ອງເປັນອາຫານຂອງຂ້ອຍ, ການມາກິນຜົນລະປູກຂອງ ຂ້ອຍມັນກໍ່ດີແລ້ວເພາະຂ້ອຍຈຶ່ງຊິມີຊີ້ນສົດ ເປັນອາຫານໃຫ້ເມຍຂ້ອຍກິນ. ນົກແຫຼວ ແລະທິງກັບນົກເຂົາໄດ້ຍິນຄຳເວົ້າວ່າ ຂ້າກິນກໍ່ເລີຍອ້ອນວອນວ່າ ຂໍຊີວິດອິນຊີໄວ້, ນົກເຂົາເວົ້າຕື່ມວ່າຂ້ອຍຈະຊ່ອຍຊອກຫາແນວເຂົ້າວິເສດໃຫ້ ເຮັດໄຮ່ສວນໜ້ອຍ ແຕ່ເກັບກ່ຽວເຂົ້າໄດ້ຫຼາຍ, ນົກແຫຼວ ແລະ ທິງວ່າຂ້ອຍຈະບອກໃຫ້ເຈົ້າຮູ້ຈັກບໍ່ຄຳ ໃຫ້ເຈົ້າໄປຂຸດເອົາໄປຂາຍເດີ ເພື່ອລ້ຽງຊີວິດ. ລາວເວົ້ານຳນົກເຂົາກ່ອນ, ນົກເຂົາກໍ່ເອີ້ນເພື່ອນຝູງເອົາເມັດເຂົ້າວິເສດມາແລກໄຖ່ເອົາຊີວິດຂອງຕົນເອງ, ໃນບໍ່ຊ້ານົກເຂົາແຕ່ລະໂຕບິນມາຫາທັນທີແລ້ວຄາຍເຂົ້າວິເສດອອກຈາກໜຽງໃຫ້ຈົນພໍຊັກໄຮ່ນ້ອຍ. ຫຼັງຈາກນັ້ນແຫຼວທິງກໍ່ເອີ້ນເອົາຝູງຂອງຕົນເອງມາ ໃນບໍ່ຊ້າຝູງແຫຼວ ແລະທິງບິນມາຫາຢູ່ບ່ອນນັ້ນແລ້ວຈຶ່ງເອົາລາວໄປເບິ່ງໄປເອົາບໍ່ຄຳໄດ້ແລ້ວ ກໍ່ພາກັນກັບຄືນມາຢູ່ບ່ອນເກົ່າອີກ.

ຫຼັງຈາກນັ້ນ ລາວກໍ່ເວົ້າກັບນົກເຂົາວ່າ ຖ້າເຈົ້າຕົວະຂ້ອຍເທື່ອໜ້າຈັບໄດ້ຕ້ອງຂ້າໂລດ ບໍ່ຕ້ອງຖາມອີກເປັນການເສຍເວລານົກເຂົາຕອບວ່າ ຖ້າຂ້ອຍຕົວະເຈົ້າແທ້ຂ້າໂລດ, ແລ້ວລາວກໍ່ປ່ອຍນົກເຂົາບິນໄປ, ຫຼັງຈາກນັ້ນ ລາວເວົ້າກັບແຫຼວທິງວ່າເຈົ້າຈິງໃຈຊ່ອຍຂ້ອຍແລ້ວ ຂ້ອຍຈະປ່ອຍເຈົ້າໄປ, ແລ້ວລາວແກ້ເຊືອກອອກຈາກຕີນແຫຼວ ແລະ ທິງແລ້ວແຫຼວທິງກໍ່ບິນໄປຢ່າງປອດໄພ. ນັບຕັ້ງແຕ່ໄດ້ແນວເຂົ້າວິເສດນັ້ນມາ ເຂົາເຈົ້າເຮັດໄຮ່ໜ້ອຍ ແຕ່ເກັບກ່ຽວເຂົ້າໄດ້ຫຼາຍພໍຢູ່ພໍກິນເຮັດໃຫ້ຊີວິດດີຂຶ້ນ, ແລ້ວເອົາເມັດຄຳອອກໄປຂາຍ ຊື້ເຄື່ອງຂອງປຸກສ້າງບ້ານເຮືອນໃໝ່ຈົບງາມດີ. ໃນບໍ່ຊ້າຜູ້ເປັນອ້າຍໄດ້ລັກໄປເບິ່ງນ້ອງຂອງຕົນກໍ່ເຫັນວ່າຮັ່ງມີ ມີເລົ້າເຂົ້າຫຼາຍຫຼັງ ມີເຮືອນຢູ່ຈົບງາມ ຈຶ່ງມາບອກເມຍຮູ້ວ່າ ນ້ອງຕົນເອງຮັ່ງມີ, ເອື້ອຍໃພ້ຈຶ່ງຟ້າວໄປຖາມນ້ອງຊາຍຜົວວ່າ ເຮັດແນວໃດພວກເຈົ້າຈຶ່ງຮັ່ງມີແທ້, ນ້ອງຊາຍຜົວບອກຕົ້ນປາຍສາເຫດໃຫ້ເອື້ອຍໃພ້ຟັງໃນເມື່ອຟັງແລ້ວ ເພິ່ນຂໍເອົາແນວເຂົ້າວິເສດເອົາເມືອຊັກເມືອປູກຢູ່ໄຮ່ຂອງເພິ່ນລອງເບິ່ງ, ຄິດວ່າຊິໄດ້ເຂົ້າຫຼາຍເລົ້າຄືກັບນ້ອງ, ແຕ່ສຸດທ້າຍແນວເຂົ້າທີ່ຊັກໃສ່ໄຮ່ ໃນເມື່ອປົ່ງຂຶ້ນມາພັດເປັນຫຍ້າໝົດ, ໃນປີນັ້ນ ຄອບຄົວຂອງອ້າຍກໍ່ອຶດເຂົ້າ. ນ້ອງຊາຍຈຶ່ງເອົາຄຳໜຶ່ງເມັດໃຫ້ອ້າຍໄປຂາຍເພື່ອຊື້ເຂົ້າກິນ, ໃນຕໍ່ມາເມຍອ້າຍໄປຖາມວ່າ ພວກເຈົ້າໄດ້ເມັດຄຳມາແຕ່ໃສ? ນ້ອງຊາຍບອກບ່ອນບໍ່ຄຳຢູ່, ໃນມື້ລຸນມາ ຜົວເມຍເຂົາເຈົ້າລັກໄປຂຸດເອົາຫວັງຈະຮັ່ງມີລື່ນນ້ອງ, ເຂົາເຈົ້າຂຸດບໍ່ຄຳນັ້ນເລີຍພົບເຫັນແຕ່ງູເຫົ່າຍາບໆຢູ່, ເຂົາເຈົ້າຂ້າຫຼາຍເທົ່າໃດແຫ່ງອອກມາຫຼາຍເທົ່ານັ້ນ, ໃນສຸດທ້າຍຂ້າບໍ່ຫຼ້ອນ ສູ້ບໍ່ໄຫວແລ້ວຖືກງູເຫົ່າຕອດຕາຍທັງສອງຄົນຢູ່ບ່ອນນັ້ນອີກດ້ວຍ.

# 4.6 ຫາມຄົນເຈັບ

# (ຂຣາງດູຍອະໄອ)

ເຂົາເຈົ້າເລົ່າເລື່ອງລາວ, ເລື່ອງຊີວິດຄົນຢູ່ໃນໂລກນີ້ ເກີດມາເພື່ອສ້າງໂລກຈະເລີນກ້າວໜ້າ, ແຕ່ວ່າເກີດມາເພື່ອມ້າງໂລກກໍ່ມີ. ມະນຸດຜູ້ໜຶ່ງຕ້ອງຕິດຕົວສອງຢ່າງເຂົາເຈົ້າເວົ້າຄື: ຢ່າງໜຶ່ງແມ່ນຢູ່ນຳໂລກ, ຢູ່ນຳສັງຄົມມະນຸດ ມີແຕ່ທຳຄວາມດີໃຫ້ແກ່ຊີວິດຈິດໃຈຂອງຕົນເອງໃຫ້ແກ່ໂລກພາຍນອກເຫັນ ແລະ ຮູ້ຈັກຄວາມດີຄວາມງາມຂອງຄົນ, ເວົ້າລວມແມ່ນຊັບສົມບັດຂອງຄົນ. ຢ່າງສອງແມ່ນວ່າ ທຸກຄົນຢູ່ໃນໂລກຕ້ອງມີຄວາມຊົ່ວຕິດຕົວ, ອັນນີ້ກໍ່ແມ່ນຊັບສົມບັດຂອງຄົນ ເຊິ່ງຕິດພັນນັບຕັ້ງແຕ່ມີໂລກແລ້ວ ກໍ່ມີມະນຸດເກີດຂຶ້ນມາອີກດ້ວຍ.

ເຂົາເຈົ້າເລົ່າເລື່ອງກັນມາ ຕັ້ງແຕ່ດົນນານມາແລ້ວ, ເຊິ່ງຄົນກະຕູພາກັນເລົ່າຕໍ່ໆກັນຈາກຮຸ່ນຄົນນີ້ໄປຫາຊົ່ວຮຸ່ນຄົນໃໝ່ອີກ, ມີມື້ໜຶ່ງເຂົາເຈົ້າພາກັນໄປຖາງປ່າເຮັດໄຮ່ຫຼາຍຄົນໄປນຳກັນ. ໃນມື້ນັ້ນເຂົາເຈົ້າພາກັນຖາງປ່າຢ່າງເອົາຈິງເອົາຈັງແທ້, ເຂົາເຈົ້າຖາງປ່າເຮັດໄຮ່ນັ້ນແມ່ນ ແບ່ງກັນເປັນສອງຈຸ, ເຂົາເຈົ້າແບ່ງໃຫ້ພວກແມ່ຍິງເດັກນ້ອຍຖາງກ່ອນ, ຖາງແຕ່ຕົ້ນໄມ້ນ້ອຍ, ຫຍ້ານ້ອຍໆ, ຕັດຖາງເຄືອໄມ້ເທົ່ານັ້ນ. ສ່ວນພວກຜູ້ຊາຍໜຸ່ມເຖົ້າເປັນຜູ້ບັກປຳຕົ້ນໄມ້ໃຫຍ່ໆລົ້ມລົງເປັນແຖວໆຢ່າງບໍ່ເສຍດາຍເລີຍຈັກໜ້ອຍ ເຂົາເຈົ້າຄິດວ່າເລື່ອງປາກເລື່ອງທ້ອງເປັນໃຫຍ່ເທົ່ານັ້ນກໍ່ພໍແລ້ວ.

ຫຼັງຈາກຖາງປ່າບັກປຳໄມ້ແລ້ວ ເຂົາເຈົ້າພາກັນເຮັດອະນາໄມແຕ່ລະລຳຕົ້ນໄມ້, ເຂົາເຈົ້າຕັດງ່າໄມ້ນ້ອຍລົງແລ້ວໆຕັດເປັນທ່ອນໆ ເພື່ອໃຫ້ໄຟໄໝ້ດີ, ເພື່ອສະດວກໃນການຮື້ໄຮ່, ການຊັກເຂົ້າບໍ່ເກະກະກັນ, ໃນເວລາເຮັດວຽກດັ່ງກ່າວ ມີຜູ້ໜຶ່ງເຮັດວຽກຟ້າວຟັ່ງຫຼາຍ, ເຮັດໄວແຕ່ບໍ່ລະວັງຕົວຈຶ່ງຖືກພ້າຕະເຫຼັ່ນໃສ່ຕີນ ເລືອດອອກດຽກໆ, ເຂົາເຈົ້າເອົາແພພັນບາດໄວ້ແລ້ວແບ່ງກັນເທື່ອ ລະສີ່ຄົນຫາມຄົນເຈັບໄປ, ຍັງອີກສອງຄົນຖາງທາງໄປກ່ອນ, ໃນເມື່ອຕົວຈິງແລ້ວ ສີ່ຄົນຢ້ານຄົນເຈັບໄດ້ຮັບອັນຕະລາຍກໍ່ຟ້າວຫາມເມືອເລີຍ, ຍັງສອງຄົນໃຫ້ຖາງທາງນັ້ນມາຕາມຫຼັງ, ເຂົາເຈົ້າສອງຄົນເຫັນໄມ້ເກາະຄົນເຈັບບ່ອນໃດ ກໍ່ຕັດໄມ້ອອກ ແລ້ວເວົ້າວ່າໄມ້ອັນນີ້ເກາະເຂົາເຈົ້າຫາມຄົນເຈັບບາດ, ພວກສີ່ຄົນໄປກ່ອນຢ່າງຍາກລຳບາກຫຼາຍ, ຫາມບຸປ່າຜ່າດົງ, ບຸໄມ້ຢ່າງສັບສົນຫຼາຍ, ແທນທີ່ສອງຄົນຖາງທາງຕ້ອງໄປກ່ອນຊໍ້າພັດມາຕາມຫຼັງ, ເຂົາເຈົ້າເຫັນໄມ້ຕົ້ນໃດຖືກ ຫຼື ເກາະຄົນເຈັບ, ເຂົາເຈົ້າວ່າຕົ້ນໄມ້ອັນນີ້ເກາະຄົນເຈັບເຂົາເຈົ້າຕັດອອກ, ເຂົາເຈົ້າເຮັດຕະຫຼອດເສັ້ນທາງທີ່ຫາມຄົນເຈັບ.

ໃນເມື່ອສີ່ຄົນຫາມຄົນເຈັບຮອດບ້ານແລ້ວ, ເຂົາເຈົ້າຖົກຖຽງກັນວ່າ ສີ່ຄົນພວກເຮົາຫາມ

ຄົນລອດລົ້ມລອດຕາຍ, ຍາກລຳບາກບໍ່ຈັກວ່າເທົ່າໃດຜ່ານພົ້ນຄວາມຫຍຸ້ງຍາກ ຕາມເສັ້ນທາງຫຼາຍຢ່າງຈຶ່ງມາຮອດບ້ານ. ສ່ວນສອງຄົນກໍ່ຖືກຖຽງກັນວ່າ ຕົນເອງຕັດໄມ້ທີ່ເກາະຄົນເຈັບຈົນເມື່ອຍ, ຕັດງ່າໄມ້ເກາະ, ຕັດຍອດໄມ້ຊູນແຕ່ຕົ້ນທາງ ຈົນເຖິງປາຍທາງຢ່າງຫຍຸ້ງຍາກລຳບາກທີ່ສຸດ. ພວກຄົນຊາວບ້ານທີ່ນັ່ງຟັງເຂົາເຈົ້າເວົ້າກັນ ພາກັນຕົກຕະລຶງວ່າ ເປັນຫຍັງພວກຫາມຄົນເຈັບນັ້ນ ພັດຫາມມາກ່ອນຄົນຖາງທາງ, ເຂົາເຈົ້ານັ່ງຟັງໂງ່ໆຄິດບໍ່ອອກເຫດການເປັນແນວໃດກັນແທ້. ຊາວບ້ານນັ່ງຟັງຈຶ່ງເຂົ້າໃຈເລື່ອງລາວ ການຖຽງກັນຂອງຄົນທັງສາມຄົນນັ້ນ, ຊາວບ້ານຈຶ່ງເວົ້າວ່າຟັງເດີພວກເຮົາເວົ້າໃຫ້ຟັງ, ຖືກແທ້ສອງຄົນນັ້ນຕ້ອງໄປກ່ອນ, ເປັນຜູ້ຖາງທາງໄປກະວ່າຕົ້ນໄມ້ໃດຈະເກະກະ ຫຼື ເກາະຖືກຄົນເຈັບຕ້ອງຖາງອອກກ່ອນຕັດກ່ອນແມ່ນບໍ? ແຕ່ກົງກັນຂ້າມທີ່ພວກເຈົ້າເຮັດນັ້ນ ຄົນຫາມຄົນເຈັບນັ້ນພັດບຸປ່າໄມ້ກ່ອນ, ຄົນຖາງທາງພັດໄປຕາມຫຼັງພຽງຕິດຕາມໄມ້ໃດເກາະຖືກເຂົາເຈົ້າຈຶ່ງຕັດອອກໄປ, ເຮັດແບບນີ້ແມ່ນຫວະ ! ການເຮັດວຽກແບບຊຽງໝັ້ງນັ້ນເອງ. ຫຼັງຈາກຊາວບ້ານເວົ້າສຸດແລ້ວ ເຂົາເຈົ້າພາກັນຫົວເຍາະເຍີ້ຍກັນຈົນໄສ້ຄົດໄສ້ໂຂ, ການຫາມຄົນແບບນັ້ນ ແມ່ນສີ່ຄົນໄດ້ມີຜົນງານຫຼາຍແຕ່ວ່າບໍ່ໄດ້, ຜູ້ໄດ້ຜົນງານຫຼາຍແມ່ນສອງຄົນ, ເພາະວ່າເປັນຜູ້ແກ້ໄຂວຽກງານຜູ້ອື່ນເຮັດແລ້ວ ຕົນເອງພຽງແຕ່ເປັນຜູ້ສັບຊ້ອນວຽກຄົນເທົ່ານັ້ນ ແຕ່ໄດ້ດີ ກວ່າສອງຄົນ.

## 4.7 ສາວແກ່
## (ແກ້ດກຣີງ)

ເຂົາເຈົ້າເລົ່າເລື່ອງລາວ, ເລື່ອງຄອບຄົວໜຶ່ງມີລູກສາວໜຶ່ງຄົນ, ເປັນນາງສາວສວຍງາມຫຼາຍ, ຄົນຂາວໜ້າຕາມົນແກ້ມບ່ອງແຕ່ຍັງນ້ອຍ. ຄວາມສວຍງາມຂອງນາງຍາມໄວເດັກ ໃຜໆເຫັນນາງກໍ່ຫ້າມໃຈຢູ່ບໍ່ໄດ້ຕ້ອງຢາກຍອກໄດ້ອຸ້ມ ໃຜໆກໍ່ຮັກແພງນາງ ຄວາມງາມຂອງນາງມີຊີວິດຊີວາຫຼາຍຄວາມງາມນັ້ນໄດ້ກາຍເປັນຊັບສົມບັດທີ່ດູດດຶງຈິດໃຈຂອງຄົນອື່ນ ຄວາມງາມຂອງນາງໄດ້ສ່ອງແສງເຖິງສາຍຕາຂອງຜູ້ຊາຍໄວ້. ຄວາມງາມຂອງຄົນ ແມ່ນມີອຳນາດເໜືອກວ່າຄວາມງາມຂອງທຳມະຊາດ ຄວາມງາມຂອງຄົນມັນເໝືອນແສງຕາເວັນສ່ອງລົງສູ່ພື້ນໂລກຕ້ອງຮູ້ສຶກໄດ້ໂລດວ່າແສງສະຫວ່າງມາເຖິງແລ້ວ, ແຕ່ຄວາມງາມຂອງຄົນມັນຊອດເຂົ້າໃສ່ໝາກຫົວໃຈເຮັດໃຫ້ສະລົບລົງ, ເຮັດໃຫ້ສາຍຕາຈົນຕົກຕະລຶງກັບບ່ອນຂອງຜູ້ອື່ນ ແລ້ວສິ່ງເຖິງສະໝອງເຮັດໃຫ້ຄົນຄິດຫາຄວາມງາມທີ່ວຮ່າງກາຍຂອງນາງຢູ່ຕະຫຼອດ.

ແຕ່ວ່ານາງໄດ້ເຕີບໃຫຍ່ເປັນສາວແລ້ວ, ໃຜໆກໍ່ຈັບຕາຈອງມອງເບິ່ງດ້ວຍສາຍຕາທີ່ໜ້າ **ສົນ**ໃຈບາງຄົນຜູ້ມີລູກຊາຍ ກໍ່ຢາກຂໍໝາຍໝັ້ນໄວ້ເປັນລູກສະໃພ້, ຜູ້ເປັນພໍ່ແມ່ພັດຊັ່ງຊາຖານະຄວາມຮັ່ງມີຕົນເອງ ຈະໄດ້ຄ່າຫົວລູກສາວສູງບໍ? ເຂົາເຈົ້າເຫັນວ່າຄ່າຫົວຕໍ່າ ຈະບໍ່ໃຫ້ໝາຍໝັ້ນ, ດ້ານໜຶ່ງອີກຍ້ອນພໍ່ແມ່ນາງຄິດຢາກໄດ້ເປັນຄົນຮັ່ງມີມາເປັນເຂີຍສູ່, ເພາະວ່າມີແຕ່ລູກສາວດຽວເທົ່ານັ້ນ, ມີຄອບຄົວໜຶ່ງມາສູ່ຂໍເອົານາງເປັນລູກສະໃພ້ເຮືອນ, ແຕ່ວ່າພໍ່ແມ່ຂອງນາງປະຕິເສດ, ພໍ່ແມ່ຂອງນາງເວົ້າຄ່າຫົວແພງຫຼາຍບໍ່ສາມາດຈະແຕ່ງເອົານາງໄດ້. ຄົນເຮົາເກີດຂຶ້ນມາຫຼາຍເດືອນຫຼາຍປີມາແລ້ວອາຍຸມັນກໍ່ຕ້ອງຫຼາຍຂຶ້ນຕາມທຳມະຊາດຂອງມະນຸດໃຜໆກໍ່ປະຕິເສດບໍ່ໄດ້, ເພາະສະນັ້ນ ນາງເປັນສາວເຕັມຄີງແລ້ວກໍ່ຮູ້ຈັກລົມບ່າວ ແລ້ວກໍ່ມີຜູ້ບ່າວຄົນໜຶ່ງມາລົມເອົານາງ ແຕ່ວ່ານາງບໍ່ມັກ. ວັນເວລາໄດ້ຜ່ານພົ້ນໄປພໍ່ແມ່ຂອງນາງກໍ່ຕາຍຈາກໄປ, ຍັງເຫຼືອມີຊີວິດຢູ່ແບບລຳພັງ ພຽງແຕ່ລູກສາວຄົນດຽວເທົ່ານັ້ນ.

ຊີວິດຂອງນາງ ຫຼັງຈາກຄວາມຕາຍຂອງພໍ່ແມ່ນັ້ນ ນາງປະສົບແຕ່ຄວາມທຸກຈົນຫຼາຍຢ່າງ, ມັນເປັນຊີວິດທີ່ຂາດກຳລັງໃຈຫຼາຍ, ການດຳລົງຊີວິດຢູ່ໂດດດ່ຽວອ້າງວ້າງ, ຂາດຄວາມອົບອຸ່ນຈາກພໍ່ແມ່, ຂາດການສຶກສາອົບຮົມຈາກຜູ້ປົກຄອງ, ແຕ່ລະມື້ເຂົ້າຂາດແລງແກງຂາດໝໍ້, ການນຸ່ງຫົ່ມເສື້ອຂາດໜ້າຜ້າຂາດຫຼັງ. ທຸກສິ່ງທຸກຢ່າງຊີວິດຂອງນາງອັບຈົນປັນຍາຮອບດ້ານ, ນາງ**ຄິດ**ຢາກໄດ້ຜູ້ຄຸ້ມຄອງເອົາຊີວິດຂອງຕົນເອງ ຈາກຜູ້ຊາຍຄົນໃດໜຶ່ງກໍ່ມີເປີເຊັນໜ້ອຍເກີນໄປ. ໃນເມື່ອດຳລົງຊີວິດຂາດຄວາມເຊື່ອໝັ້ນແລ້ວ ອາຍຸຂອງນາງໄປຕາມການໝູນວຽນຂອງວັນ, ເດືອນ, ປີ ໄປເຮັດໃຫ້ກະສຽນສູງຂຶ້ນໄປ, ແຕ່ວ່າເບື້ອງຈິດໃຈ ກໍ່ໄປຕາມກາລະເວລາຂອງມັນ ບໍ່ອາດຈະລໍຖ້າຜູ້ໃດອີກ. ແຕ່ວ່າຄົນເຮົາບໍ່ວ່າຜູ້ຍິງ ຫຼື ຜູ້ຊາຍກໍ່ຕາມຖ້າວ່າອາໄສຊີວິດທີ່ຂາດອຸດົມການ, ຢູ່ເພື່ອໃຫ້ຊີວິດຄົນຜູ້ນັ້ນເປັນມະນຸດທີ່ບໍ່ຄົບຖ້ວນ, ຕາມທຳມະຊາດຂອງມະນຸດແລ້ວ ເກີດມາຕ້ອງມີຜູ້ປົກຄອງແລ້ວ ຕ້ອງມີຄົນສືບທອດເຊື້ອສາຍອີກ, ຢາກໃຫ້ມີແນວນັ້ນ ຄົນເຮົາຕ້ອງສ້າງຄອບ ຄົວ, ຖ້າອາໄສຊີວິດຢູ່ໂສດໄປຕະຫຼອດຊາດຂອງຕົນ ແມ່ນຊີວິດຄືກັນກັບກະຕໍາໄມ້.

ໃນເມື່ອອາຍຸສູງຢູ່ມາຫຼາຍປີແມ່ນຄົນເປັນໜີ້ຊີວິດຂອງຕົນເອງ, ຕົນເອງບໍ່ຮູ້ຈັກສະຫວັນຄວາມສຸກຂອງມະນຸດເປັນແນວໃດ? ຄົນແກ່ແລ້ວຊີວິດຈິດໃຈບໍ່ເປັນປົກກະຕິເກີດອາການໜາວໃນ, ນ້ຳຕາໄຫຼຕົກໃນ, ຍາມຄ່ຳມາຄອງຄິດວ່າ ມີໃຜນໍຈະມາເຫັນໃຈຕົນເອງ, ນາງມີອາຍຸປະມານຊາວຫ້າປີເທົ່ານັ້ນ, ແຕ່ວ່າຄົນກະຕູເຂົາເຈົ້າວ່າສາວເຖົ້າແລ້ວ. ນາງຄິດຫ່ວງນຳຊີວິດຕົນເອງທີ່ມັນຫຼ້າສວາຍໄປ ເພາະວ່າຊີວິດໝົດຄວາມໝາຍ, ວັດຖຸຢູ່ຕິດຕົວບໍ່ມີລາຄາແລ້ວຕົນເອງຈຶ່ງຄິດຊອກຫາຕະຫຼາດຄວາມຮັກແມ່ນຍາກຫຼາຍ.

ຄືນມື້ໜຶ່ງ ນາງຄິດເຫັນຊີວິດຂອງຕົນເອງຫຼາຍນອນກາງຄືນກໍ່ມີຈິດໃຈເພີ້ຝັນນຳຊີວິດຫຼາຍ, ຢາກໄດ້ຜົວຄືແມ່ຍິງຄົນອື່ນເຂົາ, ນາງນອນແປະປະຕູເຂົ້າເຮືອນ, ໃນເມື່ອເດີກມາແລ້ວ

ລົມໜາວຍາມເດິກ ກໍ່ພັດໂຊຍມາອາກາດເຢືອກເຢັນ, ຖ້າຜູ້ໃດບໍ່ມີຄູ່ຊອກຜ້າຫົ່ມມານອນກອດ, ນາງຮູ້ສຶກໜາວ ນາງລຸກຂຶ້ນມືນຕາສ່ອງໄປທາງນອກເຫັນເງົາຄົນໜຶ່ງນັ່ງຢູ່, ນາງຄິດວ່າຜູ້ຊາຍມາຫານາງ, ນາງຟ້າວເອົາກະບັ້ງກອກເດີ, ເອົາຢາມາຍັດໃສ່ເຕົ້າແລ້ວເອົາຖ່ານໄຟໃສ່, ນາງໄຊປະຕູ ແລ້ວຍື່ນກະບັ້ງກອກເດີ ໃຫ້ດູດແຕ່ບໍ່ໄດ້ຍິນສຽງດູດກອກເດີຈັກບາດ, ນາງຕັ້ງສະຕິແລ້ວເບິ່ງຄັກໆພັດບໍ່ແມ່ນຄົນ, ມັນແມ່ນກະພາຕັ້ງຢູ່ປາຍຊານ ນາງດ່າຕົນເອງວ່າ ບັກຫ່າຊີວິດກູເອີຍ. ໃນຄືນນັ້ນ ນາງທັງໄຫ້ທັງຫິວ. ວັນເວລາຂອງເຫດການໃນຄືນນັ້ນຜ່ານພົ້ນໄປຫຼາຍເດືອນແລ້ວ, ມີຄືນໜຶ່ງອາກາດອ່າວໜາວເຢັນໜ້ອຍໜຶ່ງ, ຍາມກາງຄືນຄົນໃນເຮືອນນອນຢ່າງງຽບສະງັດ, ມີແບ້ຜູ້ໂຕໜຶ່ງບໍ່ນອນຢູ່ກ້ອງຕະລ່າງ ແຕ່ແບ້ໂຕນັ້ນຂຶ້ນນອນເທິງຊານເຮືອນ, ນາງນອນບໍ່ຫຼັບຕາ ນອນພິກຂວາພິກຊ້າຍຕະຫຼອດ ພໍໄດ້ສຽງຄຶກເຄັກດັງຢູ່ຊານເຮືອນ ນາງຟ້າວເອົາກະບັ້ງກອກເດີອອກມາ ເພື່ອຕ້ອນຮັບຜູ້ບ່າວມາລົມກັບນາງ, ຫຼັງຈາກໄຕ້ກອກເດີ ແລ້ວນາງຟ້າວອອກເຮືອນມາ, ນາງນັ່ງແລ້ວຍື່ນປາກກອກເດີໃຫ້ດູດ, ແຕ່ວ່າບໍ່ໄດ້ຍິນສຽງ, ນາງໜ້າອາຍບໍ່ກ້າເບິ່ງໜ້າເທື່ອ, ນາງເວົ້າວ່າດູດແມໜ້າອາຍເຮັດຫຍັງ, ກໍ່ບໍ່ໄດ້ຍິນສຽງປາກ ຕອບ, ນາງຈຶ່ງຢາກຮ້າຍເອົາປາກກອກເດີທິ່ງໃສ່ໃຫ້ດູດ ກອກເດີນັ້ນ, ແບ້ຜູ້ໂຕນັ້ນເລີຍຕື່ນຂຶ້ນ ແລ້ວຮ້ອງ ແບ້! ແບ້ ! ແລ້ວໂຕນລົງຊານເຮືອນວັບໄປ ນາງເຫັນຊີວິດຂອງຕົນເອງຕົກຕໍ່າ, ຊີວິດອັບເສົ້າຫຼາຍ, ນາງຄິດເຖິງຍາມຕົນເອງເປັນດອກໄມ້ຍັງຫອມ ໃຜໆຕ້ອງການຢາກເດັດເອົາມາດົມ, ດຽວນີ້ດອກໄມ້ໄດ້ຫ່ຽວແຫ້ງ ຜູ້ຄົນທົ່ວໄປກໍ່ບໍ່ສົນໃຈນໍາອັນນີ້ຊີວິດຄົນເຮົາຄືຄວາມຝັນ, ຊີວິດຄົນຄືກັບນັກສະແດງລະຄອນ ຂອງຜູ້ສາວຄົນກະຕູບູຮານໃນສະໄໝກ່ອນ.

## 4.8 ຄົນຮັ່ງມີ

## (ກົນຍຄູຍພັຮຍາ)

ເຂົາເຈົ້າເລົ່າເລື່ອງ, ຕະກຸນຄົນຮັ່ງມີມາແຕ່ເຊື້ອສາຍປູ່ຍ່າພຸ້ນມາແລ້ວ, ເຮັດໃຫ້ຊື່ສຽງຢູ່ທ້ອງຖິ່ນນັ້ນໃຜໆ ກໍ່ຕ້ອງຮັບຮູ້ວ່າເຂົາເຈົ້າເປັນຄົນຮັ່ງມີ, ເຮັດໃຫ້ໄທບ້ານໄທເມືອງເຄົາລົບນັບຖືຢ່າງສູງ, ມີວຽກບ້ານການເຮືອນຢູ່ບ່ອນໃດຕະກຸນຄົນຮັ່ງກໍ່ມີໜ້າຢູ່ບ່ອນນັ້ນ. ໃຜໆກໍ່ຮຽກເຊີນຄອບຄົວຄົນຮັ່ງ, ຖ້າບໍ່ມາຮ່ວມໄດ້ເຂົາເຈົ້າຕ້ອງຫໍ່ຊີ້ນຕ່ອນໜາປາຕ່ອນໃຫຍ່ໄປໃຫ້ຢູ່ເຮືອນ, ເຂົາເຈົ້າເຊື່ອໃຈພໍ່ເຖົ້າຢ່າງເລິກເຊິ່ງ, ຍ້ອນວ່າພໍ່ເຖົ້າເປັນຄົນຮັ່ງມີ, ເປັນຄົນທ່ຽງທຳໃຫ້ແກ່ໝົດທຸກຄົນພາຍໃນບ້ານ, ພໍ່ເຖົ້າຮັກແພງຄົນໃນບ້ານທຸກເພດໄວ, ດັ່ງນັ້ນຄົນໃນບ້ານໃຜໆກໍ່ເຄົາລົບນັບຖືພໍ່ເຖົ້າຢ່າງສູງຕະຫຼອດມາ.

ພໍ່ເຖົ້າຜູ້ນັ້ນມີລູກສີ່ຄົນ, ເຊິ່ງລາວຮັກແພງລ້ຽງດູລູກໃນທຸກດ້ານ, ພໍ່ເປັນຜູ້ສ້າງອະນາຄົດຂອງລູກທຸກຄົນໃຫ້ມີຄອບຄົວ, ໃຫ້ມີເຮືອນຊານບ້ານຊ່ອງທຸກຄົນໄດ້ຄືກັນໝົດ. ພໍ່ເຖົ້າໄດ້ຝາກຄວາມຫວັງໄວ້ນຳລູກໃນພາຍຂ້າງໜ້າ ໃນເມື່ອຕົນເອງເຖົ້າແກ່ຈະອາໄສຢູ່ນຳລູກເຖົ້າແກ່ແລ້ວພໍ່ຄິດວ່າຈະເລາະກິນເລາະຢູ່ນຳລູກແຕ່ລະຄົນກໍ່ມີຄວາມສຸກແລ້ວ, ພໍ່ຈຶ່ງເອົາໃຈໃສ່ສຶກສາ ເລື່ອງວຽກບ້ານການເຮືອນ ການເຮັດໄຮ່ເຮັດສວນຢ່າງເຫື່ອໄຫຼໄຄຍ້ອຍ, ພໍ່ຄິດວ່າມື້ນີ້ ພໍ່ທຸກລ້ຽງລູກແຕ່ມື້ໜ້າລູກທຸກຄົນຈະຕ້ອງລ້ຽງພໍ່ໃຫ້ໄດ້.

ໃນເມື່ອລູກທຸກຄົນໃຫຍ່ຂຶ້ນມາແລ້ວ, ພໍ່ເຖົ້າຄົນນັ້ນກໍ່ເລີ່ມແບ່ງຊັບສິນບັດໃຫ້ລູກແຕ່ລະຄົນຢ່າງຄົບຖ້ວນ, ຊັບສິນບັດພໍ່ແບ່ງປັນໃຫ້ລູກແຕ່ລະຄົນມີໄຮ່, ສວນ, ງົວ, ຄວາຍ, ມ້າ, ໝູ, ເປັດ ແລະໄກ່ ເພື່ອເອົາໄປລ້ຽງ ແລະພໍ່ແບ່ງປັນເງິນຄຳຈຳນວນໜຶ່ງໃຫ້ອີກ. ພໍ່ເຖົ້າຄົນຮັ່ງມີຜູ້ນັ້ນເຊື່ອໝັ້ນລູກແຕ່ລະຄົນວ່າຈະລ້ຽງຕົນເອງກຸ້ມຈຶ່ງຟ້າວແບ່ງຊັບສິນບັດ, ພໍ່ຄິດວ່າຈະອາໄສຢູ່ນຳລູກແທ້ໆ, ເອົາຊີວິດ ໄປເພິ່ງພາອາໄສລູກ, ລາວຄິດວ່າລູກສີ່ຄົນນັ້ນຕົນເອງຈະໄປນອນເຮືອນຜູ້ລະເຈັດມື້ກໍ່ຮອບເດືອນແລ້ວ ຈະບໍ່ຫຍຸ້ງຍາກອັນໃດອີກ, ພໍ່ເຖົ້າຈຶ່ງໄວ້ພຽງແຕ່ໄມ້ຄ້ອນເທົ້າຕິດຕົວ, ພໍ່ພາກພູມໃຈຫຼາຍໄດ້ລູກສີ່ຄົນນັ້ນເໝືອນຕົນເອງໄດ້ກ້ອນຄຳໃຫຍ່ສີ່ກ້ອນ ເປັນການຄ້ຳປະກັນອະນາຄົດຂອງພໍ່ເອງ ຈະມີລູກເປັນຜູ້ລ້ຽງດູພໍ່ຕະຫຼອດຊີວິດ.

ພໍ່ເຖົ້າຄົນຮັ່ງມີຜູ້ນັ້ນໝົດຊັບສິນບັດ ເພາະລາວຢາຍໃຫ້ລູກແຕ່ລະຄົນແລ້ວ, ພໍ່ໄດ້ໄປຢູ່ນຳລູກຫຼ້າເປັນລູກຜູ້ທີ່ສີ່ ພໍ່ເວົ້າວ່າພໍ່ຈະມາຢູ່ນຳລູກແລ້ວເດີ. ໃນເມື່ອໄດ້ຍິນວ່າພໍ່ຈະມາຢູ່ນຳແນວນັ້ນ ລູກກໍ່ຖາມພໍ່ວ່າ ຈະຢູ່ເຫິງບໍ່ ຖ້າວ່າຢູ່ເຫິງຫຼາຍແມ່ນບໍ່ໃຫ້ຢູ່, ພໍ່ຢູ່ສອງສາມວັນແລ້ວລູກຫຼ້າກໍ່ໄລ່ພໍ່ອອກເຮືອນໄປ, ພໍ່ກໍ່ຍອມອອກໄປຫາລູກຜູ້ທີ່ສາມ ໃນເມື່ອໄປເຖິງເຮືອນແລ້ວພໍ່ເວົ້ານຳລູກອີກວ່າ ພໍ່ຈະມາຢູ່ນຳລູກໃດ໋ເດີ ລູກຖາມພໍ່ວ່າຢູ່ເຫິງບໍ? ພໍ່ເວົ້າວ່າບໍ່ເຫິງດອກ, ລູກອະນຸຍາດໃຫ້ຢູ່ແຕ່ມີກຳນົດ ລູກຜູ້ທີ່ສາມກໍ່ໄດ້ໄລ່ພໍ່ອອກເຮືອນໄປ, ພໍ່ຄິດຈະໄປຫາລູກຜູ້ທີ່ສອງອີກ, ໃນເມື່ອໄປເຖິງແລ້ວພໍ່ເວົ້ານຳລູກວ່າ ພໍ່ຈະມາຂໍຢູ່ນຳລູກພໍ່ໄດ້ບໍ? ລູກເວົ້າວ່າໄດ້ຖ້າບໍ່ຢູ່ເຫິງມາຢູ່ໄດ້, ພໍ່ເວົ້ານຳລູກວ່າບໍ່ເຫິງດອກ, ໃນເມື່ອວ່າພໍ່ຈົນປັນຍາບໍ່ມີບ່ອນຢູ່ອາໄສແລ້ວ ຈຶ່ງຂໍຢູ່ເຫິງນຳລູກ ສ່ວນລູກເຫັນພໍ່ຈະຢູ່ເຫິງຄືແນວນັ້ນ, ລູກກໍ່ໄລ່ພໍ່ອອກຈາກເຮືອນໄປ ຕອນນີ້ພໍ່ອອກຈາກເຮືອນລູກໄປ ນ້ຳຕາພໍ່ໄຫຼປານນ້ຳຝົນຕົກລິງມາຍາມໃດກໍ່ບໍ່ຮູ້ເມື່ອ, ພໍ່ໄປຫາລູກຜູ້ທີ່ໜຶ່ງອີກເວລາໄປຮອດເຮືອນລູກ ພໍ່ກໍ່ເວົ້າວ່າ ຂໍຢູ່ອາໄສນຳລູກຄົນນັ້ນຄົນນີ້ ລູກແຕ່ລະຄົນພັດເວົ້າວ່າບໍ່ໃຫ້ພໍ່ຢູ່ເຫິງ, ພໍ່ຢູ່ສາມວັນແລ້ວພວກເຂົາກໍ່ໄລ່ພໍ່ໜີອອກຈາກເຮືອນໄປ, ພໍ່ຖືກລູກທັງສີ່ຄົນໄລ່ໜີໄປຢ່າງບໍ່ສິ່ງສານພໍ່ອີກເລີຍ, ພໍ່ຍ່າງອອກຈາກເຮືອນລູກແລ້ວ ນ້ຳຕາໄຫຼອອກເປັນນ້ຳເຊຍາມໃດກໍ່ບໍ່ຮູ້ເມື່ອ, ອອກເຮືອນໄປແຕ່ລະຄັ້ງທັງຍ່າງທັງຄິດວ່າ ໃນຊີວິດຂອງພໍ່ເອງຍັງເຫຼືອແຕ່ໄມ້ຄ້ອນເທົ້າເປັນເພື່ອນພາທາງ, ເປັນຊັບສິນບັດທີ່ຍັງເຫຼືອຄ້າງຕິດຕົວພຽງເທົ່ານີ້ແລ້ວ.

ພໍ່ອອກເດີນທາງແຕ່ເຊົ້າໆ ເພື່ອຊອກຫາບ່ອນຢູ່ອາໄສຈະແມ່ນບ່ອນໃດກໍ່ບໍ່ຮູ້ຈັກເທື່ອ, ພໍ່ເອົາໄມ້ຄ້ອນເທົ້າໄປກ່ອນ, ພໍ່ເຕາະຕ່ອຍໄປຕາມຕົ້ນໄມ້ໃບຫຍ້າຕາມທາງ, ລາວເດີນທາງໄປຢ່າງລຳບາກຫຼາຍ ພໍ່ຜ່ານຜ່າອຸປະສັກຫຼາຍປະການ ແຕ່ພໍ່ເຖົ້າຄົນຮັ່ງມີຜູ້ນັ້ນບໍ່ລັ່ງເລໃຈ, ພໍ່ອອກເດີນທາງມີຈຸດມຸ່ງໝັ້ນສູງ, ພໍ່ຜ່ານພູຫຼາຍໜ່ວຍຜ່ານຫ້ວຍຫຼາຍສາຍ, ຂ້າມເຊຫຼາຍແຫ່ງ, ພໍ່ຜ່ານພູຜາປ່າດົງແລ້ວ, ພໍ່ເຖົ້າຄົນຮັ່ງມີຈຶ່ງໂຊກດີຫຼາຍທີ່ໄປພົບເຈົ້າພະລືສີອົງໜຶ່ງຢູ່ປ່າດົງແຫ່ງໜຶ່ງ. ພໍ່ຈຶ່ງຂໍຢູ່ຊີວິດນຳເຈົ້າພະລືສີ, ລາວຢູ່ນຳພະລືສີດ້ວຍຄວາມຮັກແພງອັນເລິກເຊິ່ງໃນຊີວິດຂອງພໍ່ນັ້ນເອງ.

ສ່ວນລູກທັງສີ່ຄົນຢູ່ບ້ານນັ້ນ ນັບຕັ້ງແຕ່ພໍ່ໜີຈາກບ້ານໄປແລ້ວ ໄທບ້ານໄທເມືອງກໍ່ບໍ່ນັບໜ້າຖືຕາເຂົາເຈົ້າອີກ, ບໍ່ເຊີນເຂົາເຈົ້າໄປຮ່ວມງານບຸນຕ່າງໆ, ເຂົາເຈົ້າບໍ່ມີບົດບາດໃນວົງສັງຄົມເໝືອນພໍ່ອີກ ພວກລູກທັງສີ່ຄົນມີຖານະຕົກຕ່ຳລົງເລື້ອຍໆ. ໄທບ້ານຢາກໄດ້ພໍ່ເຖົ້າຄົນຮັ່ງມີກັບຄືນບ້ານອີກ, ພວກໄທບ້ານຈຶ່ງຈະນັບໜ້າຖືຕາລູກທັງສີ່ຄົນ. ໃນເມື່ອມີຄວາມຕ້ອງການຢາກໄດ້ພໍ່ຂອງຕົນເອງແລ້ວ ພວກລູກທັງສີ່ຄົນກໍ່ປຶກສາກັນເປັນເອກະພາບກັນແລ້ວ ຕົກລົງກັນວ່າພວກເຮົາຕ້ອງໄປນຳພໍ່ກັບມາບ້ານ, ເຂົາເຈົ້າອອກເດີນທາງໄປຊອກຫາພໍ່ຫຼາຍແຫ່ງແຕ່ບໍ່ເຫັນ, ໃນຕໍ່ມາເຂົາເຈົ້າເຫັນພໍ່ອອກຈາກປ່າມາຫາເສັ້ນທາງຄົນຍ່າງ, ເຂົາເຈົ້າເວົ້ານຳພໍ່ວ່າ ໄທບ້ານຄິດຮອດຄິດເຖິງ ເຂົາເຈົ້າຢາກໃຫ້ພໍ່ກັບຄືນເມືອຢູ່ບ້ານສາ, ພວກລູກຈະລ້ຽງດູພໍ່ໃຫ້ດີທີ່ສຸດຈະບໍ່ໃຫ້ພໍ່ທຸກຍາກອີກ, ພໍ່ເວົ້ານຳລູກວ່າ ພວກລູກເອີຍ ! ພໍ່ກັບບ້ານບໍ່ໄດ້ດອກ ພໍ່ອາໄສຢູ່ນຳເຈົ້າພະລືສີ ແລະ ໄດ້ສັນຍານຳເພິ່ນແລ້ວ, ພໍ່ກັບຄືນບໍ່ໄດ້ຂໍໃຫ້ພວກລູກບອກໄທບ້ານວ່າພໍ່ກັບເມືອບໍ່ໄດ້ແລ້ວ, ພໍ່ຝາກຄວາມຄິດຮອດຄິດເຖິງທຸກໆຄົນຢູ່ໃນບ້ານອີກດ້ວຍພວກລູກກັບເມືອສາ, ພໍ່ຈະໄປຊອກຫາເຂົ້າມາໃຫ້ພະລືສີສັນກ່ອນ. ພວກລູກເມືອລາຍງານໄທບ້ານຮູ້ພໍ່ບໍ່ກັບດອກ ພໍ່ຢູ່ນຳພະລືສີແລ້ວ. ຈາກນັ້ນລູກ ທັງສີ່ຄົນກໍ່ຮູ້ສຶກເສຍໃຈໃຫ້ຕົນເອງວ່າບໍ່ຮັກພໍ່, ບໍ່ຮູ້ຈັກຕອບບຸນແທນຄຸນຕໍ່ພໍ່ທີ່ລ້ຽງດູ ພວກຕົນຈົນເຕີບໃຫຍ່ສໍ່ານີ້.

## 4.9 ເອົາຊໍ່ກະບັ້ງເປັນຄ່າຫົວ
## (ຕົ໊ລພະນອໍ່ຍໂປລ)

ໃນສະໄໝກ່ອນ ມີຄອບຄົວໜຶ່ງມີລູກຊາຍຜູ້ດຽວ ຊຶ່ງພໍ່ແມ່ຮັກແພງຫ່ວງໃຍຫຼາຍ ນຳຊີວິດຂອງລູກຊາຍ. ຕາມປະເພນີຂອງຊົນເຜົ່າກະຕູແລ້ວ ໃນເມື່ອໄດ້ລູກຊາຍແລ້ວເຂົາເຈົ້າມັກຈະຫ່ວງເລື່ອງຄອບຄົວເພາະເປັນບັນຫາສຳຄັນໃນຊີວິດຂອງລູກ, ເຂົາເຈົ້າຢາກໃຫ້ລູກພົບກັບສະຫວັນຄວາມສຸກຂອງມະນຸດແມ່ນຄວາມຮັກ, ເຂົາເຈົ້າຕ້ອງຊອກເມຍໃຫ້ລູກແຕ່ເຍົາໄວເດັກນັ້ນ

ເອງ. ເຂົາເຈົ້າຊອກເມຍໄວ້ເພື່ອສະກັດກັ້ນຄວາມຜິດພາດຂອງລູກ, ເຂົາເຈົ້າຢ້ານລູກຊາຍຂອງເຂົາເຈົ້າຫຼິ້ນກິນແບບຜິດລະບຽບປະເພນີຂອງບ້ານເມືອງ, ເຂົາເຈົ້າຢ້ານຖືກປັບໃໝໃສ່ ໂທດລູກເຕົ້າຂອງຕົນເອງ.

ໃນເມື່ອລູກຊາຍໃຫຍ່ຂຶ້ນເປັນບ່າວນ້ອຍແລ້ວ ພໍ່ແມ່ໄດ້ໄປໝາຍໝັ້ນເອົາລູກສາວຄອບຄົວໜຶ່ງໃຫ້ລູກຊາຍ, ເຂົາເຈົ້າເອົາເຄື່ອງຂອງທີ່ມີຄ່າໃຫ້ພໍ່ແມ່ຝ່າຍຍິງຈຳນວນໜຶ່ງລ່ວງໜ້າກ່ອນ. ເຂົາເຈົ້າຕ້ອງຊອກຫາເງິນຄຳ ເພື່ອໃຊ້ຄ່າຫົວຂອງລູກໃພ້ໃຫ້ໄດ້. ໃນເມື່ອແມ່ຍິງໃຫຍ່ຂຶ້ນມາເປັນສາວນ້ອຍແລ້ວ ພໍ່ແມ່ຜູ້ຊາຍໄດ້ແຕ່ງເອົາລູກໃພ້ໄດ້ເຄິ່ງຂອງຄ່າຫົວ, ເຂົາເຈົ້າເອົາລູກໃພ້ມາເຮືອນຂອງຜູ້ຊາຍເປັນປົກປ້ອງຄຸ້ມຄອງຊີວິດການເປັນຢູ່ຂອງນາງ. ໃນຕໍ່ມາຝ່າຍຊາຍກໍ່ແຕ່ງເອົານາງຢ່າງຄົບຖ້ວນຕາມຄ່າຫົວນາງແລ້ວຕົກເປັນຄົນຂອງຜູ້ຊາຍແລ້ວ, ພໍ່ແມ່ຝ່າຍຍິງພຽງແຕ່ຮັບຮູ້ວ່າ ເປັນລູກຂອງຕົນເອງເທົ່ານັ້ນ. ສ່ວນການເບິ່ງແຍງຊີວິດການຢູ່ທຸກຢ່າງນັ້ນ ແມ່ນເປັນພາລະໜ້າທີ່ຂອງຝ່າຍຊາຍເປັນຜູ້ຮັບຜິດຊອບຈະດີ ຫຼື ຮ້າຍແມ່ນຂອງພໍ່ແມ່ຝ່າຍຊາຍເປັນຜູ້ເບິ່ງແຍງ.

ເຂົາເຈົ້າລ້ຽງດູລູກໃພ້ພ້ອມໆກັນກັບການລ້ຽງດູລູກຊາຍຂອງຕົນເອງມັນບໍ່ແມ່ນເລື່ອງງ່າຍດາຍປານໃດດອກ. ພໍ່ແມ່ຕ້ອງເອົາຊີວິດຕໍ່ສູ້ຢ່າງລອດລົ້ມລອດຕາຍ, ເອົາຊີວິດຫຼັງສູ່ຟ້າໜ້າດິນຈຶ່ງມີເມັດເຂົ້າມາເຮືອນໃນແຕ່ລະປີ. ພໍ່ແມ່ຂອງຜູ້ຊາຍນັ້ນຢູ່ບໍ່ດົນເທົ່າໃດກໍ່ຕາຍຈາກໄປ, ເຮັດໃຫ້ລູກຊາຍເປັນກຳພອຍພໍ່ແມ່, ນັບຕັ້ງແຕ່ນັ້ນມາ ນາງກໍ່ກັບຄືນຢູ່ນຳພໍ່ແມ່ຂອງຕົນເອງ, ຍັງເຫຼືອທ້າວກຳພອຍຢູ່ຄົນດຽວທຳມາຫາກິນລ້ຽງຊີວິດຢ່າງທຸກຍາກລຳບາກ. ຜູ້ຊາຍຄົນນັ້ນ ກໍ່ບໍ່ສາມາດເອົານາງມາເປັນເມຍອີກຍ້ອນຕົນເອງອາຍຸຍັງນ້ອຍ, ບໍ່ທັນເຂົ້າໃຈເລື່ອງຄວາມຮັກເທື່ອ, ລາວຈຶ່ງບໍ່ສົນໃຈນຳນາງເທື່ອ. ລາວຢູ່ກິນ ແລະ ເຮັດໄຮ່ເຮັດສວນຄົນດຽວ.

ສ່ວນແມ່ຍິງທີ່ກັບຄືນມາຢູ່ນຳພໍ່ແມ່ນັ້ນ ນາງໃຫຍ່ເປັນສາວຂຶ້ນມາກໍ່ສວຍງາມເປັນຕາໜ້າຮັກໜ້າແພງ ແລ້ວຖືກຄົນອື່ນມາຍາດແຍ່ງເອົາໄປ, ແຕ່ລາວກໍ່ຍັງບໍ່ທັນເຂົ້າໃຈວ່າ ນາງເປັນຄົນຂອງຕົນເອງທີ່ພໍ່ແມ່ແຕ່ງເອົາໃຫ້ແລ້ວ, ໃນເມື່ອນາງໄປຢູ່ເຮືອນຂອງຜູ້ຊາຍຄົນອື່ນພໍ່ແມ່ຝ່າຍຍິງໄດ້ເວົ້າເອົາຄ່າຫົວລູກສາວຂອງຕົນເອງ ເປັນເທື່ອທີ່ສອງແມ່ນຄົນທີ່ສອງທີ່ພໍ່ແມ່ໄດ້ຄ່າຫົວອີກ. ນາງສ້າງຄອບຄົວກັບຊາຍຄົນອື່ນຈົນມີລູກເຕົ້ານຳ. ລາວກໍ່ຍັງບໍ່ທັນເວົ້າເລື່ອງຄ່າຫົວທີ່ພໍ່ແມ່ຝ່າຍຍິງໄດ້ເອົາໄປກິນໝົດແລ້ວ ແຕ່ລາວຍັງບໍ່ທັນທວງຖາມເລື່ອງເກົ່າທີ່ພໍ່ແມ່ຕົນເອງ ໃຫ້ຄ່າຫົວນຳພໍ່ແມ່ຝ່າຍຍິງຄົນນັ້ນ.

ໃນເມື່ອລາວໃຫຍ່ຂຶ້ນມາເຕັມຄີງແລ້ວ ລາວຈຶ່ງເວົ້າເລື່ອງທີ່ພໍ່ແມ່ລາວໝາຍໝັ້ນຍິງສາວຄົນໜຶ່ງໃຫ້ແກ່ຕົນເອງໃນເມື່ອກ່ອນ, ແຕ່ວ່າດຽວນີ້ ຍິງຄົນນັ້ນໄດ້ໄປເອົາຜົວໃໝ່ແລ້ວ. ສ່ວນລາວເອງກໍ່ຢາກໄດ້ເມຍແລ້ວ ແຕ່ບໍ່ມີວັດຖຸສິ່ງຂອງເງິນຄຳອັນໃດ ເພື່ອເປັນສິ່ງຄ້ຳປະກັນແກ່ຊີ

ວິດຂອງຕົນເອງ. ເພາະສະນັ້ນ ລາວຈຶ່ງຄິດວ່າຕົນເອງຕ້ອງທວງເອົາເງິນຄຳ ຫຼື ເຄື່ອງຂອງທີ່ໝາຍໝັ້ນກັບນາງນັ້ນຄືນມາໃຫ້ໄດ້. ລາວອອກບ້ານໄປຫາຄອບຄົວຜູ້ຍິງຄົນນັ້ນ ແລະໄປເວົ້າເອົາສິ່ງຂອງນຳພໍ່ແມ່ຝ່າຍຍິງຫຼາຍໆອັນ, ສ່ວນຝ່າຍແມ່ຍິງເວົ້າວ່າ ພວກເຮົາຈະໃຊ້ແທນວັດຖຸສິ່ງໃຫ້ໝົດ. ແຕ່ວ່າດຽວນີ້ພວກເຮົາຍັງບໍ່ທັນມີຫຍັງເທື່ອ, ລາວເວົ້າວ່າເປັນຫຍັງຈຶ່ງບໍ່ໄດ້ ? ຂ້ອຍຢາກໄດ້ດຽວນີ້ໃດ ລາວຮ້າຍດ່າເຂົາເຈົ້າວ່າ ພວກເຈົ້າເປັນຄົນຊົ່ວຫຼາຍເຫັນແກ່ຕົນເອງ ແຕ່ບໍ່ເຫັນໃຈຜູ້ອື່ນຈັກໜ້ອຍເລີຍ. ລາວດ່າວ່າເຂົາ, ແຕ່ເຂົາເຈົ້າເວົ້າຄວາມໃສ່ລາວວ່າ ເຈົ້າມາດ່າພວກເຮົາແບບນີ້ ແມ່ນມັນຜິດປະເພນີ, ເຈົ້າດ່າວ່າແນວນັ້ນ ເຮັດໃຫ້ພວກເຮົາເສຍໜ້າເຈົ້າວິນຍານ, ເຈົ້າວິນຍານບຸນບໍ່ຢູ່ນຳພວກເຮົາ, ມັນໜີຈາກຂວັນວິນຍານພວກເຮົາໄປແລ້ວ. ຫຼັງຈາກເຂົາເຈົ້າເວົ້າຄວາມໃຫ້ລາວແລ້ວ, ລາວຕອບວ່າຂ້ອຍຂໍໂທດນຳຫຼາຍ, ຂ້ອຍຈະສົມມາບຸນວິນຍານຂອງພວກເຈົ້າ, ຂ້ອຍຈະຫັກອອກຄ່າຫົວລູກສາວພວກເຈົ້າໃຫ້ສ່ວນໜຶ່ງ, ໃນມື້ນັ້ນລາວກັບເມືອບ້ານ ແລະ ມື້ໜ້າຂ້ອຍຈະມາຫາໃໝ່ ອີກເດີ.

ໃນມື້ຕໍ່ມາລາວອອກບ້ານໄປຫາພໍ່ແມ່ຝ່າຍຍິງອີກ (ພາສາກະຕູວ່າຕອມໂຄໂປູ) ໃນເມື່ອໄປຮອດພໍ່ແມ່ນາງແລ້ວ, ລາວເວົ້າຄວາມກັນອີກ ເວົ້າເຖິງເຄື່ອງຂອງແຕ່ລະຊະນິດທີ່ພໍ່ແມ່ຂອງລາວ ເອົາໃຫ້ລວມມີ: ຄວາຍ, ງົວ, ໝູ ແລະ ສິ່ງຂອງອື່ນໆທີ່ພໍ່ແມ່ຂອງຕົນເອງໃຫ້ໃນຍາມຕົນເອງຍັງນ້ອຍ. ແຕ່ວ່າດຽວນີ້ຕົນເອງໃຫຍ່ແລ້ວກໍ່ຢາກໃຫ້ທົດແທນຄືນອີກ. ລາວເວົ້າວ່າ ເມື່ອຍຫຼາຍແລ້ວ ນອນພັກຜ່ອນຢູ່ເຮືອນເຂົາເຈົ້ານັ້ນ ແລະ ໄດ້ຍິນເຈົ້າຂອງເຮືອນຫຼັງນັ້ນ ສີຊໍກະບັ້ງ ລາວຟັງສຽງດັງຂອງຊໍກະບັ້ງນັ້ນມ່ວນຫຼາຍ, ດັງຕຶດຕື! ດັງຕຶດຕື! ຕຶມໆ. ລາວລຸກນັ່ງຟັງສຽງດັງຂອງຊໍກະບັ້ງແມ່ນອອນຊອນຫູ, ສຽງດັງທີ່ກ່ອມຈິດໃຈລາວຫຼາຍ, ແລ້ວລາວຄິດຢາກໄດ້ຊໍກະບັ້ງນັ້ນ ເປັນເພື່ອນຮ່ວມຊີວິດຂອງລາວ. ໃນຄາວໜຶ່ງລາວກໍ່ເອີ້ນເອົາເຈົ້າຂອງຊໍກະບັ້ງ (ເປັນ ພາສາກະຕູວ່າອັນຕືລ) ວ່າຂ້ອຍຢາກໄດ້ຊໍກະບັ້ງນັ້ນ, ຖ້າໃຫ້ຂ້ອຍແລ້ວມັນເປັນການໃຊ້ໜີ້ ເພື່ອທົດແທນຄ່າຫົວລູກສາວ ຂອງເຈົ້າ ທີ່ພໍ່ແມ່ເຈົ້າໃຫ້ຂ້ອຍໃຫ້ໝົດນຳຊໍກະບັ້ງນີ້, ແຕ່ວ່າຊໍກະບັ້ງມີລາຄາແພງຫຼາຍ ພວກເຮົາບໍ່ຢາກໃຫ້ເຈົ້າດອກ. ລາວຖາມວ່າເຮັດແນວໃດມັນຈຶ່ງດັງ, ມັນຮ້ອງເອົາເອງບໍ? ເຂົາເຈົ້າບອກລາວວ່າ ເຈົ້າຢາກໃຫ້ມັນມີສຽງດັງກ່ອມຈິດກ່ອມໃຈເຈົ້ານັ້ນ, ເຈົ້າຕ້ອງມີພາເຂົ້າລ້ຽງມັນຈຶ່ງດັງ, ມັນຈຶ່ງມີສຽງຮ້ອງມ່ວນໆກ່ອມຫູກ່ອມອາລົມເຈົ້າ. ຫຼັງຈາກ ລາວໄດ້ຊໍກະບັ້ງແລ້ວລາວກັບເມືອບ້ານ, ເມື່ອຮອດເຮືອນແລ້ວລາວເອົາປະຢູ່ແຈເຮືອນ, ແລ້ວໄປຈັບເອົາໄກ່ມາຂ້າພ້ອມທັງຄົວ ແລະ ຕົ້ມໃຫ້ສຸກ, ໜຶ້ງເຂົ້າສຸກ ຈາກນັ້ນຈຶ່ງມອບໃຫ້ຊໍກະບັ້ງກິນ, ແລ້ວລາວນອນຟັງກໍ່ບໍ່ໄດ້ຍິນສຽງດັງຈັກເທື່ອ, ລາວບອກໃຫ້ຊໍກະບັ້ງກິນເຂົ້າໃຫ້ອີ່ມແລ້ວຈຶ່ງໃຫ້ຮ້ອງມີສຽງດັງອັນມ່ວນອອນຊອນໃຈແດ່. ແຕ່ລາວນອນຟັງອີກກໍ່ບໍ່ມີສຽງ ມີແຕ່ຄົນໃນເຮືອນໃກ້ຄຽງລັກຟັງລາວເວົ້າກັບຊໍກະບັ້ງຢູ່, ເຂົາເຈົ້າເລີຍຖາມລາວວ່າ ເຈົ້າລ້ຽງໃຜ? ລາວຕອບວ່າ

**ຂ້ອຍລ້ຽງຊຳກະບັ້ງ**, ເຂົາເຈົ້າຫົວຂວັນລາວວ່າ **ຊຳກະບັ້ງຕ້ອງ**ແມ່ນຕ່ອຍ ຫຼືສິມັນຈຶ່ງດັງ, ມັນບໍ່ຮູ້**ຈັກ ຮ້ອງ**ດອກ, ລາວເວົ້າວ່າ ເຂົາເຈົ້າຕົວະລາວອີກແລ້ວ, ຕົນເອງໄດ້ມັນມາຍ້ອນການໃຊ້ແທນໜີ້ ສິນຄ່າຫົວຈິນໝົດ, ລາວກັບຄືນໄປເວົ້າຄວາມ ກັບພໍ່ແມ່ຝ່າຍຍິງຄືນນັ້ນ ກໍ່ບໍ່ໄດ້ເວົ້າອີກແລ້ວ.

## 4.10 ຄົນເປັນເສືອ
## (ຄູຍແກົດອະລູ້ຮ)

ໃນສະໄໝບູຮານນັ້ນ ຄົນກະຕູໃຜໆກໍ່ຮູ້ຈັກຊື່ຂອງສອງອ້າຍນ້ອງຄົນນີ້, ຊື່ອ້າຍແມ່ນໂໜງ, ຊື່ນ້ອງແມ່ນເຊຍ, ສະນັ້ນຄົນກະຕູມັກເອີ້ນຊື່ທັງສອງຄົນນີ້ພ້ອມກັນວ່າ ໂໜງເຊຍເລີຍ. ໂໜງເຊຍມີຖິ່ນຖານຢູ່ບ້ານແຫ່ງໜຶ່ງ, ເຂົາເຈົ້າມີຄອບຄົວ, ມີລູກຫຼານ ແລະ ມີເຮືອນຊານບ້ານຊ່ອງເໝືອນຄົນອື່ນໆ, ໂໜງເຊຍໄດ້ເຮັດໄຮ່ສວນນຳລູກເມຍ ແລະ ກິນຢູ່ນຳຄອບຄົວຂອງຕົນເອງ, ຄົນໃນບ້ານໃຜໆກໍ່ບໍ່ຮູ້ຈັກເພາະເລື່ອງໃຜລາວ ຢູ່ໃນບ້ານສອງຄົນນີ້ຢູ່ແບບມິດງຽບບໍ່ໃຫ້ຄົນອື່ນສົງໄສພວກເຂົາໄດ້ຫຼາຍປີມາແລ້ວ.

ໂໜງເຊຍເປັນເສືອໄດ້ຫຼາຍປີມາແລ້ວ ກໍ່ບໍ່ມີໃຜຮູ້ຈັກວ່າຄົນເປັນເສືອ, ແຕ່ວ່າງົວ, ຄວາຍ, ມ້າ, ໝູ ແລະ ແບ້ ທຸກໆເດືອນກໍ່ມີເສືອຂົບສັດບ້ານ ແລະ ຖືກເສືອຂົບເສືອກິນ, ເຮັດໃຫ້ສະພາບຢູ່ບ້ານວຸ້ນວາຍຂຶ້ນຫຼາຍບັນຫາຕໍ່ກັນ, ຄົນໃນບ້ານສົງໄສກັນວ່າມີຜູ້ເຮັດຜິດພາດກັບເຈົ້າວິນຍານພູເຈົ້າວິນຍານປ່ານັ້ນແລ້ວ, ຈຶ່ງພາໃຫ້ມີເສືອເຂົ້າບ້ານມາຂົບສັດຢູ່ຕະຫຼອດ. ນອກນັ້ນເສືອໂໜງເຊຍ ຍັງອອກໄປຂົບກິນໝູຊາວບ້ານໃກ້ຄຽງນຳອີກ. ໃນເມື່ອມີສະພາບລົບກວນຄືແນວນັ້ນ ຊາວບ້ານຢູ່ບໍ່ເປັນສຸກ. ຊາວບ້ານກໍ່ພາກັນມາແປງຮີດຄອງ ຂ້າງົວຄວາຍເປັນໂຕແກ້ບະ ຫາເຈົ້າວິນຍານທີ່ລົງມາຄຸ້ມຄອງສັດສາວາສິ່ງຂອງຊາວບ້ານໃຫ້ແດ່ ຫຼັງຈາກແປງຮີດຄອງປະເພນີ ທີ່ສັກສິດຂອງບ້ານໄດ້ລ່ວງກາຍໄປຫຼາຍເດືອນເຕີບ, ແຕ່ວ່າ ງົວ, ຄວາຍ, ໝູ ແລະ ມ້າ ກໍ່ຍັງເສຍຫາຍໄປຢູ່. ນອກຈາກສັດພາຍໃນບ້ານແລ້ວຍັງມີສັດຂອງຊາວບ້ານອື່ນອີກກໍ່ເສຍຄືກັນ ແລະ ຜູ້ອື່ນໆທີ່ຊື້ງົວຄວາຍມາລ້ຽງກໍ່ຖືກໂໜງເຊຍລັດຂົບກິນອີກ.

ໃນເມື່ອມີເສືອຂົບກິນສັດບ້ານຫຼາຍ ຊາວບ້ານກໍ່ຕິດຕາມການເຄື່ອນໄຫວຂອງຄົນຢູ່ໃນບ້ານມີອັນໃດຜິດປົກກະຕິພາຍໃນຄອບຄົວ ຫຼືບຸກຄົນໃດໜຶ່ງ. ເຂົາເຈົ້າຕິດຕາມເບິ່ງຄອບຄົວໂໜງເຊຍນີ້ຜິດປົກກະຕິກັບຜູ້ອື່ນ ເພາະວ່າເຫັນຄອບຄົວນີ້ມີຊີ້ນກິນບໍ່ຂາດໃນທຸກມື້, ຊາວບ້ານຈຶ່ງຕິດຕາມທ້າວໂໜງເຊຍອອກຈາກບ້ານໄປເຮັດຫຍັງ? ທັງຕິດຕາມການອອກຈາກບ້ານໄປໄຮ່ເມຍໄປກ່ອນສຳລັບໂໜງເຊຍປ່ຽນຮ່າງ**ຈາກຄົນ**ກາຍເປັນເສືອເຂົ້າປ່າໄປຕາມຫຼັງ, ໃກ້ຈະຮອດ

ໄຮ່ປ່ຽນ ຮ່າງຈາກເສືອມາເປັນຄົນອີກ ພ້ອມເສຍຫຍ້າໄຮ່ນຳລູກເມຍເປັນປົກກະຕິ. ສ່ວນລູກເມຍກໍ່ບໍ່ຮູ້ຈັກວ່າຜົວຂອງຕົນເອງເປັນເສືອເລີຍ. ເຖິງວ່າຊາວບ້ານຮູ້ຈັກໂໜງເຊຍເປັນເສືອກໍ່ຕາມ ເຂົາເຈົ້າບໍ່ເວົ້າຊີ້ບຸກຄົນໂດຍກົງທີ່ປ່າວເຕືອນກັນເປັນພາງໆວ່າ ເສືອຄົນຂົບກິນສັດບ້ານ, ຊາວບ້ານເວົ້າຕໍ່ກັນວ່າ: ຮອຍຕີນຢຽບດິນມີຫ້ານິ້ວ ແມ່ນຄົນເປັນເສືອແນ່ນອນ, ຕາມທຳມະດາແລ້ວຮອຍຕີນເສືອມີສີ່ນິ້ວແມ່ນເສືອປ່າ. ຫຼັງຈາກການຈຳແນກຮອຍຕີນເສືອຢ່າງຈະແຈ້ງແລ້ວໂໜງເຊຍກໍ່ບໍ່ກ້າຂົບກິນສັດຂອງຊາວບ້ານອີກ.

ຫຼັງຈາກຊາວບ້ານຮູ້ວ່າໂໜງເຊຍ ແປງເພດປ່ຽນໄປມາໄດ້ໂໜງເຊຍບໍ່ສາມາດຈະຂົບ ກິນສັດພາຍໃນບ້ານແລ້ວຈຳເປັນຕ້ອງປ່ຽນວິທີໃໝ່, ທັງສອງອອກໄປຄ້າຂາຍໄກຈາກບ້ານ, ເຂົາເຈົ້າໄປຂາຍເກືອ, ພ້າ ແລະ ມີດນຳກັນຫຼາຍຄົນ ເມື່ອໄປວິດບ້ານແລ້ວໂໜງເຊຍເຮັດຕີເຈັບທ້ອງໂລດ, ໃຫ້ພວກເຈົ້າໄປກ່ອນຂ້ອຍໄປຖ່າຍໜັກ. ໃນເມື່ອຄົນໄປຫວິດແລ້ວໂໜງເຊຍເຂົ້າປ່າລີບປ່ຽນເພດເປັນເສືອໂລດແລ້ວຍ່າງລັດພູລັດຫ້ວຍໄປໂລດ ໃກ້ຈະຮອດບ້ານໂໜງເຊຍປ່ຽນຮ່າງເປັນມະນຸດອີກ ແລ້ວອອກຈາກປ່າຍ່າງໄປນຳຄົນອື່ນ. ເວລາກິນເຂົ້າໂໜງເຊຍເຮັດຕົນອນທຳທ່າບໍ່ຢາກເຂົ້າ, ນອນຈົນຄ່ຳມືດ ຄົນອື່ນກໍ່ນອນຫຼັບໝົດແລ້ວໂໜງເຊຍກໍ່ລັກອອກໄປຂົບກິນໝູຢູ່ບ້ານອື່ນພຸ້ນພໍດີໄກ່ຂັນກົກກໍ່ກັບມາບ່ອນທີ່ຕົນເອງພັກ, ຖ້າຄົນເຫັນກໍ່ທຳທ່າມາແຕ່ຖ່າຍໜັກ. ໃນເມື່ອຫຼາຍປີຜ່ານໄປກໍ່ມີຫຼາຍໝູ່ບ້ານເຂົາເຈົ້າຮູ້ຈັກໂໜງເຊຍເປັນເສືອ, ເຂົາກໍ່ມີສະຕິຂຶ້ນຕື່ມຖ້າໄດ້ຍິນເສືອຂົບກິນໝູຢູ່ແຄມບ້ານ ນັ້ນເຂົາເຈົ້າຕ້ອງຊອກຫາຮອຍຕີນສາກ່ອນ, ຖ້າເຫັນຮອຍຕີນຫ້ານິ້ວແລ້ວເຂົາເຈົ້າຕ້ອງຮຽກຊື່ໂລດວ່າ ໂໜງເຊຍ, ໃນເມື່ອໂໜງເຊຍໄດ້ຍິນເຂົາຮຽກຊື່ກໍ່ໜີໄປຢ່າງໄວ ແລະ ໂໜງເຊຍບໍ່ໄປຂາຍເຄື່ອງຢູ່ບ້ານທີ່ຕົນເອງຂົບກິນໝູນັ້ນອີກ, ສ່ວນຫຼາຍກັບເມືອບ້ານວ່າຕົນເອງຝັນບໍ່ດີ, ພວກໝູ່ທີ່ໄປຄ້າຂາຍນຳກັນກໍ່ເຂົ້າໃຈດີວ່າເຂົາເປັນເສືອ ຊອກຂົບກິນສັດບ້ານອື່ນ ແຕ່ຖືກເຂົາດ່າຈຶ່ງບໍ່ກ້າໄປອີກ.

ວັນເດືອນປີຜ່ານພົ້ນໄປ ໂໜງເຊຍກໍ່ມີອາຍຸຫຼາຍປີແລ້ວ ເຂົາເຈົ້າທັງສອງຄົນເປັນເສືອຖ້າວ່າບ້ານໃດທີ່ຂໍໝູ ຫຼືສັດອື່ນໆບ້ານນັ້ນຕ້ອງຂໍຂວັນນຳເຈົ້າວິນຍານຄົນຕາຍສາກ່ອນ, ຖ້າຂວັນເຈົ້າ ວິນຍານຄົນຕາຍເອົາໃຫ້ ການຂົບກິນສັດງ່າຍໄດ້ໄວ, ຖ້າວ່າຂວັນເຈົ້າວິນຍານບໍ່ໃຫ້ການຂົບກິນສັດແມ່ນຍາກຫຼາຍ, ບາງເທື່ອການຂົບກິນສັດບໍ່ໄດ້ອີກດ້ວຍ. ໂໜງເຊຍຢູ່ຫຼາຍປີເປັນເສືອກໍ່ເຫັນວ່າອາຍຸກະສຽນເຖົ້າແກ່ໄປບໍ່ສາມາດໄປມາແລ້ວ ໂໜງເຊຍຈຶ່ງເວົ້າບອກລູກເມຍວ່າ ຖ້າຕົນເອງຕາຍຢ່າຂຸດຂຸມຝັງເລິກຫຼາຍໃຫ້ຝັງຕື້ນໆກໍ່ໄດ້, ບໍ່ຖົມດີທີ່ສຸດເອົາແຕ່ໃບໄມ້ປົກໄວ້ກໍ່ຍິ່ງດີ. ໃນເມື່ອເຂົາຕາຍໄປແລ້ວ ຊາວບ້ານຕ້ອງຕັດຫົວໄປຝັງໄວ້ບ່ອນໜຶ່ງແລ້ວເອົາໂຕໄປຝັງໄວ້ອີກບ່ອນໜຶ່ງ ເພື່ອບໍ່ໃຫ້ແປງເພດເປັນເສືອໄດ້ອີກ.

# 5. ເມື່ອຕາຍໄປແລ້ວ

## (ກະຫຼັງໂຫຼ້ຍຄອຍເຈັດ)

## 5.1 ເກີດເປັນໝີ

## (ແກີດວີວາຊແຍີດ)

ຊີວິດຂອງຄົນຄືກັບຕົວລະຄອນ, ແຕ່ວ່າໝົດທຸກຄົນຢູ່ໃນໂລກຕ້ອງຕໍ່ສູ້ກັບຊີວິດເພື່ອຄວາມຢູ່ລອດ. ເຂົາເຈົ້າຢາກສ້າງຊີວິດຂອງຕົນເອງ ໄປໃນທາງທີ່ດີໃຫ້ສັງຄົມຍົກຍໍເປັນຄົນທີ່ມີຄຸນງາມຄວາມດີຕໍ່ສັງຄົມມະນຸດ, ຄົນໃນໂລກເຮົານີ້ໃຜໆກໍ່ຢາກຮັ່ງມີ ຢາກມີອຳນາດວາດສະໜາເໜືອກວ່າຜູ້ອື່ນ, ຢາກໃຫ້ຕົນເອງມີຄວາມສຸກຄວາມຈະເລີນຢູ່ໃນໂລກ.

ແຕ່ວ່າໃນເມື່ອຕາຍໄປແລ້ວມະນຸດຍັງມີວິນຍານ, ເຂົາຄິດຫາວິນຍານຜູ້ຕາຍຈະເປັນໄປແນວໃດ ມັນຈະໄດ້ຂຶ້ນສະຫວັນບໍ? ມັນຕາຍໄປແລ້ວ ມັນໄປເປັນຂ້ອຍຂ້າຮັບໃຊ້ຄົນຕາຍທີ່ມີອຳນາດນັ້ນບໍ? ຕາຍໄປແລ້ວໄປຢູ່ນຳປູ່ຍ່າທີ່ຕາຍໄປກ່ອນ ຈະຢູ່ນຳຜີຜູ້ຈັບຂວັນເຈົ້າວິນຍານໄປ, ໄປຢູ່ນຳໃຜ ຫຼື ໄປຢູ່ບ່ອນຫຼຸມຝັງສົບ. ແຕ່ວ່າບາງຄົນຕາຍໄປຕາມເວນຕາມກຳ, ຕາມເຊື້ອສາຍໄປເກີດໄປຂານເປັນສັດສາວາສິ່ງຊອກຫາກິນຜົນລະປູກຂອງຄົນ.

ແມ່ເຖົ້າໂດນເລົ່າວ່າມີຄົນໜຶ່ງຕາຍໄປແລ້ວ ພັດໄປເກີດເປັນໝີອອກຈາກໂລງສົບຂອງຕົນເອງ (ພາສາກະຕູເວົ້າວ່າວີວາຊ). ໃນເມື່ອຄົນໄປເບິ່ງໂລງສົບຂອງລາວ ເລີຍເຫັນໂລງ ສົບຖືກເປີດອອກຈ່າງປ່າງຢູ່ ແຕ່ບໍ່ເຫັນຊາກສົບຂອງຄົນຕາຍ ເຂົາເຈົ້າເຫັນອ້ອມແອ້ມຂອງໂລງສົບນັ້ນມີແຕ່ຮອຍຕີນໝີເທົ່ານັ້ນ ເຂົາເຈົ້າຈຶ່ງເວົ້າວ່າຄົນຕາຍເກີດເປັນໝີແລ້ວ. ເຂົາເຈົ້າຟ້າວ ປະກາດໃຫ້ຄົນຢູ່ທຸກບ້ານໃຫ້ລະມັດລະວັງຕໍ່ໝີຮ້າຍໂຕໜຶ່ງ, ເຂົາເຈົ້າຢ້ານຫຼາຍໝີໄປບຸກລຸກທຳລາຍສວນສາລີ ແລະ ໄຮ່ສາລີຫຼາຍແຫ່ງ, ເຮັດໃຫ້ວຸ້ນວາຍໄປທົ່ວໝູ່ບ້ານໄປໃສມາໃສກໍ່ໄດ້ຍິນແຕ່ເລື່ອງໝີ, ເຂົາເຈົ້າຕິດຕາມເບິ່ງຮອຍຕີນ ກໍ່ເຫັນທ້ານັ້ວແມ່ນຄົນຕາຍເປັນໝີ.

ຊອກຫາວິທີລັດຂ້າໝີຜີໂຕນັ້ນຢ່າງດຸເດືອດ ເຂົາເຈົ້າເຮັດຂວາກ ແລະ ເຮັດຫ່າວ ເພື່ອຂ້າໝີຜີໃຫ້ໄດ້ ໂດຍສະເພາະຜູ້ເປັນລູກຫຼານຂອງໝີຜີເປັນຜູ້ໄປຊອກຫາຂ້າ. ໝີຜີໂຕນັ້ນກິນເຂົ້າໄຮ່, ກິນສາລີໝົດແລ້ວຈະຊອກຂົບກິນຄົນອີກ. ໃນບໍ່ຊ້າເຂົາເຈົ້າກໍ່ສາມາດຂ້າໝີຜີໂຕນັ້ນໄດ້ຕາມແຜນການ, ໃນເມື່ອຂ້າແລ້ວເຂົາເຈົ້າກວດກາໃນຮ່າງກາຍຂອງໝີຜີໂຕນັ້ນ ກໍ່ມີປອກແຂນບ້ວງຢູ່ ໃນແຂນ, ນັບຕັ້ງແຕ່ນັ້ນມາ ບາງຄົນບໍ່ກິນໝີ, ເຂົາເຈົ້າເວົ້າວ່າ ຄົນຕາຍນັ້ນເກີດເປັນໝີແທ້.

# 5.2 ເກີດເປັນຟານ
# (ແກີດເປັນຕັຣຍອັງ)

ຊີວິດຂອງຄົນທີ່ຢູ່ຫ່າງໄກສອກຫຼີກຈາກຄວາມຈະເລີນຫຼາຍ, ແຕ່ເຂົາເຈົ້າຊໍ້າພັດເປັນຄົນທີ່ໃກ້ຊິດກັບທຳມະຊາດຫຼາຍຢ່າງ, ເຂົາເຈົ້າຕັ້ງຖິ່ນຖານໃກ້ກັບປ່າດົງທີ່ຕຶບໜາ. ຄົນເວົ້າວ່າເລື່ອງປ່າແຮ່ວ (ປ່າຊ້າ) ແມ່ນບ່ອນຝັງຄົນຕາຍ ມັນແຮງເປັນຕາຢ້ານຫຼາຍ, ຕົ້ນໄມ້ໃຫຍ່ໆປົກຫຸ້ມທົ່ວປ່າຊ້າຄົນຕາຍ, ຊຶ່ງຝັງມາໄດ້ຫຼາຍຊົ່ວຄົນແລ້ວ ກໍ່ຍິ່ງເຮັດໃຫ້ຕົ້ນໄມ້ງອກງາມ, ເຮັດໃຫ້ປ່າຊ້າມືດອຶມຄຶ້ມ, ຄົນເຫັນໃນປ່າຊ້ານັ້ນເຄັ່ງຂຶມຫຼາຍທີ່ເປັນບ້ານເຈົ້າວິນຍານຂອງຄົນຕາຍຢູ່ອາໄສ, ປ່າຊ້າສະໄໝກ່ອນມັນເປັນປ່າຕຶບດົງໜາແທ້ ເຫັນຂຸມຝັງສົບລຽນຊາບລາບກໍ່ມີຫຼັກຫີນ ຫຼື ໄມ້ຝັງໄວ້ຢູ່ທາງ ເບື້ອງຫົວຂອງຄົນຕາຍ ເພື່ອເປັນການໝາຍໄວ້ທາງຫົວທາງຕີນຂອງຄົນຕາຍຢູ່ເບື້ອງໃດ, ບາງເທື່ອມີພີ່ນ້ອງຢາກຂຸດເອົາກະດູກເມືອໄວ້ບູຊາຢູ່ທາດ.

ຫຼັງຈາກເອົາຄົນຕາຍໄປຝັງຖິ້ມແລ້ວ, ນັບແຕ່ນັ້ນມາເຂົາເຈົ້າຕ້ອງໄປເບິ່ງຢູ່ໃກ້ຂຸມສົບມີສັດໂຕໃດໄປຜ່ານ ຫຼືວ່າສັດໄປຢູ່ຕາມຂຸມສົບນັ້ນຈຶ່ງເອົາໃຈໃສ່ເປັນພິເສດ, ຢ້ານສັດໂຕໃດໂຕໜຶ່ງໄປຂ້າມຜ່ານຂຸມສົບຄົນຕາຍ, ຄົນຕາຍຈະແປງເພດເປັນຄືກັບສັດທີ່ເຕັ້ນຂ້າມ, ສັດໄປຢູ່ໄປພັກເຊົາເໝືອນໄກ່ຟັກໄຂ່ນັ້ນ. ຄົນເວົ້າເລື່ອງປ່າຊ້າບ້ານນອກຂອກນາແລ້ວ ມັນບໍ່ແມ່ນເລື່ອງຂອງທຳມະດາດອກ, ບາງຄັ້ງໄປຝັງຄົນຕາຍໃຜໆກໍ່ບໍ່ຢາກຢູ່ທາງຫຼັງ ໃນເວລາກັບບ້ານຜູ້ໃດກໍ່ຢາກຢູ່ໜ້າ, ຄົນຢູ່ຕາມຫຼັງຄົນກັບເມືອນັ້ນເຂົາເຈົ້າຢ້ານຜີຈ່ອງບ່າ, ຢ້ານຄົນຕາຍເອົາຂວັນວິນຍານຂອງຄົນຍັງມີຊີວິດໄປຢູ່ນຳຄົນຕາຍທີ່ປ່າຊ້າ, ໃນບໍ່ດົນນານພໍເທົ່າໃດ ຄົນທີ່ເສຍຂວັນຈະຕາຍໄປ.

ຟານໂຕໜຶ່ງໄດ້ໄປຜ່ານຂຸມຝັງສົບໃໝ່ ແລະ ຜ່ານໄປຢູ່ບ່ອນນັ້ນທຸກມື້, ຜີຄົນຕາຍນັ້ນຈະຄ່ອຍປ່ຽນໂຕເອງໄປຕາມການດຶງດູດຂອງເງົາພະລັງຂອງຟານ ໃນເມື່ອຄົນຕາຍໄດ້ປ່ຽນຈາກຮູບເດີມແລ້ວ ຕີນຄົນປ່ຽນມາເປັນຮູບຮ່າງຕີນຟານ, ມືກໍ່ປ່ຽນເປັນຕີນຟານ, ແຕ່ວ່າຜີຄົນຕາຍນັ້ນປ່ຽນໂຕຕົນເອງບໍ່ໃຫຍ່ເທື່ອ, ມັນໃຫຍ່ສໍາໂຕກະຮອກໝາຍຄວາມວ່າເໝືອນເດັກນ້ອຍຢູ່ທ້ອງແມ່ນັ້ນເອງ, ໃນເມື່ອຟານຮູ້ຈັກວ່າຜີຄົນຕາຍນັ້ນປ່ຽນແບບຮູບຮ່າງແບບໂຕເອງ, ຟານ ໂຕນັ້ນຄວັດດິນອອກເຮັດເປັນຮູນ້ອຍໆ ໄດ້ແລ້ວຟານກໍ່ອອກມາຕາກແດດ ເຮັດໂຕຖືກອາກາດ ແລ້ວໂຕຈຶ່ງໃຫຍ່ຂຶ້ນສໍາຟານປ່າຄືກັນ.

ວັນເວລາໄດ້ຜ່ານພົ້ນໄປ ການເປີກສາຫາລືກັນກ່ຽວກັບຄົນຕາຍແປງເພດເປັນຟານນັ້ນ

ກໍ່ເປັນເວລາດົນນານໄປແລ້ວ, ມີບາງຄົນກໍ່ເຊື່ອແຕ່ມີບາງຄົນກໍ່ບໍ່ເຊື່ອ. ຈົນຫຼາຍປີຜ່ານໄປມີມື້ໜຶ່ງຊາວບ້ານພາກັນໄປລ່າເນື້ອ, ເຂົາເຈົ້າເອົາໝາພານໄປໄລ່ສັດປ່າ ເພື່ອເອົາສັດປ່າມາກິນ, ເຂົາເຈົ້າໄລ່ສັດປ່າໃນມື້ນັ້ນໄດ້ຟານໂຕໜຶ່ງ, ເຂົາເຈົ້າຫາມຟານມາທັງໂຕໂຕ່ງເລ່ງ, ໃນເມື່ອເຖິງບ້ານເຂົາເຈົ້າກໍ່ເອົາຟານລົນໄຟຫຼົກຂົນອອກແລ້ວຈຶ່ງຄົວຟານໂຕນັ້ນ ກໍ່ພໍດີເຫັນຂາໜ້າມີປອກແຂນສຸບໃສ່ໃນກະດູກໜັງປົກຫຸ້ມຢູ່. ໃນເມື່ອເຫັນປອກແຂນແລ້ວຄົນກໍ່ວຸ້ນວາຍວ່າຄົນຕາຍເປັນຟານ, ຄົນຈຳນວນໜຶ່ງບອກໃຫ້ເອົາໄປຖິ້ມ ເພາະຂີ້ດຽດຊີ້ນຟານ, ແຕ່ຈຳນວນໜຶ່ງ ພັດເວົ້າວ່າບໍ່ແມ່ນຟານຄົນດອກຟານທຳມະຊາດ, ຫຼາຍຄົນຖົກຖຽງກັນວ່າຟານແນວໃດ ຈຶ່ງມີປອກແຂນວົງສຸບໃສ່ຕີນຟານຄັກແນ່. ໃນເມື່ອເປັນແນວນັ້ນ ມີຄົນຈຳນວນໜຶ່ງກິນຊີ້ນຟານໂຕນັ້ນ ແຕ່ມີຈຳນວນໜຶ່ງບໍ່ກິນ ເຂົາເຈົ້າຂີ້ດຽດວ່າຄົນເປັນຟານຜີວ່າຊັ້ນ.

## 5.3 ເກີດເປັນເສືອແມວ
## (ແກ້ດວົວາຊອະລູ້ຮຮົວ)

ຊີວິດຂອງຄົນເຮົາຢູ່ໃນໂລກນີ້ ກໍ່ມີຫຼາຍສິ່ງຫຼາຍຢ່າງທີ່ໄດ້ພົບໄດ້ເຫັນ ສິ່ງທີ່ນາບຊູ່ຈິດໃຈຂອງຄົນບ້ານນອກຂອກນາຫຼາຍປີມາແລ້ວ, ປະກົດການໃນຊີວິດເປັນເລື່ອງທີ່ແປກປະຫຼາດນັ້ນຈົນກາຍເປັນເລື່ອງນິທານທີ່ເລົ່າລືກັນມາ ຊຶ່ງກັບກາຍເປັນປະເພນີຄວາມເຊື່ອຖືຂອງຄົນຮຸ່ນໃໝ່, ເຂົາເຈົ້າພາກັນເລົ່າສູ່ກັນຟັງແລ້ວພາກັນຄິດສົນໃຈນຳສິ່ງທີ່ເກີດຂຶ້ນມານັ້ນ, ຄົນບ້ານ ນອກຂອກນາອາໄສຄວາມເຊື່ອຖືເປັນໂຮງໝໍປິ່ນປົວຄົນເຈັບ ໄດ້ເອົາເລື່ອງລາວຂອງປູ່ຍ່າຕາຍາຍເປັນໂຮງຮຽນສອນຄົນຕະຫຼອດມາ ພວກເພິ່ນພາກັນເລົ່າເລື່ອງສູ່ກັນຟັງແລ້ວ ຈຶ່ງນຳມາ ເປັນບົດຮຽນໃນການສຶດສອນຢູ່ໂຮງຮຽນຫຼັງໜຶ່ງຂອງຄົນບູຮານສ້າງໄວ້ແກ່ລູກຫຼານເທົ່ານັ້ນ.

ເລື່ອງນີ້ໄດ້ເລົ່າວ່າ ຊາຍໂສດຜູ້ໜຶ່ງເອົາເມຍແມ່ໝ້າຍ, ແຕ່ວ່າຄວາມມັກຮັກບໍ່ຄ່ອຍຖືກຕາມປະເພນີຂອງທ້ອງຖິ່ນປານໃດ, ເຂົາເຈົ້າມັກຮັກກັນກ່ອນ, ພໍ່ແມ່ຮັບຮູ້ຕາມທີ່ຫຼັງແມ່ນບໍ່ຖືກກັບຮີດຄອງ ປະເພນີດັ້ງເດີມຄືແນວນັ້ນ ໃນເມື່ອລູກເຫັນຜູ້ສາວທີ່ງາມທີ່ຖືກຫູຖືກຕາຂອງຕົນເອງແລ້ວ, ລູກບອກພໍ່ແມ່ໃຫ້ໄປສູ່ຂໍເອົາມາເປັນລູກໃພ້, ເຂົາເຈົ້າເອົາກັນເປັນຜົວເມຍບໍ່ດົນກໍ່ມີລູກເກີດອອກມາ, ມີຊີວິດຢູ່ນຳພໍ່ແມ່ພຽງແຕ່ສອງຂວບເທົ່ານັ້ນກໍ່ຕາຍປະໄປຢ່າງໜ້າເສຍດາຍ. ເຂົາເຈົ້າໄປຝັງທີ່ປ່າຊ້າເກົ່າແກ່ຂອງບ້ານແຫ່ງໜຶ່ງ, ຫຼັງຈາກຝັງລູກຖິ້ມກໍ່ບໍ່ສົນໃຈນຳຂຸມຝັງສົບຂອງລູກ ບໍ່ໄປເບິ່ງໄປຄອຍ ຍ້ອນວ່າລູກຍັງນ້ອຍຈະບໍ່ເປັນໄພອັນຕະລາຍແນວໃດໄດ້.

ຫຼັງຈາກຕາຍໄປເປັນເວລາປີກວ່າມາແລ້ວ, ຈຶ່ງມີເຫດການເກີດຂຶ້ນ ເຫັນເດັກນ້ອຍຄືແມວອອກມາຈາກປ່າຊ້າມາຊອກຂົບກິນໄກ່ນ້ອຍ, ເປັນແມວນ້ອຍທີ່ແປກປະຫຼາດ, ມັນສະຫຼາດຫຼາຍ. ພວກຄົນ ທີ່ເຮັດກະຕ່ຳນັ້ນ, ເຂົາເຈົ້າເຮັດຄອກຫຼອກໃຫ້ມັນເຂົ້າໄປກິນໄກ່ນ້ອຍກໍ່ບໍ່ເຂົ້າ, ມັນມາໃຫ້ຜູ້ໃຫຍ່ເຫັນ, ເຮັດໃຫ້ຜູ້ໃຫຍ່ສົງໄສວ່າອາດຈະເປັນເຊື້ອສາຍເສືອແມວແມ່ນຜີມາເກີດ, ເຂົາເຈົ້າບອກຄອບຄົວກວດກາເບິ່ງຂຸມຝັງສົບຂອງລູກຜູ້ທີ່ຕາຍໄປນັ້ນ, ເມື່ອໄປເບິ່ງບ່ອນຕົນເອງຫຼັກຝັງລູກຖິ້ມໄວ້ນັ້ນ ກໍ່ປະກົດເຫັນຂຸມຝັງສົບມີຮູຈົ່ງປົ່ງ ແລະ ຮອຍເສືອແມວນອນພັກເຊົາ, ຫຼັງຈາກເຫັນລູກຜີເກີດເປັນເສືອແມວນ້ອຍກໍ່ເປັນຕາຢ້ານ, ຢ້ານມັນທຳລາຍໝູ່ບ້ານ ຫຼາຍໝູ່ບ້ານຈະປັບໃໝຕົນເອງຕາມປະເພນີຂອງທ້ອງຖິ່ນ.

ຫຼັງຈາກ ພໍ່ແມ່ຮູ້ຈັກລູກຂອງຕົນເອງເກີດເປັນເສືອແມວ, ຜູ້ເປັນພໍ່ນັ້ນບໍ່ສາມາດໄປໄຮ່ໄປສວນ, ໃນແຕ່ລະມື້ຕ້ອງຢູ່ເຮືອນຢູ່ບ້ານຈັບໜ້າພິກຈະຍິງເສືອແມວ ແຕ່ບໍ່ປະກົດເຫັນມັນມາບ້ານຈັກເທື່ອ, ດັ່ງນັ້ນ ຕ້ອງໄປເຮັດໄຮ່ ແລ້ວເສືອແມວພັດອອກມາຂົບກິນໄກ່ນ້ອຍ ຕອນແລງມາເດັກນ້ອຍລາຍງານພໍ່ແມ່ໃຫ້ຮູ້ວ່າເສືອແມວມາຂົບກິນໄກ່ນ້ອຍອີກ. ໃນມື້ຕໍ່ມາພໍ່ຈຶ່ງເຮັດຄອກລັ່ນ, ເອົາໄກ່ນ້ອຍເຮັດເຫຍື້ອກໍ່ບໍ່ເຂົ້າກິນ, ພໍ່ມັນເຮັດແຮ້ວກໍ່ບໍ່ຖືກ, ເຮັດກະຕ່ຳ, ກະທີບກໍ່ບໍ່ຖືກ. ໃນແຕ່ລະປີເສືອແມວຜີນັ້ນໃຫຍ່ຂຶ້ນເລື້ອຍໆ, ຈາກໜຶ່ງປີເປັນສອງປີແລ້ວເປັນສາມປີ, ພໍ່ຂອງມັນຊອກຫາວິທີຂ້າກໍ່ບໍ່ໄດ້ມັນສະຫຼາດທີ່ສຸດ, ຊາວບ້ານກໍ່ຊອກຫາວິທີຂ້າຄືກັນ. ເສືອແມວໂຕນັ້ນໃຫຍ່ຂຶ້ນເຕັມໂຕແລ້ວ, ມັນຈະອອກບ້ານໄປຢູ່ປ່າໃນຄືນທຳອິດປະມານສາມໂມງ ໃນຄືນນັ້ນເສືອແມວມາເຮືອນພໍ່ແມ່ ເພື່ອທົດລອງຍົກຄົກຕຳເຂົ້າ ແຕ່ຍົກຂຶ້ນໄດ້ໜ້ອຍໜຶ່ງແລ້ວ ຖິ້ມລົງດິນສຽງດັງຕຶກ, ພໍ່ແມ່ຕື່ນຈຶ່ງລຸກຂຶ້ນມາເບິ່ງມັນແລ່ນລົບໜີເຂົ້າປ່າ, ໃນເດືອນຕໍ່ມາເສືອແມວກໍ່ມາເຮືອນພໍ່ແມ່ອີກ ມັນຍົກຄົກຕຳເຂົ້ານັ້ນຂຶ້ນບາດໜຶ່ງແລ້ວຖິ້ມລົງດິນ ແລະ ຍົກຂຶ້ນເທື່ອສອງອີກ ເສືອແມວແບກຄົກຕຳເຂົ້າຂຶ້ນຮຽບຮ້ອຍແລ້ວຖິ້ມລົງດັງຕຶກ. ພໍ່ແມ່ຕື່ນ ແລະ ລຸກຂຶ້ນມາເບິ່ງອີກເສືອແມວກໍ່ແລ່ນໜີເຂົ້າປ່າໄປວັບໆ.

ຮູ້ວ່າເສືອແມວນັ້ນມາຫຼອກມາລອງແຮງ ລອງຄວາມສາມາດຂອງຕົນເອງ ຕາມປະເພນີຂອງຜູ້ເກີດເປັນເຈົ້າວິນຍານສັດນັ້ນ ຕ້ອງມາທົດລອງຍົກຄົກຕຳເຂົ້າຂອງພໍ່ແມ່ຂອງຕົນເອງສາກ່ອນ, ຖ້າຍົກຄົກຕຳເຂົ້າຂຶ້ນໄດ້ແລ້ວກໍ່ສາມາດຂົບກິນຄົນ ຫຼືວ່າຂົບກິນສັດໂຕອື່ນໆໄດ້. ໃນເມື່ອເປັນຄືແນວນັ້ນຄົນ ໄທບ້ານພາແຕກໜີອອກຈາກບ້ານໄປຢູ່ບ່ອນອື່ນ, ເຂົາເຈົ້າຢ້ານເສືອແມວຈະມາຂົບກິນຄົນ ຕາມທຳມະດາຄົນກະຕູທີ່ໄດ້ຕິດຕາມເບິ່ງສະພາບໃນອະດີດ ຖ້າວ່າຄົນເຮົາຕາຍໄປແລ້ວເກີດເປັນສັດນັ້ນ ສາມາດຍົກຄົກຕຳເຂົ້າໄດ້ມັນສາມາດໄປຂົບກິນຄົນ. ສ່ວນພໍ່ແມ່ທີ່ມີລູກເປັນເສືອແມວກໍ່ບໍ່ຍອມໜີອອກຈາກບ້ານ ເພື່ອລໍຖ້າສູ້ກັບລູກ, ແລ້ວຕ້ອງຊອກຫາວິທີຂ້າໃຫ້ໄດ້ ຫຼືວ່າ ວິ້ງວອນໃຫ້ເຈົ້າວິນຍານມາຊ່ອຍໄລ່ເສືອແມວໜີໄປຢູ່ປ່າຕາມເວນກຳຂອງມັນສາ.

ພໍ່ແມ່ຊອກຫາວິທີ ຫຼືລໍຖ້າເບິ່ງການເຄື່ອນໄຫວຂອງເສືອແມວບໍ່ມີຫຍັງຜິດປົກກະຕິ ແລ້ວມັນເກີດມາເປັນສັດ ສະນັ້ນມັນຈຶ່ງໜີໄປຢູ່ນຳເສືອແມວປ່ານັ້ນເອງ.

## 5.4 ຜີຫຼອກຄົນ
## (ອັຣວາຍອັຣວິງກະຊຸນຍ)

ໃນສະໄໝກ່ອນນັ້ນ ມີຄອບຄົວໜຶ່ງທີ່ມີລູກຊາຍຄົນໜຶ່ງ ອອກບ້ານໄປຕຶກເບັດຢູ່ແມ່ນ້ຳແຫ່ງໜຶ່ງ, ແຕ່ຜູ້ຊາຍຄົນນັ້ນລອຍນ້ຳບໍ່ທັນເກັ່ງປານໃດ ແຕ່ຄົນບ້ານນອກຕ້ອງຮຽນຮູ້ການຊອກຢູ່ຫາກິນ ເພື່ອເອົາຊີວິດຢູ່ລອດແຕ່ອາຍຸຍັງນ້ອຍໆນັ້ນໝາຍຄວາມວ່າ ຄົນບ້ານນອກຕ້ອງເພິ່ງຕົນເອງກຸ້ມຕົນເອງ ຕ້ອງຮຽນເຮັດຮຽນໄປຊອກຢູ່ຫາກິນບໍ່ວ່າຢູ່ບົກ ຫຼື ທາງນ້ຳ, ທາງໃດມີເງື່ອນໄຂດີຈະມີໂຊກແມ່ນເຂົາເຈົ້າໄປທາງນັ້ນ. ເດັກນ້ອຍຄົນບ້ານນອກຕ້ອງໃຊ້ເຫື່ອແຮງເຮັດວຽກງານ ເພື່ອຕໍ່ສູ້ກັບທຳມະຊາດ ນັ້ນແມ່ນວຽກງານແບບໜຶ່ງຂອງຊີວິດເດັກນ້ອຍບ້ານນອກ.

ໃນມື້ໜຶ່ງ ລູກຊາຍຄົນນັ້ນໄປຕຶກເບັດເອົາປາ, ແຕ່ໂຊກບໍ່ເຂົ້າຂ້າງເກີດມີເຫດລາງເຄາະກຳຈ່ອງດຶງເອົາຜູ້ຊາຍຄົນນັ້ນຕົກນ້ຳຕາຍ ຍ້ອນບໍ່ມີໃຜຮູ້ໃຜເຫັນ ເພາະລາວລອຍນ້ຳບໍ່ເປັນ ຈຶ່ງຕາຍດີກນ້ຳ ແລະ ບ່ອນໄປຕຶກເບັດນັ້ນກໍ່ຫ່າງໄກຈາກບ້ານຫຼາຍ ນັບແຕ່ມື້ລາວຕົກນ້ຳຕາຍ ໄດ້ສອງວັນແລ້ວ ເມື່ອບໍ່ເຫັນລາວກັບມາບ້ານ, ຊາວບ້ານຈຶ່ງພາກັນຊອກຫາລາວໄປຕາມລຳນ້ຳກໍ່ບໍ່ເຫັນເຕົາຟືນເຕົາໄຟ ຄືນນອນຜ່ານມາແລ້ວນັ້ນ, ເຂົາເຈົ້າພາກັນຊອກໄປຕໍ່ຕາມລຳນ້ຳນັ້ນ ກໍ່ພໍດີເຫັນລາວນອນຕາຍຄ້າງຢູ່ກຳໄຄ້ຢູ່ແຄມນ້ຳ, ຮ່າງຄືງບໍ່ເປັນຄົນ ມັນໂພ່ງຂຶ້ນອຶ້ງລຶ້ງແລ້ວ.

ຫຼັງຈາກພົບຊາກສົບຂອງຊາຍຄົນແລ້ວ, ເຂົາເຈົ້າສານຝາກະແຕະເພື່ອໂຕ່ງເອົາຊາກສົບເຂົ້າຝາກະແຕະ ແລະ ຊອກເກັບໃບຕອງມາເຮັດເຄື່ອງນຸ່ງເພື່ອຫຸ້ມຫໍ່ຮ່າງກາຍຂອງລາວ, ເຂົາເຈົ້າສອດ ຫຼື ມັດໃສ່ແອວ, ໃນເມື່ອກະກຽມຄົບຖ້ວນແລ້ວຈຶ່ງແກ້ເຄື່ອງນຸ່ງຂອງລາວອອກໄປກອງໄວ້ບ່ອນໜຶ່ງ, ເຂົາເຈົ້ານຸ່ງໃບໄມ້ໃບຕອງຕາງເຄື່ອງນຸ່ງໃຫ້ລາວ ແລ້ວໄປເອົາຊາກສົບຂອງລາວໃສ່ຝາກະແຕະໄດ້ ແລະ ມັດຝາກະແຕະໃຫ້ແໜ້ນແລ້ວເອົາມາຂຶ້ນບົກ ແລ້ວມາວາງ ໄວ້ຢູ່ເທິງໂງ່ນຫີນແຫ່ງໜຶ່ງ ແລະ ເຂົາເຈົ້າໄດ້ຂຸດຂຸມຝັງ, ເຂົາເຈົ້າເອົາໄມ້ປ່ອງລຳໜຶ່ງມາຜ່າເຄິ່ງ ເພື່ອເອົາຊາກ ສົບລົງຂຸມແລ້ວຖົມດິນລົງ ແລ້ວຜ່າໄມ້ເປັນບັ້ງປະມານເຈັດອັນ ເພື່ອເອົາ ມາປັກໄຂວ່ໃສ່ກັນອ້ອມຫຼຸມສົບ ແລ້ວແຕ່ລະຄົນພາກັນກັບເມືອຕ້ອງໄດ້ເຂົ້າຜ່ານຜ່າໄມ້ປ່ອງ ລຳຜ່າເຄິ່ງນັ້ນເຂົາເຈົ້າງະໄມ້ອອກແລ້ວຜ່ານໄປ ແລະ ເຮັດໃຫ້ມີສຽງລັ່ນດັງກັບ ແຕ່ລະຄົນໃຫ້ໄດ້ເຮັດໝົດທຸກຄົນ, ຍັງເຫຼືອພໍ່ຂອງລາວຜູ້ສຸດທ້າຍ, ລາວເອົາໄມ້ປ່ອງຕີໃສ່ດັງເປີຍໆແລ້ວເວົ້າວ່າ ຄັນມີຄົນຍ່າງ

ໄປມາຕາມ ທາງໃຫ້ເຈົ້າຕີໄມ້ໃຫ້ດັງເປັຍໆ ເວົ້າແລ້ວລາວຫັນໜ້າງະໄມ້ຜ່າເຂົ້າໄປແລ້ວລັ່ນດັງກັບ. ໃນເມື່ອໄປຮອດບ່ອນເອົາເຄື່ອງນຸ່ງແລ້ວກໍ່ພາກັນອາບນ້ຳລ້າງເຄາະເຂັນເວນກຳອອກບໍ່ໃຫ້ຕິດຕົນຕິດໂຕອີກ ໃຫ້ອອກໄປ ແລະ ໃຫ້ໄຫຼໄປຕາມລຳນ້ຳແຫ່ງນີ້ ທຸກຄົນເອົາເຄື່ອງມານຸ່ງຮຽບຮ້ອຍແລ້ວເຂົາເຈົ້າກໍ່ພາກັນເມືອບ້ານ.

ຄົນຢູ່ໃນບ້ານໄດ້ພາກັນເອົາແບ້ມາຜູກໃສ່ຫຼັກບູຊາຍັນໄວ້, ໃນເມື່ອໄປເຖິງແບ້ໂຕນັ້ນ ເຂົາເຈົ້າເອົາມີດຕົບໃສ່ໂຕແບ້ແປະໆ ແຕ່ລະຄົນຕົບທີກເທື່ອໃຫ້ເຄາະກຳໜີໄປ ຫຼືໃຫ້ເຂົ້າຢູ່ນຳແບ້ໂຕນັ້ນ, ຫຼັງຈາກຕົບຄົບແລ້ວໆເຂົາເຈົ້າເອົາມືເບື້ອງຂວາຕົບໃສ່ແບ້ຫ້າເທື່ອ ເພື່ອໃຫ້ໄດ້ ໂຊກຮັບໄຊມາຢູ່ນຳຕົນເອງອີກ. ເມື່ອເຮັດພິທີນັ້ນແລ້ວໆ ເຂົາເຈົ້າຈຶ່ງຂ້າແບ້ໂຕນັ້ນ ເພື່ອລ້ຽງຜີຮ່າຜີທຸງກິນເລືອດກິນຊີ້ນແບ້ ແລ້ວກໍ່ພາກັນພ່າຍໜີໄປຢູ່ບ່ອນອື່ນ.

ຫຼັງຈາກຝັງສົບໄດ້ສາມເດືອນແລ້ວ ກໍ່ບໍ່ມີໃຜກ້າທຽວລຳນ້ຳແຫ່ງນັ້ນ, ໃນເມື່ອເຖິງເດືອນທີ່ສີ່ມີຜູ້ໜຶ່ງລາວທຽວໄປຕາມແມ່ນ້ຳແຫ່ງນັ້ນ ເມື່ອໄປເຖິງເຊິ່ງບ່ອນເຂົາຝັງສົບ ຜີນັ້ນກໍ່ມາຕີໄມ້ດັງເປັຍໆໃສ່, ລາວປົບໜີຢ່າງບໍ່ມີບ່ອນຈັ້ງບ່ອນຈອດແລ່ນລອດລົ້ມລອດຕາຍ ເພື່ອຮອດບ້ານເກືອບຕາຍ ຊາວບ້ານພາກັນຖາມຫາກົກປາຍສາເຫດການແລ່ນມາຂອງລາວ, ລາວເວົ້າວ່າຜີເດັກນ້ອຍຕາຍດົກນ້ຳນັ້ນມາຫຼອກຂ້ອຍ, ແຕ່ນັ້ນມາຜູ້ໄປມາຕາມລຳແມ່ນ້ຳນັ້ນ ຜີທ້າວນ້ອຍຫຼອກໝົດ, ເຮັດໃຫ້ຄົນທັງຫຼາຍຢ້ານຜີທ້າວນ້ອຍຫຼອກຕະຫຼອດ. ຫຼາຍປີມາຜີທ້າວນ້ອຍຫຼອກຄົນຢ່າງເອົາຈິງເອົາຈັ່ງ, ເຮັດໃຫ້ຜີທ້າວນ້ອຍມີອຳນາດຫຼອກຄົນຢ່າງບໍ່ຢ້ານ, ຜີທ້າວນ້ອຍນາບຂູ່ຈິດໃຈຊາວບ້ານຫຼາຍປີມາແລ້ວ, ມີມື້ໜຶ່ງຄົນຈິດບໍ່ເຕັມໄປຕາມລຳນ້ຳນັ້ນ ລາວໄປຊື່ບ່ອນຝັງສົບມັນຕີໄມ້ເປັຍໆໃສ່, ລາວເວົ້າກັບຜີນັ້ນວ່າ ມຶງບໍ່ຕ້ອງມາຫຼອກກູ ແລະ ກູບໍ່ຢ້ານມຶງດອກ ລາວແລ່ນໄປບ່ອນເຂົາຝັງສົບແລ້ວເອົາພ້າຟັນທະຟັນຮາມ ໃນບໍລິເວນຝັງສົບຄົນຕາຍປ້ອຍດ່າຜີທ້າວນ້ອຍແລ້ວກໍ່ກັບເມືອ ນັບຕັ້ງແຕ່ນັ້ນມາຜີທ້າວນ້ອຍບໍ່ຫຼອກຄົນອີກ, ເຮັດໃຫ້ຄົນໄປມາຢ່າງສະບາຍໃຈກວ່າແຕ່ກ່ອນອີກດ້ວຍ.

## 5.5 ເກີດເປັນເສືອ
## (ແກີດວາຊອະລູ້ຮ)

ມະນຸດໄດ້ດຳລົງຊີວິດຢູ່ທົ່ວໄປໃນໂລກ, ເຂົາເຈົ້າຕາຍແລ້ວເກີດເປັນຜີໃຜໆກໍ່ຢ້ານ ແຕ່ວ່າຫຼັງຈາກຄວາມຕາຍຂອງຜູ້ເປັນຜີ ຄວາມກົມກຽວ ແລະ ຜູກພັນກັນຫຼາຍເລື່ອງ ພາຍຫຼັງຄວາມຕາຍນັ້ນກໍ່ອາໄສເປັນຊີວິດຂອງສັດເດຍລະສານ. ຫຼາຍຮຸ່ນຄົນມາແລ້ວຂອງເຜົ່າກະຕູໃນ

ແຕ່ລະສະໄໝ ເຂົາເຈົ້າເລົ່ານິທານເລື່ອງຄົນຕາຍແລ້ວເປັນຜີ ແລະ ເປັນສັດ, ພາຍຫຼັງຄວາມຕາຍໄປເກີດເປັນສັດແມ່ນ ພວກຜູ້ເຖົ້າຜູ້ແກ່ທັງຍິງ ແລະ ຊາຍທີ່ຕາຍໄປມັກເປັນເສືອປ່າ, ເລື່ອງຄົນຕາຍໄປເກີດເປັນເສືອນັ້ນມີຫຼາຍແບບຫຼາຍຢ່າງທີ່ຊາລືກັນຕະຫຼອດມາ.

ເລື່ອງຄົນຕາຍເກີດເປັນເສືອນັ້ນມີຫຼາຍຮູບແບບ, ການເປັນເສືອນັ້ນມັນມີຄວາມຄຽດແຄ້ນຂອງຜູ້ຕາຍ ຄົນຕາຍເປັນຜູ້ມີອຳນາດເປັນຜູ້ຮ້າຍກາດຕໍ່ຜູ້ອື່ນ ບາງເທື່ອເຂົາເຈົ້າຕ້ອງການແກ້ແຄ້ນກັນ ໃນສະໄໝທີ່ເປັນມະນຸດມີການທະເລາະວິວາດກັນ, ໃນເມື່ອຕາຍໄປແລ້ວ ເຂົາກໍ່ຢາກເປັນເສືອເປັນສັດໂຕໂຫດຫ້ຽມ ແລະ ຮ້າຍກາດທັງເປັນສັດທີ່ຄົນຫຼືສັດຢ້ານເກງກົວ, ບາງທີການຕາຍນັ້ນນຳຈ່ອງກັນມາເປັນຕ່ອງໂສ້ເກາະກັນບໍ່ຂາດ ຍັງພົວພັນກັນລະຫວ່າງຜູ້ຕາຍກັບຜູ້ທີ່ມີຊີວິດຢູ່ ແລະ ຍັງເປັນຫ່ວງເປັນໃຍກັນບໍ່ຂາດ, ເມື່ອເກີດເປັນເສືອແລ້ວຕ້ອງການໄປຫາຂົບກິນຄົນ ແລະ ສັດລ້ຽງຂອງຄົນໃຫ້ຈິບຫາຍໄປໝົດ.

ຄົນຜູ້ເຖົ້າໃກ້ຈະຕາຍຢູ່ເຮືອນ ໃຈບໍ່ທັນຂາດ ຄົນກະຕູເອີ້ນວ່າ ຍັງຫາຍໃຈຄັນຄາກຢູ່ໝາຍຄວາມວ່າ ຫາຍໃຈຢູ່ຄໍເດີກ ! ເດີກ ! ເທົ່ານັ້ນ ຄົນຜູ້ເຖົ້າໃກ້ຈະຕາຍໃນຍາມຄ່ຳຄືນຮ້ອງຄາງໂອກ ! ໂອກ ! ຢູ່ແຄມບ້ານກໍ່ມີສຽງເສືອຮ້ອງຕອບສຽງຄົນປ່ວງຕາຍ ຄົນຈະຕາຍຮ້ອງໂອກບາດໜຶ່ງແລ້ວ ເສືອຮ້ອງຕອບໂອກຢູ່ປ່າແຄມບ້ານ. ຄົນຜູ້ເຖົ້າໃກ້ຈະຕາຍໃຊ້ເວລາເປັນເດືອນ ກໍ່ມີເສືອມາຮ້ອງເອົາຂວັນວິນຍານຂອງພໍ່ເຖົ້າໄປນຳເສືອ, ສ່ວນຄົນທີ່ໃຈບໍ່ທັນຂາດນັ້ນ ໃນແຕ່ລະມື້ສີສັນຂອງຄົນ ມີການປ່ຽນແປງຜິດປົກກະຕິຂອງຜິວໜັງມະນຸດທຳມະດາ, ມີຂົນປົ່ງອອກມາເປັນເສັ້ນຄືຂົນເສືອ, ເລັບມືເລັບຕີນປົ່ງອອກຍາວເໝືອນກັນກັບເລັບເສືອ. ເຂົາເຈົ້າລໍຖ້າເປັນເດືອນແຕ່ໃຈບໍ່ຂາດ, ແຕ່ທາງນອກກໍ່ມີເສືອປ່າມານາບຊູ່ຈິດໃຈຂອງຊາວບ້ານ, ໃນເມື່ອຄ່ຳມາແລ້ວ ເສືອກໍ່ມາຮ້ອງໂກກ ! ໂກກ ! ຮ້ອງອ້ອມບ້ານຕະຫຼອດ ຄົນບໍ່ກ້າລົງເຮືອນໄປຖ່າຍໜັກຖ່າຍເບົາ. ຊາວບ້ານໄດ້ຕົກລົງກັນວ່າ ມັນບໍ່ເປັນຄົນໄດ້ແລ້ວ ເຂົາເຈົ້າເອົາລູກໜ້າໜ້ອງແທງເຂົ້າໜ້າເອິກເຮັດໃຫ້ໃຈລາວຂາດແລ້ວຕາຍໄປ ຕໍ່ຈາກນັ້ນກໍ່ເອົາໄປຝັງຢູ່ປ່າແຮ່ວ (ປ່າຊ້າ), ເວລາຈະຝັງນັ້ນ ເຂົາເຈົ້າຕັດຫົວຂອງລາວອອກ ເອົາໄປຝັງບ່ອນໜຶ່ງຕ່າງຫາກ, ຫຼັງຈາກໄປຝັງຖິ້ມແລ້ວເສືອກໍ່ບໍ່ມາຮ້ອງອີກ.

ເລື່ອງຜູ້ເຖົ້າຄົນໜຶ່ງລາວຕາຍໄປ ເຂົາເຈົ້າເອົາສົບລາວໄປຝັງຢ່າງພິທີພິຖັນ ຕາມຄວາມເຄົາລົບນັບຖືຄົນເຖົ້າແກ່ຢ່າງສົມກຽດ, ເຂົາເຈົ້າເອົາຫີນຍາວປະມານແຂນໜຶ່ງມາຝັງເປັນຫຼັກໝາຍທາງຫົວຂອງລາວໄວ້, ເພື່ອໃຫ້ເສັ່ນລູກເສັ່ນຫຼານຈື່ຈຳໄວ້ວ່ານັ້ນ ແມ່ນຂຸມຝັງສົບຂອງປູ່ຍ່າຂອງຕົນເອງ. ບາງທີເຂົາເຈົ້າຕິດຕາມຂຸມຝັງສົບເປັນປົກກະຕິ, ແຕ່ມີມື້ໜຶ່ງ ເຂົາເຈົ້າເຫັນເສືອໄປນອນພັກ ບ່ອນເຂົາຝັງຄົນຕາຍ ໃນເມື່ອເສືອເຫັນກໍ່ແລ່ນໜີໄປ ເຂົາເຈົ້າເຂົ້າມາໃກ້ຂຸມນັ້ນກໍ່ເຫັນແຕ່ຮອຍເສືອຢູ່ອ້ອມແອ້ມຂຸມຝັງສົບ ເຂົາເຈົ້າເຫັນວ່າຜິດປົກກະຕິຄືແນວນັ້ນຈຶ່ງຕິດຕາມທຸກໆມື້

ແລ້ວກໍ່ເຫັນເສືອມາຢູ່ເປັນປະຈຳ ແຕ່ບໍ່ກ້າເຂົ້າໄປໃກ້ຂຸມນັ້ນ ເພາະຢ້ານ ດວງວິນຍານຂວັນຂອງຄົນຕາຍນັ້ນທວງຖາມ, ຈະຜິດຮີດຄອງການເຊື່ອຖື, ໃນບໍ່ຊ້າເສືອກໍ່ ຄວັດເຮັດເປັນຮູຂຶ້ນມາ ເພື່ອໃຫ້ຄົນຕາຍນັ້ນເກີດເປັນເສືອຂຶ້ນ ມາມັນຂຶ້ນມາຈົນເຮັດໃຫ້ຄົນເຫັນສາດ ແລະ ຜ້າຫົ່ມຢູ່ໃນໂລງຊະຂຶ້ນມາເທິງຂຸມຝັງສົບ ເຂົາເຈົ້າເຫັນຮອຍຕີນເສືອມີສອງຊະນິດ ເສືອໂຕໜຶ່ງມີຮອຍຕີນສີ່ນິ້ວເປັນຮອຍຕີນເສືອປ່າ ແຕ່ມີເສືອອີກໂຕໜຶ່ງ ພັດມີຮອຍຕີນຢຽບດິນມີຫ້ານິ້ວ ເປັນຮອຍຕີນຄົນຕາຍທີ່ເກີດເປັນເສືອ. ຫຼັງຈາກເຫັນເຫດການຄືແນວນັ້ນ ເຂົາເຈົ້າຈຶ່ງປະກາດໃຫ້ຊາວບ້ານຮັບຮູ້ແລ້ວ ໃຫ້ລະມັດລະວັງຕົວໃຫ້ດີ, ທຸກຄົນປ້ອງກັນບ້ານປ້ອງ ກັນຄົນບໍ່ໃຫ້ເສືອຄົນຂົບຄົນອີກ, ຖ້າວ່າມັນຂົບຄົນຢູ່ບ້ານໃດ ຄອບຄົວເຈົ້າຂອງເສືອເຈົ້າຂອງຄົນຕາຍຕ້ອງໃຊ້ຄ່າຫົວໃຫ້ຕາມການຮຽກຮ້ອງ ຂອງຜູ້ຖືກເຄາະຮ້າຍນັ້ນເອງ.

ເລື່ອງຜີຄົນຕາຍນັ້ນຈະແປງເພດເປັນເສືອ, ແຕ່ເຂົາເຈົ້າເລົ່າວ່າ ຜູ້ເຖົ້າຕາຍເອົາໄປຝັງຖິ້ມໄວ້ຫຼາຍປີມາແລ້ວ, ມີເດືອນໜຶ່ງເຂົາເຈົ້າພົບເຫັນເສືອອອກຈາກບ່ອນຂຸມຝັງສົບນັ້ນໄປ, ເພາະສະນັ້ນຜູ້ເປັນລູກຫຼານຕ້ອງເປັນຜູ້ສືບຕໍ່ຕິດຕາມເບິ່ງວ່າ ເສືອມັນໄປຜ່ານບໍ? ຫຼືວ່າມັນມາພັກຢູ່ໃນຂຸມຝັງສົບນັ້ນບໍ? ໃນຕໍ່ມາເຂົາເຈົ້າເຫັນເສືອມານອນພັກຢູ່ຂຸມສົບນັ້ນ ເສືອຢາກໃຫ້ຜີຄົນຕາຍໄປເກີດໄປຂານເປັນເສືອຄືມັນ, ໃນຕໍ່ມາຜູ້ເປັນລູກຫຼານໄປຂຸດເບິ່ງຂຸມສົບນັ້ນວ່າມີຫຍັງຜິດປົກກະຕິບໍ? ໃນເມື່ອໄປຂຸດແລ້ວ ກໍ່ເຫັນຊາກສົບຜິດປົກກະຕິຫຼາຍ, ເຂົາເຈົ້າເລົ່າວ່າຜີຄົນຕາຍເນົ່າເປື່ອຍແລ້ວ, ແຕ່ວ່າເຫັນເອັນຂໍ້ ແລະ ກະດູກບໍ່ທັນເນົ່າຍັງຕໍ່ກັນຢູ່, ບີກໍ່ລີງຢູ່ໃນເອັນທີ່ຕິດກັບກະດູກ, ກະໂລກຫົວອອກຂົນສ່ວນໜຶ່ງ, ແກ່ນຕາເປັນຕາເສືອແລ້ວ, ເຂົາເຈົ້າຕ້ອງຕັດຄໍອອກແລ້ວຕັດກະດູກອອກເປັນສິ້ນສ່ວນ ແລ້ວເອົາໄປຝັງໄວ້ຫຼາຍບ່ອນ, ຫຼັງຈາກຂຸດຊາກສົບຂຶ້ນມາໄປຝັງແຕ່ລະບ່ອນແລ້ວ ກໍ່ບໍ່ເຫັນເສືອທຽວມາອີກເລີຍ.

ດົນນານມາ, ມີຄົນຜູ້ໜຶ່ງລາວຕາຍໄປຍ້ອນການເຈັບປ່ວຍມາໄດ້ຫຼາຍເດືອນແລ້ວ, ລາວຕາຍໄປນັ້ນເຂົາເຈົ້າກໍ່ປະຕິບັດຕາມຮີດຄອງຂອງທ້ອງຖິ່ນ, ເຂົາເຈົ້າສານຝາກະແຕະຫໍ່ໃສ່ແລ້ວ ເອົາໄປຝັງທີ່ປ່າຊ້າຢ່າງຮຽບຮ້ອຍ, ເຂົາເຈົ້າບໍ່ສົນໃຈນຳຄົນຕາຍ, ຄິດວ່າຄົນຕາຍແລ້ວຈະບໍ່ກັບ ຄືນມາອີກ, ກໍ່ເລີຍຖືເປັນເລື່ອງທີ່ຜ່ານໄປ. ແຕ່ໃນຄວາມຈິງມັນບໍ່ເປັນຕາມທີ່ເຮົາຄິດດອກ, ເອົາໄປຝັງແລ້ວເດືອນຕໍ່ມານັ້ນ ເສືອມາຂ້າມຂຸມສົບຄົນຕາຍ, ໃນເດືອນຕໍ່ມາເສືອມາພັກມານອນປະຈຳບ່ອນຂຸມສົບນັ້ນຢູ່ຕະຫຼອດ, ພະລັງອຳນາດຂອງເສືອ ເໜືອກວ່າພະລັງຈິດວິນຍານຜູ້ຕາຍ, ເສືອສາມາດໃຊ້ເວດມົນຄາຖາດຶງດູດຮ່າງກາຍຂອງຜູ້ຕາຍ ເຂົ້າເປັນເງົາພະລັງຂອງເສືອເຂົ້າໄປໂຕຄົນຕາຍນັ້ນ ແລ້ວເຮັດໃຫ້ມີຊີວິດກັບຄືນມາໃໝ່, ຄົນຕາຍໄດ້ສ້າງສິ່ງສັກສິດໃນລະບົບຄວາມເຊື່ອຖືຂອງຄົນຍັງມີຊີວິດຢູ່ໄດ້ຫຼາຍສະຕະວັດມາແລ້ວ. ເສືອໄດ້ສ້າງຄົນຕາຍເປັນເສືອ ແລ້ວເສືອຄວັດເປັນຮູຈົນເຖິງໂລງສົບ ແລ້ວເສືອເຈາະກັດເປັນຮູໃຫຍ່ ແລະ

ຄົນຕາຍກໍ່ກາຍເປັນເສືອຄານອອກມາຈາກໜ້າດິນ, ແລ້ວເສືອເລ່ຍຮ່າງຄີງຂອງຄົນຕາຍໃຫ້ແຫ້ງ ແລ້ວເສືອກໍ່ພາກັນໄປຕາກແດດສອງສາມວັນຮ່າງກາຍກໍ່ແຂງແຮງດີ, ແລ້ວເສືອໂຕນັ້ນ ກໍ່ມີແຕ່ມາຂົບກິນສັດຊາວບ້ານເພື່ອລ້ຽງຊີບ, ເສືອໃຫຍ່ຂຶ້ນເຕັມສ່ວນແລ້ວເສືອກັບມາບ້ານຂອງຄົນ ເພື່ອລອງແຮງວ່າຕົນເອງສາມາດຂົບຄົນໄດ້ບໍ? ເສືອເອົາຄົກຕໍາເຂົ້າຂອງເຈົ້າເຮືອນມາແບກ ລອງສາມເທື່ອ, ຖ້າສາມາດຍົກແບກໄດ້ແລ້ວເສືອກໍ່ສາມາດຂົບກິນຄົນພາຍໃນບ້ານໄດ້ຢ່າງ ໂຫດຫ້ຽມ, ເຮັດໃຫ້ຜູ້ເປັນລູກຫຼານໄດ້ຮັບເຄາະຮ້າຍ ແລະ ເປັນຜູ້ໃຊ້ໜີ້ຄ່າເສຍຫາຍຂອງຜູ້ອື່ນ, ເຈົ້າຂອງເສືອຕ້ອງຊອກທຸກວິທີເພື່ອຂ້າເສືອໃຫ້ໄດ້. ໃນສຸດທ້າຍເຂົາເຈົ້າສາມາດຂ້າເສືອໄດ້ ແລ້ວ ເລື່ອງລາວຕ່າງໆກໍ່ຈົບລົງທັນທີ.

## 5.6 ຕາຍເປັນຫີນ

## (ກັນດິບ)

ມະນຸດພວກເຮົາທີ່ມີໜ້າຢູ່ໃນໂລກນີ້ ລ້ວນແລ້ວແຕ່ສ້າງບັນຫາທີ່ສັບສົນຫຼາຍໃນສັງຄົມ, ໃຜໆກໍ່ເລົ່າເລື່ອງຄວາມເປັນມາຂອງມະນຸດ ມີບັນຫາມາກມາຍຫຼາກຫຼາຍຢູ່ໃນໂລກນີ້, ບາງເຜົ່າ ເກີດຈາກເຈົ້າຟ້າພະຍາແຖນ ເປັນຜູ້ດົນບັນດານປັ້ນແຕ່ງໃຫ້ມີຕົນມີໂຕເກີດຂຶ້ນມາ, ບາງເຜົ່າກໍ່ ແມ່ນເກີດມາຈາກໝາກນໍ້າເຕົ້າ, ບາງເຜົ່າແມ່ນເກີດມາຈາກໂງ່ນຫີນ, ບາງເຜົ່າແມ່ນເກີດມາ ຈາກສັດສາວາສິ່ງ. ສ່ວນຂອງເຜົ່າກະຕູນັ້ນແມ່ນ ເກີດມາຈາກການເນລະມິດຂອງເຈົ້າວິນຍານ (ເທບ ພະເຈົ້າ) ເຮັດໃຫ້ເກີດມີມະນຸດຢູ່ໃນໂລກນີ້, ເພື່ອສ້າງໂລກ, ຄຸ້ມຄອງໂລກ ແລະ ນໍາໃຊ້ ໂລກນີ້ໃຫ້ມີຜົນແກ່ຊີວິດການເປັນຢູ່ປະຈໍາວັນຕະຫຼອດໄປ.

ເລື່ອງແມ່ດິບຕາຍເປັນກ້ອນຫີນນັ້ນ ໄດ້ນານແສນນານມາແລ້ວ ເຂົາໄດ້ເລົ່າລືກັນມາຢ່າງ ຕໍ່ເນື່ອງຈາກຮຸ່ນຄົນນີ້ໄປສູ່ຮຸ່ນຄົນໃໝ່, ໃຜໆກໍ່ບໍ່ຮູ້ວ່າແມ່ດິບຕາຍໃນສະໄໝນໍ້າຖ້ວມລາມ ໄປ ທົ່ວໂລກ ຫຼືວ່າສະໄໝໄຟລາມໂລກ, ເຂົາເຈົ້າພຽງແຕ່ເລົ່າເລື່ອງການຕາຍເປັນກ້ອນຫີນຢ່າງ ໜ້າອັດສະຈັນໃຈແທ້, ຕາມກົດເກນທໍາມະຊາດຂອງມະນຸດຖ້າໝົດບຸນໄປແລ້ວຕ້ອງຝັງລົງດິນ ແລ້ວຮ່າງກາຍຄົນນັ້ນກໍ່ເນົ່າເປື່ອຍໄປເປັນຂີ້ດິນເທົ່ານັ້ນ, ແຕ່ວ່າແມ່ດິບນັ້ນຕາຍເປັນກ້ອນຫີນ ຕາຍແລ້ວບໍ່ເໜົ່າເປື່ອຍຕະຫຼອດຊາດຍັງໃຫ້ເຫັນຫຼາຍຮຸ່ນຄົນຕໍ່ໆມາ.

ແມ່ດິບຕາຍເປັນກ້ອນຫີນ ໜ້າຂວໍ້າລົງດິນ ຕາຍແບບມູບດິນ ຫຼືວ່າຕາຍນົບໄຫວ້ເຈົ້າແຜ່ນ ດິນ, ດິບແມ່ນຊື່ຂອງເພິ່ນ (ພາສາກະຕູວ່າ ກັນດິບແປວ່າ ແມ່ດິບ) ສ່ວນຫຼັງຂອງແມ່ດິບແມ່ນປິ່ນ ຂຶ້ນເທິງຟ້າ, ການຕາຍຂອງແມ່ດິບ ແມ່ນຮ່າງຄີງຫົດເຂົ້າແບບຄົນຖືກໄຟເຜົາໄໝ້ອຸ່ມລຸ້ມຄືຫຼັງ

ເຕົ່ານັ້ນ ມີຜູ້ເຖົ້າຜູ້ແກ່ຫຼາຍຄົນເຂົາເຈົ້າເຫັນ ແລະ ເບິ່ງແລ້ວຈຶ່ງເລົ່າຕໍ່ກັນໃຫ້ລູກຫຼານຟັງວ່າ ແມ່ດິບ ຕາຍໃນສະໄໝ (ອັຣງີ)ໂລກ. (ອັຣງີ ພາສາກະຕູແປວ່າສິງຄາມລາມໂລກ) ອາດຈະແມ່ນນ້ຳຖ້ວມລາມໂລກ ຫຼືວ່າໄຟໄໝ້ລາມໂລກໃນຍຸກນັ້ນ ກໍ່ບໍ່ມີໃຜຮູ້ຈັກລະອຽດຄັກແນ່, ຍ້ອນວ່າລາວຕາຍໄດ້ຫຼາຍສະຕະວັດແລ້ວ.

ແມ່ດິບຕາຍເປັນກ້ອນຫີນຢູ່ດອນແຫ່ງໜຶ່ງຂອງຫ້ວຍ (ອັຣມິດ), ແຕ່ກ່ອນມີບ້ານຄົນ ຕັ້ງຢູ່, ບ້ານນັ້ນຊື່ວ່າ (ອັຣມິດ), ເຂົາເຈົ້າອາໄສຢູ່ບ່ອນນັ້ນທຳມາຫາກິນເປັນເວລາຍາວນານສົມຄວນ, ບ່ອນທີ່ແມ່ດິບຕາຍນັ້ນ ຄົນເຮົາແນມເບິ່ງເຫັນແຕ່ໄກເຊິ່ງຕັ້ງຢູ່ດອນທີ່ສວຍງາມຫຼາຍ ເປັນປ່າດົງຕຶບໜາຫຼາຍ, ຕົ້ນໄມ້ແຕ່ລະຕົ້ນເປັນຕາໜ້າຢ້ານກົວ ເໝືອນກັບມີອຳນາດສູງທາງດ້ານຄວາມສັກສິດ ສັດສາວາສິ່ງມີທຸກຢ່າງເປັນບ່ອນຫ່າງໄກສອກຫຼີກ ລະຫວ່າງບ້ານຕໍ່ບ້ານ. ເຂົາເຈົ້າເລົ່າຊີວິດຂອງຄົນກະຕູໃນສະໄໝກ່ອນນັ້ນມີຫຼາຍສິ່ງຫຼາຍຢ່າງຕໍ່ຄົນຮຸ່ນໃໝ່ ໃນເລື່ອງຄວາມອັດສະຈັນໃຈແທ້, ບາງຄົນຕາຍເປັນເສືອ ບາງຄົນຕາຍເປັນກ້ອນຫີນບາງຄົນຕາຍໄປເປັນຄ່າງ ເປັນທະນີ ບາງຄົນຕາຍເປັນກວາງ ເປັນຟານກໍ່ມີ. ບາງຊົນຊາດຊົນເຜົ່າຕາຍແລ້ວແມ່ນໄດ້ຂຶ້ນສະຫວັນຊັ້ນຟ້າ.

# 6. ຄົນຂີ້ຄ້ານ

# (ຄູຍແຢ້ວ)

## 6.1 ກາຍເປັນຄົນຮັ່ງມີ

## (ພະຊູຍພັຣຍາ)

ມີຄອບຄົວຜົວເມຍໜຶ່ງ, ເຂົາເຈົ້າເອົາກັນມາໄດ້ຫຼາຍຟ້າຫຼ້າປີມາແລ້ວ ຈຶ່ງມີລູກນຳກັນຜູ້ໜຶ່ງເປັນຜູ້ຊາຍ. ໃນເມື່ອໄດ້ລູກຊາຍແລ້ວ ພໍ່ແມ່ກໍ່ມີຄວາມພາກພູມໃຈຫຼາຍ ຫາອັນໃດມາປຽບປານກໍ່ບໍ່ມີໄດ້ອີກແລ້ວ, ໃນຊີວິດຜົວເມຍນັ້ນ ອຸດົມການແມ່ນເອົາກັນແລ້ວຕ້ອງມີລູກຊາຍສາກ່ອນ, ມີລູກແລ້ວແມ່ນຜົນສຳເລັດຂອງຄວາມຮັກ, ໃນເມື່ອມີລູກແລ້ວຜົວເມຍກໍ່ມີຊີວິດ ແລະອະນາຄົດອັນສົດໃສ, ເຂົາເຈົ້າຝາກຄວາມຫວັງວ່າ ລູກໃຫຍ່ມາຈະຊ່ອຍພໍ່ແມ່ໃນຍາມເຖົ້າແກ່, ລູກຈະເປັນຜູ້ສືບທອດເຊື້ອສາຍຕະກຸນຂອງພໍ່ແມ່ໃນຕໍ່ໜ້າ, ຜູ້ເປັນພໍ່ແມ່ຈະໄດ້ກິນເຫື່ອແຮງອີກດ້ວຍ.

ການລ້ຽງລູກຢ່າງທຸກຍາກລຳບາກ ຊອກຫາອັນໃດມາກໍ່ໃຫ້ລູກກິນໝົດ, ໃຫ້ລູກກິນເຂົ້າ, ດູດນົມແມ່ຈົນຍານຍານໃດກໍ່ບໍ່ຮູ້ສຶກອິດເມື່ອຍ, ຍ້ອນຄວາມຮັກແພງລູກ, ພໍ່ແມ່ຢາກໃຫ້ລູກເຕີບໃຫຍ່ແລ້ວ ເພື່ອຊ່ອຍແຮງພໍ່ແມ່. ແຕ່ວ່າໃນເມື່ອລູກໃຫຍ່ຂຶ້ນແລ້ວ ມັນບໍ່ຄືຕາມເຮົາຄິດນັ້ນດອກ, ລູກໃຫຍ່ແລ້ວພັດນອນວັນສັ່ນຂາ, ກິນລ້າຢູ່ດາຍ, ກາງຄືນເປັນໂຕເຫງັນກາງເວັນເປັນນົກເຄົ້າ, ພໍ່ແມ່ເວົ້າສອນລູກ, ລູກກໍ່ບໍ່ຟັງຄວາມພໍ່ແມ່ຈັກໜ້ອຍ, ເຖິງວ່າລູກຈະເຮັດຊົ່ວຮ້າຍ ແນວໃດກໍ່ຕາມ ພໍ່ແມ່ກໍ່ຍັງຮັກແພງລູກຕະຫຼອດໄປ ເພາະວ່າພໍ່ແມ່ຍັງມີເຫື່ອແຮງຢູ່, ລູກບໍ່ຊ່ອຍພໍ່ແມ່ກໍ່ບໍ່ເປັນຫຍັງດອກ.

ໃນເມື່ອພໍ່ແມ່ອາຍຸສູງໄປແລ້ວ, ຄວາມອິດທົນມັນບໍ່ຫຼາຍອີກແລ້ວ, ຄວາມຮັກແພງທີ່ມີຕໍ່ລູກກໍ່ຈືດຈາງຫາຍໄປໝົດ, ຄວາມເບື່ອໜ່າຍຕໍ່ລູກແມ່ນເຫຼືອຕົວ, ລູກໃຫຍ່ຂຶ້ນແລ້ວຄວນຈະຄິດຊ່ອຍພໍ່ແມ່, ຊ່ອຍມືຊ່ອຍຕີນກໍ່ບໍ່ມີ, ລູກໃຫຍ່ສຸຂະພາບແຂງແຮງດີ ມີກຳລັງວັງຊາມີຕີນມີມື ແຕ່ລູກບໍ່ຍອມເຮັດວຽກ. ໃນແຕ່ລະມື້ລູກຊາຍມີແຕ່ນອນໝົດມື້ໝົດເວັນເທົ່ານັ້ນ ວຽກງານບໍ່ສົນໃຈຈັກໜ້ອຍເລີຍ. ຜູ້ເປັນພໍ່ແມ່ອ້ອນວອນລູກຊາຍໃຫ້ຮຽນເຮັດວຽກໄຮ່ສວນ, ຊວນລູກໄປຖາງປ່າເຮັດໄຮ່ຊ່ອຍພໍ່ແມ່ ແຕ່ ລູກກໍ່ບໍ່ຫົວຊາຈັກໜ້ອຍນຳຄຳເວົ້າຂອງພໍ່ແມ່ເລີຍ.

ຄວາມເຫຼືອອິດເຫຼືອທົນຂອງພໍ່ແມ່ຢ່າງບໍ່ມີບ່ອນບັນຈຸໄວ້ຢູ່ບ່ອນໃດໄດ້ອີກແລ້ວ, ຍ້ອນວ່າລູກບໍ່ໃຫ້ກຳລັງໃຈພໍ່ແມ່. ລູກບໍ່ຮູ້ຈັກບຸນຄຸນຂອງພໍ່ແມ່ທີ່ລ້ຽງລູກແຕ່ນ້ອຍຈົນໃຫຍ່ຂຶ້ນເປັນບ່າວຢ່າງເຕັມຄີງ ນ້ຳຈິດນ້ຳໃຈຂອງພໍ່ແມ່ນັ້ນກໍ່ຈືດຈາງໄປກັບລູກ, ຄວາມຫວັງອັນສູງສິ່ງກໍ່ໝົດໄປ. ໃນມື້ໜຶ່ງ ພໍ່ແມ່ກໍ່ຕັດສິນໃຈໜີປະລູກໄປຢ່າງບໍ່ຄອບລາລູກຈັກຄວາມເລີຍ ແຕ່ລູກຊາຍກໍ່ບໍ່ມີຄວາມສັ່ນສະເທືອນໃຈຈັກໜ້ອຍເລີຍ, ລາວນອນໝົດມື້ໝົດຄືນ, ຈາກວັນເປັນເດືອນ, ຈາກເດືອນເປັນປີ, ຢູ່ເຮືອນຍັງເຫຼືອແຕ່ກົກໝາກກອກຕົ້ນໜຶ່ງເທົ່ານັ້ນ.

ໃນມື້ໜຶ່ງ ລາວນອນຢູ່ຢ່າງມິດງຽບໆ, ນອນອ້າປາກຕາກແຂ້ວຢູ່ກ້ອງກົກໝາກກອກ ໝາກກອກໜ່ວຍໜຶ່ງເລີຍຫຼົ່ນລົງໃສ່ປາກຂອງລາວໆຫຍ້ຳກິນ, ຖ້າບໍ່ຖືກປາກລາວໆກໍ່ບໍ່ເກັບກິນຢ່າງເດັດຂາດ, ລາວນອນອິດຫິວມາຕະຫຼອດ, ໃນເວລານອນອ້າປາກຢູ່ນັ້ນຢາກໃຫ້ໝາກກອກຕົກໃສ່ປາກນັ້ນ ກໍ່ພໍດີກວາງໂຕໜຶ່ງມາກິນໝາກກອກຢູ່ບ່ອນລາວນອນນັ້ນ ລາວເຫັນເລີຍຈັບຕີນກວາງໄວ້ໄດ້, ທັງຈັບທັງນອນລາວບໍ່ລຸກຂຶ້ນ, ລາວຈັບໄວ້ຄືແນວນັ້ນກວາງໄດ້ລາກໂຕຂອງລາວໄປມາແຕ່ລາວກໍ່ບໍ່ປະຕີນກວາງ, ລາວກຳແໜ້ນໆໄວ້, ລາວຄິດວ່າບັກກວາງໂຕນີ້ຕ້ອງເປັນອາຫານຂອງກູຢ່າງແນ່ນອນແລ້ວ, ລາວຈັບໄວ້ໃຫ້ກວາງເມື່ອຍ. ໃນເມື່ອກວາງລາກໄປມາເມື່ອຍແລ້ວກວາງກໍ່ນອນແອກແລກຢູ່ ຍ້ອນຄວາມເມື່ອຍຫຼາຍ, ລາວກໍ່ນອນຈັບ ຕີນກວາງຄືເກົ່າໄວ້ຢ່າງແໜ້ນ.

ເວລານອນຈັບຕີນກວາງໄວ້ຢູ່ນັ້ນ ກໍ່ມີລູກສາວຂອງແມ່ມົດຍ່າງມາຕາມທາງ, ເປັນລູກຝາ

ແຝດທັງຕິດກັນ, ໃນເວລາໄປຜູ້ເປັນເອື້ອຍລາກນ້ອງໄປ, ແຕ່ເວລາກັບແມ່ນນ້ອງລາກເອື້ອຍມາ, ເຂົາເຈົ້າຢາກໄປໃສມາໃສຕ້ອງເຮັດແບບນັ້ນ, ພໍດີໃນມື້ນັ້ນ ລູກຝາແຝດແມ່ມົດເມືອຮອດບ່ອນຄົນຂີ້ຄ້ານນັ້ນ, ຕາຫຼຽວເຫັນລາວນອນຈັບຕີນກວາງຢູ່, ລູກຝາແຝດນັ້ນຫິວເຢາະເຢີ້ຍຢ່າງຫຼັບຫູຫຼັບຕາ ແລ້ວບໍ່ແນມເບິ່ງຮອດທາງເລີຍພາກັນລົ້ມລົງແລ້ວລຸກຂຶ້ນບໍ່ໄດ້ ເຂົາເຈົ້າຮ້ອງຫາຊາຍຄົນຂີ້ຄ້ານຜູ້ນັ້ນມາຊ່ອຍດຶງ ໃຫ້ລຸກຂຶ້ນແດ່, ລາວຕອບວ່າ ຂ້ອຍບໍ່ຢາກປະຕີນກວາງ, ເພາະວ່າກວາງເປັນອາຫານທີ່ແຊບຂອງຂ້ອຍເຂົ້າໃຈບໍ? ລູກສາວຝາແຝດຕິດກັນນັ້ນ ອ້ອນວອນຫຼາຍຄັ້ງແລ້ວລາວກໍ່ບໍ່ສົນໃຈຈັກໜ້ອຍ, ລາວນອນຈັບຕີນກວາງເສີຍໆຢູ່, ສອງຄົນພະຍາຍາມຈະລຸກພັດບິນໂຕຂຶ້ນກໍ່ບໍ່ໄດ້.

ລູກສາວແມ່ມົດຝາແຝດຕິດກັນນັ້ນ ຄິດວ່າຈະເວົ້ານຳຄົນຂີ້ຄ້ານຄົນນັ້ນຄືແນວໃດ? ລາວຈະເຂົ້າໃຈແລ້ວຈະມາຊ່ອຍພວກຂ້ອຍຢູ່ບໍ? ເຂົາເຈົ້າຄິດອອກແລ້ວເລີຍເວົ້າວ່າອ້າຍຂີ້ຄ້ານເອີຍ! ຊ່ອຍພວກຂ້ອຍແດ່, ພວກຂ້ອຍມີເອື້ອຍຄົນງາມໃຫ້ເຈົ້າເອົາເປັນເມຍໃດ ແລະ ພວກຂ້ອຍຈະເອົາບ້ານເມືອງທີ່ມີປະຊາຊົນຢູ່ຢ່າງຫຼວງຫຼາຍໃຫ້ເຈົ້າ, ບໍ່ໃຫ້ເຈົ້າທຸກຍາກລຳບາກ ດອກ ໃຫ້ມີຄົນຮັບໃຊ້ເຈົ້າຕະຫຼອດຊີວິດ ທະແນມເຈົ້າດຶງພວກຂ້ອຍລຸກຂຶ້ນໄດ້ກໍ່ພໍແລ້ວ, ພວກຂ້ອຍຈະຊ່ອຍເຈົ້າທັນທີໂລດ. ທ້າວຂີ້ຄ້ານຄົນນັ້ນນອນຟັງສອງຄົນເວົ້າມັນແມ່ນຄວາມຈິງແທ້ຫຼືບໍ? ທ້າວຂີ້ຄ້ານຄົນນັ້ນເວົ້າທົດລອງເບິ່ງວ່າ ຂ້ອຍບໍ່ຊ່ອຍພວກເຈົ້າດອກ ຂ້ອຍຢ້ານກວາງຫຼຸດອອກຈາກມືແຮ່ງບໍ່ໄດ້ກິນຊ້ຳ ແຕ່ນາງສາວຝາແຝດນັ້ນ ກໍ່ອ້ອນວອນໃຫ້ຊ່ອຍແດ່ ຖ້າເຈົ້າຊ່ອຍພວກຂ້ອຍໄດ້ແລ້ວ ພວກຂ້ອຍຈະຊ່ອຍໃຫ້ເຈົ້າເປັນຄົນຮັ່ງມີໃນຊີວິດຂອງເຈົ້າອີກດ້ວຍ.

ສຸດທ້າຍ ຊາຍຄົນຂີ້ຄ້ານຜູ້ນັ້ນກໍ່ຕອບສາວຝາແຝດວ່າເອົາຊ່ອຍກໍ່ຊ່ອຍສາ, ຊາຍຂີ້ຄ້ານຄົນນັ້ນ ກໍ່ລຸກຂຶ້ນແລ້ວມັດຕີນກວາງໄວ້ຢ່າງແໜ້ນແລ້ວ ກໍ່ຍ່າງໄປຊ່ອຍສາວຝາແຝດທີ່ນອນ ລົ້ມຢູ່ດິນນັ້ນ ລາວດຶງຂຶ້ນໄດ້ແລ້ວ ສາວຝາແຝດກໍ່ຍືນຂຶ້ນພ້ອມທັງຮ້ອງເອົາບ້ານເມືອງໃຫ້ເກີດຂຶ້ນມາຢ່າງອະພິນິຫານ ບໍ່ຮູ້ຈັກວ່າມັນມາແຕ່ໃສ່ເຫັນເປັນບ້ານເປັນເມືອງ ມີເຮືອນຊານສາມສີ່ຊັ້ນ ແລະ ຮ້ອງເອົາປະຊາຊົນມາຢູ່ເຕັມບ້ານເຕັມເມືອງ, ສອງຄົນຮ້ອງເອົາເສື້ອຜ້າ, ຜ້າກະຕ່ງວພິເສດສອງສົ້ນມີຍອຍຄື ຂີ້ເຂັບ (ພາສາກະຕູວ່າ ຕະອອັຣຣີງ) ໃຫ້ຄົນຂີ້ຄ້ານ. ຫຼັງຈາກນັ້ນສອງຄົນກໍ່ເອີ້ນເອົາສັດສາວາສິ່ງອອກມາໃຫ້ ເຊັ່ນ : ງົວ, ຄວາຍ, ມ້າ, ໝູ, ໝາ, ເປັດ ແລະ ໄກ່ມາຢູ່ເຕັມບ້ານເຕັມເມືອງ, ແລ້ວຝາແຝດກໍ່ເອົາເອື້ອຍຂອງພວກເຂົາມາມອບໃຫ້ທ້າວຂີ້ຄ້ານເປັນເມຍ. ຫຼັງຈາກເຫັນຄວາມຈິງທຸກສິ່ງຢ່າງແລ້ວ ລາວກໍ່ປ່ອຍສອງຄົນເມືອບ້ານຢ່າງສະບາຍ ພ້ອມທັງປ່ອຍກວາງແລ້ວມັນກໍ່ແລ່ນໜີເຂົ້າປ່າໄປ.

ທ້າວຂີ້ຄ້ານກາຍເປັນຄົນຮັ່ງມີ ລາວຢູ່ເຮືອນຫຼັງໃຫຍ່ທີ່ສວຍງາມໄດ້ສອງສາມປີ ເຖິງວ່າຕົນເອງ ເປັນຄົນຮັ່ງມີໄປແລ້ວກໍ່ຕາມ ແຕ່ລາວກໍ່ບໍ່ລືມບຸນຄຸນຂອງພໍ່ແມ່ຜູ້ທີ່ໃຫ້ກຳເກີດຕົນເອງ

ແລະ ບໍ່ລືມບຸນ ຄຸນພໍ່ແມ່ຜູ້ທີ່ເຄີຍລ້ຽງດູຕົນເອງໃຫ້ເຕີບໃຫຍ່ຂຶ້ນມາ, ລາວຄິດຮອດພໍ່ແມ່ຂອງຕົນເອງຢູ່ຕະຫຼອດເວລາ ທ້າວຂີ້ຄ້ານຈຶ່ງແຕ່ງຄົນໃຊ້ນັ້ນໄປຊອກຫາບ້ານພໍ່ແມ່ຂອງຕົນຢູ່ໃສ? ໃນເມື່ອຮູ້ຈັກແລ້ວໃຫ້ກັບມາລາຍ ງານໃຫ້ທ້າວຂີ້ຄ້ານຮູ້ດ່ວນ. ຄົນໃຊ້ນັ້ນໄດ້ອອກເດີນທາງໄປຊອກຫາບ້ານພໍ່ແມ່ຂອງທ້າວຂີ້ຄ້ານກໍ່ພໍດີພົບເຫັນແລ້ວກໍ່ກັບຄືນມາລາຍງານໃຫ້ລາວຮູ້.

ໃນປີຕໍ່ມາ ລາວໄດ້ກະກຽມຈັດງານບຸນຕ້ອນຮັບພໍ່ແມ່ຢ່າງຍິ່ງໃຫຍ່ ແລະ ສົມກຽດເພື່ອສະແດງ ເຖິງຄວາມຮູ້ບຸນຄຸນ ແລະ ເຄົາລົບນັບຖືຢ່າງສູງ. ຫຼັງຈາກພິທີສຳເລັດລົງແລ້ວລາວກໍ່ອອກເດີນທາງໄປພ້ອມກັບຄົນໃຊ້ ເພື່ອໄປບ້ານທີ່ພໍ່ແມ່ຢູ່ມາກ່ອນນັ້ນກຽມພ້ອມໄປສະເໜີຕົວວ່າຂ້ອຍເປັນລູກຂອງພວກເຈົ້າ ດຽວນີ້ລູກຂໍເຊີນພໍ່ແມ່ໄປຮ່ວມງານບຸນ ມັນເປັນບຸນຂອງລູກເອງເຮັດເພື່ອຕ້ອນຮັບເອົາພໍ່ແມ່, ພໍ່ແມ່ໄດ້ປະຕິເສດວ່າ ເຈົ້າບໍ່ແມ່ນລູກຂອງພວກຂ້ອຍ ດອກ, ລູກຂອງພວກຂ້ອຍແມ່ນຄົນຂີ້ຄ້ານ ທຸກຍາກລຳບາກຫຼາຍ, ບໍ່ແມ່ນຄົນຮັ່ງມີຄືແນວນີ້ດອກ, ພວກຂ້ອຍບໍ່ໄປດອກ ເວົ້າລົມກັນໄປດົນພໍສົມຄວນ ແລ້ວພໍ່ແມ່ກໍ່ເລີຍຮັບປາກນຳລູກວ່າໄປ.

ຕໍ່ມາພໍ່ແມ່ ກໍ່ອອກຈາກເຮືອນໄປຫາເຮືອນຂອງລູກດ້ວຍຄວາມແປກປະຫຼາດໃຈຫຼາຍ, ແຕ່ຕ້ອງໄປເພາະວ່າຕົນເອງໄດ້ຮັບປາກໄປແລ້ວ, ໃນເມື່ອໄປເຖິງບ້ານພໍ່ແມ່ແນມເຫັນເຮືອນ **ຄື** ມາຫຼັງໃຫຍ່ແທ້ ພໍ່ແມ່ດີໃຈຫຼາຍຈົນສະຫຼົບເປັນລົມຄາທີ່, ຍ້ອນຄວາມຕື່ນເຕັ້ນແປກປະຫຼາດ **ໃຈ** ຕໍ່ກັບຄວາມຮັ່ງມີສົມທົບໃສ່ກັບຄວາມເຫັນໜ້າລູກ ທີ່ຕົນເອງໜີປະລູກໄປ ຍ້ອນຄວາມເບື່ອໜ່າຍຄວາມຂີ້ຄ້ານຂອງລູກນັ້ນ. ແຕ່ວ່າກັບມາເຫັນລູກຮັ່ງມີເປັນດີ ແລະ ເປັນຜູ້ມີບຸນວາດສະໜາແທ້ໆ. ຫຼັງຈາກນັ້ນ ພໍ່ແມ່ມານັ່ງກິນເຂົ້າແລ້ວລູກເລົ່າເລື່ອງໃຫ້ພໍ່ແມ່ຟັງເລື່ອງລາວຄວາມເປັນມາຂອງຄວາມຮັ່ງມີໃຫ້ພໍ່ແມ່ຮັບຮູ້ແລ້ວພໍ່ແມ່ເວົ້າວ່າ ເປັນເລື່ອງເທວະດາຟ້າແຖນ ເປັນຜູ້ເນລະມິດໃຫ້ອະນາຄົດຊີວິດທີ່ແສນໂຊກດີ ໃນໂລກແຫ່ງນີ້ລູກເອີຍ ! ທ້າວຂີ້ຄ້ານນັ້ນ ກໍ່ບອກພໍ່ແມ່ຂອງຕົນເອງມາຢູ່ນຳ.

## 6.2 ເປັນຈັກຈັ່ນ
## (ເປັນອະແວ໋)

ການເລົ່າເລື່ອງຊີວິດຄອບຄົວ ມັນແມ່ນເລື່ອງທີ່ເກີດມາຈາກຊີວິດຂອງຄອບຄົວໜຶ່ງຢ່າງແນ່ນອນ ໃນຊີວິດນັ້ນໄດ້ຜ່ານຄວາມທຸກຍາກລຳບາກເລັກໆໜ້ອຍໆ ຢ່າງພາວະວິໄສໃນຂອງຄອບຄົວຕົນເອງ, ແຕ່ວ່າມີບາງຄັ້ງຄວາມອະທຳ, ຄວາມຊົ່ວຮ້າຍ, ການປອງຮ້າຍ, ອິດສາກັນ, ກຽດຊັງ ແລະ ຄວາມປາຖະໜາຂອງຊີວິດພັດເກີດມີ, ເຂົາເຈົ້າເອົາກັນເປັນຜົວເມຍ ຢາກໃຫ້ລູກ

ເຕັມບ້ານມີຫຼານເຕັມເມືອງຄົນຜູ້ນັ້ນມີບຸນຫຼາຍ, ເຈົ້າວິນຍານເປັນຜູ້ດົນບັນດານ ໃຫ້ມີລູກຫຼາຍ ຫຼືນ້ອຍແມ່ນເປັນນຳບຸນນຳວາດສະໜາຂອງຜົວເມຍນັ້ນເອງ, ສະໄໝຄົນບູຮານນັ້ນ ບັນຫາວາດສະໜາແມ່ນຊີວິດ ທີ່ມີຈິດວິນຍານໃຫ້ແກ່ຄວາມສຳນຶກຂອງຊີວິດທຸກໆຄົນຢູ່ໃນໂລກ.

ໃນເມື່ອສ້າງຄອບຄົວ ຄູ່ຮັກຄູ່ຄອງນັ້ນຢາກໃຫ້ເຈົ້າສັກສິດ ເຈົ້າວິນຍານດົນບັນດານໃຫ້ຜົວເມຍນີ້ ໃຫ້ມີລູກຊາຍກ່ອນກໍ່ຍິ່ງດີມີບຸນຫຼາຍ, ເຂົາເຈົ້າປາຖະໜາເອົາທຸກຄືນທຸກວັນ, ຖ້າມີລູກແລ້ວລູກເປັນແກ້ວເປັນແຫວນໃຫ້ແກ່ສາຍຕາຂອງພໍ່ແມ່ ແລ້ວເຮັດໃຫ້ພໍ່ແມ່ມີກຳລັງໃຈອັນສູງສິ່ງໃນຊີວິດຂອງຕົນເອງ ໃນເມື່ອມີລູກແລ້ວຊີວິດຂອງຜົວເມຍມີຄວາມສຸກ ຖືວ່າເປັນຄົນທີ່ມີບຸນ, ມີບຸນວາດສະໜາສູງ, ເປັນຜູ້ມີເຈົ້າວິນຍານໃຫ້ໂຊກແກ່ຊີວິດຂອງເຂົາເຈົ້າ, ຕາມຄວາມເຊື່ອແລ້ວ ຄົນເຮົາກ່ອນຈະໄດ້ລູກເກີດມາແມ່ນຄົນທີ່ມີບຸນແທ້, ຄົນບໍ່ມີບຸນແມ່ນຄົນບໍ່ມີລູກ ແລະບໍ່ມີຄົນສືບໜໍ່ແທນແນວ, ເຊື້ອສາຍວົງຕະກຸນກໍ່ເສຍໄປໝົດ.

ປີຕໍ່ມາຜູ້ເປັນເມຍເລີຍຖືພາ ຜູ້ເປັນຜົວກໍ່ແສນທີ່ດີໃຈຫຼາຍ, ໃນແຕ່ລະມື້ນັ້ນ ຜົວຖາມເມຍ ແລະ ເມຍກໍ່ຖາມຜົວວ່າ ພວກເຮົາຈະໄດ້ລູກຊາຍ ຫຼືລູກສາວ? ຄົນສະໄໝກ່ອນ ເຂົາເຈົ້າບໍ່ທັນຮູ້ເບິ່ງການຖືພາຂອງແມ່ຍິງເທື່ອ, ເຂົາເຈົ້າຄອງຄອຍເບິ່ງແຕ່ໃນເວລາເກີດອອກມາເທົ່ານັ້ນ ຈຶ່ງຮູ້ຈັກວ່າລູກເປັນຊາຍ ຫຼື ຍິງ. ໃນເມື່ອເຖິງກຳນົດແລ້ວເມຍຂອງລາວເກີດລູກອອກມາ ເປັນລູກຜູ້ຊາຍ, ຮູບຮ່າງອະໄວຍະວະຄົບຖ້ວນ, ໃນທຸກສິ້ນສ່ວນຂອງມະນຸດ, ເຮັດໃຫ້ຜູ້ເປັນພໍ່ດີອົກດີໃຈຫຼາຍຕໍ່ຊີວິດຂອງຕົນເອງ ເປັນຜູ້ມີບຸນຫຼາຍ. ຍ້ອນວ່າຮ່າງກາຍຂອງມະນຸດເປັນສິ່ງມະຫັດສະຈັນທີ່ຫາສິ່ງອື່ນປຽບບໍ່ໄດ້, ມັນໝາຍເຖິງເອກະລັກຂອງຄວາມເປັນມະນຸດຢູ່ໃນໂລກ.

ໃນເມື່ອມີລູກແລ້ວ ເຂົາເຈົ້າຮັກແພງລູກ, ເຂົາເຈົ້າຕັ້ງອົກຕັ້ງໃຈລ້ຽງລູກ, ເບິ່ງແຍງລູກຢາກໃຫ້ລູກເຕີບໃຫຍ່ຂຶ້ນ ຜູ້ເປັນພໍ່ແມ່ຈະໄດ້ໃຊ້ເຫື່ອແຮງຂອງລູກເຮັດແທນພໍ່ແມ່, ພໍ່ແມ່ຈະມີເວລາພັກຜ່ອນວຽກງານ ອັນນີ້ແມ່ນຄວາມໄຝ່ຝັນຂອງພໍ່ແມ່ຢາກໄດ້ຄວາມເປັນຈິງ. ວັນເວລາລ້ຽງລູກຜ່ານໄປ ໄດ້ຫຼາຍປີແລ້ວ, ລູກສ້າງຕົນເອງໃນແຕ່ໄລຍະຂອງຂະຫຍາຍຕົວຂອງມະນຸດ, ເດັກຮູ້ຈັກຫິວ, ເດັກຮູ້ຈັກໄຫ້, ເດັກຮູ້ຈັກຄານ, ຮູ້ຈັກຂວ້ຳໂຕ, ເດັກຮູ້ຈັກນັ່ງ, ຮູ້ຈັກຍ່າງ ແລະ ຮູ້ຈັກນອນ ສິ່ງທີ່ເລົ່າມານັ້ນ ແມ່ນແຫຼ່ງກຳເນີດຂອງຄວາມຮັກທີ່ບໍລິສຸດ, ເປັນຄວາມຮູ້ສຶກທີ່ໝັ້ນໃຈ, ເປັນຄວາມຮັບຜິດຊອບອັນສູງສຸດຂອງພໍ່ແມ່ຕໍ່ລູກ.

ຍ້ອນວ່າຮັກແພງລູກຫຼາຍ, ເຂົາເຈົ້າບໍ່ໃຊ້ວຽກໃຫ້ລູກຢູ່ລ້າກິນດາຍ, ເອົາໃຈໃສ່ຫຼາຍ, ເຂົາເຈົ້າບໍ່ໃຫ້ລູກໄປໄຮ່ໄປສວນ, ໃຫ້ລູກນອນຢູ່ເຮືອນຢູ່ບ້ານ, ເຂົາເຈົ້າຖະໜຸຖະໜອມລູກຊາຍຄົນດຽວ, ເຂົາເຈົ້າຢ້ານລູກເຈັບລູກເປັນຈຶ່ງບໍ່ໃຊ້ລູກ. ແຕ່ວ່າໃນເມື່ອລູກໃຫຍ່ເປັນບ່າວແລ້ວ ພໍ່ແມ່ໃຊ້ລູກໄປເຮັດໄຮ່, ລູກພັດເວົ້າວ່າອີພໍ່ອີແມ່ເອີຍລູກເຈັບຫົວຫຼາຍລູກໄປນຳພໍ່ແມ່ບໍ່ໄດ້, ໃນມື້ໜ້າອີກພໍ່ແມ່ຊວນລູກໄປເຮັດໄຮ່, ລູກນອນຮ້ອງເຈັບທ້ອງ ພໍ່ແມ່ເອີຍລູກໄປບໍ່ໄດ້ດອກ, ພໍ່ແມ່ວ່າຄັນ

ລູກເຈັບໃຫ້ລູກຢູ່ສາ, ເຂົາເຈົ້າເລົ່າວ່າ ການຕີວະຂອງລູກໄດ້ຫຼາຍປີມາແລ້ວ, ແຕ່ວ່າໃນໄລຍະພໍ່ແມ່ຍັງມີສຸຂະພາບແຂງແຮງດີກໍ່ຍັງອົດທົນໄດ້, ແຕ່ໃນເມື່ອພໍ່ແມ່ມີອາຍຸກະສຽນສູງແລ້ວ ເລີ່ມມີແນວຄິດເບື່ອໜ່າຍຕໍ່ລູກເທື່ອລະໜ້ອຍ ເຊິ່ງບໍ່ນຶກວ່າລູກຈະເປັນຄົນຂີ້ຄ້ານຈົນພໍ່ແມ່ເບື່ອໜັງໜ້າ.

ປີໜຶ່ງພໍ່ແມ່ໄດ້ສຶກສາອົບຮົມລູກ, ໃຫ້ລູກຮູ້ຈັກຄວາມຮັກແພງຂອງພໍ່ແມ່ ທີ່ມີຕໍ່ລູກໃນປີທີ່ຜ່ານມາ, ແຕ່ວ່າສອນລູກຫຼາຍເທົ່າໃດລູກຊໍ້າຄຽດກຽດຊັງພໍ່ແມ່ຫຼາຍເທົ່ານັ້ນ. ພໍ່ແມ່ບອກລູກເອົາເມຍແຕ່ບໍ່ມີຜູ້ສາວຄົນໃດມັກ, ຍ້ອນລາວຂີ້ຄ້ານຫຼາຍ, ຜູ້ສາວສະໄໝນັ້ນພັດຊອກຜູ້ບ່າວທີ່ດຸໝັ່ນ ເຂົາເຈົ້າຈຶ່ງມັກຮັກເອົາເປັນຜົວໄດ້. ໃນເມື່ອມີສະພາບເປັນຄືແນວນັ້ນ ພໍ່ແມ່ກໍ່ເລີຍມີຄວາມເບື່ອໜ່າຍຕໍ່ລູກ, ພໍ່ແມ່ຈຶ່ງຕັດສິນໃຈລັກໜີປະລູກໄປຢູ່ບ່ອນອື່ນ.

ຕາເວັນສູງຂຶ້ນສູ່ຂອບຟ້າ, ບົນໜ້າໂລກແຈ້ງສະຫວ່າງທົ່ວທຸກມຸມແລ້ວ, ລາວຕື່ນນອນຊອກຫາຂອງກິນກໍ່ບໍ່ມີ, ລາວຊອກຫາພໍ່ແມ່ກໍ່ບໍ່ເຫັນ, ເຄື່ອງຂອງເຮືອນກໍ່ບໍ່ເຫັນມີຈັກຢ່າງແລ້ວ, ລາວຈຶ່ງຮູ້ສຶກວ່າພໍ່ແມ່ໜີປະໄປແລ້ວ, ລາວຮ້ອງໄຫ້ວ່າ ພໍ່ເອີຍ! ແມ່ເອີຍ! ຂ້ອຍເຈັບຕີນ, ຂ້ອຍເຈັບຕີນ, ລາວໄຫ້ຫາພໍ່ແມ່ຕາມລຳນໍ້າວ່າ ຂ້ອຍເຈັບຕີນ, ກໍ່ບໍ່ເຫັນພໍ່ແມ່ຕອບ, ລາວໄຫ້ນຳຕາມທາງວ່າ ຂ້ອຍເຈັບຕີນແທ້, ບໍ່ແມ່ນລູກຂີ້ຄ້ານດອກ, ລາວເລາະຕາມພູເຂົາວ່າ ຂ້ອຍເຈັບຕີນພໍ່ເອີຍ! ແມ່ເອີຍ ! ຂ້ອຍເຈັບຕີນ, ເອົາຂ້ອຍໄປນຳແດ່, ພໍ່ແມ່ເອີຍ! ລ້ຽງລູກແດ່, ລູກຫິວເຂົ້າຫຼາຍກໍ່ບໍ່ມີໃຜຕອບຂານຫາລູກ, ລາວກັບມາບ້ານອີກກໍ່ບໍ່ເຫັນພໍ່ແມ່, ລາວນັ່ງໄຫ້ວ່າຂ້ອຍເຈັບຕີນແທ້ກໍ່ບໍ່ມີໃຜສົງສານລາວອີກ.

ຫຼັງຈາກພໍ່ແມ່ໜີປະລາວໄປນັ້ນ, ລາວມີແຕ່ໄຫ້ນໍ້າຕາໄຫຼອາບແກ້ມ, ລາວໄຫ້ຕະຫຼອດວັນຕະຫຼອດຄືນວ່າ ຂ້ອຍເຈັບຕີນ ! ຂ້ອຍເຈັບຕີນ ! ລາວໄຫ້ຈາກວັນກາຍເປັນເດືອນ, ໄຫ້ຈາກເດືອນກາຍເປັນປີ, ໄຫ້ຈາກປີກາຍມາເປັນທົດສະວັດ, ລາວໄຫ້ຫາພໍ່ແມ່ຢູ່ບໍ່ເຊົາ, ໄຫ້ຫຼາຍເທົ່າໃດກໍ່ເຮັດໃຫ້ຮ່າງກາຍຈ່ອຍຜ່ອມນ້ອຍເຂົ້າ, ລາວໄຫ້ຫຼາຍນໍ້າຕາໄຫຼອອກມາເຂົ້າປາກ ແລ້ວດູດກິນນໍ້າຕາຂອງຕົນເອງໃນບໍ່ຊ້າລາວກໍ່ກາຍເປັນໂຕຈັກຈັ່ນສີດຳ ແລະ ມັນກໍ່ຮ້ອງຈົນມາຮອດສູ່ມື້ນີ້. ໃນເມື່ອຮອດລະດູເຮັດໄຮ່ ແລ້ວໃຜໆກໍ່ໄດ້ຍິນສຽງຈັກຈັ່ນໂຕນັ້ນຮ້ອງວ່າ : ເຈັບຕີນ ! ເຈັບຕີນ !.

# 7. ຄົນກັບທຳມະຊາດ

## (ຄູຍເລີງກຣູງພັຣບາງ)

## 7.1 ລອຍນ້ຳໝອກ

## (ປອັງດາກອັຣຢືວ)

ຄົນກະຕູໃນສະໄໝກ່ອນ, ການຕັ້ງຖິ່ນຖານຢູ່ຕາມເປີ້ນພູ ເພື່ອສະດວກໃນການໄປມາ ເພື່ອສະດວກໃນການທຳມາຫາລ້ຽງຊີບໄດ້ດີ. ດັ່ງນັ້ນ, ເຂົາເຈົ້າຕ້ອງໄດ້ຄິດໄລ່ຢ່າງສົມເຫດສົມຜົນໃນການຕັ້ງບ້ານບໍ່ໃຫ້ຕັ້ງຢູ່ບ່ອນຕ່ຳຫຼາຍມັນຈະລຳບາກຫຼາຍໃນການຂຶ້ນພູ, ຖ້າວ່າຕັ້ງບ້ານ ຢູ່ສູງເກີນໄປ ມັນຈະຫຍຸ້ງຍາກໃນການຂຶ້ນລົງ. ຄົນພູດອຍມັກຈະເລືອກເອົາສະຖານທີ່ ທີ່ເໝາະສົມກັບການດຳລົງຊີວິດທີ່ສອດຄ່ອງກັບພູມສາດ ແລະ ສອດຄ່ອງກັບເງື່ອນໄຂສະພາບແວດລ້ອມຂອງທຳມະຊາດອີກດ້ວຍ. ສະນັ້ນ ພວກເຂົາເຈົ້າຈຶ່ງຕັ້ງບ້ານຢູ່ລະຫວ່າງກາງຄວາມສູງຂອງພູ, ຕັ້ງຢູ່ຕາມເປີ້ນພູຢ່າງຖືກຕ້ອງຕາມລັກສະນະຈຸດພິເສດຂອງພູມລຳເນົາທີ່ຕົນເອງອາໄສຢູ່.

ໃນເມື່ອຕັ້ງບ້ານຢູ່ເປີ້ນພູແລ້ວ, ມີເຊົ້າມື້ໜຶ່ງນ້ຳໝອກລົງມາຫຼາຍ, ນ້ຳໝອກຣວາຍຣຳຢາຍ ຮອດລຳນ້ຳເຊຈົນມືດຕຶບບໍ່ເຫັນຫຍັງ ຄົນຕື່ນເຊົ້າມາເວົ້າວ່າ ນ້ຳຖ້ວມ ຫຼື ວ່ານ້ຳມາກ, ກໍ່ແປກໃຈຫຼາຍທີ່ນ້ຳຂຶ້ນສູງແທ້ກໍ່ປຸກກັນລຸກຂຶ້ນມາເບິ່ງ ເອີ້ນເອົາຄົນເຮືອນເໜືອເຮືອນໃຕ້ລຸກມາລອຍນ້ຳຫຼິ້ນ, ພາກັນແຕກຕື່ນກັນຢ່າງອຶກກະທຶກ ນ້ຳຂຶ້ນຮອດບ້ານແລ້ວ, ພາກັນໂອ້ລົມກັນຈັ່ງແມ່ນຊາດດີໃຈຫຼາຍ ນ້ຳຂຶ້ນສູງເຖິງບ້ານມັນເລື່ອງໂຊກດີຂອງພວກເຮົາແລ້ວ.

ເຂົາເຈົ້າພາກັນເອີ້ນກັນມາລອຍນ້ຳຫຼິ້ນ, ມີຜູ້ຊາຍຄົນໜຶ່ງລາວນຸ່ງສິ້ງໂດດລົງໄປແລ້ວພວກບໍ່ທັນໂດດລົງນ້ຳຮ້ອງໃສ່ວ່າ ເຈົ້າຮອດຕະຝັ່ງແລ້ວບໍ? ສຽງສະທ້ອນຄືນບອກວ່າຮອດແລ້ວ, ຜູ້ທີ່ສອງໂດດລົງໄປແລ້ວຜູ້ບໍ່ທັນໂດດນັ້ນ ຮ້ອງໃສ່ວ່າເຈົ້າລອຍໄປຮອດແລ້ວບໍ? ສຽງສະທ້ອນຄືນ ບອກວ່າຮອດແລ້ວເຂົາເຈົ້າພາກັນໂດດລົງເປັນແຖວໆ. ແຕ່ວ່າໂຊກເຂົ້າຂ້າງດີຫຼາຍຕາເວັນອອກມາໄວ, ເຮັດໃຫ້ແສງແດດສ່ອງແສງສູ່ຜືນໂລກຢ່າງໄວວາ, ເຮັດໃຫ້ນ້ຳໝອກນັ້ນລະເຫີຍອາຍໄປ, ດັ່ງນັ້ນ ຊາວບ້ານຈະຕາຍໝົດຍ້ອນລອຍນ້ຳໝອກ, ນ້ຳໝອກໄດ້ສະຫຼາຍຕົວໄປ, ເຂົາເຈົ້າຈຶ່ງຮູ້ຈັກວ່າພວກຕົນເອງລອຍນ້ຳໝອກ, ມັນບໍ່ແມ່ນລອຍນ້ຳເຊຂຶ້ນດອກ. ພວກທີ່ໂດດລົງວ່ານ້ຳນັ້ນ ພາກັນຕາຍເປັນກອງຢູ່ແຄມເຊ. ນ້ຳໝອກຫ່າງຫາຍໄປແລ້ວລູກເມຍເຫັນພໍ່ເຫັນຜົວຕາຍກໍ່ພາກັນຮ້ອງໄຫ້ຢ່າງຟົດສະນັ່ນຫວັ່ນໄຫວໄປທົ່ວບ້ານ.

ຊີວິດເປັນຜູ້ສ້າງເລື່ອງ, ເຂົາເຈົ້າມັ່ງມັດຊາກສົບຄົນຕາຍ ມັນບໍ່ແມ່ນເລື່ອງຂອງງ່າຍ

ດອກ, ຕາມຮີດຄອງປະເພນີຂອງຄົນກະຕູແລ້ວ ຄົນຕາຍແບບນີ້ຕ້ອງຊໍາລະບາບກໍາຢ່າງຫຼວງຫຼາຍໃຫ້ແກ່ຜີຫ່າຜີຫຸ່ງກິນ ການຊໍາລະຈາກແດງໄປສູ່ດໍານັ້ນຕ້ອງແກ້ແຕ່ລະບາດກ້າວຄື: ບາດກ້າວທີ່ໜຶ່ງ ຕ້ອງຂ້າໄກ່ຂາວລ້ຽງຜີຫຸງ ຂ້າໄກ່ດໍາເພື່ອຮັບເອົາໂຊກຂອງຊີວິດ ບາດກ້າວທີ່ສອງຕ້ອງຂ້າໝູຂາວ ແບ້ຂາວ ງົວຂາວ ແລະ ຄວາຍຂາວເພື່ອຊໍາລະບາບກໍາໃຫ້ຜີຫ່າຜີຫຸງ, ຜີດິບຜີແດງກິນແລ້ວ. ບາດກ້າວທີ່ສາມເຂົາເຈົ້າຂ້າໝູດໍາ, ແບ້ດໍາ, ງົວດໍາ, ຄວາຍດໍາ ເພື່ອຖວາຍເອົາຊີວິດທີ່ມີຈິດວິນຍານຈາກສິ່ງສັກສິດນັ້ນ ຕາມໃນລະບົບຄວາມເຊື່ອຖື ເພື່ອໃຫ້ພະລັງຈິດໃຈນັ້ນໃຫ້ເໜືອກວ່າພະລັງອໍານາດຂອງທໍາມະຊາດ, ຄົນເຮົາຈຶ່ງຈະບໍ່ຕາຍເປັນຄືແນວນີ້ ຄົນຈຶ່ງຫຼີກເວັ້ນຈາກການຕາຍຫ່າຕາຍຫຸງອີກດ້ວຍ.

## 7.2 ກົກໝ້ອງ
## (ໂຕມພີຊ)

ເລົ່າເລື່ອງທໍາມະຊາດ ໃນສະໄໝຄົນບູຮານ ມີຫຼາຍສິ່ງຫຼາຍຢ່າງທີ່ແປກປະຫຼາດເຫັນກັບຫູກັບຕາຂອງທໍາມະຊາດທີ່ມີປະກົດການໃຫ້ເຫັນຕໍ່ໜ້າຕໍ່ຕາ ຄົນບູຮານສະໄໝນັ້ນເປັນຕາໜ້າງຶດງໍ້ທີ່ສຸດ. ເຂົາເຈົ້າເລົ່າເລື່ອງວ່າ ທໍາມະຊາດມີຈິດວິນຍານ, ມີພະລັງອໍານາດເໜືອກວ່າມະນຸດອີກ, ແຕ່ວ່າຄົນໃນປະຈຸບັນ ພັດມີພະລັງອໍານາດເໜືອກວ່າທໍາມະຊາດ, ໃນລະບົບຄວາມເຊື່ອຖືສິ່ງສັກສິດ ໃນສະໄໝບູຮານແມ່ນເລື່ອງທີ່ເຫຼືອເຊື່ອ, ມະນຸດພວກເຮົາຕ້ອງຍອມໄປຕາມກົດເກນຂອງທໍາມະຊາດ. ດັ່ງນັ້ນ ຊີວິດຂອງມະນຸດຕ້ອງເກີດມາຈາກຊີວິດທໍາມະຊາດ, ແຕ່ວ່າຊີວິດຂອງຄົນກໍ່ເຮັດສິ່ງທີ່ມະຫັດສະຈັນຫຼາຍຢ່າງ, ແຕ່ວ່າຊີວິດຂອງທໍາມະຊາດກໍ່ເຮັດບາງຢ່າງທີ່ມີຄວາມມະຫັດສະຈັນເໝືອນກັນ.

ເລື່ອງເວົ້າເລົ່າຕໍ່ກັນມາຕາມປູ່ຍ່າຕາຍາຍ ໃຫ້ລູກຫຼານຮູ້ຈັກວ່າ ເລື່ອງຕົ້ນໄມ້ນັ້ນກໍ່ມີຫຼາກຫຼາຍມີຢູ່ທົ່ວໂລກ ມີຕົ້ນໄມ້ໃຫຍ່ນ້ອຍຢູ່ບົນໜ້າໂລກ ມີຕົ້ນໄມ້ທີ່ມະນຸດກິນໄດ້ ມີຕົ້ນໄມ້ເປັນສິນຄ້າ, ແຕ່ມີຕົ້ນໄມ້ທີ່ມີທາດພິດເຊິ່ງສາມາດຂ້າຄົນ ແລະ ສັດຕາຍໄດ້. ເຂົາເຈົ້າເລົ່າໃຫ້ເດັກນ້ອຍຟັງວ່າ ຕົ້ນໄມ້ກໍ່ມີລັກສະນະທີ່ແຕກຕ່າງກັນ ມີບາງຊະນິດຄົນສັງເກດເຫັນ ແລະ ຮູ້ຈັກການດໍາລົງຊີວິດຂອງມັນຢ່າງຖືກຕ້ອງ, ເຂົາເຈົ້າສັງເກດຕົ້ນໄມ້ເໝືອນກັນກັບຄົນສັງເກດໃຈຄົນຄືກັນກ່ອນຈະລົມຄວາມກັນກໍ່ຕ້ອງເຂົ້າໃຈຄົນນັ້ນວ່າມີນິດໄສແນວໃດ ແລ້ວຄົນເຮົາຈຶ່ງເວົ້າເຂົ້າໃຈກັນ ແລະຢູ່ນໍາກັນໄດ້, ມີຄວາມຮັກແພງກັນຢ່າງເລິກເຊິ່ງ ຢູ່ໃນຊີວິດສັງຄົມ.

ເວົ້າເລື່ອງຮູບປະພັນລັກສະນະຂອງຕົ້ນໄມ້ໜ້ອງ, ຕົ້ນໄມ້ໜ້ອງເປັນຕົ້ນໃຫຍ່ຊະນິດໜຶ່ງ, ຕົ້ນໄມ້ໜ້ອງບໍ່ເກີດບໍ່ປົ່ງອອກມາເໝືອນຕົ້ນໄມ້ອື່ນໆ, ຕົ້ນໄມ້ໜ້ອງມັນຢູ່ເອກະລາດ, ມັກເກີດຢູ່ຍອດຫ້ວຍ, ບໍ່ມີຕົ້ນໄມ້ອື່ນປົນມັນ, ໃບຂອງຕົ້ນໄມ້ໜ້ອງມັນຄ້າຍຄືໃບຕົ້ນສົ້ມໂອ, ສ່ວນງ່າຂອງມັນກໍ່ບໍ່ມີຫຼາຍ, ໃບຂອງມັນກໍ່ບໍ່ດົກໜາປານໃດ. ເຂົາເຈົ້າເລົ່າວ່າເປັນຕົ້ນໄມ້ທີ່ຄົນຢ້ານ ແລະ ຫຼາຍຄົນບໍ່ກ້າເຂົ້າໄປໃກ້ຕົ້ນຂອງມັນ, ເຂົາເຈົ້າຢ້ານເຊື້ອບ້າເຊື້ອຜີຈະຕິດໃສ່ເຂົາເຈົ້າ. ດັ່ງນັ້ນມັນເປັນຕົ້ນໄມ້ທີ່ມີໜ້ອຍຄົນເຂົ້າໃກ້ຊິດມັນ, ເປັນຕົ້ນໄມ້ມີທາດພິດຫຼາຍໃນເມື່ອຄົນເຮົາໃຊ້ໃນການຂ້າຄົນ ຫຼືສັດຈະຕາຍບໍ່ກາຍໜຶ່ງຊົ່ວໂມງ, ຄວາມເຂັ້ມຂອງທາດພິດຂອງໜ້ອງນັ້ນ ແມ່ນຂຶ້ນກັບຜູ້ປຸງແຕ່ງກັ່ນເອົາທາດຢາງຂອງມັນ ສີສັນຂອງຢາງໜ້ອງມີສີດຳຈຶ່ງແມ່ນຂອງແທ້ ຖ້າວ່າສີດຳປົນຂາວແມ່ນບໍ່ມີພິດຮ້າຍແຮງ ຫຼາຍປານໃດ.

ປູ່ຍ່າຕາຍາຍໃຫ້ລູກຫຼານຂອງຕົນຮູ້ຈັກເລື່ອງກັບກົກໄມ້ໜ້ອງ ຫຼື ວ່າຕົ້ນໄມ້ໜ້ອງວ່າມັນຮ້ອງເໝືອນຄົນຮ້ອງ, ສຽງມັນຮ້ອງດັ່ງໂຮ ! ໂຮ ! ເປັນສຽງຮ້ອງເອີ້ນຜູ້ອື່ນ (ພາສາກະຕູວ່າກັຮໂຮ). ຖ້າວ່າຄົນໃດຕອບຂານຕາມສຽງຮ້ອງນັ້ນ ແມ່ນຕິດເຊື້ອບ້າໜ້ອງນັ້ນໂລດ. ຕົ້ນໄມ້ໜ້ອງບໍ່ຮ້ອງຍາມກາງເວັນ, ມັນຮ້ອງຍາມກາງຄືນຕອນເດິກ. ໃນເມື່ອໄດ້ຍິນສຽງຮ້ອງຂອງໜ້ອງມັນເປັນຕາໜ້າຢ້ານກົວຫຼາຍ, ຄົນໄດ້ຍິນສຽງແມ່ນງຽບສະງັດ ບໍ່ກ້າຮອດມືນຕາຂຶ້ນມາຊ້ຳ ຄືສຽງຜີຮ້ອງໃນຍາມເດິກ ມີແສງດາວສະເດັດອອກໄປເໝືອນຈະຫຼວດເປັນສີແດງຮຸ່ງອອກໄປ, ແລ້ວມີແສງຕ້ອງກັບມາສູ່ຕົ້ນໄມ້ໜ້ອງອີກ. ຕົ້ນໄມ້ໜ້ອງເປັນຕົ້ນໄມ້ແປກປະຫຼາດຫຼາຍບໍ່ຄືກັບຕົ້ນໄມ້ອື່ນ ຍ້ອນວ່າໃບມັນຄືກັບໃບສົ້ມໂອ ລຳຕົ້ນຂອງມັນບໍ່ມີໜາມ (ພາສາກະຕູເອີ້ນວ່າໂຕມພິຊ).

ການໄປເອົາຢາງໜ້ອງ ແມ່ນມີການຈັດພິທີຖວາຍບະ ໃຫ້ແກ່ຜີຕົ້ນໜ້ອງກິນ, ເຂົາເຈົ້າເອົາໝູໂຕໜຶ່ງ, ໄກ່ໂຕໜຶ່ງເພື່ອຂ້າລ້ຽງຜີຕົ້ນໄມ້ໜ້ອງກິນ. ຫຼັງຈາກຂ້າໝູໄກ່ໃຫ້ຕົ້ນໄມ້ໜ້ອງກິນແລ້ວເຂົາເຈົ້າເອົາມີດແຫຼມແທກເປືອກໄມ້ໜ້ອງ ແລ້ວເອົາກະບັ້ງໂຕ່ງຢາງໜ້ອງທີ່ໄຫຼອອກມາໃສ່ກະບັ້ງເທື່ອລະໜ້ອຍ ເຂົາເຈົ້າຖ້າເອົາຢາງໜ້ອງໃຊ້ເວລາພຽງແຕ່ຫ້າມື້ຮອດສິບມື້, ສ່ວນ ຄອບຄົວຢູ່ບ້ານກໍ່ມີການຄະລຳບາງຢ່າງ ເພື່ອຄວາມເຂັດຢຳຂອງຜີວຕ້ອງມີການຮ້າຍຢາງ ໜ້ອງບາງເທື່ອນຳໃຊ້ໃນປາຍຫອກ ຫຼືລູກໜ້າ ເພື່ອແທງ ຫຼືຍິງຄົນ ແລະ ສັດປ່າ ຖ້າຖືກບາດແຜນ້ອຍໜຶ່ງແມ່ນຕ້ອງຕາຍໂລດ.

# 8. ກ່ຽວກັບຊີວິດ
## (ອະເລີງໆອະມິງ)
## 8.1 ຄົນໄລ່ຂ້າເງົາ
### (ຄູຍວງງຂາເຈັດອະໂຕ)

ຊີວິດຄວາມກະຕັນຍູຂອງຄົນຜູ້ໜຶ່ງເປັນວິນຍານຈິດກະຕັນຍູ ຊີວິດຂອງຄົນແມ່ນມາຈາກຊີວິດ ເອກະລັກຂອງຄວາມເປັນມະນຸດ ແມ່ນຢູ່ໃນການດຳລົງຊີວິດ. ແຕ່ວ່າທຸກສິ່ງທຸກຢ່າງຍ່ອມເກີດຕາມກົດເກນແຫ່ງເຫດ ແລະ ຜົນ. ແຕ່ວ່າຜົນທຸກຢ່າງຍ່ອມເກີດຈາກເຫດເທົ່ານັ້ນ. ເຂົາເຈົ້າເວົ້າວ່າ ຮ່າງກາຍມະນຸດເປັນສິ່ງມະຫັດສະຈັນໃຈ ທີ່ຫາສິ່ງໃດມາປຽບບໍ່ໄດ້. ແຫຼ່ງກຳເນີດຂອງຄວາມຮັກທີ່ບໍລິສຸດແມ່ນມາຈາກຄວາມຮູ້ສຶກທີ່ໝັ້ນໃຈເຕັມໃຈ ມາຈາກຄວາມຮັບຜິດຊອບອັນສູງສຸດຂອງຊີວິດ ມະນຸດ ມັນແມ່ນການດຳລົງຊີວິດປະຈຳວັນນັ້ນເອງ.

ເລື່ອງຊາຍຄົນໜຶ່ງໃນສະໄໝກ່ອນ ຕ່າງຈາກຜູ້ຊາຍປະຈຸບັນນີ້ຕັ້ງຫຼາຍເທົ່າ ຈົນນັບບໍ່ໄດ້ວ່າໃນໄລຍະໃດ, ສະຕະວັດທີ່ເທົ່າໃດອີກຊໍ້າ, ເລື່ອງລາວເກີດຂຶ້ນຢູ່ກັບຜູ້ຊາຍນີ້ ລາວອອກເດີນທາງມຸ່ງໜ້າໄປເຮັດໄຮ່, ແຕ່ວ່າລາວໄປຮອດກາງທາງແລ້ວ ກໍ່ພໍດີຕາເວັນຂຶ້ນສູ່ຂອບຟ້າ ແສງຕາເວັນສ່ອງແສງລົງມາສູ່ພື້ນໂລກ, ສ້າງໃຫ້ໂລກມີຄວາມອົບອຸ່ນຢ່າງສິດຊື່ນ. ລາວກໍ່ຟ້າວຍ່າງໄປຢ່າງໄວວາ ເພື່ອໃຫ້ໄປຮອດໄຮ່ແຕ່ເຊົ້າ ແລະ ເຮັດວຽກໃຫ້ໄດ້ຫຼາຍ, ແຕ່ໃນເມື່ອແສງແດດກ້າແລ້ວ ພື້ນໂລກກໍ່ຮ້ອນອົບເອົ້າຫຼາຍ ລາວຫຼຽວຄືນກັບຫຼັງລາວເຫັນມີເງົາຄົນຍ່າງນຳຫຼັງມາ, ລາວຄິດວ່າໂຈນ ຫຼື ຂະໂມຍນຳມາຂ້າລາວ, ລາວແລ່ນໜີໄປຈາກໄຮ່ຢ່າງລອດລິ້ມລອດຕາຍ, ລາວປົບໜີຍ້ອນເຫັນຄົນນຳມາຂ້າ, ແລ່ນຮອດໄລຍະໜຶ່ງ ລາວຫຼຽວຫຼັງຄືນກໍ່ຍັງເຫັນຄົນແລ່ນນຳມາຢູ່ ຕາມດິນແຕ່ວ່າຫົວປິ່ນໄປທາງຫຼັງເພິ່ນ, ຕີນພັດຕິດເພິ່ນອີກດ້ວຍ, ລາວແລ່ນຮອດຖຽງໄຮ່ແລ້ວຮູ້ສຶກເມື່ອຍຫຼາຍເລີຍນອນຫຼັບກັບບ່ອນໂລດ.

ລາວຊວາດຕື່ນຂຶ້ນມາກໍ່ພໍດີຕາເວັນທ່ຽງແລ້ວ, ລາວຮູ້ສຶກຕົວວ່າ ແລະ ຈະລຸກໄປເສຍຫຍ້າໄຮ່, ລາວອອກຈາກໃນຖຽງແລ້ວຍ່າງໄປຢືນຢູ່ຕໍ່ໜ້າຖຽງໄຮ່ ກໍ່ພໍດີເຫັນຄົນຢືນເຈັ້ນເທີ້ນໃສ່ໜ້າລາວ, ລາວແລ່ນໄປເອົາພ້າເພື່ອມາຂ້າຄົນທີ່ມາຫາລາວ, ລາວຟັນຫົວຄົນກໍ່ບໍ່ເຫັນຂາດຈັກເທື່ອ, ລາວຫຼຽວຂວາພັດເຫັນຢູ່ເບື້ອງຂວາ, ລາວຫຼຽວຊ້າຍພັດເຫັນຢູ່ເບື້ອງຊ້າຍ, ລາວໄລ່ຟັນຄົນມາ ຕາມຫຼັງກໍ່ບໍ່ທັນຈັກເທື່ອ, ລາວແລ່ນກ່ອນຊໍ້າ, ຟັນຄໍບໍ່ເຖິງຈັກເທື່ອ. ລາວແລ່ນກັບຄືນຄົນພັດແລ່ນໄລ່ຕາມຫຼັງວັບໆ, ລາວແລ່ນເມື່ອຍລາວຢືນຈົກຢູ່ ແລ້ວລາວເຫັນຄົນນັ້ນຢືນກັບທີ່ບໍ່

ເຫັນເໜັງຕີງ. ລາວປິ່ນໄປປິ່ນມາກໍ່ຍັງເຫັນຄົນນຳຫຼັງລາວຢູ່, ລາວຈັບງ້າວໄລ່ຟັນຕະພຶດຕະພື ແຕ່ຄົນຜູ້ນັ້ນຍັງໄລ່ນຳລາວມາຢູ່ຄືເກົ່າ, ລາວແລ່ນໄລ່ຟັນໝົດມື້ຈົນຕາເວັນຕົກດິນລາວກໍ່ບໍ່ເຫັນ ຄົນນັ້ນນຳມາອີກ ລາວກໍ່ກັບເມືອບ້ານ, ໃນເມື່ອຮອດເຮືອນຄົນຢູ່ໃນເຮືອນຖາມເປັນຫຍັງເຈົ້າຈຶ່ງ ກັບມາບ້ານຊ້າແທ້, ລາວເລົ່າໃຫ້ຄົນໄທເຮືອນຟັງວ່າ ມີຄົນນຳຫຼັງຂ້ອຍມາຕະຫຼອດຈົນບໍ່ໄດ້ເສຍ ຫຍ້າ ຍ້ອນໄລ່ຂ້າຄົນຜູ້ນັ້ນບໍ່ໄດ້, ລາວເລົ່າວ່າ : ຂ້ອຍແລ່ນໄປຂ້າມັນໆຊ້ຳພັດແລ່ນໜີກ່ອນ, ຂ້ອຍແລ່ນກັບຄືນກໍ່ເຫັນ ແລ່ນນຳຫຼັງອີກດ້ວຍ, ລາວເລົ່າກົກປາຍສາຍເຫດໃຫ້ຜູ້ອື່ນຟັງ, ໃນເມື່ອ ຟັງລາວເລົ່າຈົບແລ້ວ ເຂົາເຈົ້າພາກັນຫົວຈົນແຂ້ວແຫ້ງ, ຫົວຈົນລອດລີ້ນລອດຕາຍຕໍ່ໜ້າລາວ, ເຂົາເຈົ້າບອກໃຫ້ລາວຮູ້ຈັກວ່າ ອັນນັ້ນບໍ່ແມ່ນຄົນ ແລະບໍ່ແມ່ນຜີດອກ, ສິ່ງທີ່ເຈົ້າເຫັນນັ້ນມັນ ແມ່ນເງົາຂອງເຈົ້າເອງ, ເຈົ້າຊິໄລ່ຂ້າໄລ່ຟັນມັນເຮັດຫຍັງ, ມັນເຮັດ ຫຍັງໃສ່ເຈົ້າບໍ່ໄດ້ດອກ, ເງົາ ຂອງເຈົ້າເກີດຂຶ້ນໃນຍາມແສງຕາເວັນຂຶ້ນສູງ ເຈົ້າຈຶ່ງເຫັນເງົາຂອງຕົນເອງຕະຫຼອດເວລາ, ໃນມື້ ຕໍ່ມາຮອດຍາມຕາເວັນຂຶ້ນສູງແລ້ວ ເຂົາເຈົ້າອອກຍ່າງຢູ່ເດີ່ນບ້ານ ແລ້ວໃຫ້ລາວມາເບິ່ງເງົາຂອງ ຕົນເອງປະກົດຕົວ, ເຈົ້າຍ່າງແບບໃດໄປທາງໃດເງົານັ້ນກໍ່ໄປນຳ ທຸກທາງ.

## 8.2 ຄົນລໍຖ້າສຽງ

## (ຄູຍເດີງກະສາງ)

ສະໄໝກ່ອນນັ້ນ ເຂົາເຈົ້າບໍ່ເຂົ້າໃຈວ່າ ຊີວິດເກີດມາຈາກຊີວິດ, ເວົ້າວ່າຊີວິດເປັນຜູ້ສ້າງ ເລື່ອງ, ການກະທຳຂອງຄົນບູຮານນັ້ນ ໄດ້ສ້າງໄວ້ໃຫ້ແກ່ຊີວິດຂອງຄົນຮຸ່ນກ່ອນ ສ້າງເປັນຂອງ ຂວັນນ້ອຍໆ ໃຫ້ແກ່ລູກຫຼານເຂົ້າໃຈບັນຫາຊີວິດຂອງຄົນຮຸ່ນກ່ອນ ມີຫຼາຍອັນພັນແນວໃນຊີວິດ. ເຂົາເຈົ້າໄດ້ປະສົບພົບພໍບົນເສັ້ນທາງຂອງຊີວິດ. ເສັ້ນທາງຂອງຊີວິດມັນບໍ່ຊື່ກົງປານໃດ, ຍາມ ໃດກໍ່ຕ້ອງມີບ່ອນຄົດລ້ຽວໂງເງ, ດັ່ງນັ້ນຈິດໃຈຍາມໃດຕ້ອງດັດແປງໄປຕາມເສັ້ນທາງຂອງຊີວິດ ເຮັດໃຫ້ຊີວິດມີບາງບ່ອນລາບລື່ນ, ແຕ່ບາງບ່ອນຂຶ້ນພູລົງຄ້ອຍ, ບາງບ່ອນເສັ້ນທາງຂອງຊີວິດ ພົບກັບຄວາມທຸລະກັນດານກີດຂວາງຊີວິດ, ຄົນເຮົາຕ້ອງເອົາຊີວິດເຂົ້າແລກເພື່ອຊີວິດຕ້ອງຕໍ່ສູ້ ເອົາຊີວິດຢູ່ລອດ, ຄວາມໂງ່ ຫຼືຄວາມສະຫຼາດນັ້ນ ມັນຂຶ້ນກັບຄວາມເປັນຈິງຂອງຊີວິດ.

ພວກຊາວບ້ານພາກັນອອກບ້ານໄປໄຮ່ ເພື່ອເຮັດວຽກງານການໄຮ່ ແມ່ນວຽກໜຶ່ງທີ່ສຳຄັນ ຂອງຊີວິດຄົນບ້ານນອກຂອກນາ. ມັນເປັນວຽກງານທີ່ລ້ຽງປາກລ້ຽງທ້ອງ ໃນຊີວິດປະຈຳວັນຂອງ ເຂົາເຈົ້າ, ຊີວິດຂອງຄົນບ້ານນອກ ເຂົາເຈົ້າບໍ່ຕ້ອງການຫຍັງຫຼວງຫຼາຍດອກຕ້ອງການພຽງມີເລົ້າ ເຂົ້າມີເຂົ້າເຕັມເລົ້າກໍ່ພໍແລ້ວ, ດັ່ງນັ້ນ, ເຂົາເຈົ້າຈຶ່ງຖາງປ່າເຮັດໄຮ່, ໃນມື້ນັ້ນ ເຂົາເຈົ້າເສຍຫຍ້າ

ເພື່ອບົວລະບັດຕົ້ນເຂົ້າແຕ່ລະຕົ້ນໃຫ້ງອກງາມດີເປັນຮວງເຂົ້າດົກໜາຫຼາຍໆ ການເກັບກ່ຽວເຂົ້າຈຶ່ງໄດ້ຫຼາຍ, ດັ່ງນັ້ນ ຄົນບ້ານນອກຈຶ່ງເອົາຫຼັງສູ່ຟ້າເອົາໜ້າສູ່ດິນ ປານນັ້ນເຂົາເຈົ້າຫຍັງທຸກຍາກຫຼາຍ, ເຂົາເຈົ້າດຳລົງຊີວິດແບບກິນກັນທີ່ອີງໃສ່ຊີວິດຕົວຈິງ ບໍ່ເຫັນຄວາມຈະເລີນຄວາມສີວິໄລມາຫຼາຍເຊັ່ນຄົນແລ້ວ.

ເຂົາເຈົ້າອອກບ້ານໄປເຮັດໄຮ່ຢ່າງເອົາຈິງເອົາຈັງນຳຕົ້ນເຂົ້າ ເສຍຫຍ້າຂ້າບົ້ງໃນທົ່ວຜືນໄຮ່ຢ່າງຂະຫຍັນໝັ່ນພຽນ, ແຕ່ມີຜູ້ໜຶ່ງລາວໄປໄຮ່ ເພື່ອໄປເຮັດເສຍຫຍ້າແທ້, ແຕ່ວ່າໃນເມື່ອລາວໄປຮອດໄຮ່ແລ້ວ, ລາວຢາກນອນຫຼິ້ນສາກ່ອນ ແຕ່ສຸດທ້າຍລາວນອນຫຼັບອີ່ຫຼີ ບໍ່ແມ່ນ ນອນຫຼິ້ນອີກ. ໃນເມື່ອລາວນອນຫຼັບດີ ເມື່ອນອນອີ່ມແລ້ວ, ລາວຊວາດຮູ້ເມື່ອກໍ່ຮອດຕອນບ່າຍແລ້ວ, ຄົນອື່ນໄດ້ກັບຄືນ ເມືອບ້ານແຕ່ຍາມທ່ຽງເວັນແລ້ວ, ລາວອອກຢືນນອກຖຽງໄຮ່ ກໍ່ເຫັນແຕ່ຄວາມງຽບສະງັດທຸກຜືນໄຮ່ ບໍ່ມີຄົນແລ້ວ, ລາວຈຶ່ງຮຽກເອີ້ນຄົນອື່ນວ່າ ພວກເຈົ້າເອີຍ! ມີສຽງຕອບລາວຄືນວ່າ ເອີຍ ! ລາວຮ້ອງເອີ້ນວ່າ ພວກເຈົ້າເອີຍ ! ແລ້ວມີສຽງຕອບຄືນເອີຍ! ລາວເສຍຫຍ້າເລັກນ້ອຍແລ້ວລາວເອີ້ນອີກວ່າ ພວກເຈົ້າເມືອແລ້ວຫຼືຍັງສຽງຕອບຄືນວ່າຍັງ? ລາວເສຍຫຍ້າໄຮ່ຕໍ່ອີກ, ແຕ່ວ່າລາວບໍ່ໝັ້ນໃຈປານໃດ ລາວຢ້ານຄົນອື່ນເມືອປະລາວ, ລາວຢ້ານຍ້ອນຕາເວັນຕົກລົງໄປແລ້ວ ຕາເວັນໄດ້ອຳລາປ່າດົງດິນ ດອນຕອນຫຍ້າບາງສ່ວນແລ້ວ, ລາວຮຽກເອີ້ນວ່າເມືອເດີ! ເມືອເດີ! ຕາເວັນໃກ້ຈະຕົກລົງດິນແລ້ວ, ເມືອເດີ! ມີສຽງຕອບວ່າເມືອເດີ ! ລາວລໍຖ້າຄົນອື່ນກັບເມືອບ້ານແຕ່ວ່າບໍ່ເຫັນໃຜເມືອ, ລາວລໍຖ້າຈົນຕາເວັນລັບຂອບຟ້າໄປແລ້ວ ໃກ້ຮອດຍາມຄ່ຳຂະຫຍັບເຂົ້າມາແລ້ວ, ລາວຈຶ່ງຕັດສິນໃຈກັບເມືອບ້ານແຕ່ຜູ້ ດຽວ.

ຍ່າງເມືອບ້ານຕາມເສັ້ນທາງທີ່ຍາວໄກພໍສົມຄວນ, ຄວາມມືດກໍ່ຫຍັບໃກ້ເຂົ້າມາ, ເຮັດໃຫ້ລາວໄຕ້ໄຟເມືອບ້ານຜູ້ດຽວ ໃນເມື່ອເມືອຮອດບ້ານແລ້ວໃຜໆກໍ່ຫຸ້ມມາເບິ່ງລາວ ແລ້ວຖາມລາວວ່າເຈົ້າໄປໃສ? ພວກເຮົາເອີ້ນເຈົ້າກັບເມືອບ້ານ ພວກເຮົາຄິດວ່າ ເຈົ້າເມືອກ່ອນພວກເຮົາແລ້ວເມຍຖາມລາວວ່າ ເຈົ້າມາດຸໝັ່ນຫຼາຍຈົນບໍ່ເບິ່ງຮອດຕາເວັນບໍ່ເບິ່ງຮອດເວລາ ຄ່ຳມືດກໍ່ບໍ່ຮູ້ຈັກ. ລາວຕອບເມຍວ່າ ຂ້ອຍເອີ້ນເຂົາເຈົ້າແຕ່ຕອນບ່າຍແລ້ວ ກໍ່ມີສຽງຕອບຄືນມາຕະຫຼອດ ຂ້ອຍເອີ້ນວ່າ ເມືອເດີກໍ່ມີວ່າເມືອເດີຕອບຂ້ອຍ ຂ້ອຍເລີຍລໍຖ້າເຂົາເຈົ້າອີກຄິດວ່າຄົນບໍ່ທັນເມືອເທື່ອຂ້ອຍເລີຍເສຍຫຍ້າຕໍ່ອີກ.

ໃນເມື່ອເມຍລາວໄດ້ຍິນສຽງເວົ້າຂອງຜົວແລ້ວ, ເມຍກໍ່ຫົວຂຶ້ນອອກສຽງສະອຶກສະອື້ນ, ຈົນມືນຕາບໍ່ໄດ້, ເມຍລາວຫົວຈົນຂີ້ມູກນ້ຳຕາໄຫຼຍ້ອຍອອກມາຍາມໃດກໍ່ບໍ່ຮູ້ເມື່ອ ໄຫຼອອກມາສະໆ. ລາວເຫັນເມຍຫົວເຢາະເຢີ້ຍຫຼາຍ ລາວຢາກຮ້າຍໃສ່ເມຍ, ແຕ່ວ່າເຈົ້າບໍ່ຕ້ອງຮ້າຍກໍ່ໄດ້, ຜົວເອີຍ ! ຜົວເຈົ້າມາເງິກງາກປານນັ້ນພຸ້ນບໍ ! ເຈົ້າຟັງເດີຂ້ອຍເວົ້າສຽງທີ່ເຈົ້າໄດ້ຍິນນັ້ນແມ່ນສຽງຂອງເຈົ້າເອງ, ເຈົ້າຮ້ອງເອີ້ນຜູ້ອື່ນນັ້ນສຽງດັງ ມັນກ້ອງໄປໄກແລ້ວມັນສະທ້ອນກັບຄືນ

ຫາຫູເຈົ້ານັ້ນ, ຄັນເຈົ້າບໍ່ເຊື່ອຂ້ອຍມື້ອື່ນເຊົ້າພາກັນໄປໄຮ່ນຳກັນແລ້ວຂ້ອຍຈະຮ້ອງໃຫ້ຟັງສຽງດັງສະທ້ອນ. ຜູ້ເປັນຜົວນັ່ງຟັງເມຍເວົ້ານັ້ນ ເຊື່ອແດ່ບໍ່ເຊື່ອແດ່, ແຕ່ຕ້ອງຟັງໃນມື້ອື່ນເຊົ້າເທົ່ານັ້ນ. ຕື່ນເຊົ້າມາ ຜົວເມຍພາກັນອອກບ້ານໄປໄຮ່ນຳກັນ, ໃນເມື່ອໄປໄຮ່ແລ້ວ ເມຍບອກຜົວຢືນຟັງເດີ ຂ້ອຍຈະຮ້ອງເອີ້ນເຈົ້າຈະໄດ້ຍິນສຽງດັງຫຍັງແດ່? ເມຍລາວຮ້ອງວ່າເມືອເດີ ! ມັນກໍ່ມີສຽງດັງກັບຄືນວ່າເມືອເດີຄືກັນນັ້ນ ແລ້ວເຈົ້າໄດ້ຍິນບໍ? ຜູ້ເປັນຜົວກໍ່ບໍ່ປາກຢູ່ມິດຈີ່ລີ່ເໝືອນໂຕກະປູເຂົ້າຮູໃນຫຼືບຫີນ.

## 8.3 ຄົນບູຮານ
## (ຄູຍອະໂຮນ)

ມະນຸດເຮົາໄດ້ຜ່ານຜ່າອຸປະສັກນາໆຊະນິດ ຢູ່ບົນໜ້າໂລກບໍ່ຈັກວ່າເທົ່າໃດຊົ່ວຄົນມາແລ້ວ, ເກີດມາເພື່ອຢູ່ນຳໂລກເພື່ອສ້າງໂລກ, ເພື່ອບຸກເບີກບົນໜ້າໂລກຢ່າງທໍລະທົດອົດທົນຢ່າງ ບໍ່ຮູ້ຈັກວ່າຫຼາຍຊົ່ວຄົນ. ເຂົາເຈົ້າເກີດມາສ້າງໂລກແລ້ວ ເຂົາເຈົ້າຕາຍໄປເພື່ອລ້ຽງໂລກບໍ່ຈັກວ່າເທົ່າໃດຄົນທົ່ວຄົນ. ມະນຸດຂອງພວກເຮົາເປັນບໍ່ເກີດ ຂອງມະນຸດຢູ່ບົນໜ້າໂລກ, ແລ້ວມະນຸດໄດ້ສ້າງປ່າຊ້າຄົນໃນບົນໜ້າໂລກໄວ້ຢ່າງຫຼວງຫຼາຍ, ສິ່ງເຫຼົ່ານັ້ນໄດ້ກາຍເປັນຮີດຄອງປະເພນີຂອງສັງຄົມມະນຸດມາແລ້ວນັ້ນແມ່ນການເກີດ ແລະ ການຕາຍຂອງຊີວິດມະນຸດ, ແລ້ວຄົນບໍ່ມີເສັ້ນທາງອື່ນໃດອີກເຖິງຈະຮັ່ງມີ, ທຸກຍາກ, ມີອຳນາດ ແລະ ອື່ນໆກໍ່ໄປເສັ້ນທາງອັນດຽວກັນ ເປັນເສັ້ນທາງທີ່ສະເໝີພາບຂອງມະນຸດມາແລ້ວ ໃນອະດີດກໍ່ຄືໃນອະນາຄົດອີກດ້ວຍ.

ເຂົາເຈົ້າເວົ້າກ່ຽວກັບຊີວິດຂອງເພດຍິງ, ເພດຊາຍແມ່ນຊີວິດອັນດຽວກັນ, ແຕ່ວ່າການດຳລົງຊີວິດຂອງເພດຍິງເພດຊາຍແມ່ນແຕກຕ່າງກັນຫຼາຍ, ເພດຍິງເປັນຄົນອ່ອນແອ ກຳລັງເຫື່ອແຮງແມ່ນຕ່ຳກວ່າເພດຊາຍ, ໃນສະໄໝກ່ອນນັ້ນ ເຂົາເຈົ້າຖືເພດຍິງຕ່ຳໃນສັງຄົມ, ເພດຍິງບໍ່ມີບົດບາດໃນຖານະຂອງຄອບຄົວ, ເຂົາເຈົ້າຕ້ອງຢູ່ໃນຖານະຄົນຮັບໃຊ້ຜົວເທົ່ານັ້ນ ເປັນແມ່ເຮືອນເປັນຜູ້ປະຈຳການເທົ່ານັ້ນ. ແຕ່ວ່າເພດຊາຍເປັນເພດທີ່ມີອຳນາດສູງ, ເປັນເພດທີ່ມີກຳລັງເຫື່ອແຮງເຂັ້ມແຂງດີ, ຈິດໃຈແຂງ, ບໍ່ອ່ອນແອ່, ບໍ່ຍ່ອມລັ່ງນ້ຳຕາຖ້າບໍ່ຈຳເປັນ ຂອງພາຍນອກໜີບຮັດໜັກໜ່ວງ.

ໃນເມື່ອຜູ້ຊາຍເປັນເພດທີ່ມີກຳລັງແຂງແຮງຄືແນວນັ້ນ ຂອງຍຸກຄົນບູຮານສະໄໝນັ້ນ ຕົກລົງໃຫ້ຜູ້ຊາຍເປັນຜູ້ຖືພາດ້ວຍຕົນເອງ, ແລ້ວຜູ້ຊາຍເປັນຜູ້ລ້ຽງລູກເຕົ້າດ້ວຍຕົນເອງ. ສ່ວນແມ່ຍິງເປັນຜູ້ເຮັດໄຮ່ເຮັດສວນແທນຜູ້ຊາຍ, ເປັນຜູ້ອອກແຮງງານໜັກເບົາ ແມ່ນແມ່ຍິງເປັນຜູ້ຮັບຜິດ

ຊອບແທນຜູ້ຊາຍ. ການຕົກລົງໃຫ້ຜູ້ຊາຍຖືພາແມ່ນໃຫ້ຖືພາຢູ່ໜ້າແຄ່ງ, ໃນເມື່ອລະດູຜູ້ຊາຍຖືຢູ່ໜ້າແຄ່ງ ແມ່ນວ່າຜູ້ຊາຍໄປທາງໃດບໍ່ໄດ້, ການຖືພາຂອງຜູ້ຊາຍໃນສະໄໝກ່ອນນັ້ນ ກໍ່ເໝືອນກັນກັບສະໄໝແມ່ຍິງຖືພາໃນປະຈຸບັນນີ້, ກຳນົດເວລາເກີດລູກ ແຕ່ລະຄັ້ງແມ່ນແຕ່ເຈັດເດືອນຂຶ້ນໄປ.

ຍ້ອນມີຄວາມຫຍຸ້ງຍາກຫຼາຍ, ຖ້າວ່າຜູ້ຊາຍທີ່ຖືພາຖືກລະດູຖາງປ່າເຮັດໄຮ່ແມ່ນພົບຄວາມຫຍຸ້ງຍາກຫຼາຍ, ຜູ້ຊາຍຕ້ອງພະຍາຍາມໄປບັກປຳຕົ້ນໄມ້ໃຫຍ່ໆ ຊຶ່ງແມ່ຍິງບໍ່ມີຄວາມສາມາດເຮັດໄດ້, ບໍ່ມີເຫື່ອແຮງທີ່ຈະບັກປຳຕົ້ນໄມ້ໃຫຍ່ໆໄດ້. ເຂົາເຈົ້າເລົ່າເລື່ອງວ່າ ການໃຫ້ຜູ້ຊາຍຖືພານັ້ນ ມັນບໍ່ຄືທັງບໍ່ເໝາະສົມຍ້ອນວ່າ ການຖືພາຢູ່ໜ້າແຄ່ງນັ້ນ ການໄປມາກໍ່ລຳບາກຫຼາຍ. ພວກຍິງເຫັນວ່າຜົວຂອງຕົນເອງຖືພາແບບນັ້ນມັນບໍ່ຄັກໃຈ, ເຮັດໃຫ້ຈິດໃຈຂອງແມ່ຍິງຄິດສົງສານຜົວຫຼາຍ, ເຂົາເຈົ້າຮັກແພງຜົວຫຼາຍ, ຢາກໃຫ້ຜູ້ຊາຍເປັນຜູ້ຮັບຜິດຊອບພາລະຄອບຄົວເປັນຂອງຜູ້ຊາຍຈຶ່ງຈະເໝາະສົມຫຼາຍ, ເປັນຜູ້ມີເຫື່ອແຮງດີ, ມີກຳລັງວັງຊາໃນວຽກງານທຸກດ້ານວຽກງານນີ້ຜູ້ຊາຍສາມາດເຮັດໄດ້, ແມ່ຍິງແມ່ນເໝາະສົມວຽກບ້ານການເຮືອນ, ວຽກຖືພາຄາທ້ອງອາດຈະແມ່ຍິງມັນຈະເໝາະສົມກວ່າ.

ໃນເມື່ອມີຄວາມຄິດຄວາມເຫັນຫຼາຍໆຄົນຈາກເພດຍິງແລ້ວ, ເຂົາເຈົ້າຈຶ່ງຕົກລົງເປັນເອກະພາບກັນວ່າຈະຂໍປ່ຽນການຖືພາຈາກຜູ້ຊາຍໃນເມື່ອກ່ອນ, ມາດຽວນີ້ແມ່ນໃຫ້ແມ່ຍິງເປັນຜູ້ຖືພາມັນດີກວ່າ, ຫຼັງຈາກນັ້ນເຂົາເຈົ້າຕົກລົງປ່ຽນຈາກຜູ້ຊາຍ ໃຫ້ແມ່ຍິງຖືພາຈົນຮອດປະຈຸບັນນີ້. ການຖືພາຂອງແມ່ຍິງຕ້ອງຕ່າງກັນການຖືພາຂອງຜູ້ຊາຍ, ຈາກການຖືພາຢູ່ໜ້າແຄ່ງນັ້ນ ໃຫ້ຖືພາຢູ່ໃນທ້ອງມັນຈຶ່ງມີຄວາມສຸພາບກວ່າ, ການຖືພາຢູ່ໃນທ້ອງຈະບໍ່ມີຜົນສະທ້ອນຫຍັງຫຼວງຫຼາຍດອກ. ການຖືພາຢູ່ໃນທ້ອງນັ້ນ ມັນດີຫຼາຍອັນມັນເໝືອນວ່າຄົນກິນເຂົ້າອີ່ມເຮັດໃຫ້ທ້ອງໃຫຍ່ຂຶ້ນ. ການຖືພາຂອງຜູ້ຊາຍໃນສະໄໝກ່ອນນັ້ນ ແມ່ນການຕົກລົງຂອງແມ່ຍິງທັງຫຼາຍ, ການຖືພາຂອງແມ່ຍິງໃນສະໄໝປະຈຸບັນ ແມ່ນການຕົກລົງຈາກແມ່ຍິງຂໍປ່ຽນຈາກພວກຜູ້ຊາຍມາເປັນການຖືພາຂອງແມ່ຍິງ. ການປ່ຽນໄປປ່ຽນມາ ຂອງການຖືພານັ້ນ ຍ້ອນວ່າການເຫັນອົກເຫັນໃຈຂອງຜູ້ຊາຍ ແລະ ແມ່ຍິງ, ຍ້ອນວ່າການຮັກແພງຂອງຜູ້ຊາຍ ແລະ ແມ່ຍິງ ເຮັດໃຫ້ການຖືພາຄາທ້ອງ, ການເກີດລູກ, ການເບິ່ງແຍງລູກດີກວ່າຜູ້ຊາຍ ມີຄວາມລະອຽດອ່ອນກວ່າຜູ້ຊາຍ, ເຮັດໃຫ້ການຖືພາເປັນຮີດຄອງປະເພນີໃນສັງຄົມມະນຸດຍືນຍົງຄົງ ຢູ່ມາຈົນຮອດສູ່ມື້ນີ້.

# 8.4 ຍິນແຕ່ສຽງປາກ
# (ກະສາງກັຣອະກາຣຕູຍ)

ເວົ້າກັນມາຫຼາຍໆຊົ່ວຄົນມາແລ້ວ ເຂົາເຈົ້າໄດ້ຍິນສຽງປາກສຽງລົມກັນອຸ່ມໆອື່ມໆ ຢ່າງບໍ່ຮູ້ຈັກວ່າຈຸດສຽງຄົນເວົ້າ ຫຼືສຽງຜີເວົ້າບໍ? ແຕ່ວ່າໄດ້ຍິນສຽງປາກເວົ້າກັນຢູ່ແຕ່ບໍ່ເຫັນໜ້າຄົນ. ເຂົາເຈົ້າຊອກຫາທາງແລ່ນເມືອບ້ານເທົ່ານັ້ນ, ເຂົາເຈົ້າໄດ້ຍິນສຽງປາກເວົ້າໃນຍາມຕາເວັນບ່າຍແລງ ແລ້ວຄົນມັກຈະໄດ້ຍິນສຽງລົມ. ແຕ່ວ່າເວລາຫຼາຍຄົນຢູ່ນຳກັນ ບໍ່ປະກົດໄດ້ຍິນສຽງປາກເວົ້າຫຍັງ? ແຕ່ວ່າມີຄົນດຽວຢູ່ມັກຈະໄດ້ຍິນສຽງລົມກັນ, ສຽງເອີ້ນກັນມຸບໆມິບໆ, ຊຶບໆຊັບໆຢູ່ໃນປ່າ, ເຂົາເຈົ້າສົງໄສວ່າຜີກ່ອງກ່ອຍປາກເວົ້າໃຫ້ເຂົາເຈົ້າໄດ້ຍິນ. ແຕ່ວ່າການໄດ້ຍິນສຽງເວົ້ານັ້ນບໍ່ແມ່ນວ່າໄດ້ຍິນສຽງທຸກມື້, ທຸກເດືອນ, ທຸກປີດອກ. ການໄດ້ຍິນສຽງປາກເວົ້ານັ້ນແມ່ນເຫິງນານທີ່ສຸດ ຈຶ່ງໄດ້ຍິນສຽງເທື່ອໜຶ່ງອີກ ມີຜູ້ໄດ້ຍິນແລ້ວປົບແລ່ນກັບມາບ້ານຢ່າງລອດລົ້ມລອດຕາຍ.

ມີຫ້ວຍແຫ່ງໜຶ່ງ ທີ່ມີສຽງປາກເວົ້າແບບມີສຽງຄົນແທ້ໆ ຫ້ວຍນັ້ນມີຊື່ວ່າ: ຫ້ວຍຫ້ອມ, ຢູ່ຕາມລຳນ້ຳຫ້ວຍມີແຕ່ຕົ້ນກົກຫ້ອມເກີດຕາມແຄມລຽນສາບລາບ. ດັ່ງນັ້ນ ເຂົາເຈົ້າຈຶ່ງເອີ້ນວ່ານ້ຳຫ້ວຍຫ້ອມ (ພາສາກະຕູເອີ້ນວ່າ ຕົມຕະຣົມ) ຕົມແປວ່າຫ້ວຍ, ຕະຣົມແປວ່າ ຕົ້ນຫ້ອມ, ຫ້ວຍຫ້ອມເປັນຫ້ວຍນ້ອຍໆທີ່ໄຫຼຈາກພູເຂົາທີ່ເຂົາເຈົ້າຕັ້ງຊື່ວ່າ ພູເຂົາສາຍຝ້າຍເປັນພູເຂົາທີ່ຍາວຢຽດຕາມ ສາຍນ້ຳ (ອັຣແງ), ສາຍ (ອັຣງອບ) ແລະສາຍນ້ຳ (ໂຕຣລ) ຫຼືວ່າເຊໂລນ. ຕາມເຂົາເຈົ້າເລົ່າກັນມາວ່າ ເຂົາເຈົ້າໄດ້ຍິນສຽງປາກເວົ້າບໍ່ແມ່ນຕາມລຳນ້ຳດອກ ແຕ່ເຂົາເຈົ້າໄດ້ຍິນສຽງປາກເວົ້າຢູ່ເທິງບົກພຸ້ນ.

ມີບ່ອນໜຶ່ງອີກ ເຂົາເຈົ້າໄດ້ຍິນຄົນປາກເວົ້າແຕ່ວ່າບໍ່ເຫັນໜ້າຄົນ, ໄດ້ຍິນສຽງວ່າພຸ້ນໆຜູ້ໄດ້ຍິນແລ່ນຊອກຫາຄົນບໍ່ເຫັນຄົນ, ເຂົາເຈົ້າເວົ້າເປັນເລື່ອງລາວຢູ່ວັງນ້ຳ (ປີຣອັງ) ເປັນລຳນ້ຳເຊ (ໂຕຣລ)ເຊໂລນ ກໍ່ມີສຽງຄືກັບການເອີ້ນກັນ ທີ່ມີສຽງຄືຄົນປາກເວົ້າກັນ, ເຂົາເຈົ້າໂອ້ລົມກັນຄືຄົນເຮົາປາກເວົ້າກັນແຕ່ວ່າຊອກຫາຄົນປາກເວົ້າບໍ່ເຫັນໜ້າຄົນຈັກຄົນ, ເຮັດໃຫ້ຄົນເຂົາເຈົ້າສົງໄສວ່າສຽງຜີປາກເວົ້າເອີ້ນກັນ, ພວກຜີຊອກຫາຊອກກິນຢູ່ຕາມທຳມະຊາດ, ເຂົາເຈົ້າເອີ້ນວ່າ ຜີທຳມະຊາດຫຼືວ່າເຂົາເຈົ້າສົງໄສຜີກ່ອງກ່ອຍນັ້ນເອງ. ເຂົາເຈົ້າເລົ່າເລື່ອງກັນວ່າ ມະນຸດຄົນເຮົາໃນເມື່ອຜີເປີດຫູຄົນຜູ້ໃດຜູ້ໜຶ່ງ, ຄົນຜູ້ນັ້ນຈຶ່ງໄດ້ຍິນສຽງປາກຂອງຜີ. ຖ້າວ່າຜີຫາກເປີດຕາຂອງຄົນໃດໜຶ່ງນັ້ນ ຄົນນັ້ນກໍ່ຈະເຫັນຜີໂລດ. ຖ້າວ່າຫູຕາແບບຄົນທຳມະດາ ແມ່ນບໍ່ເຫັນສິ່ງແປກປະ

ຫຼາດ, ພຽງແຕ່ຄົນເຮົາເຫັນສິ່ງທຳມະດາໃນສັງຄົມທຳມະຊາດ ແລະ ສັງຄົມຂອງມະນຸດເທົ່ານັ້ນ ໄດ້.

# 9. ສິ່ງດົນບັນດານ
# (ອັຣວີງດອັງພັຣຈ້ອໍ)
## 9.1 ຝັນເຫັນໄຫຄຳ
## (ອະກາຣວັນແຢງ)

ການດຳລົງຊີວິດຂອງຄົນກະຕູຢູ່ໃນສະໄໝກ່ອນ ອາໄສຢູ່ຫຼາຍຮູບແບບ ເພື່ອຢູ່ລອດໄດ້ຢູ່ໃນສັງຄົມຂອງມະນຸດ. ຄວາມຮັ່ງມີໃນຄອບຄົວບໍ່ແມ່ນຜູ້ດຽວເປັນຜູ້ສ້າງ ໃຫ້ຕົນເອງມີຢູ່ມີກິນໃນຊີວິດປະຈຳວັນ ໃນແຕ່ລະມື້ນັ້ນຕ້ອງມີສ່ວນປະກອບຂອງຊີວິດອື່ນໆອີກ ໜຶ່ງຄວາມຮັ່ງມີເກີດມາຈາກມໍລະດົກຂອງປູ່ຍ່າ ພໍ່ແມ່ເປັນຄົນຮັ່ງມີມາແຕ່ກ່ອນແລ້ວ, ແລ້ວລູກຫຼານສືບທອດເປັນຄວາມຮັ່ງມີຂອງຕົນເອງ. ສອງຄວາມຮັ່ງມີເກີດມາຈາກສະຕິປັນຍາເຫື່ອແຮງຂອງຕົນເອງເປັນຜູ້ສ້າງຂຶ້ນດ້ວຍຕົນເອງ, ດ້ວຍການເຮັດໄຮ່,ໄດ້ຜົນຜະລິດນັ້ນເອົາໄປຂາຍ, ລ້ຽງ ຄວາຍ, ງົວ, ມ້າ, ແບ້, ໝູ, ເປັດ ແລະ ໄກ່ໄດ້ຈາກທຸກໄປສູ່ຮັ່ງມີ. ສາມການຮັ່ງມີຈາກຄວາມເຊື່ອຂອງຊີວິດວ່າ ເທວະດາຟ້າແຖນ, ເຈົ້າວິນຍານ, ເຈົ້າສັກສິດໃນບົນໜ້າໂລກສິ່ງສານຫຼາຍ ລົງມາບອກເລົ່າ ຫຼືຊ່ອຍໃຫ້ຮັ່ງມີ. ສ່ວນປະກອບທີ່ສີ່ແມ່ນຮັ່ງມີທີ່ໄດ້ມາຈາກຄ່າດອງຂອງລູກຫຼານ ( ໃນລະບອບຊື້ຂາຍລູກສາວ ) ຈາກລູກເອົາຜົວຄົນຮັ່ງມີແລ້ວພໍ່ແມ່ກໍ່ຮັ່ງມີນຳ ຫຼືວ່າຮັ່ງມີແບບຕົ້ນໄມ້ນ້ອຍເພິ່ງຕົ້ນໄມ້ໃຫຍ່. ສ່ວນປະກອບທີ່ຫ້າແມ່ນຮັ່ງມີແບບອະທຳປາໃຫຍ່ກິນປານ້ອຍ ຄົນມີອຳນາດກິນຄົນບໍ່ມີອຳນາດມັນບໍ່ ຕ່າງຫຍັງຝົນຕົກລົບແສງແດດແລ້ວແສງກໍ່ສະລາຍຕົວກາຍເປັນຝົນຕົກລົງມາ.

ການດຳລົງຊີວິດໃນແຕ່ລະວັນ ຕ້ອງປະຕິບັດຕາມຄວາມເຊື່ອຖືໃນຊີວິດ, ໃນລະບົບຄວາມເຊື່ອມີສອງຢ່າງ: ຖ້າຄົນເຮົາເຊື່ອແບບສິ່ງສັກສິດໝາຍຄວາມວ່າ ເທວະດາຟ້າແຖນ, ເຈົ້າວິນຍານຊ່ອຍແມ່ນວ່າຄົນຜູ້ນັ້ນຮັ່ງມີແທ້ ຊີວິດການເປັນຢູ່ຈະພົບຄວາມສີວິໄລ. ແຕ່ວ່າຖ້າຄົນເຮົາເຊື່ອໝັ້ນແຕ່ເທວະດາຟ້າແຖນ, ເຈົ້າສິ່ງສັກສິດ, ເຈົ້າວິນຍານຈະເອົາຄວາມຮັ່ງມີ ມາໃຫ້, ຢ່າງບໍ່ເຮັດຕາມສະຕິປັນຍາຕາມເຫື່ອແຮງແລ້ວຄົນຜູ້ນັ້ນຈະທຸກຍາກຂາດເຂີນຕະຫຼອດຊີວິດ. ແຕ່ວ່າຄວາມຝັນແມ່ນລະບົບຄວາມເຊື່ອຢ່າງໜຶ່ງ ຂອງຄົນກະຕູໃນສະໄໝກ່ອນ, ເຂົາເຈົ້າຝັນດີ

ແມ່ນວ່າອອກບ້ານໄປເຮັດໄຮ່ເຮັດສວນໄດ້, ແຕ່ຖ້າເຂົາເຈົ້າຝັນຊົ່ວຮ້າຍມາບັງບຽດຈິດໃຈຂອງເຂົາເຈົ້າແລ້ວ ເຂົາເຈົ້າຕ້ອງພັກວຽກເຂົາເຈົ້າບໍ່ອອກບ້ານໄປ ຕ້ອງຢູ່ແບບງຽບໆບໍ່ຈັບເຄື່ອງມືອັນຕະລາຍທີ່ມີຕໍ່ຊີວິດຂອງເຂົາເຈົ້າອີກດ້ວຍ.

ມີທ້າວກຳພອຍຜູ້ໜຶ່ງ ພໍ່ແມ່ຕາຍປະແຕ່ຍັງນ້ອຍ, ລາວບໍ່ມີພີ່ນ້ອງຈັກຄົນ ລາວອາໄສກິນນຳຊາວບ້ານໃນແຕ່ລະມື້ເທົ່ານັ້ນ. ລາວໄດ້ດຳລົງຊີວິດຢູ່ຢ່າງທຸກຍາກຫຼາຍ, ໃນເມື່ອຮອດເວລາກິນເຂົ້າແລ້ວ ລາວກໍ່ຂຶ້ນເຮືອນເຂົາແລ້ວນັ່ງເບິ່ງເຂົາເຈົ້າກິນເຂົ້າ ມີບາງຄົນເຂົາເຈົ້າອີ່ດູລາວ ເຂົາເຈົ້າກໍ່ເອົາອາຫານກິນຂອງຕົນເອງແບ່ງໃຫ້ລາວຈຶ່ງໄດ້ກິນ. ເວົ້າເຖິງບ່ອນນອນແມ່ນບໍ່ມີບ່ອນຄຳ່ຢູ່ເຮືອນໃດແມ່ນນອນເຮືອນນັ້ນ. ລາວດຳລົງຊີວິດຢູ່ຢ່າງຍາກລຳບາກຫຼາຍ. ໃນເມື່ອອາຍຸໃຫຍ່ຊ່ຳໃດຊ່ຳໜຶ່ງແລ້ວລາວຮູ້ຈັກໜ້າອາຍ, ໃນແຕ່ລະມື້ນັ້ນລາວໄປເຮັດວຽກນຳເຂົາເຈົ້າ, ເຂົາເຈົ້າເຮັດຫຍັງລາວເຮັດນຳຕາມຄວາມສາມາດຂອງລາວເອງ, ລາວໄປນຳຄອບຄົວໃດເຮັດວຽກກັບຄອບຄົວນັ້ນ ແມ່ນອາໄສກິນນຳເຂົາເຈົ້າ, ລາວໄປເຮັດວຽກນຳທຸກຄອບຄົວ ນັບຕັ້ງແຕ່ນັ້ນມາການກິນຢູ່ກໍ່ມີຜູ້ຊ່ອຍເຫຼືອໃນຊີວິດປະຈຳວັນພໍ່ບໍ່ຂາດເຂີນ ໃນແຕ່ລະຄາບເຂົ້າຂອງແຕ່ລະວັນແຕ່ລະເດືອນເພື່ອເອົາຊີວິດຢູ່ລອດ ແລະ ສືບມື້ສືບວັນໄປເທົ່ານັ້ນ.

ໃນເມື່ອອາຍຸກະສຽນໃຫຍ່ຂຶ້ນເປັນບ່າວແລ້ວ ລາວຮູ້ຈັກຄິດເລື່ອງຊີວິດ, ລາວຮູ້ຈັກຄິດເລື່ອງອະນາຄົດຂອງຕົນເອງ ລາວຄິດຢາກສ້າງຄອບຄົວແລ້ວ ແຕ່ວ່າຕົນເອງເປັນຄົນທຸກເລື່ອງຊອກຫາຜູ້ສາວ ແມ່ນມີບັນຫາຍາກຫຼາຍ. ລາວຄິດວ່າຕົນເອງບໍ່ມີເງິນແຕ່ງເອົາຜູ້ສາວ ຈະຕ້ອງໄປເປັນເຂີຍສູ່ກໍ່ດີໃຈແລ້ວ. ຊີວິດຜ່ານພົ້ນໄປຫຼາຍປີເປັນຜູ້ບ່າວເຕັມຄົນ, ລາວຮູ້ຈັກຖາງປ່າເຮັດໄຮ່ເປັນຂອງຕົວເອງແລ້ວ. ລາວນອນຄິດລາວນອນເພີ້ຝັນວ່າ ຢາກໄດ້ເງິນຄຳຈັກເລັກຈັກໜ້ອຍຄືຊິດີ ໃນຊີວິດຜູ້ສາວຄືຊິມີຄົນຫຼຽວເບິ່ງໜ້ອຍໜຶ່ງບໍ່.ໃນຄືນຕໍ່ມາລາວຝັນເຫັນພໍ່ເຖົ້າຄົນໃຫຍ່ສູງມີໜວດ ຍາວມາຫາລາວ, ພໍ່ເຖົ້າເວົ້າວ່າ ຫຼານເອີຍ ! ພໍ່ເຖົ້າຢູ່ເຝົ້າໄຫຄຳອັນນີ້ມາຫຼາຍປີມາແລ້ວ, ດຽວນີ້ພໍ່ເຖົ້າຢາກໜີໄປຢູ່ບ່ອນອື່ນແລ້ວ ໃຫ້ລູກໄປເອົາສາ. ພໍ່ເຖົ້າບອກວ່າ ຢູ່ຜາຫີນໃຫ້ຫຼານໄຕ່ໄປຕາມລຳໄມ້ແປກເດີ, ພໍ່ເຖົ້າຫັກຟິດໄມ້ປັກໄວ້ເດີຫຼານ. ລາວລຸກຈາກບ່ອນ ນອນຮູ້ສຶກຕົວວ່າຕົນເອງຝັນ ເຂົາບອກໃຫ້ໄປເອົາໄຫຄຳຢູ່ບ່ອນນັ້ນມັນແມ່ນຄວາມຈິງບໍ? ລາວຄິດວ່າເປັນແນວໃດກໍ່ຕາມຂ້ອຍ ຈະໄປເບິ່ງບ່ອນທີ່ພໍ່ເຖົ້ານັ້ນເວົ້າ ຕື່ນເຊົ້າລາວໄປແທ້ໃນເມື່ອໄປເຖິງແລ້ວ ລາວກໍ່ປະຕິບັດຕາມຄວາມຝັນທີ່ພໍ່ເຖົ້າແນະນຳ, ລາວໄຕ່ໄປຕາມລຳໄມ້ແປກ ທີ່ພໍ່ເຖົ້າຫັກຟິດໄມ້ໄວ້, ລາວໄຕ່ໄປກໍ່ເຫັນງູເຫົ່ານອນໂຄ້ງລຽນກັນຍົກຄໍຂຶ້ນຊາບລາບ, ລາວຕົກໃຈຫຼາຍເຫັນງູເຫົ່າ ລາວແລ່ນກັບຄືນຫຼັງແລ້ວຢືນຄິດວ່າ ບໍ່ແມ່ນໄມ້ຟິດໄມ້ດອກ ອາດວ່າພໍ່ເຖົ້າຈະເວົ້າປີ້ນຄວາມບໍ່ຈັກ? ລາວຍ່າງໄປຮອດບ່ອນນັ້ນ ແລ້ວນັ່ງອະທິຖານວ່າ ຖ້າວ່າເຈົ້າຖິ່ນເຈົ້າຖານຢາກໃຫ້ຂ້ອຍແທ້ໃຫ້ໜີໄປສາ, ລາວມືນຕາເບິ່ງກໍ່ຫາຍໄປແທ້, ລາວລົງໄປຂຸດໜ້ອຍໜຶ່ງກໍ່ເຫັນໄຫຄຳ

ແທ້.

ເອົາໄຫຄຳເມືອບ້ານຢ່າງດີອົກດີໃຈຫຼາຍ ເອົາເມືອຢ່າງປິດລັບ, ໃນຕໍ່ມາລາວເອົາຄຳຢູ່ໄຫອອກມາໃຊ້ຈ່າຍຢ່າງສະບາຍ. ໃນບໍ່ຊ້າລາວກໍ່ຊອກຫາຜູ້ສາວໄດ້ ລາວສ້າງຄວາມມັກຮັກກັບຜູ້ສາວຄົນໜຶ່ງ ໃນເມື່ອມັກຮັກກັບສາວໄດ້ເຫິງເຕີບແລ້ວ, ລາວເອົາຄຳມາໝາຍໝັ້ນຜູ້ສາວທີ່ຕົນເອງຮັກ. ຜູ້ສາວເອົາມາໃຊ້ເອ້ອ້າງໃສ່ຕົວຢ່າງເປີດແປນ, ເຮັດໃຫ້ສາຍຕາຂອງຊາວບ້ານເຫັນແປກປະຫຼາດວ່າ ລາວມັກຮັກກັບຜູ້ບ່າວຄົນໃດແທ້? ໃນບໍ່ເຫິງເທົ່າໃດເຂົາເຈົ້າຮູ້ຈັກວ່າ ສາວຄົນນັ້ນມັກຮັກກັບທ້າວກຳພອຍຄົນທຸກນັ້ນເອງ ເຮັດໃຫ້ຄົນຢູ່ບ້ານແປກປະຫຼາດໃຈຫຼາຍ ມັນເອົາເງິນຄຳມາແຕ່ໃສ? ພໍ່ແມ່ຂອງລາວເປັນຄົນທຸກ, ແຕ່ຮອດບັ້ນຊີວິດຂອງລູກຮັ່ງມີແບບບັງເອີນ. ຊາວບ້ານຫຼາຍຄົນກໍ່ຕູ່ຫາວ່າລາວເອົາຄຳມາແຕ່ໃສ? ຍ້ອນຊາວບ້ານຖາມສໍ້ຖາມສິນລາວຫຼາຍລາວຈຶ່ງ ບອກກົກປາຍສາຍເຫດຕົນເອງວ່າ ມີຄຳຍ້ອນຄວາມຝັນນັ້ນເອງ. ພວກຊາວບ້ານຮູ້ຈັກແລ້ວກໍ່ສະແດງຄວາມດີໃຈນຳທ້າວກຳພອຍທີ່ສິ່ງສັກສິດໄດ້ຊ່ອຍເຫຼືອລາວ.

ທ້າວກຳພອຍໄດ້ເງິນຄຳມາຢ່າງຊອບທຳກໍ່ຕາມ ກໍ່ຍັງມີຄົນມາບັງບຽດວ່າໄຫຄຳນັ້ນ ແມ່ນຂອງປູ່ຍ່າຂອງຕົນຝັງໄວ້ແຕ່ສະໄໝກ່ອນ, ຕົນເອງບໍ່ທັນໄປຂຸດເອົາເທື່ອ, ຄົນທີ່ເວົ້າວ່າໄຫຄຳເປັນ ເຈົ້າຂອງນັ້ນແມ່ນຄົນຮັ່ງມີສົມຄວນໃນເມື່ອກ່ອນ, ລາວເວົ້າຖືກກັບສະພາບຄວາມຈິງແທ້ຂອງລາວເອງ. ໃນເມື່ອໄດ້ຍິນລາວເວົ້າຄວາມຮັ່ງມີໃນເມື່ອກ່ອນລາວກໍ່ຢ້ານ, ເອົາໄຫຄຳນັ້ນຍົກມາໃຫ້ໂລດ, ແລ້ວລາວກໍ່ຂໍໂທດຫຼາຍທີ່ຕົນເອງເອົາອອກມາໃຊ້ຈ່າຍແລ້ວ, ເຂົາເຈົ້າ ເວົ້າວ່າບໍ່ເປັນຫຍັງດອກ. ເຂົາເຈົ້າອູ້ມໄຫຄຳເມືອເຮືອນແລ້ວ ລາວກໍ່ອະທິຖານວິ້ງວອນຄືນນຳສິ່ງສັກສິດເຈົ້າວິນຍານວ່າ ຂໍໃຫ້ເບິ່ງຄວາມເປັນຈິງໃຫ້ແດ່? ດຽວນີ້ມີຄົນວ່າເປັນຂອງຕົນເອງລາວເອົາເມືອເຮືອນແລ້ວ, ຖ້າວ່າເຂົາເຈົ້າໃຊ້ອຳນາດບາດໃຫຍ່ ຍາດເອົາຄຳຂອງຂ້ອຍໄປຢ່າງບໍ່ຖືກຕ້ອງຂໍໃຫ້ຂ້າວິນຍານຂ້າມັນຕາຍເທື່ອລະຄົນຢ່າງທໍລະມານໃຈ. ໃນຕໍ່ມາເຈົ້າເຮືອນທີ່ເອົາໄຫຄຳເມືອນັ້ນ ໃນແຕ່ລະເດືອນ ກໍ່ຕາຍເທື່ອລະຄົນ. ໃນເມື່ອການຕາຍທີ່ແປກປະຫຼາດແບບນັ້ນ ເຈົ້າເຮືອນຈຶ່ງເອົາໝໍມາດູເບິ່ງວ່າ ແມ່ນຫຍັງເຮັດໃຫ້ຄອບຄົວຂອງເພິ່ນຕາຍ. ເຈົ້າໝໍດູຖາມເຈົ້າວິນຍານວ່າ ແມ່ນໃຜເຮັດໃຫ້ຄອບຄົວຂອງເພິ່ນຕາຍ. ເຈົ້າສິ່ງສັກສິດເຈົ້າວິນຍານ ກໍ່ບອກວ່າ ການຕາຍນັ້ນບໍ່ມີສາຍເຫດຫຍັງຫຼາຍດອກ ຍ້ອນລາວໄປໂລບເຂົາເຈົ້າໄຫຄຳເອົາເມືອບໍ່ແມ່ນຂອງລາວ, ລາວໄປຕົວະເອົາຂອງເຂົາເຈົ້າ, ຖ້າລາວສົ່ງຄືນໃຫ້ເຂົາເຈົ້າແລ້ວຄອບຄົວຈະບໍ່ຢູ່ສະຫງົບສຸກ. ລາວໄດ້ຍິນໝໍດູບອກວ່າແນວນັ້ນ ລາວກໍ່ຟ້າວເອົາໄຫຄຳໄປສົ່ງຄືນທ້າວກຳພອຍອີກນັບແຕ່ນັ້ນມາຄອບຄົວຂອງລາວຢູ່ດີມີແຮງໝົດທຸກຄົນ.

# 9.2 ຝັນເຫັນຖ້ວຍ
## (ອະກາຣປີງານ)

ເລື່ອງນາງກໍ່າພອຍ ໃນສະໄໝກ່ອນກໍ່ເປັນນິທານເລົ່າກັນມາເປັນເວລາດົນນານມາແລ້ວ. ພໍ່ແມ່ຂອງລາວຕາຍປະແຕ່ຍັງນ້ອຍພຸ້ນ, ລາວຢູ່ອາໄສນຳພີ່ນ້ອງຂອງແມ່. ລາວຢູ່ນຳແມ່ເຖົ້າຄົນໜຶ່ງ, ແມ່ເຖົ້າເປັນຄົນບໍ່ຄ່ອຍດີປານໃດເປັນຄົນນິໄສຄັບແຄບມັກເວົ້າຫຼາຍ, ມັກລຳລີລຳໄລຫຼາຍ, ນາງບໍ່ມັກແມ່ເຖົ້າແຕ່ຈຳເປັນໃນຊີວິດຂາດບ່ອນທີ່ເພິ່ງອາໄສ ຈຳເປັນຕ້ອງອົດທົດຢູ່ນຳແມ່ເຖົ້າ ນາງຄິດວ່າເຮັດແນວໃຫ້ຊີວິດຢູ່ລອດກໍ່ພໍແລ້ວ ແມ່ເຖົ້າເຮັດວຽກໜັກນາງກໍ່ເຮັດວຽກຕາມນາງຕ້ອງຈັບບາຍເພື່ອຊ່ອຍແມ່ເຖົ້າ, ນາງເຮັດວຽກແບບເອົາໃຈຜູ້ອື່ນເປັນບັນຫາສຳຄັນ, ນາງເອົານ້ຳຈິດນ້ຳໃຈເຮັດດີໃຫ້ແກ່ແມ່ເຖົ້າເອົາການເຮັດດີເປັນການຕໍ່ສູ້, ເອົາຄວາມພະຍາຍາມເປັນກຳລັງໃຈໃຫ້ແກ່ຜູ້ອື່ນ.

ຊີວິດຜ່ານພົ້ນໄປຫຼາຍປີແລ້ວ ຈາກເດັກນ້ອຍພໍແຕ່ຮູ້ຈັກມືດກັບແຈ້ງຖືວ່າເກັ່ງແລ້ວ, ນາງໄດ້ໃຊ້ຊີວິດດ້ວຍຄວາມອົດທົນຈຶ່ງມີທີ່ເພິ່ງພາ, ນາງຄິດໄດ້ວ່າ ຜູ້ນ້ອຍຕ້ອງເພິ່ງພາກັບຜູ້ໃຫຍ່, ເໝືອນຕົ້ນໄມ້ນ້ອຍຕ້ອງເພິ່ງພາຕົ້ນໄມ້ໃຫຍ່. ແຕ່ວ່າມີບັນຫາອັນຕະລາຍ ໃນເມື່ອຕົ້ນໄມ້ໃຫຍ່ຕົ້ນດຽວລົ້ມ ລົງທັບຕົ້ນໄມ້ນ້ອຍຕ້ອງໄດ້ຮັບເຄາະຮ້າຍຫຼາຍຕົ້ນບາດດຽວ, ເໝືອນວ່າຜູ້ໃຫຍ່ໃຊ້ວຽກກັບເດັກນ້ອຍ ເອົາຕົວເກືອບບໍ່ລອດ. ໃນເມື່ອນາງມີອາຍຸເຖິງສິບກວ່າປີແລ້ວ ນາງຄິດວ່າຕົນເອງເຂົ້າໃຈບາງເລັກໜ້ອຍກັບຄຳເວົ້າສິ່ງທີ່ດີ ແລະ ຄຳເວົ້າສິ່ງທີ່ບໍ່ດີ ເພື່ອຕໍ່ສູ້ກັບແມ່ເຖົ້າທີ່ມັກໃຊ້ຫຼາຍ, ໃນຊີວິດຂອງນາງຕ່າງກັບເດັກນ້ອຍ ທີ່ມີພໍ່ແມ່ຢ່າງສົມເຊີງ, ນາງໄປອາບນ້ຳມັກອະທິຖານວ່າ ເຈົ້າສິ່ງສັກສິດຢູ່ນ້ຳ ຫຼືຢູ່ບົກກໍ່ດີ ຈົ່ງເມດຕາຄົນທຸກຍາກແດ່ ໃນເມື່ອເຫັນໃຫ້ຊ່ອຍເຫຼືອແດ່ ໃຫ້ມີຊີວິດການເປັນຢູ່ເໝືອນເດັກນ້ອຍທົ່ວໄປ.

ໃນກາງຄືນມື້ໜຶ່ງ ນອນກາງຄືນລາວເລີຍຝັນເຫັນວ່າ ມີພໍ່ເຖົ້າຄົນໜຶ່ງຍ່າງມາຈາກວັງນ້ຳຫ້ວຍແຫ່ງໜຶ່ງຢູ່ທ່ານ້ຳທີ່ລາວອະບຢູ່ນັ້ນ, ພໍ່ເຖົ້າເວົ້າວ່າຫຼານເອີຍພໍ່ເຖົ້າເຫັນໃຈຫຼານຫຼາຍ, ພໍ່ແມ່ຕາຍປະເຄື່ອງໃຊ້ໄມ້ສອຍກໍ່ບໍ່ມີ, ດັ່ງນັ້ນ ພໍ່ເຖົ້າຈຶ່ງຊ່ອຍຫຼານເພື່ອໃຫ້ມີຖ້ວຍຈານ ແລະ ຊາມໃຊ້ໃນຊີວິດປະຈຳວັນຂອງຫຼານເອງ, ໃຫ້ຫຼານຈື່ໄວ້ເດີຕື່ນເຊົ້າແລ້ວ, ໃຫ້ຫຼານຖືກະພາໄປເອົາຖ້ວຍຈານ, ໝໍ້ທອງ ແລະ ຊາມຢູ່ວັງຫ້ວຍເດີ. ລາວນອນໃນກາງຄືນຢ່າງສະບາຍ ແລະ ນອນຫຼັບດີຫຼາຍ. ໃນເມື່ອຕື່ນນອນແລ້ວ ລາວຕື່ນເກືອບລືມຄວາມຝັນໃນກາງຄືນທີ່ພໍ່ເຖົ້າບອກໄວ້ນັ້ນ, ໃນເມື່ອຕາເວັນຂຶ້ນສູ່ຂອບຟ້າແລ້ວ ລາວເອົາກະພາແລ້ວຍ່າງໄປທ່ານ້ຳກໍ່ເຫັນຖ້ວຍ ຈານ ຊາມແລະ ໝໍ້ທອງທີ່ນ້ຳພັດໄຫຼເວີນໄປມາຢູ່ວັງນ້ຳຫ້ວຍແຫ່ງນັ້ນ, ລາວເກັບຖ້ວຍ ຈານ ຊາມ ໃສ່ກະ

ພາຮຽບຮ້ອຍ ຍັງເຫຼືອໝໍ້ທອງລາວບໍ່ທັນເອົາເທື່ອ, ລາວຄິດວ່າເອົາຖ້ວຍ ຈານ ແລະ ຊາມເອົາ ເມືອເຊື່ອງໄວ້ສາກ່ອນ. ລາວເມືອຮອດເຮືອນ ແມ່ເຖົ້າເຫັນລາວເປັກະພາຖ້ວຍ ຈານ ແລະ ຊາມ ມາເຮືອນ, ແມ່ເຖົ້າຖາມວ່າ ເຈົ້າໄປລັກຂອງໃຜມາ? ລາວຕອບຂ້ອຍບໍ່ໄດ້ລັກ, ຂ້ອຍໄປເອົາຢູ່ ວັງນ້ຳຫ້ວຍພໍ່ເຖົ້າເອົາໃຫ້ດຽວນີ້ ຍັງໝໍ້ທອງໃຫຍ່ຂ້ອຍຍົກບໍ່ຫຼອນ ຂ້ອຍຈຶ່ງບໍ່ເອົາເທື່ອຈັກໜ້ອຍ ຂ້ອຍຈຶ່ງໄປເອົາມາອີກ. ແມ່ເຖົ້າໄດ້ຍິນຫຼານວ່າຍັງມີໝໍ້ທອງໃຫຍ່ ແມ່ເຖົ້າກໍ່ແລ່ນພາວັບ ! ພາ ວັບ ! ລົງທາງຫ້ວຍນ້ຳແມ່ເຖົ້າແນມເຫັນໝໍ້ທອງໄຫຼເວີນຢູ່ນ້ຳຫ້ວຍທີ່ມີວັງນ້ອຍນັ້ນ ໃນເມື່ອໄປ ເຖິງບ່ອນນັ້ນ ໝໍ້ທອງຈົມລົງພື້ນນ້ຳ ແລ້ວດິນກໍ່ເຈື່ອນລົງທັບດັ່ງກຶບ ! ກຶບ ! ຫາຍໄປຢ່າງໄວວາ.

ນາງໄດ້ຖ້ວຍ ຈານ ແລະ ຊາມຈາກເຈົ້າວິນຍານ ນ້ຳດິນບັນດານໃຫ້ເຄື່ອງໃຊ້ໃນຊີວິດປະ ຈຳວັນຂອງນາງ. ນັບຕັ້ງແຕ່ນັ້ນມາ ແມ່ເຖົ້າຈຶ່ງຄິດເຫັນວ່າຫຼານສາວຂອງຕົນເອງເປັນຄົນທີ່ມີຄຸນ ນະທຳໃນຊີວິດເປັນຢ່າງດີ. ຍ້ອນວ່ານາງສ້າງຄວາມດີໃນຊີວິດຂອງຕົນເອງ, ຄົນທີ່ສ້າງຄວາມດີ ໃນຊີວິດບໍ່ຫຼາຍກໍ່ໜ້ອຍ ຕ້ອງມີຄົນຫຼືສິ່ງສັກສິດທັງຫຼາຍ ຕ້ອງຊ່ວຍສິ່ງໃດສິ່ງໜຶ່ງໃນການດຳລົງຊີ ວິດ. ເຂົາເຈົ້ານຳໃຊ້ຖ້ວຍ, ຈານ ແລະ ຊາມໃນຍາມແຕ່ງຢູ່ຄືວກິນເປັນເວລາທີ່ດົນນານມາແລ້ວ, ຖ້ວຍ, ຈານ ແລະ ຊາມດັ່ງກ່າວແຕກຮ່ານໄປ, ຖ້ວຍຈານ, ແລະ ຊາມທີ່ແຕກໄປເຂົາເຈົ້າຖິ້ມມັນ ໄປ, ແຕ່ວ່າໃນບໍ່ດົນພໍ່ຄ້າຮູ້ຈັກວ່າ ຖ້ວຍ, ຈານ ແລະ ຊາມພິເສດ ແນວນັ້ນພໍ່ຄ້າຊອກຊື້ເອົາຖ້ວຍ ຈານ ແລະຊາມດ້ວຍລາຄາແພງ, ນັບຕັ້ງແຕ່ນັ້ນມາ ນາງມີເງິນຄຳໃຊ້ຈ່າຍອີກໃນຊີວິດປະຈຳວັນ ຂອງນາງເອງ.

## 9.3 ຮັ່ງຍ້ອນໂຊກລາງ
## (ແວພັຣລາງພາຊູຍພັຮຍາ)

ຢູ່ໃນສະໄໝຄົນບູຮານຄາວກ່ອນ, ມີຄອບຄົວໜຶ່ງເຂົາເຈົ້າໄປຕັ້ງຖິ່ນຖານຢູ່ແຫ່ງໜຶ່ງ ເພື່ອ ທຳມາຫາລ້ຽງຊີບ ຕາມພູມລຳເນົາອັນອຸດົມຮັ່ງມີທາງທຳມະຊາດ, ຊອກຫາບ່ອນທີ່ມີດິນດຳນ້ຳ ຊຸ່ມເປັນບ່ອນມີປ່າໜາດົງຕຶບຢ່າງຫຼວງຫຼາຍ ເປັນບ່ອນເຮັດໄຮ່ໄດ້ເຂົ້າຫຼາຍ, ຊອກຢູ່ບ່ອນແນວ ນັ້ນຈຶ່ງສາມາດລ້ຽງຊີວິດທີ່ດີຂອງການດຳລົງຊີວິດໃນແຕ່ລະປີ. ເພາະສະນັ້ນ ຄອບຄົວຜົວເມຍ ຄົນນີ້ ເປັນຄອບຄົວໜຶ່ງທີ່ສະແຫວງຫາຄວາມສີວິໄລຊີວິດຂອງຄົນບ້ານນອກ.

ພາກັນຢູ່ບຸກເບີກເສັ້ນທາງຂອງຊີວິດ ແມ່ນລຳບາກຫຼາຍ, ເຂົາເຈົ້າຕ້ອງຜ່ານຜ່າອຸປະສັກທີ່ ກີດຂວາງການຖາງປ່າເພື່ອເຮັດໄຮ່ນັ້ນ ເປັນອຸປະສັກເລື່ອງໜຶ່ງເຂົາເຈົ້າ ຕ້ອງເຊື່ອຖືໂຊກລາງມາ ກ່າວເຕືອນເປັນໂຊກລາງ ທີ່ມີການກະທຳຂອງທຳມະຊາດບອກສິ່ງທີ່ດີ ແລະ ບອກສິ່ງທີ່ຊົ່ວຮ້າຍ

ໃນພາຍໜ້າ ຈະຕ້ອງຫຼີກເວັ້ນໃຫ້ໄດ້ເຊັ່ນ: ເວລາບະຂວັນ, ຮຽກຂວັນໄຮ່ປ່ານັ້ນບໍ່ໃຫ້ມີໂຊກລາງ ໃດໆມາຂີດຂວາງເສັ້ນທາງຫາກິນຂອງເຂົາເຈົ້າ ບໍ່ໃຫ້ມີຕົ້ນໄມ້ຫັກ ບໍ່ໃຫ້ມີກິ່ງງ່າໄມ້ຫັກລົງ ບໍ່ມີ ສຽງຮ້ອງຂອງ ກວາງຟານ, ບໍ່ໃຫ້ມີສຽງນົກຮ້ອງຄື: ນົກເຄົ້າ, ແຫຼວ, ນົກໄຊ່ ແລະ ອື່ນໆ. ໃນລະ ບົບຊີວິດທີ່ມີຈິດວິນຍານຕ້ອງປະຕິບັດຕາມຈິດວິນຍານ, ທຸກສິ່ງທຸກຢ່າງຍອມຮັບຕາມລະບົບ ຄວາມ ເຊື່ອຖື ແມ່ນຄວາມໝັ້ນໃຈນັ້ນເອງ.

ເລື່ອງໂຊກລາງເຂົ້າບ້ານ ແມ່ນຮີດຄອງປະເພນີຢ່າງໜຶ່ງ ໃນລະບົບຄວາມເຊື່ອຖືຂອງຄົນ ກະຕູໃນສະໄໝກ່ອນ. ເຂົາເຈົ້າເລົ່າເລື່ອງວ່າ ທຳອິດສອງຜົວເມຍເຂົາເຈົ້າ ເຫັນກາບິນເຈີດເຂົ້າ ມາປະຕູເຮືອນແລ້ວຮ້ອງອາກ ! ອາກ ! ເຂົາເຈົ້າເຫັນວ່າ ກາໂຕນີ້ບໍ່ແມ່ນໂຕກາທີ່ນຳໂຊກ ລາງໃນຊີວິດຂອງເຂົາເຈົ້າ, ຜູ້ເປັນຜົວເວົ້າວ່າໂຊກໝານມາແລ້ວ, ບອກເມຍໄປເອົາໜ້າພ້ອມ ລູກໜ້າມາໃຫ້ແດ່, ຜູ້ເປັນເມຍໄປເອົາໜ້າມາໃຫ້ຜົວຍິງກາໂຕນັ້ນ, ໃນເມື່ອຫັນໜ້າຫາຜົວ ນ້ຳ ຕາໄຫຼອອກຕາມແກ້ມ, ຜົວຖາມເມຍວ່າເປັນຫຍັງເຈົ້າຈຶ່ງໄຫ້, ເມຍຕອບວ່າ ຊີວິດຂອງພວກ ເຮົາບໍ່ວ່າຄວາຍດຳໄປກ່ອນ ຄວາຍດ່ອນໄປຕາມຫຼັງອ້າຍເອີຍ, ຜົວເວົ້າວ່າມະນຸດມີພະລັງອຳ ນາດເໜືອ ກວ່າທຳມະຊາດເຈົ້າເຂົ້າໃຈບໍ? ແຕ່ວ່າເມຍເວົ້າວ່າ ສິ່ງສັກສິດໃນລະບົບຄວາມເຊື່ອ ຖືໃນຈິດວິນຍານ, ຜົວຢ້ານເມຍຕາຍກ່ອນຕົນເອງຈະຢູ່ເປັນຢ່າງໃດ, ແຕ່ວ່າເມຍເວົ້າວ່າ ຜົວ ຕາຍກ່ອນໂຕ, ຕົນເອງຈະໄປຊຶ້ນຢູ່ບ່ອນໃດໄດ້.

ໃນປີໜຶ່ງພົບເຫັນໂຊກລາງບິນມາເຖິງບ້ານເຮືອນຂອງເຂົາເຈົ້າອີກ, ຜົວເມຍເຫັນແຫຼວ ບິນມາຈັບນອກຊານເຮືອນເປີ້ເຈົ້, ຜູ້ເປັນເມຍຮ້ອງໃສ່ວ່າ ສັດຮ້າຍມາເຖິງບ້ານໃຫ້ເອົາໜ້າມາຍິງ ມັນໃຫ້ຕາຍ ເພື່ອເຮັດອາຫານຄາບແລງ. ເຂົາເຈົ້າທັງສອງທາງນອກໃຈເວົ້າວ່າຂອງໂຊກດີ, ແຕ່ ທາງໃຈນັ້ນ ນ້ຳຕາຕົກໃນຍາມໃດກໍ່ບໍ່ຮູ້ເມື່ອ. ເຂົາເຈົ້າຄິດວ່າ ຊີວິດຕ້ອງມາຈາກຊີວິດ, ໂຊກລາງ ນົກແຫຼວມາເທື່ອໃດເປັນໂຊກລາງທີ່ເຂົາເຈົ້າທັງສອງຄົນເປັນໜ້າຄິດ, ເຂົາເຈົ້າຄິດວ່າຊີວິດທີ່ມີ ຄຸນຄ່າແພງ ແລະ ປະເສີດ ກວ່າສິ່ງວັດຖຸທີ່ມີຄ່າຢູ່ໃນໂລກ.

ໃນປີຕໍ່ມາ ກໍ່ມີເຫດໂຊກລາງມາກຸກວນຈິດໃຈຂອງຜົວເມຍອີກຄັ້ງໃໝ່ ເຮັດໃຫ້ການດຳ ລົງຊີວິດຂອງຜົວເມຍບໍ່ສະຫງົບ. ເຂົາເຈົ້າທັງສອງຄົນຄິດແຕ່ເລື່ອງຄວາມອັນຕະລາຍຂອງຊີວິດ. ໃນມື້ໜຶ່ງມີງູເຫຼືອມໃຫຍ່ໂຕໜຶ່ງເລືອຄານເຂົ້າມາໃນເຮືອນ ມັນເລືອເຂົ້າມາດ່າວໆ, ເມຍລາວ ເຫັນງູເຫຼືອມເລືອເຂົ້າມາລາວຮ້ອງໃສ່ຜົວວ່າອ້າຍເອີຍງູເຫຼືອມເລືອເຂົ້າມາ ຜົວແລ່ນເຂົ້າມາ ແລ້ວຖາມ ວ່າຢູ່ໃສ? ຢູ່ໃສ? ຜົວລາວແນມເຫັນຈຶ່ງແລ່ນໄປຫາງູເຫຼືອມ ແລ້ວຈັບຫາງງູເຫຼືອມຈົ້ງ ໄວ້ແຕ່ວ່າ ແຮງຂອງມັນສູງກວ່າລາວ, ງູເຫຼືອມລາກລາວໄປ, ລາວດຶງງູເຫຼືອມກັບຄືນ ມາຫາລາວ. ການແກ່ດຶງກັນລະຫວ່າງງູເຫຼືອມກັບຄົນ ແມ່ນການຫຼິ້ນງານຢ່າງດຸເດືອດນຳກັນ, ລາກກັນໄປໄຖກັນມາເທິງເຕີບແລ້ວ. ງູເຫຼືອມລາກລາວໄປໂຕ່ງໂຕ້ຍ! ໂຕ່ງໂຕ້ຍ! ພໍດີຮອດຈອມ

ປວກລາວເອົາຕີນຢັນຈອມປວກໄວ້ໝົດແຮງ ຕີນທັ່ງຈົກໃສ່ຈອມປວກແຕກອອກສະໄປ ລາວເຫັນມີແຕ່ກ້ອນເງິນກ້ອນຄຳແຕກອອກຊາບລາບຢູ່ໜ້າດິນ ລາວປະຫາງງູເຫຼືອມຢ່າງໄວວາລາວເກັບເງິນກອງໜຶ່ງເກັບຄຳກອງໜຶ່ງແລ້ວເອີ້ນເມຍມາເອົາຊ່ອຍນຳ ນັບຕັ້ງແຕ່ນັ້ນມາຜົວເມຍກໍ່ຮັ່ງມີຂຶ້ນ. ການດຳລົງຊີວິດທີ່ອຸດົມສົມບູນບໍ່ທຸກຍາກຄືແຕ່ກ່ອນອີກ ເຂົາເຈົ້າເລົ່າເລື່ອງວ່າໂຊກລາງມາພາໃຫ້ຮັ່ງມີ ໃນຊີວິດຕະຫຼອດໄປ.

# 10 ກ່ຽວກັບສັດ
# (ອະເລີງບວດ)
## 10.1 ເຜິ້ງມີລະບຽບ
## (ຕີນີງແວທະຣຽບ)

ສັດຢູ່ໃນໂລກເຮົານີ້ກໍ່ມີຫຼາຍຊະນິດ ທີ່ມີຊີວິດອາໄສຢູ່ນຳກັນຈະແມ່ນສັດນອນຢູ່ຕ່ຳ, ສັດນອນຢູ່ສູງ, ສັດນອນໃນໂກນ, ໃນຮູກໍ່ຕາມພ້ອມກັນຫາກິນຕາມທຳມະຊາດ ໃນທຸກຈອກທຸກແຈຢູ່ໜ້າດິນ. ອາຫານການກິນຂອງສັດແຕ່ລະຊະນິດມີມາກມາຍຫຼາຍຢ່າງ, ແຕ່ລະຊະນິດອາຫານກິນຕາມຄວາມຕ້ອງການຂອງສັດ. ເຂົາເຈົ້າເລົ່າເລື່ອງວ່າ ສັດຈະຫາກິນມີຄວາມແຕກຕ່າງກັນຫຼາຍຢ່າງກໍ່ຕາມ ແຕ່ວ່າການດຳລົງຊີວິດຂອງສັດມີລັກສະນະສະເໝີພາບ ເອກະພາບກັນມັນແມ່ນການຫາກິນຕາມທຳມະຊາດ, ສັດບໍ່ຮູ້ຈັກເລື່ອງການອອກແຮງງານ, ການດຳລົງຊີວິດບໍ່ມີສິນທຳ, ສັດບາງຊະນິດມີການກະທຳຊົ່ວຮ້າຍ, ຈອງຫອງ ແລະ ຂີ້ລັກອີກດ້ວຍ.

ກ່ຽວກັບແມງເຜິ້ງມັນແມ່ນແມງໄມ້ຊະນິດໜຶ່ງ ທີ່ຫາກິນດ້ວຍວິທີຕອມດູດກິນເກສອນຂອງດອກໄມ້ ຫຼືຊໍ່ດອກໄມ້ນາໆຊະນິດ, ດູດກິນນ້ຳຫວານຂອງເກສອນດອກໄມ້ ເພື່ອລ້ຽງຊີວິດປະຈຳວັນ. ເວົ້າເລື່ອງແມ່ເຜິ້ງເປັນແມງຊະນິດໜຶ່ງທີ່ໃຈຮ້າຍມັກຕອດມັກດົ້ນມະນຸດ ເຮັດໃຫ້ຜູ້ອື່ນມີຄວາມເຈັບປວດເຖິງເສຍຊີວິດໄປກໍ່ມີ ທັງເປັນແມງໄມ້ມັກທຳລາຍເຄື່ອງປູກຂອງຝັງຂອງຄົນຄື: ແມງເຜິ້ງຈັບຕອມຊໍ່ດອກສາລີຫາກໍ່ອອກຮວງໃໝ່ໆເຮັດໃຫ້ເກສອນຫຼໍ່ລ້ຽງຕົກຫຼົ່ນຫຼາຍຈະເຮັດ ໃຫ້ມານສາລີບໍ່ຄ່ອຍຕຶ່ງດີ, ແມງເຜິ້ງຈັບຕອມຊໍ່ຮວງເຂົ້າຫາກໍ່ອອກເບັ່ງບານເກສອນ, ໃນເມື່ອແມງເຜິ້ງຈັບຕອມເກສອນໝາກອາດຈະຫຼົ່ນລົງເຮັດໃຫ້ຮວງເຂົ້າບໍ່ດົກໜາ, ແມງເຜິ້ງຈັບຕອມດອກຂອງໝາກແຕງ, ດອກໝາກອຶກໍ່ມີຜົນສະທ້ອນເຊັ່ນດຽວກັນ ອັນນີ້ຄົນບູຮານເວົ້າວ່າ: ເຜິ້ງອາໄສຫາກິນນຳຜົນລະປູກຂອງມະນຸດຕະຫຼອດມາ.

ແມງເຜິ້ງແມ່ນແມງໄມ້ຊະນິດໜຶ່ງທີ່ມີລະບຽບວິໄນດີ, ການເຄື່ອນຍ້າຍເປັນໝູ່ເປັນຝູງ ຢູ່ກິນເປັນກຸ່ມເປັນກ້ອນດີ. ໃນຝູງເຜິ້ງໜຶ່ງໆຈະມີເປັນພັນເປັນໝື່ນໂຕກໍ່ຕາມ ແຕ່ວ່າເຜິ້ງທຸກໆໂຕຕ້ອງເຊື່ອຟັງເຮັດຕາມແມງເຜິ້ງສອງໂຕ ທີ່ເປັນຫົວໜ້າບັນຊາຂອງແມງເຜິ້ງທັງຫຼາຍ ຕ້ອງເຮັດຕາມໂຕຜູ້ແລະໂຕແມ່ນັ້ນ ຫຼືເຂົາເຈົ້າເວົ້າວ່າ: ພໍ່ເຜິ້ງແມ່ເຜິ້ງ ເປັນຜູ້ຄຸ້ມຄອງຝູງເຜິ້ງ. ດັ່ງນັ້ນໃນເວລາຈັບເຜິ້ງສອງໂຕໃຫຍ່ກວ່າໝູ່ເລືອກເອົາພໍ່ຜູ້ແມ່ຜູ້, ຝູງແມງເຜິ້ງກໍ່ຈະປຸ້ມກັນໄປນຳໆສອງໂຕທັງໝົດໃນຮັງຂອງເຜິ້ງ, ຈາກນັ້ນແມງເຜິ້ງຈະບໍ່ແຕກແຍກກັນຈັກໂຕ, ອັນນີ້ແມ່ນເວົ້າເລື່ອງແມງເຜິ້ງນັບຖືຜູ້ໃຫຍ່. ເຜິ້ງເປັນຝູງສັດທີ່ມີຄວາມເປັນເອກະພາບທາງດ້ານການກະທຳກັບສິ່ງໃດສິ່ງໜຶ່ງ, ທາງຈິດໃຈກໍ່ເອກະພາບກັນ. ໃນເວລາຝູງເຜິ້ງທີ່ຈະຈັບຢູ່ງ່າໄມ້ທີ່ຢ່ອນງ່າຂວາງ ຫຼືງ່າໄມ້ຢ່ອນທາງເບື້ອງແຄມນ້ຳນັ້ນ ແມ່ນຝູງເຜິ້ງທີ່ມີໃຈຮ້າຍຫຼາຍ, ຖ້າວ່າຜູ້ໃດໄປແຕະຕ້ອງຮັງຂອງມັນ, ມັນຕ້ອງບິນລົງມາຈາກຮັງເຄິ່ງໜຶ່ງໂລດ, ມັນໄລ່ຕອດຜູ້ແຕະຕ້ອງຮັງຢ່າງບໍ່ຈິ່ງໜ້າ. ເຖິງວ່າເຈົ້າຈະມຸດລົງນ້ຳມັນຕ້ອງບິນລໍຖ້າຜູ້ນັ້ນໂປໂລຫົວຂຶ້ນ ມັນຕອດປັບໂລດແລ້ວເຜິ້ງກໍ່ຢູ່ຖ້າບ່ອນນັ້ນຕະຫຼອດ ຫຼືວ່າ ຜູ້ນັ້ນຈະແລ່ນໄປທາງໃດ ເມືອບ້ານມັນກໍ່ນຳຜູ້ນັ້ນທັນທີເຜິ້ງນຳຜູ້ເຮັດຜິດຮອດເຮືອນ, ມັນບິນຮອດບ່ອນຢູ່ບ່ອນນອນຂອງຄົນໂລດ, ມັນຈັບໄດ້ໄລ່ທັນຈະຢູ່ບ່ອນໃດກໍ່ຕາມ. ມັນຈະບິນມາເຕັມເຮືອນກໍ່ຕາມ ແຕ່ວ່າມັນບໍ່ຕອດຄົນໂລເລໃນເຮືອນ, ມັນຊອກຫາຜູ້ໄປລົບກວນຮັງຂອງມັນ. ດັ່ງນັ້ນເຂົາເຈົ້າຕ້ອງໄດ້ເຊື້ອງຄົນໄວ້, ເຂົາເຈົ້າ ໃຫ້ຄົນເຮັດຜິດກັບເຜິ້ງ ເຂົ້າໃນໄຫແລ້ວເອົາກະດົ້ງອັດຈົນເຜິ້ງໜີໄປຈຶ່ງອອກຈາກໄຫໄດ້, ການແກ້ແຄ້ນຂອງເຜິ້ງແມ່ນເດັດດ່ຽວອີ່ຫຼີ.

24/VII

## 10.2 ໝາໄນຮູ້ຄຸນ
## (ອະຈໍອະຍອັ້ງຈອມຄຸນ)

ຫ້າມຈຳໜ່າຍ

ໝາໄນເປັນສັດມີສີສັນສວຍງາມ ຈັດຢູ່ໃນຝຸງສັດລ້ຽງຊະນິດໜຶ່ງ, ໝາໄນອາໄສຢູ່ຕາມຖ້ຳຫີນ, ອາຫານກິນແມ່ນຊີ້ນກວາງ, ຟານ ແລະ ຊອກຫາຂົບຫາກິນສັດບ້ານເຊັ່ນ:ແບ້, ໝູ. ໝາໄນຂົບກິນສັດລ້ຽງຂອງຄົນ ແລະ ຂົບກິນສັດປ່າບາງຊະນິດທີ່ໝາໄນກິນປະແລ້ວຈະແມ່ນກະດູກປົນຊີ້ນ ຫຼືວ່າໜັງສັດຄົນກໍ່ເອົາມາກິນອີກ, ຖ້າວ່າເຮັດຜິດປະເພນີຂອງໝາໄນເຮັດໃຫ້ໝາໄນຊອກຫາສັດປ່າບໍ່ໄດ້ແລ້ວ ມັນຈຶ່ງໄປຂົບກິນສັດລ້ຽງຢູ່ບ້ານ ເພື່ອແກ້ແຄ້ນເຈົ້າຂອງຜູ້ເຮັດຜິດປະເພນີຂອງໝາໄນກ່ອນໝູ່, ແລ້ວຕໍ່ໄປມັນຈຶ່ງຂົບສັດຂອງຜູ້ອື່ນຕໍ່ກັນໄປ.

ໝາໄນເປັນສັດປ່າຊະນິດໜຶ່ງ ທີ່ມັກຢູ່ນຳກັນເປັນໝູ່ເປັນຝູງ, ແລ້ວຫາກິນໄປນຳກັນເປັນຝູງ ໝາໄນຢູ່ນຳກັນເປັນຝູງນັບແຕ່ຫ້າໂຕຮອດສິບໂຕຂຶ້ນໄປ. ໝາໄນຈະຢູ່ນຳກັນຫຼາຍໂຕກໍ່ຕາມ ແຕ່ວ່າໝາໄນຕ້ອງຟັງ ແລະ ປະຕິບັດຕາມລະບອບຂອງເຈົ້າພໍ່ເຈົ້າແມ່ທັງໝົດ. ໝາໄນຕ້ອງເຮັດຕາມຜູ້ໃຫຍ່ຂອງເຂົາເຈົ້າ, ໝາໄນໄປໃສມາໃສຕ້ອງຮ້ອງຫາກັນຕະຫຼອດ, ສ່ວນສອງໂຕຜູ້ໃຫຍ່ນັ້ນຕ້ອງໄປຊ້າຕະຫຼອດ, ດົມກິ່ນຂອງໝາໄນໄປກ່ອນ, ຖ້າວ່າໝາໄນສອງໂຕໄປຊ້າເກີນໄປ ພວກໝາໄນນ້ອຍຕ້ອງຢູ່ລໍຖ້າໝາໄນໃຫຍ່ສາກ່ອນ.

ໝາໄນພົບສັດທີ່ເປັນອາຫານຂອງຕົນເອງແລ້ວ, ໝາໄນໄລ່ເຫົ່າສັດຕາມສຽງຂອງໝາໄນ ສຽງອິກໆ ! ເອັກໆ ! ສຽງເຫົ່າຂອງໝາໄນມັນແຕກຕ່າງກັບສຽງເຫົ່າຂອງໝາບ້ານ, ໝາບ້ານເຫົ່າສຽງດັງແຮງ ແລະສຽງດັງສູງ, ບາງເທື່ອໝາໄນໄລ່ສັດເປັນມື້ຈຶ່ງໄດ້ສັດໂຕໜຶ່ງ, ຖ້າວ່າໝາໄນໄລ່ຂົບໝູປ່າໂຕຫອກ ສ່ວນຫຼາຍແມ່ນໄລ່ຂົບບໍ່ໄດ້. ຍ້ອນວ່າໝູປ່າຫອກຕ້ອງຂຸດຂຸມທີ່ເລິກ, ແລ້ວປ່ອນໂຕລົງທາງກົ້ນເອົາປາກໄວ້ທາງປາກຂຸມ ເພື່ອຕ້ານຕໍ່ສູ້ກັບໝາໄນເປັນມື້ ຫຼືວ່າສອງມື້ກໍ່ມີ. ໃນເມື່ອຝູງໝາໄນໂຕນ້ອຍໄດ້ຂົບສັດຕາຍແລ້ວ, ຝູງໝາໄນນ້ອຍຕ້ອງຢູ່ລໍຖ້າໝາໄນໃຫຍ່ສອງໂຕມາຮອດສາກ່ອນ, ໃນເມື່ອໝາໄນໃຫຍ່ສອງໂຕຮອດແລ້ວ ພວກໝາໄນນ້ອຍນັ່ງລົງເປັນແຖວ, ມີສຽງຮ້ອງໃສ່ໝາໄນໃຫຍ່ສາກ່ອນ. ຫຼັງຈາກນັ້ນ ໝາໄນໃຫຍ່ຍ່າງອ້ອມເບິ່ງການຕາຍຂອງສັດເປັນແນວໃດ, ຕາຍປິ່ນຫົວປິ່ນກົ້ນໄປທາງໃດ. ຖ້າວ່າສັດຕາຍນັ້ນ ຫາກວ່າຕາຍເຕັງເງົາຂອງໝາໄນ ແມ່ນໝາໄນໃຫຍ່ບໍ່ກິນສັດໂຕນັ້ນ. ຫຼັງຈາກໝາໄນໃຫຍ່ກວດກາແລ້ວ ໝາໄນໃຫຍ່ເລີ່ມຕົ້ນກິນຕາມປະເພນີຂອງໝາໄນຄື: ໝາໄນໃຫຍ່ຈົກກິນແກ່ນຕາທັງສອງໜ່ວຍກ່ອນ ແລ້ວໝາໄນໃຫຍ່ກັດກິນຫູສອງເບື້ອງແລ້ວ ເປັນພິທີໃຫ້ແກ່ການກິນສັດທີ່ຂົບໄດ້. ຫຼັງຈາກນັ້ນ ໝາໄນໃຫຍ່ຈຶ່ງໃຫ້ໝາໄນນ້ອຍກິນຕາມລຳດັບຄື ໝາໄນນ້ອຍຕ້ອງກັດກິນຢູ່ບ່ອນໜ້າອົກຂອງສັດສາກ່ອນ. ຖ້າວ່າພວກໝາໄນກິນບໍ່ໝົດໃນເວລານັ້ນ ໝາໄນຕ້ອງເອົາຊີ້ນໄປກິນບ່ອນອື່ນ, ໝາໄນມັກຈະຄາບໄປແມ່ນຂາໜ້າ ແລະ ຂາຫຼັງທັງສອງເບື້ອງ. ໃນກໍລະນີທີ່ຄົນພົບເຫັນໝາໄນພວມຂົບສັດຕາຍແລ້ວ ແຕ່ວ່າລໍຖ້າໝາໄນໃຫຍ່ສອງໂຕມາບໍ່ຮອດ ແຕ່ວ່າຄົນໄປຍາດເອົາສັດຂອງໝາໄນ, ຝູງໝາໄນບໍ່ຍອມໜີໄປໃສຍັງວົນວຽນຢູ່ນັ້ນ. ດັ່ງນັ້ນຖ້າໝາໄນໃຫຍ່ມາຮອດແລ້ວ ແຕ່ວ່າພວກໝາໄນບໍ່ໜີໄປ, ຄົນຜູ້ຍາດເອົາອາຫານຂອງໝາໄນ ຕ້ອງປາດຫູສອງເບື້ອງຖິ້ມໃຫ້ໝາໄນແລ້ວເຈາະເອົາແກ່ນຕາສອງເບື້ອງຖິ້ມໃຫ້ໝາໄນໃຫຍ່ກິນ ແລ້ວກໍ່ພາຝູງໝາໄນນ້ອຍໜີໄປ.

# 10.3 ກະຮອກດ່ອນ

# (ອະເບຊບອກ)

ຄົນບູຮານນັ້ນ ເຂົາເຈົ້າຢາກໃຫ້ມີອາຫານການກິນພຽງພໍ ໃນຄອບຄົວຕ້ອງໄປຊອກຫາຍິງ, ອາວຸດທີ່ທັນສະໄໝຍິງໄປໄດ້ໄກ ມີແຕ່ໜ້າເທົ່ານັ້ນທີ່ສາມາດຍິງໄປໄດ້ໄກ. ແຕ່ວ່າສັດໃຫຍ່ອາດຈະບໍ່ຕາຍ, ເຂົາເຈົ້າຈຶ່ງຊອກຄົ້ນຫາທາດພິດທີ່ມີຄວາມອັນຕະລາຍໃຫ້ແກ່ຊີວິດທັງມະນຸດ ແລະ ສັດ ຖ້າຍິງຖືກຕ້ອງຕາຍໃນໄລຍະເວລາທີ່ແນ່ນອນ, ທາດພິດໜ້ອງຈະເຂົ້າກິນຕັບເທິງປະມານເຄິ່ງຊົ່ວໂມງ ຫຼືວ່າຊົ່ວໂມງໜຶ່ງຕ້ອງດິ້ນຕາຍວັບໆ.

ມີຊາວບ້ານຜູ້ໜຶ່ງ ລາວອອກຈາກບ້ານໄປຫາຍິງສັດຢູ່ປ່າແຫ່ງໜຶ່ງ, ລາວເລາະຊອກຫາຍິງດ້ວຍຄວາມຫຍຸ້ງຍາກລຳບາກຫຼາຍ, ລາວຕ້ອງຜ່ານຫຼາຍໜ່ວຍພູຜ່ານຫຼາຍລຳຫ້ວຍ ແຕ່ວ່າບໍ່ພົບສັດຈັກໂຕເລີຍ ລາວຕ້ອງຂະຫຍັນຊອກຫາສັດໃຫ້ພົບ ລາວຍ່າງຕາມຈອມພູເຂົານັ້ນໄປພໍດີເຫັນສັດໂຕໜຶ່ງ ກຳລັງຊອກຫາກິນຕາມໜ້າດິນ ລາວຕັ້ງສະຕິແນມເບິ່ງວ່າແມ່ນສັດຫຍັງສີຂາວແມ່ນໝູລິ່ງບໍ? ລາວຍ່າງໄປຄ່ອຍໆກໍ່ພໍດີເຫັນໂຕຂອງສັດຢ່າງຈະແຈ້ງ, ລາວຈັບແມ່ໜ້າໃຫ້ແໜ້ນ ແລະ ແນໃຫ້ຊື່ແລ້ວເກາະໄກໜ້າລັ່ນດັງຕ້ອກ ລູກໜ້າໄປຫາສັດແລ້ວຖືກຈິກໃສ່ຂາໜ້າສັດໂຕນັ້ນ ລົ້ມລົງປາງງ່າງກັບທີ່ໂລດ. ລາວຍິງໄດ້ແລ້ວ ຈຶ່ງຍ່າງໄປເບິ່ງສັດຄັກແນ່ແລ້ວລາວກັບເມືອບ້ານ ເພື່ອບອກຊາວບ້ານວ່າລາວ ຍິງສັດໂຕໜຶ່ງສີຂາວ (ດ່ອນ) ຄືໝູລິ່ງ, ແຕ່ວ່າເບິ່ງຢ່າງໜຶ່ງຮູບຮ່າງແມ່ນກະຮອກດ່ອນ. ຫຼັງຈາກເວົ້າກັບຊາວບ້ານໆ ກໍ່ພາກພູມໃຈຫຼາຍທີ່ຈະໄດ້ກິນຊີ້ນສັດທີ່ລາວຍິງໄດ້. ໃນແຕ່ລະເຮືອນ, ແຕ່ລະຄອບຄົວເຂົາເຈົ້າພາກັນຝົນພ້າຝົນມີດ ແລ້ວກຽມເຄື່ອງຂອງເອົາໄວ້ໃສ່ຊີ້ນສັດ. ຫຼັງຈາກກຽມຄົບຖ້ວນແລ້ວ ເຂົາເຈົ້າກໍ່ພາກັນໄປຫາບ່ອນສັດທີ່ຖືກຍິງຕາຍ. ພວກຊາວບ້ານທີ່ມີພ້າມີມີດແມ່ນໄປໝົດ, ຍັງແຕ່ແມ່ໝ້າຍຜູ້ໜຶ່ງລາວບໍ່ໄປ ຍ້ອນວ່າລາວບໍ່ມີພ້າມີມີດ ຈຶ່ງບໍ່ໄດ້ໄປເອົາຊີ້ນມາກິນ.

ໃນເມື່ອປາດຊີ້ນກະຮອກດ່ອນຢູ່ປ່າ ແລະ ແບ່ງປັນກັນຕາມຈຳນວນທີ່ໄປເອົາຊີ້ນກະຮອກດ່ອນ, ກັບມາເຖິງນ້ຳຫ້ວຍມີໄມ້ປ່ອງ, ກໍ່ພາກັນຕັດໄມ້ປ່ອງໄດ້ແລ້ວ ເອົາຊີ້ນອອກມາປາດເປັນຕ່ອນແລ້ວຍັດໃສ່ກະບັ້ງຂອງໃຜຂອງມັນແລ້ວຫຼາມໃສ່ໄຟຢ່າງຫ້າວຫັນທີ່ສຸດ ໃຜໆກໍ່ວ່າເທິງແລ້ວທີ່ບໍ່ໄດ້ກິນຊີ້ນ. ໃນເມື່ອຫຼາມສຸກແລ້ວກໍ່ພາກັນຜ່າກະບັ້ງອອກມາກິນຢ່າງແຊບນົວທີ່ສຸດ. ຫຼັງຈາກກິນຊີ້ນກະຮອກ ດ່ອນແລ້ວຫຼາຍຄົນແປກປະຫຼາດຫຼາຍໃນຮ່າງກາຍຂອງຕົນເອງ ມີບາງຄົນເກີດອາການປວດຮາກແລ້ວຮາກອອກມາ, ແຕ່ບາງຄົນເຈັບຫົວມົວຕາ, ເບື່ອ ເມົາຊີ້ນກະ

ຮອກດ່ອນນັ້ນ ໃນສຸດທ້າຍກໍ່ພາກັນຕາຍໝົດບ້ານຍັງເຫຼືອພຽງແຕ່ນາງແມ່ໝ້າຍຄົນນັ້ນ, **ຍ້ອນ** ລາວບໍ່ມີພ້າຈະໄປປາດເອົາຊີ້ນກະຮອກ ດ່ອນ ຈຳເປັນຕ້ອງຢູ່ບ້ານ.

# 11.ຄົນກັບເທວະດາ

# (ຄູຍເລິງອະເບີມ)

## 11.1 ເທວະດາກັບນາງອາບັດ

## (ອະເບີມເລິງອະບັດ)

ກ່ຽວກັບ ໂລກເມືອງແຜ່ນຟ້າກັບໂລກແຜ່ນດິນ ໃນສະໄໝນັ້ນເປັນໂລກທີ່ບໍ່ໄກກັນ, ເຂົາເຈົ້າມີການພົວພັນຢ່າງໃກ້ຊິດກັນຕະຫຼອດ. ເຂົາເຈົ້າທີ່ຢູ່ໃນພື້ນໂລກກໍ່ມີປູ່ຍ່າຕາຍາຍຢູ່ເທິງເມືອງຟ້າ, ໃນເມື່ອມີການພົວພັນກັນລະຫວ່າງພະຍາເມືອງຟ້າກັບພະຍາເມືອງແຜ່ນດິນແນວນັ້ນຄົນຈຶ່ງເວົ້າວ່າເຈົ້າເທວະດາ, ເຈົ້າພະຍາແຖນ, ເຈົ້າພະອິນ, ເຈົ້າພະພົມ ແລະ ອື່ນໆ. ໃນເມື່ອມີການພົວພັນເປັນແນວນັ້ນ ພວກຢູ່ເທິງເມືອງສະຫວັນເຂົາເຈົ້າກໍ່ມີປູ່ຍ່າຕາຍາຍຢູ່ພື້ນດິນໂລກເຮົາເໝືອນກັນ ເຮັດໃຫ້ສອງໂລກເທິງ ແລະ ໂລກລຸ່ມຮັກແພງກັນຢ່າງຊະນິດແໜ້ນ. –

ກ່ຽວກັບເຈົ້າເທວະດາສະເດັດລົງມາສູ່ພື້ນໂລກຂອງມະນຸດ (ອະເບີມ ແປວ່າເທວະດາ) ລົງຢູ່ແຜ່ນດິນຂອງມະນຸດ, ເຈົ້າເທວະດາຢູ່ດົນນານກັບຄົນກະຕູໄດ້ຫຼາຍປີມາແລ້ວ ຂຶ້ນໆລົງໆກໍ່ເລີຍມີຄວາມມັກຮັກກັບຜູ້ສາວຄົນກະຕູ, ນາງຊື່ວ່ານາງອາບັດ. ໃນທຳອິດຜູ້ບ່າວເທວະດາອອນວອນ ມາສູ່ຂໍນຳພໍ່ແມ່ຂອງນາງ, ແຕ່ວ່າພໍ່ແມ່ຂອງນາງປະຕິເສດ ບໍ່ໃຫ້ລູກເອົາຄົນຕ່າງດ້າວຊາວຕ່າງແດນ, ເຂົາເຈົ້າຢ້ານເທວະດາເອົາເມືອເມືອງສະຫວັນຊັ້ນຟ້າ. ຂໍເປັນເຂີຍສູ່ຈະຢູ່ນຳຄົນກະຕູຕະຫຼອດຊີວິດ, ຈະຮັກແພງນາງອາບັດເປັນຢ່າງດີ, ຈະຄຸ້ມຄອງຊີວິດການເປັນຢູ່ໃຫ້ດີທຸກດ້ານ, ນີ້ເປັນຄຳປະຕິຍານຕົວຂອງອົງເທວະດາຕໍ່ພໍ່ແມ່ຂອງນາງອາບັດ.

ໃນປີຕໍ່ມາ ພໍ່ແມ່ຂອງນາງອາບັດເຫັນວ່າ ການພົວພັນລະຫວ່າງອະເບີມກັບອາບັດ ນັບມື້ນັບເລິກເຊິ່ງທີ່ສຸດ, ເຂົາເຈົ້າຢ້ານອະເບີມລັກພາຕົວນາງຂຶ້ນເມືອເມືອງສະຫວັນພຸ້ນ. ພໍ່ແມ່ຈຶ່ງຕົກລົງປົງໃຈໃຫ້ລູກສາວແຕ່ງດອງກັບອົງເທວະດາຕາມຮີດຄອງປະເພນີຢູ່ໃນພື້ນໂລກແຫ່ງໜຶ່ງ. ເຂົາເຈົ້າເລົ່າເລື່ອງກ່ຽວກັບການແຕ່ງດອງນັ້ນແມ່ນໃຫຍ່ໂຕມະໂຫຖານ ມີຄົນມາຮ່ວມການແຕ່ງດອງເປັນຈຳນວນຢ່າງຫຼວງຫຼາຍທັງສອງຝ່າຍ. ເຂົາເຈົ້າເລົ່າວ່າຝ່າຍຊາຍແມ່ນພໍ່ແມ່ຍາດຕິພີ່ນ້ອງ ເຈົ້າຊາຍລົງມາຮ່ວມ ການແຕ່ງດອງຢ່າງຄັບຄາໜາແໜ້ນ ເພື່ອສະແດງກຳລັງ**ມະຫາອຳ**

ນາດເປັນພະລັງທາງດ້ານຈິດໃຈໃຫ້ແກ່ຄອບຄົວຝ່າຍຍິງ ເລື່ອງເງິນຄ່າດອງສິນສອດ. ສ່ວນຝ່າຍເຈົ້າຍິງກໍ່ມາຮ່ວມຢ່າງຄັບຄາໜາແໜ້ນເໝືອນກັນ ໃຜໆກໍ່ຢາກເຫັນຜູ້ບ່າວຄົນເມືອງຟ້າເປັນແນວໃດມັນຄືຄົນຢູ່ພື້ນໂລກບໍ? ເຂົາເຈົ້າຈັດຕັ້ງພິທີການແຕ່ງດອງເປັນເວລາຫ້າວັນເຕັມ, ເຂົາເຈົ້າຂ້າຄວາຍລ້ຽງໃນການແຕ່ງດອງໝົດຄວາຍຫ້າໂຕໃນຫ້າວັນ ກິນເຂົ້າແລ້ວຟ້ອນລຳຢ່າງເບີກບານມ່ວນຊື່ນນຳ ກັນກັບຄົນເມືອງຟ້າ ແລະ ຄົນຢູ່ເມືອງແຜ່ນດິນ ໃນການແຕ່ງດອງແມ່ນຊອກຫາໂອກາດຍາກຢູ່ໃນໂລກແຫ່ງນີ້.

ການແຕ່ງດອງແບບເທວະດາກັບນາງອາບັດໄດ້ສຳເລັດລົງດ້ວຍດີແລ້ວ ທັງສອງຝ່າຍກໍ່ເລີກລາກັນໄປ, ທາງພໍ່ແມ່ທີ່ຢູ່ເມືອງຟ້າເມືອງສະຫວັນ, ກໍ່ພາກັນກັບຂຶ້ນເມືອສະຫວັນດ້ວຍຄວາມຄິດຮອດຄິດເຖິງກັນ ເປັນຫ່ວງເປັນໃຍກັນຢ່າງເລິກເຊິ່ງ ສ່ວນຄົນກະຕູກັບເມືອສູ່ບ້ານເມືອງຂອງ ໃຜມັນ. ທຸກໆຄົນແຕກກັນໄປຄົນລະແຫ່ງລະຫົນ. ສ່ວນເຈົ້າເທວະດາຄົນນັ້ນ ກໍ່ເປັນເຂີຍສູ່ພໍ່ແມ່ຝ່າຍຍິງຢູ່ນຳກັນດ້ວຍຄວາມຮັກແພງກັນຢ່າງດູດດື່ມ, ພາກັນບຸກເບີກດິນເຮັດໄຮ່ເຮັດສວນຕາມດິນແດນອັນອຸດົມສົມບູນ ເຮັດໃຫ້ຊີວິດຄອບຄົວກໍ່ອຸດົມສົມບູນ ມີເຂົ້າເຕັມເລົ້າເປັນສະບຽງອາຫານ ຮັບປະກັນຄວາມໝັ້ນໃຈໃນຊີວິດຂອງຄອບຄົວ.

ມີປີໜຶ່ງທ້າວອະໂຈຍ ແລະ ມານອໍຊຸໄປຕິດຕັ້ງນົກຢູ່ປ່າ ທ້າວອະໂຈຍບອກໃຫ້ທ້າວມານອໍຊຸເຝົ້າເບິ່ງຕັ້ງທີ່ນົກຖືກຫຼາຍໂຕ, ມີພໍ່ເຖົ້າຜູ້ໜຶ່ງມາຂໍເລື້ອຍໆ. ທ້າວອະໂຈຍຖາມທ້າວມານອໍຊຸວ່າ ນົກຖືກຕັ້ງໄປໃສ່ໝົດ. ທ້າວມານອໍຊຸ ກໍ່ລາຍງານວ່າມີພໍ່ເຖົ້າໃຫຍ່ມາຂໍກິນໝົດ. ມື້ລຸນມາພໍ່ເຖົ້າຜູ້ນັ້ນກໍ່ມາຂໍນຳທ້າວມານອໍຊຸອີກ ຄັນວ່າມີສິ່ງໃດມາຕອດພໍ່ເຖົ້າໃຫ້ຕົບເຂົ້າເດີ. ທ້າວອະໂຈຍເອົາລູກໜ້າໜ້ອງສິບລູກ, ທ້າວອະໂຈຍຍິງໄປໃສ່ພໍ່ເຖົ້າ, ພໍ່ເຖົ້າກໍ່ຕົບເຂົ້າປັບ, ທ້າວອະໂຈຍ ຍິງຮອດລູກທີ່ສິບພໍ່ເຖົ້າຕົບເຂົ້າທັງໝົດ. ຫຼັງຈາກນັ້ນພໍ່ເຖົ້າກໍ່ຢາກນອນ, ທ້າວມານອໍຊຸບອກພໍ່ເຖົ້າໄປກິນນ້ຳຢູ່ຫ້ວຍ. ແລ້ວກໍ່ນອນຕາຍຢູ່ຫ້ວຍເລີຍເມື່ອກວດເບິ່ງແມ່ນໂຕຍັກໃຫຍ່ຕາຍ. ທ້າວອະໂຈຍກັບບ້ານແລ້ວບອກຊາວບ້ານໄປເອົາຊີ້ນຍັກມາກິນ, ອະເນີມເປັກະທໍໃຫຍ່ໄປ, ລາວປາດຊີ້ນໃສ່ກະທໍຈົນເຕັມ, ຊາວບ້ານລັກມັດກົນກະທໍໃສ່ຮາກໄມ້. ແລ້ວຊາວບ້ານເອີ້ນກັນກັບເມືອບ້ານ. ອະເນີມ ເປັກະທໍຊີ້ນ, ລຸກຂຶ້ນບໍ່ໄດ້ອະເນີມຈົກກິນຊີ້ນຈົນໝົດໃນກະທໍ, ແລ້ວກໍ່ຍັງເປັຂຶ້ນບໍ່ໄດ້, ທ້າວລົງຈຶ່ງໄປຍົກກົ້ນກະທໍເບິ່ງເຫັນເຊືອກມັດໃສ່ຮາກໄມ້ ລົງຈຶ່ງແກ້ອອກ, ອະເນີມຈຶ່ງເປັກະທໍເປົ່າເມືອບ້ານ. ໃນເມື່ອເມືອຮອດຫ້ວຍນ້ຳແຫ່ງໜຶ່ງກໍ່ເຫັນຊາວບ້ານຕັດກະບັ້ງຫຼາມຊີ້ນ, ອະເນີມຖາມວ່າພວກເຈົ້າເອົາຊີ້ນມາແຕ່ໃສ? ຊາວບ້ານຕອບວ່າ ຊີ້ນທີ່ປັນກັນນັ້ນເປັນພູດຂອງໃຜມັນ. ອະເນີມ ເພິ່ນກິນໝົດແລ້ວ, ອະເນີມ ຕັດໄມ້ຜ່າເປັນປ່ຽງນ້ອຍແລ້ວເຫຼົາໄມ້ຈິ້ມເອົາຂີ້ນຕິດແຂ້ວໄດ້ເບື້ອງລະກະບັ້ງ ເອີ້ນວ່າ: ຂີ້ແຂ້ວ, ຊີ້ນຕິດແຂ້ວ. ໃນເມື່ອຮອດເຮືອນອະເນີມ ໃຫ້ນາງອາບັດກິນ, ນາງອາບັດກິນຊີ້ນຂອງຜົວໃຫ້ນັ້ນ ມັນບໍ່ມີລົດຊາດຈັກໜ້ອຍ. ຫຼັງ

ຈາກກິນແລ້ວນາງອາບັດ ໄປເຮືອນພໍ່ແມ່ຂອງຕົນເອງ, ພໍ່ແມ່ແບ່ງໃຫ້ກິນ, ນາງອາບັດ ກິນຊີ້ນທີ່ພໍ່ເອົາໃຫ້ມີລົດຊາດແຊບນົວຫຼາຍ, ນາງອາບັດຖາມພໍ່ວ່າຊີ້ນອະເບີມ ເອົາມາໃຫ້ ນັ້ນຈັ່ງແມ່ນບໍ່ແຊບ, ມັນຈ່າງບໍ່ມີລົດແຊບນົວຈັກດີ້. ພໍ່ຂອງນາງເວົ້າວ່າມັນຊິແຊບຈັ່ງໃດລູກ. ມັນຄວັດເອົາຂີ້ແຂ້ວ ຊີ້ນຕິດແຂ້ວຄວັດມາທ້ອນໂຮມໄດ້ເບື້ອງລະກະບັ້ງລູກເອີຍ, ແມ່ນາງອາບັດຮູ້ຈັກ, ນາງອາບັດ ນັ້ນມີຄວາມຄຽດແຄ້ນຕໍ່ຜົວຢ່າງໜັກ.

ມື້ໜຶ່ງເມຍມົກໄສ້ບິດຂອງລູກໃຫ້ຜົວກິນ, ອະເບີມມາແຕ່ໄຮ່ຂໍກິນນ້ຳຈາກເມຍ, ເມຍເອົານ້ຳຢ່ຽວລູກໃຫ້ຜົວດື່ມ. ນາງອາບັດບອກຜົວລົງຕຳເຂົ້າຖ້າຢາກດື່ມນ້ຳອີກ. ນາງອາບັດມົກໄສ້ບິດ ຂອງລູກໃຫ້ຜົວກິນອີກ. ນາງອະບັດເວົ້າເປັນສຸພາສິດວ່າ: ດາກກະລາງອີຕາງງອຈ ດາກຕະບອັກອະເບີມງອຈ ແປວ່າ: ນ້ຳລົນແມງຂີ້ສູດດື່ມ, ນ້ຳອອກບໍ່ອະເບີມດື່ມ. ເທວະດາເຂົ້າໃຈຄຳເວົ້ານັ້ນ ເລີຍເສຍໃຈຕໍ່ເມຍແກ້ແຄ້ນແກ່ຕົນເອງ ໄດ້ກິນຂີ້ ແລະ ຢ່ຽວຂອງລູກ. ເທວະດາຢາກແກ້ແຄ້ນດ້ວຍວິທີຂ້ານາງອະບັດຕາຍ, ພໍ່ແມ່ອ້າຍນ້ອງຂອງນາງຮູ້ກ່ອນ, ຈຶ່ງໄປຂຸດຂຸມໄວ້, ແລ້ວເອົາໝາກກະເບົາກອງໄວ້ຢູ່ໃນຂຸມ, ຈຶ່ງໄວ້ບ່ອນໜຶ່ງສຳຫຼັບນາງອາບັດຢູ່. ອະເບີມ ມາເຖິງຂຸມເອີ້ນອາບັດເອີຍ ! ເຈົ້າຢູ່ໃນຂຸມແລ້ວບໍ່? ລາວຕອບຜົວວ່າເອີ. ອະເບີມ ແທງເມຍຈຶກບາດໜຶ່ງ, ຖາມວ່າຖືກບ່ອນໃດ? ຖືກໜ້າອົກ. ອະເບີມ ແທງບາດທີ່ສອງຈຶກແລ້ວຖາມວ່າຖືກບ່ອນໃດ? ຖືກບີແຄ່ງ. ອະເບີມແທງເທື່ອທີ່ສາມບໍ່ໄດ້ຍິນສຽງຕອບໂອ ! ອາບັດຕາຍແລ້ວ.

ອະເບີມຄິດວ່າ ຕົນເອງຂ້າເມຍດ້ວຍຄວາມຄຽດແຄ້ນແຕ່ຈິດໃຈຍັງຄິດຮອດເມຍຢູ່ສະເໝີ ແສງແດດສ່ອງລົງສູ່ພື້ນໂລກແລ້ວ, ອະເບີມ ແກ້ຜ້າກະຕ່ຽວຊອກຫາເຫົາ ນ້ຳຕາໄຫຼຫຼັ່ງໄຫ້ຫາເມຍ ສາຍຕາແນມເບິ່ງທາງບ້ານພໍ່ແມ່ກໍ່ເຫັນອາບັດຢືນຕຳເຂົ້າ ອະເບີມ ທັວງໂອ! ອາບັດຍັງມີຊີວິດຢູ່ຈຶ່ງຖອດເອົາລູກໜ້າຍິງໃສ່ເກົ້າຜົມແລ້ວອະທິຖານວ່າ: ຖ້າແມ່ນເມຍຂອງຂ້ອຍໃຫ້ຍິງຖືກຕະວາຍ (ຕະວີກ) ຖ້າບໍ່ແມ່ນເມຍຖືກຕະປຸຍ(ຜ່ານໄປ) ອະເບີມ ລັ່ນໜ້າຖືກປັບ. ພໍ່ແມ່ເຫັນລູກໜ້າຖືກເກົ້າຜົມອາບັດ ກໍ່ຖອດອອກມາເບິ່ງແມ່ນລູກໜ້າອະເບີມແລ້ວ, ພໍ່ແມ່ເອົາມາສຽບໃສ່ເກົ້າຜົມຂອງແມ່, ແລ້ວຊຸກເຊື່ອງນາງອາບັດໄວ້.

ມື້ຕໍ່ມາພໍ່ແມ່ປັ້ນຫຼໍ່ຂີ້ສູດເຮັດເປັນຮູບນາງອາບັດຄັກແນ່, ຮູ້ປາກ, ຮູ້ຍ່າງ, ອະເບີມ ມາເຖິງເຮືອນພໍ່ແມ່ເມຍເຫັນລູກໜ້າຕິດຢູ່ເກົ້າຜົມແມ່, ອະເບີມບໍ່ເຊື່ອ. ພໍ່ແມ່ມອບຮູບປັ້ນໃຫ້ອະເບີມແລ້ວເວົ້າວ່າອາບັດຄືນນີ້, ແຂ່ງຝົນໄດ້ເອົາໄປຕາກແດດບໍ່ໄດ້, ແຕ່ງກິນບໍ່ໄດ້. ອະເບີມ ເຮັດວຽກຫຼາຍແລ້ວທົນບໍ່ໄຫວແລ້ວບອກອາບັດແຕ່ງກິນ, ອາບັດໜຶ້ງເຂົ້າບໍ່ອອກອາຍກໍ່ເຫັນແຕ່ເສື້ອຜ້າບໍ່ເຫັນໜ້າຄືນ.

ຕໍ່ມາອະເບີມເຫັນນາງອາບັດອີກ, ໄປວິງວອນນຳພໍ່ແມ່ສິ່ງເມຍໃຫ້ເຂົາຄືນ, ພໍ່ແມ່ໄປເອົາດິນດາກມາຫຼໍ່ປັ້ນເປັນຮູບນາງອາບັດ, ແລ້ວມອບໃຫ້ອະເບີມອີກ, ແລ້ວບອກວ່າ ອາບັດໄປຕາກ

ແດດໄດ້, ໜື້ງເຂົ້າ, ຕຳເຂົ້າໄດ້, ແຕ່ໃຫ້ໄປອາບນໍ້າ, ຕັກນໍ້າ, ອະເບີນດຳລົງຊີວິດແບບລຳຄານໃຈ. ກໍ່ເລີຍບອກອາບັດໄປຕັກນໍ້າ, ອະເບີນລໍຖ້າເມຍດົນຫຼາຍ ຈຶ່ງໄປເບິ່ງຢູ່ທ່ານໍ້າເຫັນແຕ່ເສື້ອຜ້າເທົ່ານັ້ນ.

ຫຼາຍໆປີຜ່ານໄປອະເບີນເຫັນເມຍຍັງມີຊີວິດຢູ່ ອະເບີນຈຶ່ງໄປສູ່ຂໍນຳພໍ່ແມ່ຂອງນາງອາບັດອີກ. ພໍ່ແມ່ນາງອາບັດຊອກວິທີຂ້າອະເບີນ, ແຕ່ຕົກລົງເອົາລູກສາວໃຫ້ອະເບີນແທ້, ແຕ່ມີຂໍ້ຜູກມັດວ່າ: ໃຫ້ຜົວເມຍຂຶ້ນໄມ້ວິດຖ່າຍຢູ່ເທິງກາງຫາວ, ແລ້ວພໍ່ແມ່ຈ້າງແມງຜູ້ມາເຈາະໄມ້ນັ່ງວິດຖ່າຍໃສ່ວິດທີ່ສ້າງ ຢູ່ເທິງກາງຫາວ, ເຮັດໄມ້ນັ່ງວິດຖ່າຍໄມ້ກັນກາຍສອງລຳຽງກັນ. ຫຼັງຈາກເຮັດແລ້ວບອກຜົວຂຶ້ນໃຊ້ໄມ້ວິດຖ່າຍ ຢ້ານໝູດຸດກົ້ນເຈົ້າ, ເຈົ້າອະເບີນດີໃຈຫຼາຍໄດ້ຂຶ້ນຖ່າຍໃສ່ວິດທີ່ສະດວກດີ, ອະເບີນຂຶ້ນນັ່ງໄມ້ ວິດຖ່າຍຫັກປິວະລົງ, ອະເບີນຕົກລົງດິນຢ່າງແຮງຈົນດິນລຸບລົງໄປ, ອະເບີນຕົກລົງລອດລົງແຜ່ນດິນ ແລ້ວຕົກລົງໃສ່ພື້ນໂລກ.

ອະເບີນຢູ່ນຳມະນຸດພື້ນໂລກໄດ້ຫຼາຍປີ ຮູ້ມະນຸດພື້ນໂລກມີລັກສະນະພິເສດສອງຢ່າງ ຄື : ຢ່າງທີ່ໜຶ່ງຄືນຕໍ່າເຕ້ຍສູງປະມານຫ້າສິບຊັງຕີແມັດ, ຢ່າງທີ່ສອງແມ່ນກົ້ນບໍ່ມີຮູ, ມະນຸດພື້ນໂລກກິນເຂົ້າດື່ມນໍ້າ ແມ່ນດົມອາຍ, ສູບອາຍກໍ່ອີ່ມແລ້ວ. ພວກມະນຸດພື້ນໂລກເຫັນອະເບີນກິນເຂົ້າເມັດເປັນກຳໃຫຍ່. ເຂົາເຈົ້າຖາມວ່າ ເຈົ້າເປັນຫຍັງ? ກິນເຂົ້າເມັດໄດ້ຢ່າງສະບາຍ, ອະເບີນຕອບວ່າຂ້ອຍມີຮູທາງກົ້ນ, ຂ້ອຍມີປາກແມ່ນທາງປ້ອນເຂົ້າລົງ, ແຕ່ທາງກົ້ນນັ້ນແມ່ນຮູຂ້ອຍຖ່າຍໃສ່ ວິດອອກໄປເຂົ້າໃຈບໍ? ເຂົາເຈົ້າເວົ້ານຳອະເບີນວ່າ ພວກເຮົາຢາກໄດ້ຄືເຈົ້າ, ອະເບີນບໍ່ຍາກຂ້ອຍຈະແທງກົ້ນຂອງພວກເຈົ້າໃຫ້ມີຮູຖ່າຍໃສ່ວິດອອກ. ອະເບີນເອົາສິ່ວເຜົາໄຟໃຫ້ແດງແລ້ວແທງເຂົ້າທາງກົ້ນ, ແທງແລ້ວໃຫ້ໂດດລົງນໍ້າເພື່ອໃຫ້ກົ້ນເຢັນ, ພໍດີມີຂ້າທາດຫວງດຢ່າງເລາະນໍ້າເຫັນມະນຸດພື້ນໂລກຕາຍເປັນກອງ ມະນຸດພື້ນໂລກໃສ່ໂທດ ກັກຂັງໃສ່ຮູຫອນໂຕໜຶ່ງຢູ່ໃນຖໍ້າຫີນເປັນເວລາດົນນານໄປ.

ຖືກກັກຂັງຢູ່ໃນຖໍ້າກັບຫອນຫຼາຍປີຜ່ານໄປ, ຢູ່ກິນນຳຫອນໆເປັນຜູ້ລ້ຽງດູໃນແຕ່ລະມື້. ຝູງຫອນຂຶ້ນເທິງໜ້າດິນ ເພື່ອຊອກເອົາອາຫານ ຢູ່ໃນໄຮ່ໃນສວນຂອງມະນຸດປູກໄວ້, ເອົາເມືອໃຫ້ອະເບີນກິນເຜືອກ, ມັນດ້າງ, ມັນຕົ້ນ ແລະ ມັນປ່າອີກດ້ວຍ. ໃນເມື່ອກິນມັນກິນເຜືອກໝົດແລ້ວ, ຫອນໂຕນັ້ນຂຶ້ນໄປເອົາອີກ, ກໍ່ໄດ້ຍິນສຽງຮ້ອງວ່າ ເສຍດາຍມັນເຜືອກຂອງຂ້ອຍເດ ຫອນມາກິນໝົດແລ້ວ, ຖ້າວ່າອະເບີນຍັງຢູ່, ຫອນຈະບໍ່ມາເອົາມັນເຜືອກຂອງຂ້ອຍໄດ້ດອກ. ຫອນໂຕນັ້ນໄດ້ຍິນສຽງໄຫ້ຫາອະເບີນ (ພາສາກະຕູວ່າ ຍົມຊູອະເບີນ), ຫອນເວົ້າວ່າ ໄດ້ຍິນສຽງແມ່ຍິງມາຫາເຈົ້າ, ອອກຊື່ຂອງເຈົ້າວ່າອະເບີນ ! ອະເບີນເອີຍ! ຖ້າວ່າເຈົ້າຍັງຢູ່ນຳຂ້ອຍຫອນຈະບໍ່ມາກິນເຜືອກມັນຂອງຂ້ອຍໄດ້ຈັກທິວດອກ.

ໃນເດືອນຕໍ່ມາ ອະເບີນເວົ້ານຳຫອນວ່າ ພວກເຈົ້າກັດເອົາຕົ້ນປານມາໃຫ້ຂ້ອຍ, ຫອນກໍ່

ກັດເອົາຕົ້ນປານ, ອະເບີນເຮັດເຊືອກໄດ້ແລ້ວ, ກໍ່ມັດທອນທຸກຕົວແລ້ວບອກທອນພາຂ້ອຍຂຶ້ນເທິງໜ້າດິນເບິ່ງດູ, ທອນກໍ່ລາກອະເບີນຂຶ້ນ, ໃນເມື່ອຂຶ້ນເທິງໜ້າດິນແລ້ວ ອະເບີນກໍ່ຂ້າທອນເຈັດໂຕໝົດແລ້ວ ເພື່ອແກ້ແຄ້ນແທນຄືນ ທີ່ພວກທອນມາກິນມັນກິນເຜືອກຂອງເມຍ. ຫຼັງຈາກນັ້ນ ແລ້ວກັບເມືອຫາເມຍຢູ່ບ້ານເວົ້າວ່າຕົນເອງໄດ້ຂ້າທອນໝົດແລ້ວ ນັບຕັ້ງແຕ່ນັ້ນມາ ພໍ່ແມ່ຂອງອາບັດມອບລູກສາວໃຫ້ອະເບີນແທ້ຈິງ ອະເບີນກັບອາບັດກໍ່ດຳລົງຊີວິດຢູ່ກັບຄອບຄົວຕະຫຼອດຊີວິດ.

## 11.2 ເມຍຈາກເມືອງຟ້າ (ອິດຽລເມືອງບາງ)

ເລື່ອງກ່ຽວກັບໂລກກໍ່ເປັນເລື່ອງທີ່ຫຼາກຫຼາຍ ທີ່ພົບພໍ້ກັນໃນຊີວິດຂອງເຂົາເຈົ້າ ໃນເມື່ອກ່ອນ ການພົວພັນກັນໃນຊີວິດປະຈຳວັນຂອງສາມໂລກຢ່າງໃກ້ຊິດກັນ ເຮັດໃຫ້ຄົນຮູ້ຫຼາຍເລື່ອງໃນຊີວິດຂອງໂລກ ເລື່ອງລາວທີ່ຄົນປະສົບພົບພໍ້ນັ້ນໄດ້ກັບກາຍເປັນວັດທະນະທຳຂອງອະດີດຂອງຄົນບູຮານ, ຊີວິດມາຈາກຊີວິດ, ຊີວິດເປັນຜູ້ສ້າງເລື່ອງ, ຊີວິດເປັນຜູ້ສ້າງປະຫວັດສາດໃຫ້ແກ່ຄົນຮຸ່ນຫຼັງ.

ໂລກແຜ່ນດິນກັບໂລກແຜ່ນຟ້າ ມັນບໍ່ໄກກັນຫຼາຍຄືດຽວນີ້, ເຂົາເຈົ້າທ່ຽວໄປມາຫາກັນຢ່າງສະບາຍຂຶ້ນໆລົງໆເປັນປົກກະຕິ, ຢູ່ເທິງເມືອງຟ້າກໍ່ມີພີ່ນ້ອງມີປູ່ຍ່າ, ຢູ່ເມືອງແຜ່ນດິນກໍ່ມີພີ່ນ້ອງມີປູ່ຍ່າທັງສອງໂລກມີເຊື້ອສາຍອ້າຍນ້ອງນຳກັນ. ການໄປມາຫາສູ່ກັນເປັນເລື່ອງຂອງທຳມະດາ ບໍ່ມີຫຍັງຈະແປກປະຫຼາດ, ບໍ່ໄດ້ເສຍເງິນຄ່າຫຍັງໃນການຂຶ້ນສະຫວັນໃນຍຸກນັ້ນຢ່າງງ່າຍດາຍ, ການຂຶ້ນໄປຫາໂລກເມືອງແຜ່ນຟ້າໃຊ້ເວລາສອງສາມວັນກໍ່ຮອດແລ້ວ ບ້ານເມືອງຂອງມະນຸດເມືອງແຜ່ນຟ້າມີສອງຊະນິດຄົນ, ມະນຸດຊະນິດໜຶ່ງມີຮູດັງປິ່ນຂຶ້ນເທິງ, ມະນຸດພວກນີ້ບໍ່ມັກລົງສູ່ພື້ນໂລກ, ເຂົາເຈົ້າໜ້າອາຍ, ຍ້ອນຮູດັງປິ່ນຂຶ້ນເທິງ, ເປັນມະນຸດທີ່ແຕກຕ່າງກັບມະນຸດຢູ່ພື້ນໂລກ. ມະນຸດຊະນິດທີ່ສອງເປັນຄືກັນກັບມະນຸດຢູ່ແຜ່ນດິນເຮົາ.

ເລື່ອງລະບຽບການ, ການຂຶ້ນສະຫວັນ, ຂຶ້ນເທິງເມືອງຟ້າ, ບໍ່ໃຫ້ເງີຍຫົວຂຶ້ນເບິ່ງເສັ້ນທາງທີ່ໄຕ່ຂຶ້ນຢ່າງເດັດຂາດ, ນາງແນະນຳເລື່ອງການໄປມາ ການຂຶ້ນລົງລະຫວ່າງສອງໂລກ, ໂລກແຜ່ນດິນເປັນໂລກຂອງມວນມະນຸດອາໄສຢູ່ ເພື່ອບຸກເບີກຊີວິດຂອງມະນຸດທັງຫຼາຍ. ໂລກແຜ່ນຟ້າເປັນໂລກຂອງເຈົ້າເທວະດາ, ເຈົ້າພະຍາອິນ, ພະຍາແຖນ, ພວກມະນຸດທີ່ແຕກຕ່າງກັບມະນຸດຢູ່ພື້ນໂລກ.

ຍ້ອນສອງໂລກ, ໂລກເທິງກັບໂລກລຸ່ມ ມີການພົວພັນກັນເຮັດໃຫ້ຜູ້ບ່າວຢູ່ແຜ່ນດິນໄດ້ສ້າງຄວາມຮັກມັກກັບຜູ້ສາວເທິງແຜ່ນຟ້າ. ທັງສອງຄົນນີ້ຮັກແພງກັນຫຼາຍປີມາແລ້ວ, ຜູ້ສາວເມືອງຟ້າຈຶ່ງໂອ້ລົມກັບຜູ້ບ່າວແຜ່ນດິນວ່າ ຖ້າເຈົ້າມັກຮັກຂ້ອຍແທ້, ຂ້ອຍຈະພາເຈົ້າຂຶ້ນເມືອງສະຫວັນຊັ້ນຟ້າພຸ້ນ, ພໍ່ແມ່ຂອງຂ້ອຍເຂົາເຈົ້າຢູ່ເທິງພຸ້ນໃຫ້ເຈົ້າຂຶ້ນເມືອຖາມພໍ່ແມ່ຂອງຂ້ອຍສາກ່ອນ, ຖ້າວ່າພໍ່ແມ່ເຫັນດີພວກເຮົາຈຶ່ງສາມາດເອົາກັນໄດ້. ນາງສາວຄົນນັ້ນພາຜູ້ບ່າວຂຶ້ນໄປພົບພໍ່ແມ່ຂອງນາງ, ໃນເມື່ອໄປເຖິງໂລກເມືອງແຜ່ນຟ້າແລ້ວ ກໍ່ຖືວ່າຮອດຖິ່ນກຳເນີດຂອງນາງແລ້ວ.

ນາງເມືອງຟ້າເປັນຜູ້ພາຜູ້ບ່າວຄົນກະຕູເຂົ້າພົບຄາລະວະພໍ່ແມ່ຂອງນາງ, ນາງຟ້າສະເໜີໃຫ້ພໍ່ແມ່ຮູ້ຈັກຕົນເອງມັກຮັກກັບຜູ້ບ່າວຄົນກະຕູ ທີ່ຢູ່ຜືນໂລກໃຫ້ພໍ່ແມ່ຟັງ ແລະຮູ້ຈັກນຳ. ນາງເວົ້ານຳແມ່ວ່າຕົນເອງໄດ້ມັກຮັກກັບຜູ້ບ່າວຄົນນີ້ດົນນານພໍສົມຄວນແລ້ວ, ນັບຕັ້ງແຕ່ຕົນເອງໄດ້ສະເດັດລົງສູ່ຜືນໂລກກໍ່ມີການພົວພັນກັບຜູ້ບ່າວຄົນນີ້ ເປັນການຊ່ອຍເຫຼືອກັນຮັກແພງກັນຕະຫຼອດມາ ເຖິງວ່າຈະໄກກັນມະຫາໂລກແຜ່ນຟ້າ ກັບມະຫາໂລກແຜ່ນດິນກໍ່ຕາມ ແຕ່ຄວາມຮັກຂອງບ່າວສາວມັນບໍ່ໄກກັນດອກ, ນາງເວົ້າໃຫ້ແມ່ຟັງ, ໃຫ້ແມ່ຮັບຮູ້ຄວາມເປັນມາຂອງຄວາມຮັກຂອງໂລກມະນຸດຢູ່ເມືອງແຜ່ນດິນ, ແມ່ຕອບກັບລູກສາວວ່າໄດ້ແລ້ວລູກເອີຍ ! ໃຫ້ລູກພາອ້າຍຂອງເຈົ້າໄປພັກຜ່ອນສາກ່ອນ, ພວກເຈົ້າເດີນທາງຈາກຜືນໂລກມາເທິງເຖິງໂລກແຜ່ນຟ້າມັນບໍ່ແມ່ນເລື່ອງທຳມະດາດອກ, ມື້ອື່ນແມ່ຈະເວົ້າໃຫ້ທັງສອງຟັງເລື່ອງຂອງພວກເຈົ້າເອົາກັນມັນບໍ່ຍາກດອກ. ນາງຟັງແມ່ເວົ້າວ່າໃຫ້ເອົາກັນ, ນາງຟ້າກໍ່ດີໃຈຫຼາຍແລ້ວນາງຟ້າພາຜູ້ຊາຍຄົນກະຕູເຂົ້າເຮືອນພັກຜ່ອນຢ່າງສະບາຍ.

ຕອນເຊົ້າວັນຕໍ່ມາ ແມ່ຂອງນາງຟ້າໄດ້ໂອ້ລົມລູກສາວຂອງຕົນເອງ ກັບຜູ້ບ່າວຄົນກະຕູນັ້ນວ່າ ຖ້າພວກເຈົ້າເອົາກັນແລ້ວ ພວກເຈົ້າຈະຢູ່ໂລກເມືອງຟ້າບໍ? ຫຼືວ່າພວກເຈົ້າຈະຢູ່ກັບໂລກແຜ່ນດິນ? ທັງສອງຄົນຕອບວ່າພວກເຮົາຈະຢູ່ໂລກແຜ່ນດິນເໝາະສົມກວ່າ. ແມ່ນາງຟ້າເວົ້າວ່າພວກເຈົ້າຈະຢູ່ໃສແມ່ບໍ່ຫ້າມດອກ. ແມ່ນາງຟ້າເວົ້ານຳລູກເຂີຍວ່າ: ແມ່ບໍ່ເອົາຄ່າດອງບໍ່ເອົາຄ່າຫົວລູກສາວດອກ, ແມ່ຢາກໄດ້ສິ່ງໜຶ່ງ ເພື່ອເປັນການລະນຶກບຸນຄຸນທີ່ແມ່ລ້ຽງນາງຟ້າມາຈົນໃຫຍ່, ຢາກໃຫ້ລູກເຮັດໂລງຫີນໃຫ້ແມ່ເທົ່ານັ້ນກໍ່ພໍແລ້ວ ແມ່ຕາຍກໍ່ຫຼັບຕາແລ້ວ (ພາສາກະຕູວ່າຕີຣາງພາລ້ອໍ) ເຮັດແລ້ວໃຫ້ເອົາຂຶ້ນໄປຢູ່ເທິງໂລກເມືອງສະຫວັນ. ຜູ້ຊາຍຄົນກະຕູຄົນນັ້ນງຶກຫົວສະແດງຄວາມເຫັນດີຕາມຄວາມສະເໜີຂອງແມ່ເຖົ້າຢາກໄດ້. ຫຼັງຈາກເວົ້າກັບແມ່ນາງຟ້າສຳເລັດເສັດສິ້ນແລ້ວ ທັງສອງຄົນກໍ່ສະເດັດລົງສູ່ຜືນໂລກຢ່າງປອດໄພ.

ລາວອອກຈາກບ້ານໄປຫາກ້ອນຫີນຍາວປະມານສອງແມັດ ໃນເມື່ອຊອກຫາກ້ອນຫີນໄດ້ແລ້ວ ຊາຍຄົນກະຕູກໍ່ເລີ່ມຕົ້ນຖາກກ້ອນຫີນກ້ອນນັ້ນໃຫ້ເປັນຮູບໂລງສາກ່ອນ ເປັນຮູບມົນ

ຍາວ ຫຼັງຈາກຖາກຮູບໂລງແລ້ວ ເຈາະປາກຮູໂລງຕາມຮູບໂລກ, ປາກໂລງເຮັດແປ, ພື້ນໂລງກົມມົນ, ຫົວໂລງທັງສອງມີໃບຫູໂລງ, ເຮັດຄືຫົວນົກກົກນົກແກງ, ແຕ່ເຮັດຫົວແປຕັດທັງສອງເບື້ອງ, ເຮັດໃບຫູເບື້ອງລະສອງຫູ, ສົ້ນກັບກົກໃບຫູທັງສອງເບື້ອງ ເຈາະເຮັດຮູເພື່ອສອດໄມ້ຫາມ. ລາວເຮັດແມ່ໂລງແລ້ວເຮັດໂຕຜູ້ໂລງ, ເຮັດງວມປາກໂລງ, ສ່ວນສອງສົ້ນໂຕຜູ້ໂລງເຮັດໃຫ້ມີໃບຫູເໝືອນກັນກັບໃບຫູໂຕແມ່ຂອງໂລງ, ກົກໃບຫູທັງສອງເບື້ອງ, ເຈາະຮູຄືກັນເຈາະຮູຢູ່ໃບຫູໂຕແມ່, ສອງສົ້ນໂລງມີສາມໃບຫູຢ່າງສວຍງາມ.

ຜູ້ບ່າວຄົນກະຕູເອົາໂລງສິບຂຶ້ນເມືອເມືອງສະຫວັນ, ເພື່ອໃຫ້ແມ່ເຖົ້າແມ່ນາຍເບິ່ງ ແລະ ຕິຕຽນໂລງບ່ອນໃດບໍ່ທັນງາມບໍ່ທັນຄັກແນ່ ໃຫ້ແມ່ນາຍຕິໂລດ. ແມ່ນາຍເຫັນບໍ່ທັນຄົບຖ້ວນ ການຕົບແຕ່ງຢູ່ບ່ອນໃດ? ລາວເອົາໂລງຫີນຂຶ້ນເມືອຮອດເຖິງແມ່ນາຍແລ້ວ, ລາວມອບໂລງຫີນໃຫ້ແມ່ນາຍເບິ່ງທັນທີໂລດ. ແມ່ນາຍດີໃຈຫຼາຍ ເຫັນຄວາມສາມາດທີ່ມີລັກສະນະພິເສດຂອງລູກເຂີຍທີ່ສາມາດຖາກຫີນເຮັດໂລງສິບຫີນເປັນເລື່ອງແປກປະຫຼາດໃຈຫຼາຍ. ແມ່ນາຍເບິ່ງໂລງຫີນທຸກບ່ອນຢ່າງລະອຽດລະອໍແທ້ໆ, ແມ່ນາຍເວົ້ານຳລູກເຂີຍວ່າໂລງຫີນນີ້ດີຫຼາຍ, ແຕ່ວ່າແມ່ຢາກໃຫ້ລູກຕົບແຕ່ງສາມບ່ອນຄື: ໜຶ່ງຫຼັງໂຕຜູ້ຂອງໂລງຕ້ອງເຮັດເປັນບັກຄືຫຼັງກະທ້າງ, ສອງປີກງວມໂລງຫີນນັ້ນຕ້ອງໃສ່ຕີນສອງຢ່າງຄືເຂົາຄວາຍ ແລະເຮັດເຕົ້ານົມຂອງຜູ້ສາວກໍ່ຖືວ່າຄົບຖ້ວນແລ້ວ. ຫຼັງຈາກໄດ້ຍິນແມ່ນາຍບອກ ລາວເອົາໂລງຫີນນັ້ນລົງເມືອສູ່ພື້ນໂລກ. ລາວຕົບແຕ່ງຮຽບຮ້ອຍຕາມແມ່ນາຍແນະນຳຢ່າງຄົບຖ້ວນ, ແຕ່ວ່າມີທ້າວໜຶ່ງບໍ່ເຕັມໃຈຂຶ້ນໄປສະຫວັນ, ລາວຂຶ້ນຮອດເຄິ່ງກາງທາງຢູ່ໃນລະຫວ່າງກາງຫາວລາວເງີຍໜ້າເບິ່ງທາງເທິງຟ້າເຮັດໃຫ້ສາຍພົວພັນລະຫວ່າງ ພື້ນໂລກກັບສະຫວັນເມືອງຟ້າຖືກຕັດຂາດຢ່າງສິ້ນເຊີງ ຈົນເທົ່າທຸກມື້ນີ້.

ໂລງຫີນ ທີ່ເອົາຂຶ້ນເມືອເມືອງສະຫວັນຍັງຄ້າງຢູ່ພື້ນໂລກຂອງມະນຸດ ຢູ່ທ້ອງຖິ່ນແຫ່ງໜຶ່ງຢູ່ ຍອດເຊກອງ, ໂລງຫີນເປັນສີແດງເໝືອນຄຳ, ປະໄວ້ເທິງຈອມພູ, ລຸ່ມນ້ຳເອີ້ນວັງປະແຊ. ຄົນກະຕູໄປໃກ້ໂລງຫີນບໍ່ໄດ້. ເຂົາເຈົ້າຢາກຂຶ້ນເບິ່ງ (ຕີຮາງອະມໍພາລ້ອໍ) ຜີຟ້າຜີແຖນຫ້ວງ, ເກີດມີຝົນຕົກຟ້າລົມ, ໂລງຫີນໜ່ວຍນັ້ນອາດຈະເປັນຄຳ.

## 11.3 ຮອຍຈາລຶກ
## (ດອກລຳ)

ເລື່ອງກ່ຽວກັບຊີວິດຂອງໂລກ ໄດ້ລ່ວງກາຍໄປປະມານຕື້ລ້ານປີ ຫຼືສິບພັນລ້ານປີທີ່ຄົນຈຳນວນໜຶ່ງຢາກຄິດທວນຄືນຫຼັງ, ຍ້ອນບັນຫາທີ່ຍາວໄກຂອງປະຫວັດສາດໂລກທີ່ມະນຸດຈະບໍ່

ສາມາດຫຼຽວຫຼັງຈະເຫັນມັນ, ຍ້ອນວ່າໂລກມີການປ່ຽນແປງທີ່ມະນຸດອາດຈະເຫັນບາງຢ່າງຄື ການປ່ຽນແປງທາງທຳມະຊາດ, ແມ່ນ້ຳລຳເຊ, ຫ້ວຍນ້ຳລຳທານຖືກບຶກແຫ້ງຫຼາຍ, ປ່າໄມ້ຖືກທຳລາຍໃນຫຼາຍສາເຫດ ຍ້ອນມະນຸດເຫັນແກ່ຕົວໃນຊີວິດປະຈຳວັນ. ການບຸກເບີກເຮັດພື້ນນາ, ຄວາມຕ້ອງການຂອງຊີວິດ, ຈາກຄວາມຈຳເປັນການລ້ຽງຊີບປະຈຳວັນ, ຄວາມຈຳເປັນຕ້ອງເຮັດໄຮ່ຖາງປ່າມາຈາກນິໄສຄົນເຮັດ ໄຮ່ ນັບແຕ່ມື້ມີໜ້າມະນຸດຢູ່ໂລກ. ມະນຸດຢາກມີຄວາມສີວິໄລຢູ່ໃນສັງຄົມ, ເຂົາເຈົ້າຕ້ອງຕັດໄມ້ເອົາໄປຂາຍໃນແຕ່ລະປີຢ່າງຫຼວງຫຼາຍ. ມະນຸດຍັງຕັດໄມ້ເຮັດເຮືອນຊານບ້ານຊ່ອງ ເສຍໄປຕາມຈຳນວນພົນລະເມືອງ, ເປັນບັນຫາໜຶ່ງທີ່ມະນຸດບໍ່ເຈດຕະນາເຮັດແຕ່ມີຄວາມຈຳເປັນ.

ໃນເມື່ອມີມະນຸດຕ່າງແດນກັບມະນຸດຢູ່ແຜ່ນດິນຢູ່ຮ່ວມກັນ ໃນພາວະໂລກຂອງພວກເຮົາຍັງປຽກຍັງອ່ອນສິ່ງຂອງວັດຖຸທຸກຢ່າງ, ປຽບເໝືອນວ່າ ເທພື້ນເຮືອນໃໝ່, ການປູຢາງໃໝ່ ຖ້າວ່າຄົນໄປຢຽບຖືກຊີມັງທີ່ເທໄວ້ນັ້ນ ມັນຈະເຫັນມີຮອຍຕີນ. ແຕ່ວ່າຄົນສະໄໝກ່ອນນັ້ນ ເຂົາເຈົ້າຢຽບພະລານຫີນລຸບລົງ ເກີດມີຮອຍຕີນໃຫຍ່ຍາວກວ່າຮອຍຕີນມະນຸດທຳມະດາ. ມະນຸດໃນໂລກຕັ້ງຊື່ວ່າ ຮອຍຕີນເທວະດາ, ຮອຍຕີນພະບາດ, ຮອຍຕີນພະເຈົ້າ, ຮອຍຕີນມະນຸດຄົນບູຮານ, ຮອຍຕີນທີ່ມະນຸດມັກຈະເຫັນຢູ່ພະລານຫີນໃນປະຈຸບັນ ກ້ອນຫີນສະໄໝນັ້ນມັນຍັງອ່ອນຫຼາຍ, ກ້ອນຫີນບໍ່ທັນແຂງໃນເມື່ອມີຜູ້ຢຽບມັນກໍ່ຈະເຫັນຮອຍຕີນໂລດ.

ຮອຍຕີນຄົນກະຕູເຫັນ ແລະ ນັບຖື, ເຊື່ອຖື, ບູຊາໄວ້ແມ່ນຮອຍຕີນຢູ່ຍອດເຊໂລນ (ເຊໂຕຣລ) ຢູ່ພະລານຫີນແຄມນ້ຳຢູ່ວັງນ້ຳປະແຊນັ້ນເອງ. ເຈົ້າເທວະດາລົງມາຢູ່ນຳຄົນກະຕູ ແລ້ວເຈົ້າເທວະດາສະເດັດເມືອໂລກເມືອແຜ່ນຟ້າ, ເວົ້າເລື່ອງເທວະດາເປັນມະນຸດທີ່ໃຫຍ່ ກວ່າໝູ່ຫຼາຍເທົ່າຂອງຄົນປະ ຈຸບັນ, ເທວະດາກ້າວກວ້າງຢູ່ໃນໄລຍະສາມຫຼັກກິໂລແມັດ, ເຫັນຢູ່ວັງປະແຊທີ່ມີຮອຍຕີນເທວະດາ, ເຫັນເທວະດາມາຢຽບຢູ່ເທິງພູປະແຊ ເປັນຮອຍຕີນເບື້ອງຂວາ ຮອຍຕີນເບື້ອງຊ້າຍຢຽບຢູ່ພະລານຫີນແຄມນ້ຳເຊໂຕຣລ, ຮອຍຕີນເທວະດາຈາລຶກໄວ້ໃຫ້ແກ່ຄົນກະຕູໃນຍຸກນັ້ນ ຊຶ່ງມີລວງຍາວປະມານສອກຄົນ, ກວ້າງປະມານສອງຝາຕີນຄົນເຮົາ. ຮອຍຕີນເທວະດາແມ່ນ ເປັນຮອຍຕີນທີ່ເທວະດາຈາລຶກໄວ້ໃຫ້ຄົນກະຕູເຫັນ ເພື່ອເຊື່ອຖືຊື່ສຽງຂອງເຈົ້າເທວະດາ ແລະ ເຈົ້າເທວະດາເປັນມະນຸດທີ່ໃຫຍ່ສູງ, ການດຳລົງຊີວິດຢູ່ເທິງໂລກແຜ່ນຟ້າ, ເຈົ້າເທວະດາເປັນມະນຸດປະຖົມມະເລີກທີ່ມີຈິດວິນຍານຕ່າງກັບມະນຸດທຳມະ ດາຂອງພວກເຮົາ, ເຈົ້າເທວະດາເດີນທາງໄປມາດ້ວຍວິທີສາມແບບຄື: ແບບຍ່າງຂອງມະນຸດຄົນເຮົາ, ເຈົ້າເທວະດາສະເດັດລົງສູ່ພື້ນໂລກ ເພື່ອເບິ່ງຄວາມທຸກສຸກຂອງມະນຸດ, ເທວະດາ ຍ່າງແບບເຫາະເຫີນຕາມກະແສສາຍລົມພັດໄປ, ເຈົ້າເທວະດາຍ່າງໄປແບບຈິດວິນຍານ ຂອງເຈົ້າເທວະດາຢູ່ເມືອງຟ້າ.

ເຈົ້າເທວະດາຫາຍຕົວໄປທັງຮ່າງກາຍ ແລະ ຈິດວິນຍານຈາກໂລກມະນຸດຂອງພວກເຮົາໄດ້ຫຼາຍໆປີມາແລ້ວ. ເຈົ້າເທວະດາເມືອງແຜ່ນຟ້າ, ເຈົ້າເທວະດາເມືອງໂລກສະຫວັນ, ໄດ້ບຸກເບີກເສັ້ນທາງໃຫ້ແກ່ມະນຸດມີລະບົບຄວາມເຊື່ອ ໃຫ້ມະນຸດແຕ່ລະຍຸກຮູ້, ມະນຸດຢູ່ໃນໂລກແຜ່ນດິນບໍ່ວ່າຊາຍຫຼືຍິງ, ເດັກນ້ອຍເກີດໃໝ່ໃຫຍ່ລຸນໃຜໆ ກໍ່ຮູ້ວ່າເຈົ້າເທວະດາຢູ່ເທິງໂລກເມືອງແຜ່ນຟ້າ, ຄົນກະຕູເຊື່ອວ່າ ນັບຕັ້ງແຕ່ເດືອນສາມມາຫາເດືອນແປດໃນໄລຍະເວລາພວກມະນຸດເມືອງຟ້າ, ໄດ້ ເຮັດບຸນສົນກິນທານຢູ່ເມືອງແຜ່ນຟ້າ, ເຂົາເຈົ້າທິດນໍ້າ, ກິນເຫຼົ້າ ແລະ ຫຼາຍສິ່ງຫຼາຍຢ່າງ ຈຶ່ງເຮັດໃຫ້ໂລກຂອງພວກເຮົາໄດ້ຮັບຄວາມຊຸ່ມເຢັນເປັນສຸກ ເຮັດໃຫ້ຄົນຢູ່ພື້ນໂລກໄດ້ມີໂອກາດເຮັດໄຮ່ໄຖນາຢ່າງສະບາຍ.

## 12.ເກີດແກ່ຊີວິດ
## (ອະມິງແວເລືອງ)

### 12.1 ຕຶກປາ
### (ບະບັຊໂບນອະຊີວ)

ເວົ້າເລື່ອງ ການຫາກິນຕາມສາຍນໍ້າກໍ່ແມ່ນວິທີໜຶ່ງຂອງມະນຸດ ດ້ວຍວິທີຕຶກເບັດເອົາປາຂອງຜູ້ຊາຍຄົນໜຶ່ງ ລາວເປັນຄົນທີ່ມັກຕຶກເບັດເອົາປາມາກິນໃນແຕ່ລະວັນຢ່າງບໍ່ຂາດ, ໃນແຕ່ລະເທື່ອການໄປຕຶກເບັດໄດ້ປາປະມານສິບຊາວໂຕ. ປາທີ່ຕຶກໄດ້ຄື: ປາຂີງ, ປານ້ອມ, ປາສູດ, ປາຈາດ, ປາດຸກ ພໍໄດ້ກິນໃນແຕ່ລະຄາບເຂົ້າ. ຜູ້ຊາຍຄົນນີ້ເປັນຄົນທີ່ດຸໝັ່ນກ່ຽວກັບຕຶກເບັດເປັນພິເສດ. ຕຶກເບັດເປັນວິຊາຫາກິນທີ່ຍາກ ຕ້ອງອາໄສຄວາມອົດທົນ ຄວາມພະຍາຍາມ, ຕ້ອງມີຈິດໃຈພາກພຽນທີ່ສຸດ ຈຶ່ງເຮັດໄດ້ ການຫາປາແບບຕຶກເບັດນີ້, ການຕຶກເບັດນັ້ນຈະຕ້ອງຂຶ້ນງອຍແຕ່ລະໂງ່ນຫີນຫຼາຍໆບ່ອນຈຶ່ງໄດ້ປາເອົາມາກິນ, ລາວຕຶກເບັດແຕ່ເຊົ້າຈົນຮອດຄໍ່າ ຈຶ່ງໄດ້ກັບເມືອບ້ານ.

ມື້ນື້ໜຶ່ງລາວຄິດຢາກໄປຕຶກເບັດຫາປາ ແຕ່ວ່າຍັງຄາເຮັດວຽກເສຍຫຍ້າໄຮ່ຊ່ອຍເມຍ. ສະນັ້ນລາວຈຶ່ງບໍ່ໄດ້ໄປຕຶກເບັດ. ລາວເອົາໃຈໃສ່ເຮັດວຽກໄຮ່ເປັນວຽກສຳຄັນຫຼາຍ ລາວຄິດວ່າເປັນວຽກລ້ຽງປາກລ້ຽງທ້ອງຂອງຕົນເອງ. ຄົນບ້ານນອກຂອກນາ ຕ້ອງເອົາໃຈໃສ່ໄຮ່ເຂົ້າເປືອກ, ເປັນ ຊີວິດຂອງເຂົາເຈົ້າແຕກຕ່າງກັບຊີວິດຄົນໃນເມືອງ, ຄົນໃນເມືອງເອົາໃຈໃສ່ຊີວິດ

ຫຼາຍຢ່າງຕ້ອງຊອກເງິນຄໍາ, ເງິນຕ່າງປະເທດ, ຊອກຫາເຂົ້າສານເຂົ້າເປືອກ, ຊອກຫາປາ ເພື່ອເອົາລົງໄປຂາຍຢູ່ຕະຫຼາດ ຄົນບ້ານ ນອກຂອກນາ ຫາປາເພື່ອປາກເພື່ອທ້ອງເທົ່ານັ້ນ.

ລາວເສຍຫຍ້າແລ້ວ ນອນຫຼັບພໍດີ, ນອນຝັນໃນຍາມກາງຄືນວ່າມີຜູ້ສາວຄົນໜຶ່ງ ມາມັກຮັກກັບລາວ, ລາວເວົ້າກັບຜູ້ສາວຄົນນັ້ນວ່າ: ຂ້ອຍມີເມຍແລ້ວ, ແຕ່ວ່າຜູ້ສາວຄົນນັ້ນຍັງເວົ້າວ່າ : ຂ້ອຍຮັກເຈົ້າຂ້ອຍຢາກຢູ່ນໍາເຈົ້າຕະຫຼອດ. ລາວຕື່ນນອນຈຶ່ງລຸກນັ່ງຄິດວ່າ ຄວາມຝັນນັ້ນຈະໄດ້ຂອງດີ ຫຼືຂອງຮ້າຍ. ລາວຄິດດີໃຈຫຼາຍທີ່ຕົນເອງເສຍຫຍ້າໄຮ່ແລ້ວ, ລາວຄິດວ່າຕົນເອງໄປຕຶກປາຕ້ອງໄດ້ປາໃຫຍ່ໂລດ. ຕື່ນເຊົ້າມາລາວອອກຈາກບ້ານຕຶກເບັດຢູ່ນໍ້າເຊແຫ່ງໜຶ່ງ, ລາວເລາະຕຶກເບັດຢູ່ວັງນໍ້າບ່ອນໜຶ່ງ ກໍ່ບໍ່ໄດ້ປາຈັກໂຕ, ລາວອະທິຖານວ່າເຈົ້າວິນຍານເງືອກເອີຍ ! ຊ່ອຍໃຫ້ໂຊກໄດ້ປາໃຫຍ່ ຊ່ອຍໃຫ້ໄດ້ປາເມືອຕ້ອນເມຍຢູ່ບ້ານ. ຫຼັງຈາກເວົ້າສຸດຄວາມແລ້ວ ລາວເຫັນສາຍເບັດຕຶງໄປແລ້ວລາກສາຍໄປ, ມັນດຶງສາຍເບັດຢຸ່ງຍິ່ງໄປ, ໂອ ! ປາໃຫຍ່ກິນເບັດແລ້ວ, ລາວຈັບຄັນເບັດໃຫ້ແໜ້ນແລ້ວ ຈັບສາຍເບັດຈ່ອງໄວ້ເພື່ອເຮັດໃຫ້ປາເມື່ອຍປາກປາຈະບໍ່ດຶງລາກເບັດໄປໄດ້. ລາວຈ່ອງຄັນເບັດເທິງເຕີບດຶງປາບໍ່ຂຶ້ນ, ລາວອາໄສຄວາມພະຍາຍາມ ດຶງເທື່ອລະນ້ອຍເຂົ້າແຄມນໍ້າ. ລາວລາກມາໃກ້ແຄມນໍ້າແລ້ວ ລາກຄືສະບາຍ, ສາຍເບັດກໍ່ເບົາຂຶ້ນ ດຶງຂຶ້ນເທິງໜ້ານໍ້າກໍ່ເຫັນຟູຂຶ້ນໂປ່ໂວ່! ໂປ່ໂວ່! ຂຶ້ນມາຢູ່ແຄມນໍ້າຄິດວ່າປາ, ແຕ່ວ່າເຫັນປາກກວ້າງຫຼາຍ, ລາວດຶງເຂົ້າທ່າແຄມນໍ້າແລ້ວເຫັນໄຫກິນເບັດ ລາວຈັບເອົາລາກຂຶ້ນບົກ.

ຫຼັງຈາກຕຶກປາໄດ້ໄຫ, ລາວຊອກຫາຕົ້ນປໍສາໄປເບືອປາ, ລາວລອກເອົາເປືອກປໍສາໄດ້ສອງເສັ້ນ ແລ້ວມາມັດເຮັດສາຍເປ້ໄຫເມືອບ້ານ. ໃນເວລາເດີນທາງເມືອບ້ານກໍ່ມີແຮ້ງໂຕໜຶ່ງບິນມານໍາຫຼັງລາວ ແຮ້ງບິນມາຈັບປາກໄຫທີ່ລາວເປ້ເມືອ. ໃນໄລຍະໜຶ່ງແຮ້ງເຫັນຫາຍໄປຍາມໃດກໍ່ບໍ່ຮູ້ເມື່ອ ລາວເມືອຮອດບ້ານເອົາໄຫໄປໄວ້ໃນເລົ້າເຂົ້າ ລາວຍ່າງເມືອເຮືອນ, ລາວເວົ້ານໍາເມຍວ່າ ຂ້ອຍຕຶກເບັດມື້ນີ້ໄດ້ປາໃຫຍ່ກິນບໍ່ເປັນ, ເມຍຖາມວ່າປາໃຫຍ່ກິນບໍ່ເປັນຢູ່ໃສ? ຢູ່ເລົ້າເຂົ້າຫັ້ນເດ່? ຫຼັງຈາກນັ້ນ ປະມານສອງສາມເດືອນມາ, ຊາຍຄົນນີ້ເປັນຜີປອບກິນຄົນ, ລາວຊອກຫາກິນແຕ່ເດັກນ້ອຍ, ກິນເດັກນ້ອຍຢູ່ບ້ານໝົດແລ້ວ, ໄປຊອກຫາກິນເດັກນ້ອຍບ້ານອື່ນ. ຄົນຕາຍອຶກກະທຶກ, ຊາວບ້ານຊາວເມືອງເກີດມີສະພາບວຸ້ນວາຍຫຼາຍ, ເຂົາເຈົ້າເອົາໝໍດູມາສ້ໍ, ເຂົາເຈົ້າໝໍເຢົາມາສ່ຽງ ຈຶ່ງຮູ້ຈັກສາຍເຫດການລົ້ມຕາຍ. ຍ້ອນຜູ້ຊາຍຕຶກປາໄດ້ໄຫກິນເຂົາເຈົ້າຈຶ່ງຮູ້ຈັກຊື່ສຽງລາວ. ຫຼັງຈາກນັ້ນ ເຂົາເຈົ້າໄປບອກ, ໄປເວົ້ານໍາເມຍຂອງເພິ່ນ, ເມຍເພິ່ນຖາມວ່າເປັນຫຍັງເຈົ້າຈຶ່ງເປັນຜີປອບແມ່ນບໍ່? ລາວເອງກໍ່ຮັບສາພາບວ່າ ແມ່ນແທ້ຂ້ອຍຢາກດູດກິນເລືອດຄົນ, ຂ້ອຍຢາກກິນຄົນນັບ ຕັ້ງແຕ່ຂ້ອຍໄດ້ໄຫໜ່ວຍນັ້ນມາ ຂ້ອຍມີຈິດວິນຍານແບບນົກ

ແຫຼວແຮ້ງ ມັກຊອກຫາຈັບກິນໄກ່ນ້ອຍ. ໃນເມື່ອຮູ້ຈັກວ່າ ກົກປາຍສາຍເຫດແລ້ວ ເຂົາເຈົ້າຈັດພິທີຂ້າໝູໄກ່ລ້ຽງຜີປອບໄທແລ້ວ ເຂົາເຈົ້າເອົາໄທໄປໄວ້ຢູ່ປ່າດົງແຫ່ງໜຶ່ງ.

ນັບຕັ້ງແຕ່ເຫດການດັ່ງກ່າວ ເປັນຕົ້ນມາຄົນກະຕູສະໄໝກ່ອນ ເລີ່ມຕົ້ນສົງໄສກັນມາວ່າ ບ້ານນີ້ມີຄົນຜີປອບ, ຜີໂພງກິນເລືອດຄົນ, ກິນຕັບຄົນຢ່າງອຶກກະທຶກ. ເຈົ້າສົງໄສບ້ານຂ້ອຍໆ ສົງໄສບ້ານເຈົ້າຕູ່ຫາກັນ ຂ້າກັນທັງແກ້ແຄ້ນກັນ, ເຂົາເຈົ້າໄລ່ໜີໄປຢູ່ປ່າຢູ່ດົງກໍ່ມີ. ບາງເທື່ອຮອດປັບໃໝໃສ່ໂທດ ຄ່າຫົວຜູ້ຕາຍຍ້ອນຜູ້ນັ້ນຜູ້ນີ້ກິນກໍ່ມີ. ຜູ້ຮູ້ຈັກວ່າຜີປອບກິນແມ່ນຜູ້ເປັນໝໍດູໝໍເຢົາເປັນຜູ້ບົ່ງບອກວ່າຜູ້ນັ້ນຜູ້ນີ້, ນັບແຕ່ນັ້ນມາໄດ້ກາຍເປັນຄວາມເຊື່ອຕໍ່ໆກັນມາຮອດຊູ່ມື້ນີ້.

# 12.2 ຜີຫົວກຸດ (ອຽລດຽລເບຣິງ)

ມະນຸດ ຂອງພວກເຮົາເວົ້າເລື່ອງການເອົາຜົວເມຍ ແມ່ນຄວາມປາດຖະໜາຂອງທຳມະຊາດຂອງມະນຸດຈະຕ້ອງມີສອງຊີວິດຂອງຜູ້ຊາຍກັບແມ່ຍິງເປັນຜົວເມຍ. ສອງຄົນເປັນມະນຸດທີ່ສົມບູນ, ອະໄວຍະວະຄົບຖ້ວນ. ມີສະຕິປັນຍາຄົບຖ້ວນ, ມີອຸດົມຄະຕິອັນດຽວກັນ, ມີຄວາມຮັກ, ມີອຸດົມການຂອງຊີວິດສາມາດຄຸ້ມຄອງກັນໄດ້. ຢູ່ຮ່ວມຊີວິດຖືກຕ້ອງຕາມຮີດຄອງປະເພນີຂອງມະນຸດ, ມີຄວາມເຫັນດີເຫັນພ້ອມຈາກຜູ້ປົກຄອງກໍ່ສາມາດແຕ່ງດອງກັນໄດ້. ພາສາທຳມະດາເວົ້າວ່າເອົາຜົວເອົາເມຍ ຜູ້ຊາຍກັບແມ່ຍິງຢູ່ຮ່ວມກັນ ທີ່ພໍ່ແມ່ທັງສອງຝ່າຍຮັບຮູ້ ແລະ ໝົດທຸກຄົນຮ່ວມວັນແຕ່ງດອງ.

ເລື່ອງກ່ຽວກັບຜູ້ຊາຍຄົນນີ້, ລາວເອົາຍິງສາວເປັນເມຍ, ແມ່ນລາວບໍ່ສືບຫາປະຫວັດເລື່ອງອະດີດ ຂອງພໍ່ແມ່ນາງມີຫຍັງ? ຕາມທຳມະດາແລ້ວ ຜູ້ຊາຍຕ້ອງຮູ້ຈັກວ່າຄອບຄົວຂອງຄົນທຸກຫຼືຄົນຮັ່ງ, ຄົນມີຖານະມີຊື່ສຽງໃນສັງຄົມບໍ່? ເຂົາເຈົ້າມີອ້າຍນ້ອງຈັກຄົນ? ແຕ່ລະຄົນນັ້ນສ້າງຄອບຄົວແລ້ວບໍ່? ນອກຈາກນັ້ນ ເຂົາເຈົ້າມີພະຍາດບາດເຢົາອີ່ຫຍັງແດ່? ນອກຈາກນັ້ນຜູ້ຊາຍຕ້ອງເຂົ້າເລິກເລື່ອງນິໄສໃຈຄໍຂອງພໍ່ແມ່ອີກດ້ວຍ. ໃນເມື່ອຮູ້ນິໄສຂອງພໍ່ແມ່ແລ້ວ ກໍ່ຮູ້ຈັກນິໄສຂອງຍິງສາວອີກດ້ວຍ, ແຕ່ວ່າຜູ້ຊາຍເຫັນລາວງາມກໍ່ເອົາມາເປັນເມຍຢ່າງງ່າຍດາຍ.

ເມື່ອເປັນຜົວເມຍກັນແລ້ວ, ຢູ່ນຳກັນຢ່າງມີຄວາມສຸກ, ແຕ່ວ່າຊາວບ້ານ ກໍ່ມີການນິນທາວ່າເມຍຂອງລາວເຄື່ອນໄຫວບໍ່ຈະແຈ້ງ, ເວົ້ານຳຜູ້ເປັນຜົວວ່າ ເມຍເຈົ້າຫວານນອກຂົມໃນ. ແຕ່ວ່າບໍ່ເຊື່ອຄວາມເວົ້າຂອງຄົນອື່ນດອກ. ລາວເວົ້າກັບຄົນອື່ນວ່າ ເມຍຂ້ອຍເປັນຄົນດີຫຼາຍ ລາວ

ນອນນຳຂ້ອຍທຸກຄືນ, ເມຍຂອງຂ້ອຍຢູ່ໃນອ້ອມອົກຂອງຂ້ອຍ, ພວກເຈົ້າໃສ່ຮ້າຍປ້າຍສີເມຍຂອງຂ້ອຍ, ພວກເຈົ້າຫາເລື່ອງໃສ່ຄອບຄົວ ຜົວເມຍຂອງພວກຂ້ອຍແຕກແຍກກັນ? ລາວເຊື່ອເມຍຢ່າງເລິກເຊິ່ງ.

ເຂົາເຈົ້າຕິດຕາມການໄປມາຂອງນາງໃນຍາມກາງຄືນ ເຫັນວ່າຜິດປົກກະຕິຫຼາຍເດີກມາແລ້ວມີແສງຮຸ່ງອອກຈາກເຮືອນລາວໄປ ໃນເມື່ອໃກ້ຊິແຈ້ງກໍ່ເຫັນແສງຮຸ່ງນັ້ນເຂົ້າມາໃນເຮືອນຂອງລາວຢ່າງແປກໃຈຫຼາຍ. ຜ່ານການຕິດຕາມຫຼາຍເດືອນກໍ່ເຫັນນາງຄືນນັ້ນເປັນຜີໂພງຫົວກຸດສ່ວນຮ່າງຄີງ ຍັງນອນກັບຜົວຢູ່. ແຕ່ຫົວຂອງສາວອອກຫາກິນຕາມກ້ອງຕະລ່າງ. ຖ້ານາງອອກເຮືອນໝົດຮ່າງຄີງໄປ ແຕ່ວ່ານາງຕ້ອງເອົາດົ້ນຟືນທ່ອນໃຫຍ່ມາໃຫ້ຜົວນອນກອດ, ເພື່ອບໍ່ໃຫ້ຜົວສົງໄສຕື່ນເອງເປັນຜີໂພງ. ຄົນເປັນຜີໂພງແມ່ນຄົນສວຍງາມຜິວໜັງແດງເຫຼືອງ ອາດຈະເປັນຜີໂພງກໍ່ເປັນໄດ້. ຄົນເປັນຜີໂພງມັນອອກແສງຈາກສອງຮູດັງ, ຈະເຫັນແສງອອກມາເໝືອນຫົວທຽນໄຟສາຍ. ຊາວບ້ານບອກນຳຜົວລາວວ່າ ເມຍຂອງເຈົ້າມັກອອກໄປກາງຄືນໃດ? ລາວບໍ່ເຊື່ອລາວວ່າ ເມຍນອນນຳຂ້ອຍຕະຫຼອດຄືນຢູ່.

ໃນເມື່ອຄົນເວົ້າຫຼາຍແລ້ວ ຄົນອິດສາເມຍຂອງລາວເປັນຜີປອບຜີໂພງ ຊອກຫາຈັບກິນຂຽດໃນຍາມກາງຄືນ, ລາວນອນຄິດນັ່ງຄິດວ່າ ອາດຈະແມ່ນຄືຄົນເຂົາເວົ້າບໍ່? ບອກໃຫ້ລາວທົດລອງເບິ່ງໃຫ້ເອົາຂຽດມາປີ້ງແຫ້ງແລ້ວໄປຍັດໃສ່ຖົງສົ້ງຖົງເສື້ອໄວ້ແລ້ວນັ່ງຫຼິ້ນນຳລາວ ຖ້າເຫັນລາວຫາວນອນວັບໆແມ່ນຍິງສາວເປັນຜີໂພງແທ້ ບອກລາວເຮັດແຕ່ວ່າລາວບໍ່ຍອມເຮັດ. ໃນເດືອນຕໍ່ມາລາວຕິດຕາມດ້ວຍວິທີເຮັດຕົນອນຫຼັບແລ້ວ ເດີກມາເຫັນເມຍເອົາດົ້ນຟືນປະຽງກັບບ່ອນນອນ ຕອນເມຍອອກໄປຜົວກໍ່ເຫັນແສງຮຸ່ງແທ້, ລາວຮູ້ວ່າຄົນຊາວບ້ານເວົ້າແມ່ນມີເຫດຜົນແທ້, ລາວຕິດຕາມຕໍ່ອີກ ລາວເຫັນເມຍອອກເຮືອນໄປມີແຕ່ຫົວ ສ່ວນໂຕຂອງນາງຍັງນອນຢູ່ບ່ອນຄໍແດງຈຶ່ງຄື່ງຢູ່, ລາວຕັ້ງໃຈຕິດຕາມຄັກໆ ລາວເຫັນຫົວຂອງເມຍອອກໄປແລ້ວລາວເອົາຂີ້ເທົ່າມາໂຮຍໃສ່ຢູ່ບ່ອນຄໍຂາດ ໃກ້ຊິແຈ້ງຫົວຜີໂພງກໍ່ບິນມາມີສຽງດັງວີໆ ເວລານີ້ຫົວກັບຄີງບໍ່ສາມາດຕິດເຂົ້າກັນໄດ້, ໃນທີ່ສຸດຫົວຂອງນາງຕົກລົງຕາຍ ແລ້ວຮ່າງກາຍກໍ່ຕາຍຄືກັນ ຫຼັງຈາກນາງຕາຍແລ້ວ ລາວຈຶ່ງບອກຊາວບ້ານມາເບິ່ງເມຍຂອງລາວແລ້ວລາວຂໍໂທດນຳຊາວບ້ານ ໃນທີ່ຜ່ານມາແມ່ນຄວາມຈິງແທ້ ເຂົາເຈົ້າມີນ້ຳໃຈຮັກແພງ ແລະ ຊ່ອຍລາວຢ່າງຫຼົ້ນເຫຼືອອີກດ້ວຍ.

# 13 ຄົນບູຮານ
# (ຄູຍອະໂຮນ)
## 13.1 ຕະຣິຕະຣາຍ
## (ຕະຣິຕະຣາຍ)

ເລື່ອງກ່ຽວກັບ ຄອບຄົວຕະຣິຕະຣາຍເປັນລູກຊາຍທັງສອງຄົນ, ພໍ່ແມ່ຂອງທ້າວຕາຣິຕາຣາຍ ເປັນຊາວໄຮ່ເຮັດໄຮ່ຕາມລຳນ້ຳແຫ່ງໜຶ່ງ ຜູ້ເປັນພໍ່ມັກເຈາະກົກຕາວມາເຮັດເປັນເຫຼົ້າດື່ມໃນແຕ່ລະມື້. ສ່ວນລູກຊາຍກົກຊື່ທ້າວຕະຣິ, ລູກຊາຍຫຼ້າຊື່ທ້າວຕະຣາຍ ເຂົາເຈົ້າຢູ່ຮ່ວມກັນສີ່ຄົນໃນຄອບຄົວຢ່າງມີຄວາມສຸກ, ການດຳລົງຊີວິດຕາມທຳມະຊາດຫາລ້ຽງຊີບໃນແຕ່ລະວັນ. ພໍ່ແມ່ຕັ້ງອົກຕັ້ງໃຈລ້ຽງລູກ ໃຫ້ເຕີບໃຫຍ່ພຽງພໍ່ພຽງແມ່ ແມ່ນໃຊ້ເວລາຫຼາຍປີຈຶ່ງເປັນຄົນ.

ມີມື້ໜຶ່ງ ພໍ່ແມ່ຂອງຕະຣິຕະຣາຍອອກຈາກບ້ານໄປ ຫາກິນຕາມລຳແມ່ນ້ຳແຫ່ງໜຶ່ງ. ຫຼັງຈາກຫາກິນແລ້ວ ເຂົາເຈົ້າພາກັນເມືອເອົາເຫຼົ້າຕາວຢູ່ແຄມນ້ຳ, ແຕ່ໂຊກບໍ່ດີເຂົາເຈົ້າເຫັນຜີຍັກຍ່າງເລາະນ້ຳມາ, ຜີຍັກພາຍໜ້າມາພ້ອມເມຍເຫັນໂຕອັນຕະລາຍ ກໍ່ເລີຍພາກັນຂຶ້ນລີ້ຢູ່ເທິງຕົ້ນຕາວຢ່າງໄວ. ແຕ່ວ່າສາຍຕາອັນແຫຼມຄົມຂອງຍັກກໍ່ພໍດີເຫັນຜົວເມຍຄືກັນ, ໃນເມື່ອເຫັນແລ້ວຍັກກໍ່ຟ້າວຍ່າງໄປຫາວັບໆໄປຫາບ່ອນທີ່ຜົວເມຍລີ້ຢູ່.

ໃນເມື່ອຜີຍັກໄປເຖິງບ່ອນທີ່ຍັກເຫັນນັ້ນ ຍັກກໍ່ເບິ່ງທາງໃດກໍ່ບໍ່ເຫັນມີມະນຸດຈັກຄົນ, ຜີຍັກຊອກຫາຈົນເມື່ອຍແລ້ວເລີຍນັ່ງລົງ, ກົ້ມໜ້າລົງນ້ຳກໍ່ເລີຍເຫັນຄົນຢູ່ພື້ນນ້ຳເປີເຈີ. ຜີຍັກກໍ່ດີໃຈຫຼາຍກໍ່ຟ້າວລົງນ້ຳມຸດຫາຢູ່ພື້ນນ້ຳຫຼາຍລົບຫຼາຍຕ່າວກໍ່ບໍ່ເຫັນໃຜ? ຜີຍັກມຸດນ້ຳຈົນເມື່ອຍກໍ່ນັ່ງລົງເຊົາເມື່ອຍ, ແຕ່ວ່າຍັກກົ້ມໜ້າເຫັນມີຄົນຕິງໄປຕິງມາຢູ່ພື້ນນ້ຳ, ຜີຍັກກໍ່ລົງມຸດຊອກຫາຢູ່ພື້ນນ້ຳ ແຕ່ວ່າບໍ່ປະກົດເຫັນຈັກຄົນ. ຜີຍັກກໍ່ເລີຍຂຶ້ນມາຈາກພື້ນນ້ຳມາຢູ່ເທິງບົກຢ່າງອິດເມື່ອຍຫຼາຍ, ຜີຍັກນັ່ງລົງແລ້ວນອນງ່າຍປ່າງງ່າງ, ເງີຍໜ້າຂຶ້ນມາກໍ່ເລີຍເຫັນຜົວເມຍຢືນລີ້ຢູ່ເທິງຕົ້ນຕາວ. ຫຼັງຈາກເຫັນຜົວເມຍແລ້ວ ຜີຍັກກໍ່ຈັບເອົາໜ້າອອກຍິງໃສ່ຜົວເມຍ, ແຕ່ວ່າຜົວເມຍລົບຫຼີກລູກໜ້າໄປໄດ້ຫຼາຍລູກແລ້ວ ຜີຍັກຍັງເຫຼືອລູກໜ້າສອງລູກ, ຜີຍັກກໍ່ຕັ້ງສະຕິດີໆຍິງໃສ່ເມຍຖືກປັບ, ຕົກລົງດິນສຽງດັງອຶບ, ຜີຍັກຫົວສຽງດັງ ຮ່ຳ! ຮ່ຳ! ແລ້ວຜີຍັກກໍ່ແນ່ຍິງໃສ່ຜົວຖືກປັບແລ້ວຕົກລົງຕາຍ. ຜີຍັກໄດ້ສັງຫານຂ້າທັງສອງຜົວເມຍໄດ້ແລ້ວ ຍັກກໍ່ເອົາເມືອທີ່ເມືອງຍັກຢູ່ໃນແມ່ນ້ຳແຫ່ງໜຶ່ງທີ່ໄກຈາກບ້ານມະນຸດຫຼາຍ.

ສ່ວນທ້າວຕະຣິກັບທ້າວຕະຣາຍ ທັງສອງອ້າຍນ້ອງລໍຖ້າພໍ່ແມ່ກັບມາ ແຕ່ຊອກຫາຢູ່ບ່ອນຊອກກິນກໍ່ບໍ່ເຫັນໜ້າພໍ່ແມ່ຈັກເທື່ອ. ໃນເມື່ອຮຸ່ງເຊົ້າມາ ສອງອ້າຍນ້ອງຈຶ່ງອອກຈາກບ້ານໄປຊອກຫາພໍ່ແມ່ຢູ່ປ່າດົງຫຼາຍແຫ່ງ ກໍ່ບໍ່ເຫັນໜ້າພໍ່ແມ່ຈັກບ່ອນເລີຍ. ທັງສອງອ້າຍນ້ອງພາກັນໄຫ້ເລາະນ້ຳໄປມາກໍ່ພໍດີພົບເຫັນແມ່ເຖົ້າຄົນໜຶ່ງ, ທັງສອງຄົນຖາມແມ່ເຖົ້າວ່າ ແມ່ເຖົ້າເຫັນພໍ່ແມ່ຂອງພວກຫຼານບໍ? ແມ່ເຖົ້າຕອບວ່າ ແມ່ເຫັນຜີຍັກຍ່າງເລາະນ້ຳໃດພວກຫຼານເອີຍ. ທັງສອງອ້າຍນ້ອງໄດ້ຍິນແມ່ເຖົ້າເວົ້າແນວນັ້ນ ກໍ່ພາກັນໄປເບິ່ງຢູ່ບ່ອນຕົ້ນຕາວ ກໍ່ເຫັນຮ່ອງຮອຍຜີຍັກເປັນຜູ້ຂ້າພໍ່ແມ່ຂອງເຂົາເຈົ້າແທ້. ເຂົາເຈົ້າທັງສອງຖາມແມ່ເຖົ້າອີກວ່າ ຊິເຮັດແນວໃດຈຶ່ງຊິຊອກຫາພໍ່ແມ່ເຫັນ, ແມ່ເຖົ້າບອກວ່າ ພວກຫຼານຢາກໄປຊອກຫາພໍ່ແມ່ພວກຫຼານຕ້ອງມີເຮືອງາມໆຈຶ່ງຈະໄປຫາບ້ານຍັກໄດ້ຫຼານເອີຍ.

ໃນເມື່ອຮູ້ຈັກວ່າ ພວກຍັກຂ້າພໍ່ແມ່ຂອງຕົນເອງ ເຂົາເຈົ້າທັງສອງຄົນກໍ່ພາກັນຕີພ້າ ແລະຂວານ ເພື່ອກຽມເຮັດເຮືອໃຫ້ໄດ້ໜຶ່ງລຳ. ຫຼັງຈາກກະກຽມຄົບແລ້ວ ທ້າວຕະຣິກັບທ້າວຕະຣາຍອອກຈາກ ບ້ານໄປບັກປຳຕົ້ນໄມ້ເຮັດເຮືອ, ເຂົາເຈົ້າຕັດຖາກເຮືອຢູ່ປ່າແລ້ວ ເຂົາເຈົ້າພາກັນລາກມາໄວ້ຢູ່ແຄມທາງ, ເພື່ອໃຫ້ແຂກຄົນຕິຕຽນລຳເຮືອນັ້ນຢູ່ບ່ອນໃດບໍ່ທັນຈົບງາມເທື່ອ. ແຂກຄົນທ່ອງທ່ຽວມາຕາມທາງຈະຕິເວົ້າວ່າ ບ່ອນນີ້ບ່ອນນັ້ນບໍ່ທັນຄັກເທື່ອ, ທັງສອງອ້າຍນ້ອງກໍ່ເອົາກະປອມໂຕໜຶ່ງເປັນຜູ້ຢູ່ເຝົ້າບ່ອນໄວ້ເຮືອນັ້ນ. ໃນເມື່ອແຂກຄົນມາຮອດບ່ອນນັ້ນທັງສອງຄົນກໍ່ແລ່ນໄປລີ້ຢູ່ປ່າສາກ່ອນ, ແຂກຄົນໄປຫວິດແລ້ວ ທັງສອງຄົນກໍ່ອອກມາຖາມກະປອມວ່າ ເຂົາເຈົ້າຕິຢູ່ບ່ອນໃດ? ກະປອມບອກວ່າ ບ່ອນນີ້ໃຫ້ສອງຄົນແປງໃໝ່, ເຂົາເຈົ້າເລົ່າວ່າແຂກຄົນໄປມານັ້ນ ມີຄົນຕິຫົວເຮືອບໍ່ທັນງາມ, ມີບາງຄົນຕິວ່າຫາງເຮືອບໍ່ທັນງາມ, ມີບາງເທື່ອຕິວ່າທ້ອງເຮືອບໍ່ທັນງາມ. ໃນແຕ່ລະມື້ນັ້ນກະປອມເປັນຜູ້ຟັງແລ້ວບອກສອງຄົນເປັນຜູ້ແປງ. ການເຮັດເຮືອຂອງສອງຄົນເສຍເວລາສາມເດືອນເຕັມ, ຈົນວ່າແຂກຄົນໄປມາບໍ່ມີບ່ອນຕິແລ້ວສອງຄົນກໍ່ເຊົາເຮັດເຮືອ.

ຫຼັງຈາກເຮັດເຮືອສຳເລັດແລ້ວ ທັງສອງອ້າຍນ້ອງກະກຽມເຄື່ອງຂອງ ເພື່ອເອົາໄປຂາຍທີ່ເມືອງຍັກ, ເຂົາເຈົ້າກະກຽມເອົາກະເດີບໜຶ່ງໜ່ວຍ, ກະກຽມເສື້ອຜ້າສອງຜືນ, ຕຳໝາກເຜັດແຫ້ງໃຫ້ໄດ້ເກືອບເຕັມກະເດີບ.ໃນເມື່ອກະກຽມຄົບຖ້ວນແລ້ວ ເອົາໝາກເຜັດທີ່ຕຳແລ້ວໃສ່ກ່ອນ, ຕໍ່ຈາກນັ້ນເອົາໃສ່ໂຕກະປອມໃສ່ພ້ອມທັງເອົາເສື້ອຜ້າປົກໃສ່ທາງເທິງ. ທ້າວຕະຣິກັບທ້າວຕະຣາຍອອກເດີນທາງເຮືອໄປ, ເຂົາເຈົ້າລ່ອງເຮືອໄປໄກແສນໄກທີ່ສຸດ, ໄປຮອດບ້ານໃດກໍ່ຖາມວ່າ ບ້ານຍັກຢູ່ໃສ? ເຂົາເຈົ້າເວົ້າວ່າຢູ່ພຸ້ນໄປອີກຫຼາຍມື້ຈຶ່ງຈະຮອດ. ທັງສອງຄົນກໍ່ມຸ້ງໜ້າໄປຢ່າງບໍ່ຢ້ານກົວຕໍ່ອຸປະສັກຈັກຢ່າງ ໃນເມື່ອໄປເຖິງເມືອງຍັກແລ້ວ ເຂົາເຈົ້າຂຶ້ນທ່ານ້ຳແລ້ວຢຽບນ້ຳຢູ່ຫົວເຮືອໃຫ້ຂຸ້ນ, ລູກຍັກເຫັນນ້ຳຂຸ້ນ ກໍ່ຟ້າວໄປເບິ່ງກໍ່ເຫັນທັງສອງຄົນຢືນຢູ່, ລູກຍັກ

ກັບເມືອລາຍງານໃຫ້ພໍ່ຮູ້ວ່າ ມີສັດມາເປັນອາຫານຂອງພວກເຮົາ. ພໍ່ຍັກອອກໄປເບິ່ງແມ່ນມະນຸດ ທັງສອງຄົນຖາມພໍ່ຍັກວ່າ ພໍ່ປູ່ລືມພວກຫຼານແລ້ວຫວະ ! ພໍ່ຂອງພວກຫຼານແມ່ນເປັນສ່ຽວກັນກັບພໍ່ປູ່ນັ້ນເອງ, ເພິ່ນບອກໃຫ້ພວກຫຼານມາຢາມປູ່ຢູ່ນີ້, ພໍ່ຍັກເວົ້າວ່າແມ່ນແລ້ວ ເຊີນພວກຫຼານເຂົ້າບ້ານໄດ້ແລ້ວທັງສອງຄົນເຂົ້າບ້ານຢ່າງສະຫງ່າຜ່າເຜີຍ.

ພໍ່ຍັກຖາມວ່າ ພວກຫຼານມາຢາມພໍ່ປູ່ມີວຽກຫຍັງແດ່? ທັງສອງຄົນຕອບວ່າ ມີວຽກເລັກໜ້ອຍຢາກໃຫ້ພໍ່ປູ່ຊ່ວຍພວກຫຼານແດ່, ພໍ່ຍັກຕອບວ່າບອກມາໂລດ, ສອງຄົນເວົ້າວ່າ ຢູ່ບ້ານຂອງ ພວກຫຼານອຶດຢາກຫຼາຍບໍ່ມີເຂົ້າກິນ ຈຶ່ງນຳເອົາເສື້ອຜ້າມາໃຫ້ພໍ່ປູ່ໄປຂາຍຊ່ວຍພວກຫຼານ ພໍ່ຍັກຕອບວ່າ ໄດ້ຜົວເມຍພວກເຮົາຊ່ວຍຫຼານ. ທັງສອງອ້າຍນ້ອງອະທິບາຍປະເພນີໃນການໃຊ້ກະເດີບນັ້ນ ມັນເຂັດຢຳຫຼາຍ ພໍ່ປູ່ຂອງເຂົາເວົ້າວ່າ ເຮົາເປີດຝາອັດກະເດີບຈະມີອາການຈາມແປບໆ ແມ່ນມັນບໍ່ໃຫ້ເປີດກະເດີບນັ້ນ, ອັນທີ່ສອງຖ້າວ່າເຮົາເອົາມືຈົກເຂົ້າໄປໃນ ມີແນວຢູ່ມືຂອງປູ່ ແມ່ນມັນບໍ່ໃຫ້ພໍ່ປູ່ຈົກຈັບຢ່າງເດັດຂາດ. ພໍ່ຍັກຕອບວ່າ ບໍ່ເປັນຫຍັງ? ຂ້ອຍຈະປະຕິບັດຕາມການແນະນຳຂອງຫຼານ.

ຜົວເມຍຍັກ ອອກເດີນທາງໄປຂາຍເສື້ອຜ້າທີ່ສອງອ້າຍນ້ອງເອົາໃຫ້ໄປຂາຍນັ້ນ ທີ່ເມືອງຍັກບ່ອນອື່ນ. ພໍ່ແມ່ຍັກອອກຈາກເຮືອນໄປແລ້ວ ທັງສອງຄົນກໍ່ຊອກຫາຮ່ອງຮອຍຂອງພໍ່ແມ່ຕົນເອງ, ກໍ່ພໍດີເຫັນກະໂຫຼກຫົວຂອງພໍ່ແມ່ຂອງຕົນເອງ ທີ່ຍັກຫ້ອຍບູຊາບະ ສອງອ້າຍນ້ອງນ້ຳຕາຕົກຍາມໃດກໍ່ຮູ້ເມື່ອ. ເຂົາເຈົ້າບໍ່ເວົ້າວ່າ ຢູ່ບ້ານຍັງມີລູກຍັກສາມຄົນຢູ່ນຳສອງຄົນນັ້ນ, ສອງຄົນຢູ່ນຳລູກຍັກຢ່າງສະໜິດສະໜົມທີ່ສຸດ. ເຂົາເຈົ້າທັງສອງຄົນຖາມກ່ຽວກັບປີກທີ່ບິນໄດ້ມີສອງຊະນິດຄື: ປີກຂີ້ສູດ ແລະ ປີກເຮັດດ້ວຍກົ່ວຊືນ, ຫຼັງຈາກນັ້ນ ສອງຄົນຖາມກ່ຽວກັບຫວ້ານກັດຂາດໄດ້ທຸກຢ່າງ ທັງສອງອ້າຍນ້ອງຖາມກ່ຽວກັບສາຍເບັດແກວ່ງເກາະໃຊ້ໃນເວລາໄລ່ຈັບຄົນເອົາສາຍເບັດແກວ່ງໃສ່ ມັນຈະເກາະຈັບຄົນໄດ້ທັນທີໂລດ. ຫຼັງຈາກຮູ້ໄດ້ທຸກວິຊາແລ້ວ, ທັງສອງຄົນກໍ່ລໍ້ຂ້າລູກຍັກທັງສາມຄົນ ເພື່ອແກ້ແຄ້ນແທນຄ່າຫົວພໍ່ແມ່ຂອງຕົນເອງ.

ທັງສອງຄົນເວົ້າວ່າ ດຽວນີ້ພວກເຮົາມາມັດກັນຫຼິ້ນ ແລ້ວຟ້ອນອ້ອມເຮັດຄືກັບມັດງົວຄວາຍຈະຂ້ານັ້ນ, ລູກຍັກກໍ່ຕົກລົງເຮັດໃຫ້ສອງຄົນພວກເຈົ້າມັດກ່ອນ, ພວກລູກຍັກຟ້ອນອ້ອມແລ້ວເອົາຫອກດາບຈີ້ແທງແທ້, ສອງຄົນເວົ້ານຳລູກຍັກວ່າ ບໍ່ແມ່ນເຮັດແທ້ໃດ໋, ເຮົາເຮັດຢອກກັນຊື່ໆ. ຫຼັງຈາກເຮັດໃຫ້ສອງຄົນແລ້ວ, ສອງຄົນມັດລູກຍັກສອງອ້າຍນ້ອງໄວ້ ຍັງລູກຍັກຜູ້ໜຶ່ງຂາເຄບໍ່ໃຫ້ມັດ, ສອງຄົນມັດລູກຍັກໄດ້ຮຽບຮ້ອຍແລ້ວ ເຂົາເຈົ້າຕັດຄໍລູກຍັກຕາຍຄາທີ່ແລ້ວແລ່ນໄປເອົາຫົວພໍ່ແມ່, ເອົາຫວ້ານກັດຂາດ, ເອົາປີກບິນຜູ້ລະຄູ່ແລ່ນລົງເຮືອ ແລ້ວຂີ່ເຮືອກັບເມືອຢ່າງໄວ, ລູກຍັກຂາເຄ ເຫັນສອງຄົນຂ້າອ້າຍນ້ອງຂອງຕົນເອງມັນແລ່ນໄປຕົກອງດັງຕຶງ ! ຕຶງ ! ບໍ່ພໍຄາວຜົວເມຍຍັກກໍ່ມາຮອດຢ່າງໄວວາທີ່ສຸດ ເໝືອນຟ້າແມບ.

ຍັກຂີ່ເຮືອນຳສອງຄົນຕາມລຳນ້ຳຢ່າງໄວ, ໃນເມື່ອນຳທັນແລ້ວ ຍັກກໍ່ເອົາເບັດແກວ່ງເກາະໃສ່ເຮືອສອງຄົນ, ສອງຄົນບອກຫວ້ານໃຫ້ກັດສາຍເບັດໃຫ້ຂາດປຸດໄປ, ຍັກເອົາເບັດເກາະແນວໃດມັນບໍ່ຈັບເຮືອສອງຄົນນັ້ນໄດ້. ຍັກຕ້ອງໃສ່ປີກບິນ, ໃນເມື່ອສອງຄົນເຫັນຍັກໃສ່ປີກບິນ ເພື່ອນຳສອງຄົນນັ້ນ ແຕ່ວ່າສອງຄົນເຫັນກໍ່ໃສ່ປີກບິນເໝືອນກັນ. ສອງຄົນບິນເມືອຕາມລຳນ້ຳເກືອບຈະບໍ່ລອດການໄລ່ຂ້າຂອງຍັກ, ສອງຄົນບິນໄປໃສ່ບ່ອນທີ່ມີຄົນຖາງໄຮ່ຫຼາຍ, ແລ້ວສອງຄົນຮ້ອງໃສ່ເຈົ້າຂອງໄຮ່ວ່າ ຈູດໄຮ່ໄວເພື່ອສະກັດກັ້ນການໄລ່ຂອງຍັກ, ໃນເມື່ອຄົນໄດ້ຍິນສຽງເວົ້າໃຫ້ຈູດໄຮ່ ເຂົາເຈົ້າກໍ່ຈູດໄຮ່ໂລດ. ໃນເມື່ອຍັກຜ່ານຄວັນໄຟແລ້ວ ເຮັດໃຫ້ອາກາດຮ້ອນຫຼາຍ ເຮັດໃຫ້ປີກຂີ້ສູດເປື່ອຍລົງແລ້ວໂຕຍັກຕົກລົງໃສ່ໄຮ່ທີ່ຈູດຕາຍກັບບ່ອນ.

ທ້າວຕະຣິກັບທ້າວຕະຣາຍກໍ່ບິນລົງແຜ່ນດິນຢ່າງປອດໄພທຸກປະການ, ແລ້ວເຂົາເຈົ້າຍ່າງເມືອບ້ານດ້ວຍຄວາມດີໃຈ ທີ່ໄດ້ຫົວຂອງພໍ່ແມ່ກັບເມືອບ້ານ ເພື່ອເຮັດບຸນກິນທານນຳ, ເອົາຫົວຂອງພໍ່ແມ່ເພື່ອເຮັດທາດໄວ້. ໃນເວລາສອງຄົນຍ່າງກັບບ້ານ ຢູ່ບ້ານໄກ່ຜູ້ໂອກຂັນໝົດມື້ບອກເລົ່າໃຫ້ແມ່ເຖົ້າຮູ້ວ່າ ຫຼານຊາຍທັງສອງຄົນກັບມາແລ້ວ ແມ່ເຖົ້າບໍ່ເຊື່ອໄກ່, ແມ່ເຖົ້າດ່າໄກ່ອີກວ່າ ເຈົ້າບໍ່ຕ້ອງຂັນບອກດອກ ຫຼານຂ້ອຍໄປເມືອງຍັກພຸ້ນ. ສອງຄົນຍ່າງເມືອກໍ່ພໍດີໄດ້ຍິນນົກຮ້ອງວ່າ ຕັດໂປ້ຕີນ ! ຕັດໂປ້ຕີນ ! ໃນເມື່ອໄດ້ຍິນສອງຄົນປຶກສາກັນວ່າຖ້າພວກເຮົາຕັດໂປ້ຕີນພໍ່ແມ່ຕາຍໄປແລ້ວອາດຈະຟື້ນຊີບເທື່ອໃໝ່ກໍ່ເປັນໄດ້. ຜູ້ເປັນນ້ອງຕັດໂປ້ຕີນຂອງຕົນເອງ ກໍ່ເກີດມາເປັນແມ່, ຜູ້ເປັນອ້າຍຕັດໂປ້ຕີນຂອງຕົນເອງກໍ່ເກີດມາເປັນພໍ່ອີກ.

ທັງສອງຄົນໄດ້ພາພໍ່ແມ່ເມືອບ້ານດ້ວຍຄວາມພາກພູມໃຈຫຼາຍ . ທີ່ຕົນເອງໄດ້ເຫັນໜ້າພໍ່ແມ່ ເທື່ອທີ່ສອງ, ພໍ່ແມ່ຕາຍແລ້ວມາເກີດຄານເທື່ອທີ່ສອງ ແມ່ນເລື່ອງໂຊກດີແທ້ໆຂອງຊີວິດໃນຄອບຄົວທີ່ມີຄວາມສຸກເທື່ອໃໝ່. ເຂົາເຈົ້າຍ່າງເມືອຮອດບ້ານຮອດເຮືອນແລ້ວ ແມ່ເຖົ້າເຫັນເຂົາເຈົ້າມາ, ແມ່ເຖົ້າກໍ່ດີໃຈຫຼາຍ ແມ່ເຖົ້າຈັບເອົາຫມໍ້ກໍ່ຕົກແຕກ, ແມ່ເຖົ້າຈັບເອົາກະບັ້ງນ້ຳຕົກແຕກ, ແມ່ເຖົ້າດີໃຈຫຼາຍທີ່ສຸດຈົນລືມໝົດທຸກສິ່ງທຸກຢ່າງ.

## 13.2 ອາແງະອາເລີນ
## (ອະແງ້ຮອະແລີນ)

ເລື່ອງສອງອ້າຍນ້ອງ ດຳລົງຊີວິດຢູ່ຮ່ວມກັນຢ່າງມີຄວາມສຸກຕະຫຼອດມາ ເຂົາເຈົ້າທຳມາຫາກິນແບບຊາວບ້ານຫາກິນທຳມະດາ, ເຂົາເຈົ້າເຮັດໄຮ່ເປັນອາຊີບພື້ນຖານ, ເຂົາເຈົ້າຊອກຫາບ່ອນທີ່ມີປ່າດົງຕຶບໜາ ຄັນຖາງປ່າເຮັດໄຮ່ຄືຊິໄດ້ເຂົ້າຫຼາຍ. ສອງອ້າຍນ້ອງຕັ້ງຖິ່ນຖານທີ່ບ້ານ

ອາທິງທີ່ເກີດເຫດການຕູ່ຫາວ່າສອງຄົນຄື: ທ້າວອາແງະເປັນອ້າຍກົກ, ທ້າວອາເລີນເປັນນ້ອງຊາຍ. ເຂົາເຈົ້າຕູ່ຫາວ່າ ເຂົາເຈົ້າທັງສອງຄົນນີ້ຫຼິ້ນເມຍເຂົາເຈົ້າ, ແຕ່ວ່າເຂົາສອງຄົນປະຕິເສດຢ່າງລິ້ນເຊີງວ່າ ບໍ່ໄດ້ກະທຳໃນສິ່ງທີ່ຜິດຮີດຄອງປະເພນີບ້ານເມືອງ, ແຕ່ຜູ້ຕູ່ຫາແມ່ນຜູ້ໃຫຍ່ ແລະ ຜູ້ມີຖານະຢູ່ໃນບ້ານອີກດ້ວຍ.

ເຂົາເຈົ້າຈັດຕັ້ງຄະນະຕັດສິນຄະດີ ການຕູ່ຫາກັນທັງສອງຝ່າຍ, ທັງສອງອ້າຍນ້ອງປະຕິເສດທຸກຂໍ້ຄວາມທີ່ກ່າວຫາ. ຄະນະຕັດສິນຄັ້ງທີ່ໜຶ່ງ ເຫັນດີໃຫ້ທັງສອງຝ່າຍມຸດນ້ຳສາບານຕົວວ່າແມ່ນໃຜຈະຟູຂຶ້ນຈາກນ້ຳມາກ່ອນ ແມ່ນຜູ້ນັ້ນເປັນຜູ້ກະທຳຜິດ. ເຂົາເຈົ້າຕັດໄມ້ປ່ອງສອງລຳຍາວປະມານໜຶ່ງແມັດ, ເຂົາເຈົ້າມັດສອງຄົນໃສ່ຄົນລະສົ້ນໄມ້, ຢູ່ລະຫວ່າງກາງສອງຄົນ ເຂົາເຈົ້າເຮັດໄມ້ຄ້ຳເຕັກລົງນ້ຳທັງສອງຄົນ ແລ້ວເຂົາເຈົ້າຮຽກຮ້ອງໃຫ້ເຈົ້າແມ່ນ້ຳລຳເຊ, ເຈົ້າວິນຍານເງືອກ, ເຈົ້າກົກເຈົ້າເຫຼົ່າ ແລະ ຄະນະຕັດສິນຄະດີນັ່ງເບິ່ງວ່າ ແມ່ນໃຜຈະຟູຂຶ້ນມາກ່ອນ, ຜູ້ທີ່ຂຶ້ນມາກ່ອນແມ່ນເຈົ້າວິນຍານເງືອກແຍ່ດັ່ງມັນ, ມັນຈຶ່ງທົນຕໍ່ນ້ຳບໍ່ໄດ້, ແລ້ວຄົນຜູ້ນັ້ນເປັນຄົນອະທຳເປັນຜູ້ຕູ່ຫາຜູ້ອື່ນຂາດຄວາມເປັນຈິງ, ການເຮັດສະບານຕົວແບບນີ້ແມ່ນເຫັນໄດ້ໃຜເຮັດຖືກແມ່ນໃຜເຮັດຜິດ ມັນສະແດງອອກຢູ່ໃນການມຸດນ້ຳ, ການມຸດນ້ຳໃນມື້ນັ້ນ ຝ່າຍຕູ່ຫາເປັນຜູ້ຂຶ້ນກ່ອນ, ແລ້ວຝ່າຍຕູ່ຫາເປັນຜູ້ຜິດ, ແຕ່ວ່າຝ່າຍຕູ່ຫາວ່າອາແງະອາເລີນ ແຕ່ບໍ່ຍອມຮັບຜິດອີກ.

ເຖິງຝ່າຍຕູ່ຫາເປັນຝ່າຍພ່າຍແພ້ແລ້ວກໍ່ຕາມ ຍັງຊອກຫາວິທີທາງໃໝ່, ທີ່ໜັກກວ່ານັ້ນອີກ, ເຂົາເຈົ້າເວົ້າວ່າ ຄັນສອງຄົນພວກເຈົ້າບໍ່ຫຼິ້ນຊູ້ກະທຳເມຍຜູ້ອື່ນ ໃຫ້ພວກເຈົ້າເປົ້າໂງ່ນຫີນສອງໜ່ວຍນີ້, ຫີນສອງໜ່ວຍເປັນກ້ອນຫີນສີຂາວ (ແບບຫີນແກ້ວຂາວ). ໄລຍະທາງແຕ່ນ້ຳເຊໂດຣລ ຮອດບ້ານອາທິງໃຫ້ປັງລົງຢູ່ບ່ອນນັ້ນ. ທ້າວອາແງະເປົ້າໂງ່ນຫີນກວ້າງເຄິ່ງແມັດສູງໜຶ່ງແມັດ, ທ້າວອາແລີນຜູ້ເປັນນ້ອງເປົ້າໂງ່ນຫີນກວ້າງເຄິ່ງແມັດສູງໜຶ່ງແມັດ ໃຫ້ປັງຢ້ອງກັນເທິງຂອງອ້າຍ. ທັງສອງຄົນໄປເອົາເປົ້າໃສ່ຫຼັງຢ່າງສະບາຍ ເອົາມາໄວ້ຢູ່ບ້ານຢ່າງບໍ່ຕ້ອງສົງໄສ(ໂງ່ນຫີນທີ່ມີຄ່ານັ້ນຖືກລະເບີດແລ້ວ). ເຖິງວ່າສອງຄົນເປົ້າໂງ່ນຫີນມາໄວ້ຢູ່ບ້ານອະທິງຢ່າງສະບາຍ ແຕ່ວ່າຝ່າຍຕູ່ຫາໄດ້ ໃຊ້ກົນອຸບາຍແບບໃໝ່. ແທນທີ່ສອງຄົນເປົ້າໂງ່ນຫີນໄດ້ແລ້ວ ແມ່ນເປັນຝ່າຍສິນທຳບໍ່ໄດ້ເຮັດຜິດປະເພນີຮີດຄອງບ້ານເມືອງ ແຕ່ຝ່າຍພວກຕູ່ຫາບໍ່ຍອມອີກ.

ໃນກາງເດືອນແປດ ເປັນລະດູຝົນທີ່ຕົກແຮງຫຼາຍ ນ້ຳມາກຂຶ້ນເຕັມຕະຝັ່ງ, ພວກຄົນຕູ່ຫາເອີ້ນສອງອ້າຍນ້ອງນັ້ນ ມາລອຍນ້ຳແຂ່ງຂັນໃນເວລານ້ຳນອງນັ້ນ ແມ່ນໃຜຮອດທ່າກ່ອນ ແມ່ນຜູ້ນັ້ນເປັນຜູ້ຊະນະແມ່ນຝ່າຍນັ້ນເປັນຄົນບໍ່ມີບັນຫາ. ແຕ່ວ່າສອງຄົນອາແງະກັບອາເລີນ ບໍ່ຫວັ່ນໄຫວຕໍ່ອຸປະສັກໃດໆດອກ, ເຂົາເຈົ້າທັງສອງຄົນຮຽກຮ້ອງເຈົ້າສິ່ງສັກສິດ, ເຈົ້າວິນຍານແຜ່ນຟ້າ, ເຈົ້າວິນຍານແຜ່ນດິນ ໃຫ້ເປັນຫູເປັນຕາເບິ່ງໃຫ້ແກ່ພວກເຮົາແດ່. ພວກຕູ່ຫາເລືອກເອົາຕົວແທນຄົນໜຶ່ງມາລອຍແຂ່ງ, ສ່ວນສອງຄົນເອົາທ້າວອາແງະຜູ້ເປັນອ້າຍເປັນຜູ້ລອຍແຂ່ງ, ເຂົາ

ເຈົ້າລອຍແຂ່ງສອງຮອບ, ລອຍຮອບທຳອິດແມ່ນແຕ່ຟາກເບື້ອງນີ້ໄປຫາຟາກເບື້ອງພຸ້ນ, ລອຍຮອບສອງແມ່ນມາຈາກຟາກພຸ້ນລອຍມາຟາກທາງພີ້, ຜ່ານການລອຍສອງຮອບນັ້ນ ແມ່ນທ້າວອາແງະເປັນຜູ້ຮອດຕະຝັ່ງກ່ອນໝູ່, ຄະນະຕັດສິນຄະດີຕົກລົງໃຫ້ສອງຄົນເປັນຝ່າຍທີ່ຖືກຕ້ອງ, ສ່ວນຝ່າຍຕູ່ຫານັ້ນເປັນຝ່າຍທີ່ຜິດ. ແຕ່ວ່າໃນສຸດທ້າຍ ເຂົາເຈົ້າຈັບທ້າວອາແງະໄປປະຫານຊີວິດດ້ວຍວິທີຕັດຄໍ ແລ້ວເອົາຫົວຫ້ອຍບູຊາບະຢູ່ຕົ້ນໄຮປາກຫ້ວຍເຕຮງເປັນບ່ອນທີ່ລອຍນ້ຳແຂ່ງກັນນັ້ນ.

ຍັງເຫຼືອນ້ອງຊາຍເປັນຜູ້ສືບຕໍ່ງສູ້ກັບພວກຕູ່ຫາ, ເຂົາເຈົ້າເວົ້າວ່າ ດຽວນີ້ໃຫ້ແຂ່ງຂັນເລື່ອງເວົ້າຄວາມກັນແມ່ນໃຜໃຊ້ຄຳສຸພາສິດ, ຄຳຜະຫຍາໄດ້ຫຼາຍ ແລະ ແກ້ໄດ້ທຸກຂໍ້ຄວາມ ແມ່ນຜູ້ນັ້ນຊະນະ ແລະ ເປັນຝ່າຍທີ່ຖືກຕ້ອງ (ພາສາກະຕູວ່າຕັຣອ່າ). ເຂົາເຈົ້າເລົ່າວ່າ ທ້າວອາເລີນເວົ້າຄວາມເກົ່າ, ແກ້ຄວາມເກົ່າ, ລາວເວົ້າທຸກຄຳທຸກຄວາມບໍ່ຄາ ລາວເວົ້າຄວາມລຽນໄຫຼ ເໝືອນດັ່ງນ້ຳໄຫຼບໍ່ຂາດສາຍ. ໃນເມື່ອຝ່າຍຕູ່ຫາເຫັນລາວສະຫຼາດສະຫຼຽວດີ, ເຂົາເຈົ້າຈັບລາວມາແລ້ວຕັດປາຍລີ້ນອອກໜ້ອຍໜຶ່ງລາວກໍ່ສາມາດເວົ້າຄວາມໄດ້ຢູ່, ຈັບລາວເທື່ອທີ່ສອງອີກແລ້ວຕັດລີ້ນຖິ້ມເຄິ່ງໜຶ່ງອີກ ວ່າຍັງມີຄວາມສາມາດເວົ້າຕໍ່ສູ້ຢ່າງເດັດດ່ຽວທີ່ສຸດ, ລາວໂຕ່ງເລືອດໃສ່ຈອກຫີນທີ່ໂງ່ນຫີນທ່າອາບນ້ຳຫ້ວຍເຕຮງ ຢູ່ທາງລຸ່ມຂອງບ້ານອາຫົງ, ໃນເມື່ອເຂົາເຈົ້າເຫັນລາວສາມາດຕ້ານ ແລະ ແກ້ບັນຫາໄດ້ຢ່າງຈະແຈ້ງດີ, ແກ້ໄດ້ທຸກຢ່າງເປັນຄືແນວນັ້ນ ເຂົາເຈົ້າຈັບລາວມັດເທື່ອທີ່ສາມ ແລ້ວຕັດລີ້ນລາວຈຳກົກລີ້ນ ແຕ່ລາວຍັງສາມາດເວົ້າຕໍ່ສູ້ໄດ້ຢ່າງເດັດດ່ຽວບໍ່ຍອມຈຳນົນ ໃນສຸດທ້າຍ ເຂົາເຈົ້າຂ້າລາວຕາຍອີກດ້ວຍ. ພວກຄະນະກຳມະການຕັດສິນຄະດີແກ້ໄຂຫຍັງບໍ່ໄດ້ ( ພາສາກະຕູວ່າ ຕະກອັງໄຈຕູຕະປຸກກັຣໂບນ).

ຫ້ອງນຳທ່ຽວ

## 13.3 ອາເຈີດອາຈາຍ
## (ອະເຈີດອະຈາຍ)

ເຂົາເຈົ້າເລົ່າເລື່ອງກ່ຽວກັບ ຄົນສະໄໝກ່ອນນັ້ນ ເຂົາເຈົ້າເອົາລູກເອົາເມຍມາຈາກທຳມະຊາດ ເປັນຜູ້ຊ່ອຍເຫຼືອໃຫ້ເຂົາເຈົ້າມີເມຍ ເຂົາເຈົ້າພົບຜູ້ແສ້ຜູ້ສາວ ຢູ່ໃນປ່າດົງພົງໄພອັນກວ້າງໃຫຍ່ໄພສານຢູ່ໃນໂລກແຫ່ງນີ້. ເພາະສະນັ້ນ ທ້າວອາເຈີດກັບທ້າວອາຈາຍ ເປັນອ້າຍນ້ອງອັນດຽວກັນທີ່ເຂົາເຈົ້າຮ່ວມພໍ່ແມ່ອັນດຽວກັນ. ເຂົາເຈົ້າທັງສອງຄົນໄປຫາກິນຕາມດິນແດນທີ່ອຸດົມສົມບູນຂອງຍຸກຄົນບູຮານ. ເຂົາເຈົ້າເຂົ້າປ່າດົງບ່ອນໜຶ່ງ ກໍ່ພໍດີພົບພໍ້ສວນອ້ອຍຂອງມະນຸດປ່າປູກປະໄວ້, ສວນອ້ອຍເປັນສວນອ້ອຍທີ່ມີລຳໃຫຍ່ສ່ຳຂາສ່ຳແຂນເປັນລຳອ້ອຍທີ່ແປກປະຫຼາດ

ຫຼາຍ. ແຕ່ວ່າສອງຄົນຢາກຊີມກິນລົດຊາດຂອງອ້ອຍ, ເຂົາເຈົ້າທັງສອງຄົນເລາະເບິ່ງສວນອ້ອຍເປັນຕາໜ້າອ່ອນຊອນຫຼາຍ, ເຂົາເຈົ້າຊອກຫາເຈົ້າຂອງສວນກໍ່ບໍ່ເຫັນເຮືອນຊານບ້ານຊ່ອງຄົນຈັກເລີຍ, ໃນມື້ນັ້ນ ສອງຄົນກັບເມືອບ້ານ ເຂົາເຈົ້າບໍ່ກ້າແຕະຕ້ອງຫຍັງເລີຍ.

ໃນຕໍ່ມາທ້າວອາເຈີດກັບທ້າວອາຈາຍ ພາກັນອອກຈາກບ້ານໄປຫາກິນຢູ່ຕາມປ່າດົງຕາມຄວາມຂຶ້ນເຄີຍກັບທຳມະຊາດ. ເຂົາເຈົ້າຊອກຫາໝູປ່າຄືກັບເຂົາເຈົ້າຊອກຊຸດອື່ນ, ຊອກຫາໝູພຸກຢູ່ປ່າເພື່ອມາເປັນອາຫານກິນ. ໃນເມື່ອຊອກຫາໝູແລ້ວ ເຂົາເຈົ້າກັບແວ່ເຂົ້າສວນອ້ອຍເປັນເທື່ອທີ່ສອງ ເຂົາເຈົ້າທັງສອງຄົນຕັດອ້ອຍມາກິນ, ເຂົາເຈົ້ານັ່ງກິນຢ່າງສະບາຍ, ເຂົາເຈົ້າກິນແລ້ວເຂົາເຈົ້າຮ້ອງວ່າ ພວກເຮົາກິນອ້ອຍເດີຊາວບ້ານເອີຍ ! ແຕ່ວ່າບໍ່ມີສຽງຄົນຕອບຈັກຄຳເລີຍ. ເຂົາເຈົ້າກິນແລ້ວເຂົາເຈົ້າກັບເມືອບ້ານຕາມທຳມະດາທີ່ເຄີຍໄປເຄີຍມາຂອງສອງຄົນ.

ໃນມື້ຕໍ່ມາເຂົາເຈົ້າແຕ່ຕື່ນເຊົ້າ ແລ້ວເຂົາເຈົ້າເຂົ້າໄປຊອກຫາເອົາອາຫານຢູ່ປ່າເພື່ອມາໄວ້ກິນ, ຫຼັງຈາກຊອກຫາອາຫານການກິນໄດ້ແລ້ວ ເຂົາເຈົ້າແວ່ເຂົ້າສວນອ້ອຍອີກ, ເຂົາເຈົ້າຕັດອ້ອຍລຳໜຶ່ງມາກິນ ກໍ່ພໍດີໄດ້ຍິນສຽງຂັບລຳໃສ່ສອງຄົນວ່າ: ອ້າຍບ່າວເອີຍ ! ເຈົ້າມາແຕ່ໃສ? ເຈົ້າຈຶ່ງມາແວ່ເຂົ້າສວນຄົນຂີ້ລ້າຍຄືນ້ອງອິດຢູ່ຕາມທຳມະຊາດບໍ່ມີເຮືອນຊີ້ນ, ນ້ອງນີ້ບໍ່ມີຄົນຊາຍໃດມາເຕາະມາຕ້ອງ ເນື້ອຄີງແຕ່ໜ້ອຍດຽວອ້າຍເອີຍ! ສອງຄົນໄດ້ຍິນຄຳເວົ້າຂອງນາງເວົ້າສຽດສີໃສ່? ເຂົາເຈົ້າເວົ້າກັບນາງວ່າ ຄັນນ້ອງບໍ່ຕີແນວຫົວກອຍບໍ່ມີຮາກມີແຕ່ຫົວ, ສ່ວນນ້ອງບໍ່ມີຜົວແຕ່ມີສວນອ້ອຍມັນກໍ່ດີແລ້ວ ສ່ວນພວກອ້າຍນີ້ມີເຮືອນໃຫຍ່ເທົ່າກັບອອງກະປູ ຄົນເຂົ້າຊີ້ນບໍ່ຫວິດເສັ້ນຜົມ. ໃນມື້ຕໍ່ມານາງຟ້າກໍ່ມາຢູ່ໃນເລົ້າເຂົ້າຂອງສອງຄົນນັ້ນເອງ. ແມ່ເຖົ້າໄປເອົາເຂົ້າຢູ່ເລົ້າເລີຍ ເຫັນນາງຟ້ານັ່ງຢູ່, ແມ່ເຖົ້າຖາມວ່າ ນາງຈະມາຫາໃຜ? ນາງຕອບແມ່ເຖົ້າວ່າ ຂ້ອຍມາຫາຄົນທີ່ຕັດເອົາອ້ອຍຂອງຂ້ອຍມາກິນ. ແມ່ເຖົ້າກັບເມືອເຮືອນ ແລ້ວຖາມຫຼານສອງຄົນວ່າ ພວກຫຼານໄດ້ຕັດກິນອ້ອຍເຂົາເຈົ້າບໍ່? ເຂົາເຈົ້າຕອບແມ່ເຖົ້າວ່າ: ເອີ ! ໄດ້ເອົາກິນແທ້. ດຽວນີ້ມີຄົນມາຫາພວກເຈົ້າແລ້ວນາງກໍ່ຢູ່ໃນເລົ້າເຂົ້າແລ້ວ, ສອງຄົນບອກໃຫ້ແມ່ເຖົ້າເຊີນນາງມາເຮືອນດ້ວຍ, ນາງຟ້າໄດ້ຮັບເຊີນເມືອເຮືອນເປັນຢ່າງດີ.

ທ້າວອາເຈີດໄດ້ແຕ່ງງານ ເອົານາງຟ້າຢ່າງເປັນທາງການ ຢູ່ພາຍໃນບ້ານແຫ່ງໜຶ່ງ, ທ້າວອາເຈີດກັບນາງຟ້າໄດ້ຮ່ວມຊີວິດນຳກັນໄດ້ຫົກເດືອນໄປແລ້ວ, ທ້າວອາເຈີດກັບທ້າວອາຈາຍອອກໄປຄ້າຂາຍທີ່ເມືອງບ້ານອື່ນທີ່ໄກ, ການໄປຄ້າຂາຍເຖິງປະມານສາມເດືອນເຕັມ. ທ້າວອາເຈີດຮັກເມຍຫຼາຍ ບໍ່ຢາກໃຫ້ເມຍທຸກຍາກ ບໍ່ໃຫ້ເມຍຕາກແດດຕາກຝົນ ລາວຢ້ານເມຍດຳເມຍແຫຼ້, ທ້າວອາເຈີດຕັກນ້ຳໄວ້ກຸ້ມໃຊ້ສາມເດືອນ, ຕຳເຂົ້າໄວ້ກຸ້ມກິນສາມເດືອນ ແລະ ຕັດໃບຕອງພໍກຸ້ມສາມເດືອນ ໃບຕອງເຫຼືອງຍາມໃດຂ້ອຍຈະກັບມາທັນທີໂລດ. ສອງຄົນກະກຽມຄົບຖ້ວນແລ້ວ ກໍ່ອອກເດີນທາງໄປຄ້າຂາຍເຄື່ອງຂອງ, ເຂົາເຈົ້າຂາຍສົ້ນໂລມ, ຂາຍສົ້ນກຸນໂດ.

ເຂົາເຈົ້າໄປໄດ້ສອງເດືອນແລ້ວ, ນາງຟ້າອາບນ້ຳຢູ່ໃນເຮືອນຕະຫຼອດ. ມີມື້ໜຶ່ງຍັກຮູ້ຈັກວ່າສອງຄົນບໍ່ຢູ່ເຮືອນ ຍັກຊີ້ຈ້າງນົກກາມາຈອບເບິ່ງນາງຟ້າອາບນ້ຳ ແລ້ວໃຫ້ລັກເອົາສົ້ນເສື້ອ ຫຼື ວ່າຫວີຜົມກໍ່ໄດ້. ນົກກາ ເຊື່ອຟັງຄວາມຍັກຈຶ່ງໄປຕິດຕາມເບິ່ງ ກໍ່ເຫັນນາງຟ້າອາບນ້ຳແລ້ວເຫັນນາງຟ້າຫວີຜົມຢູ່ປ່ອງຢ້ຽມ ກາກໍ່ມາຄາບເອົາຫວີໄປ ນາງຟ້າໄລ່ເອົານຳນົກກາແລ້ວອ້ອນວອນວ່າ ໃຫ້ນົກກາສົ່ງຫວີຄືນມາໃຫ້ ແຕ່ວ່ານົກກາບິນໄປແຄມນ້ຳ ນາງຟ້າກໍ່ນຳນົກກາໄປຫາຢູ່ແຄມນ້ຳ, ນາງຟ້າຍ່າງໄປຕາມແຄມນ້ຳກໍ່ພໍດີຍັກນ້ຳ ຫຼື ເງືອກນ້ຳມາດຶງເອົາລົງລົບໄປສູ່ພື້ນນ້ຳມິດອິມຊິມບໍ່ເຫັນຂຶ້ນມາຈາກພື້ນນ້ຳອີກເລີຍ.

ຫຼັງຈາກນາງຟ້າຖືກພວກຍັກຈັບໄປແລ້ວ ຊາວບ້ານພາກັນຊອກຫາຜູ້ທີ່ຈະໄປນຳເອົາທ້າວອາເຈິດກັບທ້າວອາຈາຍກັບບ້ານເປັນບັນຫາຍາກຫຼາຍເພາະວ່າເປັນຍາມລະດູຝົນໆກໍ່ຕົກແຮງຫຼາຍ ນ້ຳໃຫຍ່ແຕ່ລະລຳນ້ຳໄປມາບໍ່ໄດ້, ຄົນຢູ່ບ້ານບໍ່ມີໃຜຈະມີຄວາມສາມາດໄປໄດ້. ເຂົາເຈົ້າບອກໃຫ້ນົກປີດໄປເພາະວ່າ ນົກສາມາດບິນຂ້າມແມ່ນ້ຳໄດ້ (ພາສາກະຕູວ່າ ອະເຈ້ະອະອູດ) ນົກປີດບິນໄປຮອດບ່ອນໜຶ່ງ ນົກປີດຮ້ອງວ່າ ອູດ ! ອູດ ! ອູດ ! ເສັ້ນທາງໄປມາມືດອັບມືດປິດບໍ່ມີເສັ້ນທາງໄປແລ້ວ ນົກປີດບິນກັບຄືນບ້ານ ແລ້ວລາຍງານເສັ້ນທາງຕັນໝົດບໍ່ມີທາງໄປອີກ. ເຂົາເຂົ້າບອກໃຫ້ນົກກາບິນໄປຫາທ້າວອາເຈິດກັບອາຈາຍ ກັບມາບ້ານດ່ວນ, ນົກກາບິນໄປຮອດແມ່ນ້ຳແຫ່ງໜຶ່ງ ນົກກາເຫັນແມ່ນ້ຳໃຫຍ່ກວ້າງຫຼາຍ ນົກກາຢ້ານບິນໄປບໍ່ຂວ້າມຈຶ່ງຮ້ອງວ່າ ອາກ ! ອາກ ! ແມ່ນ້ຳລຳເຊໃຫຍ່ຫຼາຍ ບິນໄປມັນຍາກມັນຊ້າ ຂ້ອຍຕ້ອງກັບມາບ້ານເພື່ອລາຍງານ ໃນເມື່ອບິນມາຮອດບ້ານນົກກາບອກວ່າ ນ້ຳກວ້າງໃຫຍ່ຫຼາຍໄປບໍ່ໄດ້ຈຶ່ງກັບມາ. ເຂົາເຈົ້າບອກນົກເຂົາບິນໄປບອກສອງຄົນກັບມາບ້ານດ່ວນເມຍຖືກຈັບໄປແລ້ວນົກເຂົາບິນໄປຮອດບ້ານໜຶ່ງນົກເຂົາຖາມອາເຈິດກັບອາຈາຍຢູ່ໃສ? ເຂົາເຈົ້າບອກວ່າ ຢູ່ບ້ານເໜືອພຸ້ນ, ນົກເຂົາກໍ່ບິນໄປຮອດບ້ານເໜືອແລ້ວຖາມວ່າ ອາເຈິດກັບອາຈາຍຢູ່ໃສ? ເຂົາເຈົ້າວ່າຢູ່ບ້ານເໜືອອີກ ນົກເຂົາບິນໄປຮອດບ້ານເໜືອກໍ່ເຫັນສອງຄົນຂາຍເຄື່ອງຢູ່ນົກເຂົາຮ້ອງວ່າ: (ເປັນພາສາກະຕູວ່າ ກູຣກົຣຕະວັຊລອມ ອະເຈິດລອມອະຈາຍ) ແປວ່າຊັກຊວນໃຈທັງສອງຄົນໃຫ້ຫັນຈິດໃຈຫວນຄືນເມືອບ້ານແດ່. ເຂົາເຈົ້າໄດ້ຍິນສຽງນົກເຂົາຮ້ອງແບບຊັກຊວນຈິດໃຈໃຫ້ກັບບ້ານ ຕ້ອງມີເລື່ອງລາວ ເຂົາເຈົ້າກໍ່ກັບບ້ານດ່ວນ. ໃນເມື່ອເມືອບ້ານແລ້ວ ຊາວບ້ານໄດ້ລາຍງານໃຫ້ທ້າວອາເຈິດກັບອາຈາຍຟັງວ່າ. ທ້າວອະເຈິດໄດ້ໄປຮຽນວິຊາອາຄົມນຳພະລືສີທີ່ຖ້ຳແຫ່ງໜຶ່ງ, ລາວຮຽນວິຊາເຫາະເຫີນໄປເທິງກາງຫາວ, ລາວຮຽນວິຊາຟັນດາບຟັນງ້າວ, ລາວຮຽນວິຊາຟັນດາບຟັນງ້າວຢູ່ພື້ນນ້ຳ, ຮຽນວິຊາໄລ່ຟັນເທິງໜ້ານ້ຳ, ລາວຮຽນວິຊາຟັນຕັດເຫຼັກ, ລາວຮຽນຟັນທ່ອນກ້ວຍຕາຍເນົ່າ ໂດຍເອົາກະຕ່ງວປູເທິງແລ້ວເອົາດາບຟັນຂາດປຸດ, ຫຼັງຈາກຮຽນແລ້ວລາວຟັນທົດລອງຫຼາຍຢ່າງໄດ້ແລ້ວ ລາວໄປນຳເມຍລາວຢູ່ພື້ນນ້ຳໂດຍກົງ ໃນເມື່ອໄປຮອດບ່ອນຂັງນາງ

ຟ້າ ມີກຳແພງຂວາງຕັນເຈັດຊັ້ນ, ນາງຟ້ານັ່ງຕ່ຳຫູກຢູ່ມີສຽງດັງຕຶກຕັກໆ (ພາສາກະຕູເວົ້າສຽງດັງກຣຽງໆ). ລາວບຸກເຂົ້າຟັນກຳແພງຖະຫຼົ່ມຖະລາຍ ໃນຊັ້ນທີ່ໜຶ່ງລາວສູ້ລົບກັບທະຫານຍັກຈົນເສຍເວລາເຈັດມື້, ກຳແພງຊັ້ນທີ່ເຈັດເປັນກຳແພງທີ່ເຈົ້າຍັກຢູ່ກັບນາງຟ້າ. ໃນຊັ້ນທີ່ໜຶ່ງນີ້ແມ່ນບ່ອນການຕໍ່ສູ້ກັນຢ່າງດຸເດືອດກັບຍັກ ການຕໍ່ສູ້ເອົາແພ້ເອົາຊະນະກັບຍັກຢ່າງພິລະອາດຫານ, ທຳອິດລາວຕັດແຂນຊ້າຍຂອງຍັກ, ສູ້ ເທື່ອທີ່ສອງລາວຕັດແຂນຂວາຂອງຍັກ, ໂຕຍັກເຈັບປວດຫຼາຍ, ລາວຕັດແຂນທັງສອງເບື້ອງຂອງ ຍັກກ່ອນຍ້ອນລາວຢ້ານຍັກຈັບເມຍເປັນຕົວປະກັນ, ລາວສູ້ກັບຍັກເທື່ອສາມແມ່ນແບບເຫາະຂຶ້ນເຫາະລົງ ໃນການຟັນດາບຟັນງ້າວກັບຍັກເຮັດໃຫ້ຍັກຖືກຕັດຄໍລົງຢ່າງງ່າຍດາຍ ຫຼັງຈາກຂ້າຍັກແລ້ວ ລາວກໍ່ລົງສູ່ພື້ນນ້ຳເພື່ອມ້າງຫ້ອງກັກຂັງຂອງນາງຟ້າ ລາວເອົາດາບຟັນປະຕູເຫຼັກຂາດເປັນບັ້ນເປັນທ່ອນໄດ້ ລ າວກໍ່ແລ່ນເຂົ້າໄປເອົາເມຍກັບເມືອບ້ານດ້ວຍຄວາມປອດໄພທຸກປະການ.

## 13.4 ຕູບເຄື່ອງທານ
## (ເຊີວປົງ)

ເວົ້າເລື່ອງຄວາມນັບຖືຂອງຄົນ ເປັນເລື່ອງສຳຄັນຍິ່ງໃນດ້ານປະເພນີ ສຳລັບມະນຸດຢູ່ໃນໂລກ ການເຄົາລົບນັບຖືເປັນເລື່ອງມະຫັດສະຈັນຂອງຄົນຍັງມີຊີວິດ ເປັນບ່ອນພົວພັນລະຫວ່າງຄົນມີຊີວິດກັບມະນຸດມີຈິດວິນຍານ. ໝາຍເຖິງມະນຸດຍັງມີຊີວິດ, ຍັງມີບົດບາດຢູ່ໃນສັງຄົມ, ມີຖານະມີຊື່ສຽງຢູ່ໃນບັນຊີພົນລະເມືອງ, ມີບັນຊີໃນຄອບຄົວ. ສ່ວນຜູ້ມີຊີວິດຫຼັງຄວາມຕາຍກໍ່ຍັງມີຄົນເຄົາລົບນັບຖື, ບູຊາ, ຄົນຮຽກຮ້ອງຊ່ອຍເອົາຊີວິດ, ຊ່ອຍຄວາມຮັ່ງມີຢ່າງສູງນັ້ນແມ່ນຮູບການ, ກິນທານຫາເຈົ້າດວງວິນຍານທີ່ຈາກໄປແລ້ວ. ແຕ່ວ່າຮູບການສ້າງ, ສ້າງໂລງສົບ, ການທານວັດຖຸສິ່ງທີ່ມີຄ່າຢ່າງມະຫາສານໃຫ້ແກ່ຜູ້ຈາກໄປນັ້ນ ແມ່ນການລະນຶກບຸນຄຸນ, ແມ່ນການນັບຖືພົນລະເມືອງບໍ່ມີບັນຊີ, ມີແຕ່ຄວາມຊົງຈຳຂອງຊາດ, ເຈົ້າເຊື້ອສາຍ, ເຈົ້າຕະກຸນ, ເຈົ້າຄອບຄົວ, ມະນຸດເຮົາທຸກຄົນຕ້ອງຮັບຮູ້ດ້ວຍວ່າ ກາຍະພາບຂອງບຸກຄົນໃນປະຫວັດການສືບຕໍ່ຮີດຄອງປະເພນີຕາມຄວາມເຊື່ອຖືຂອງຄົນບູຮານ.

ການຕໍ່ສູ້ ເພື່ອປົກປ້ອງສິດຜົນປະໂຫຍດຂອງຊາດຂອງທ້ອງຖິ່ນຂອງຕະກຸນແມ່ນ ເອົາຊີວິດແລກຊີວິດເອົາເລືອດແລກເລືອດ ເຊິ່ງຄົນກະຕູເອີ້ນວ່າ: (ອັຣງິອິສ) ໄຟ, (ອັຣງິດາກ) ນ້ຳ, ເວົ້າອັຣງິນັ້ນຄົນກະຕູໃຜໆ ກໍ່ມີຄວາມຊົງຈຳເປັນຄວາມຄັບແຄ້ນແໜ້ນໃຈ ຍ້ອນຜູ້ນຳຂອງຕົນ

ຖືກຂ້າຕາຍຢູ່ໃນສະໜາມລົບ. ໄຟສົງຄາມມັນຮຸນແຮງ ບໍ່ອາດຈະເອົາໄປໄດ້ໃນເວລານັ້ນຈຶ່ງໄດ້ຝັງຊາກສົບເຊື້ອງໄວ້. ເຂົາເຈົ້າເອົາເສື້ອຜ້າບາງຢ່າງເມືອບ້ານນຳ ແລ້ວເຮັດຕູບທານຢູ່ແຄມບ້ານຊຶ່ງປັ້ນດ້ວຍດິນເປັນຮູບສີ່ແຈສາກ, ຕີນຕູບທານກວ້າງປະມານສອງວາ, ຈອມຕູບທານກວ້າງປະມານໜຶ່ງວາສອງສອກ, ມຸງດ້ວຍໄມ້ປ່ອງຜ່າເຄິ່ງແລ້ວຄົບກັນ, ຕູບທານມີສີ່ເສົາ ແລະມີການຄວັດລວດລາຍຢ່າງງົດງາມ ຕູບທານມີຂອບລຸ່ມ ແລະ ເທິງ ເພື່ອຫ້ອຍຫົວງົວຫົວຄວາຍ, ເຄື່ອງຂອງທານຕ່າງໆ, ເພື່ອບໍ່ໃຫ້ດວງວິນຍານໄປຕາກແດດຕາກຝົນເຮັດໃຫ້ເປັນບ່ອນພົວພັນລະຫວ່າງມະນຸດກັບຈິດວິນຍານຕາມຄວາມສຳນຶກ.

ຫຼັງຈາກເສັດສິ້ນການເຮັດທານ, ການກິນທານນ້ອຍເພື່ອຜູ້ຕາຍນັ້ນມີບ່ອນເພິ່ງຕົນເອງ, ຈຶ່ງຈະບໍ່ມາຊິ້ນຢູ່ກັບຄົນ. ໃນເມື່ອຮອດສອງສາມປີຈຶ່ງໄປຂຸດເອົາກະດູກເຂົ້າຕູບທານໃຫຍ່, ໃນເມື່ອຄົນຕາຍໄດ້ຮັບການເອົາໃຈໃສ່ທຸກຢ່າງແລ້ວ ດວງວິນຍານຂອງຜູ້ຕາຍມີຄວາມຜາສຸກແລ້ວຫຼັງຄວາມຕາຍຈະມາຄຸ້ມຄອງເອົາຊີວິດ ຄວາມຢູ່ເຢັນເປັນສຸກຂອງຄອບຄົວຜູ້ທີ່ຍັງມີຊີວິດພາໃຫ້ຮັ່ງມີພະຍາດໂລຄາບໍ່ມີ. ເລື່ອງຄົນກະຕູສືບຕໍ່ສ້າງກຸສົນຜົນບຸນໃຫ້ແກ່ຜູ້ທີ່ຕາຍ ໃນຄືນຕໍ່ມາຄົນຕາຍກໍ່ມາສູນຄອບຄົວດ້ວຍຄວາມຝັນວ່າຕົນເອງໄດ້ຮັບໄດ້ກິນແລ້ວ. ຕູບທານເປັນເລື່ອງຮີດຄອງປະເພນີທີ່ທຸກຄົນປະຕິບັດມາ ເປັນການພົວພັນດ້ວຍຮູບການອະທິຖານ ຄົນບູຮານກໍ່ຄືຄົນຍຸກປະຈຸບັນຍັງເຊື່ອຖືຢ່າງສູງ.

ຕູບທານແມ່ນປະຫວັດການຂອງທາດບູຊາກະດູກ, ບູຊາໂລງສົບ, ເປັນນ້ຳຈິດນ້ຳໃຈຂອງຄົນຍັງມີຊີວິດສະແດງເຖິງຄວາມຮູ້ບຸນຄຸນຕໍ່ປູ່ຍ່າຕາຍາຍ ພໍ່ແມ່ທີ່ມີຄຸນງາມຄວາມດີມາແລ້ວ (ພາສາກະຕູວ່າ ປົງ) ທຸກຄົນທີ່ຕາຍໄປແລ້ວນັ້ນຕ້ອງເອົາໄວ້ຢູ່ໃນທາດ, ແຕ່ມີບາງຕະກຸນບໍ່ໄດ້ເອົາໄວ້ຢູ່ໃນທາດ ແມ່ນພວກທີ່ບໍ່ມີຕະກຸນຊຶ່ງເປັນຂ້າທາດຂອງຜູ້ອື່ນ, ເປັນລູກສະໄພ້, ເດັກນ້ອຍ, ຄົນຮັບໃຊ້, ຄົນຕາຍທຸງ, ຕາຍຮ່າ ພວກຕາຍແບບນີ້ຝັງລົງດິນໝົດ.

## 13.5. ທ້າວ ຕຣິກໄປກ້ານກົບ

ຕາມປະເພນີຂອງຄົນກະຕູແລ້ວ, ໃນເມື່ອຕົກລະດູຮ້ອນນັ້ນສັດເຄິ່ງບົກເຄິ່ງນ້ຳມັກຈະລົງຢູ່ໃກ້ແມ່ນ້ຳລຳທານໂດຍສະເພາະແມ່ນກົບ, ເຂັຍ, ແລນ ແລະ ງູເປັນຕົ້ນ. ເຂົາເຈົ້າມັກຈັບສັດຈຳພວກໄດ້ ເລື້ອຍໆໃນເມື່ອໃກ້ຈະຮອດລະດູການນີ້ ຫຼືຍາມນີ້ຊາວບ້ານກັບມາແຕ່ເຮັດໄຮ່ເຮັດສວນ ມັກຈະມາເຕົ້າໂຮມກັນຢູ່ກາງເດີ່ນບ້ານເພື່ອໂອ້ລົມກັນ ເວົ້າສູ່ກັນຟັງໃນເລື່ອງການດຳລົງຊີວິດໃນອະດີດ ແລະອະນາຄົດ.

ພໍ່ເຖົ້າກຣິງ ລາວມີບົດຮຽນຫຼາຍໃນວິຊາຫາກິນ ຊຶ່ງລາວເລົ່າເລື່ອງໃຫ້ຜູ້ອື່ນຟັງວ່າ : ຕອນ ເພິ່ນເປັນບ່າວນັ້ນ ມັກຈະໄປກ້ານກົບຂຽດໃນຍາມລະດູຮ້ອນ, ໄປກ້ານຕາມລຳຫ້ວຍ, ລຳນ້ຳມັກຈະເຫັນກົບຢູ່ຕາມແຄມຫ້ວຍ, ງອຍຢູ່ເຄືອໄມ້ ງອຍຢູ່ເທິງໂງ່ນຫີນຕູດປູດຕອດ ປອດພັບຕາເຫຼືອມມັບ ແມບ, ຂ້ອຍຄຸບເອົາໆຢ່າງສະບາຍ, ໃນຄືນນັ້ນຂ້ອຍໄດ້ກົບຈົນເຕັມ ກະຕ່າ ພວກນັ່ງຟັງໃຜໆກໍ່ສົນໃຈຫຼາຍ. ແຕ່ຜູ້ສົນໃຈຫຼາຍແມ່ນທ້າວຕຣິກ ເປັນຜູ້ນັ່ງທາງຂ້າງພໍ່ ເຖົ້ານັ້ນເອງ, ທ້າວຕຣິກ ຄິດວ່າຕົນເອງບໍ່ທັນມີປະສົບປະການເທື່ອ ໃນຊີວິດໄວໜຸ່ມເໝືອນພໍ່ ເຖົ້າ. ໃນມື້ໜຶ່ງ ລາວອອກຈາກບ້ານໄປ ແລ້ວຂຶ້ນພູເພື່ອໄປຊອກຫາໄມ້ແປກເອົາມາໄຕ້ກ້ານກົບ ລາວຊອກຫາໄມ້ແປກຕາມຈອມພູເຈັ້ຍພູນັ້ນ ລາວກໍ່ໄດ້ໄມ້ແປກ ເພື່ອໄຕ້ກ້ານກົບລາວພາກພູມ ໃຈຫຼາຍ ແລະ ກໍ່ຟ້າວກັບເມືອບ້ານ ເພື່ອກະກຽມວຽກ ຍາມຄ່ຳທີ່ຈະໄປກ້ານກົບ.

ແສງແດດໄດ້ຫາຍຈາກໜ້າດິນໄປແລ້ວ ກໍ່ຕົກເປັນຍາມແລງມາ ທ້າວຕຣິກ ໄດ້ກະກຽມ ຢ່າງ ຂະໝຸກຂະໝຸມເກັບເອົາກົບໄມ້ແປກ, ພ້າ, ກັບໄຟເຫຼັກຍັດໃສ່ກະຕ່າ. ສ່ວນຜູ້ເປັນເມຍທີ່ວ ຍຸ້ມໆໃສ່ຜົວຢູ່ ຖ້າຈະຫ້ວງຢ້ານຜົວຈະເສຍໂຊກລາບກໍ່ເລີຍບໍ່ປາກຫຍັງ ທ້າວຕຣິກ ກະກຽມ ແລ້ວກໍ່ຟ້າວອອກຈາກເຮືອນໄປຫາຫ້ວຍນ້ຳ ໃນເມື່ອໄປເຖິງຫ້ວຍນ້ຳກໍ່ພໍດີຄ່ຳແລ້ວ. ລາວພວມ ກະກຽມຈະໄຕ້ໄຟເພື່ອອອກໄປກ້ານກົບ ແຕ່ລາວຫຼຽວແນມເບິ່ງທາງເໜືອທາງໃຕ້ ກໍ່ເຫັນແສງ ໄຟໄຕ້ກົບແລ້ວ ຍິບໆ ຍັບໆມີຫຼາຍຄົນແທ້. ລາວຮ້ອງໃສ່ຢ່າກ້ານລັດໜ້າຂ້ອຍເດີ ! ລາວໄຕ້ໄຟ ແລ້ວແລ່ນໄປຫາບ່ອນທີ່ເຫັນຮຸ່ງ ພັດຫາຍຕົວໄປ ແຕ່ບໍ່ເຫັນມີໃຜມາກ້ານກົບຈັກຄົນເລີຍ. ລາວ ກ້ານກົບໄປເລື້ອຍໆ ທັງຢືນແນມເບິ່ງໄປທາງໜ້າເຫັນຮຸ່ງຂຶ້ນອີກມັບແມບ ລາວຮ້ອງໃສ່ຢ່າກ້ານ ກົບລັດໜ້າຂ້ອຍເດີ ! ຂ້ອຍກ້ານກົບຄືກັນ, ລາວທັງແລ່ນໄປຫາທັງກ້ານກົບພ້ອມ ແລະ ທັງຈົ່ມ ວ່າແມ່ນໃຜແທ້ມາອິດສາບັງບຽດຂ້ອຍ ຢາກເຫັນໜ້າແມ່ນຜູ້ໃດແທ້? ເມື່ອໄປຮອດບ່ອນມີແສງ ຮຸ່ງກໍ່ບໍ່ເຫັນຄົນ ລາວຄິດວ່າໂອ ! ພວກຜີກ້ານກົບຈຶ່ງບໍ່ເຫັນໂຕມັນ.

ຫຼັງຈາກລາວຢູ່ກ້ານກົບໄດ້ດົນແລ້ວ ກໍ່ເປັນເວລາເດິກພໍດີ ແສງໄຟກ້ານກົບກໍ່ຫາຍໄປ ລາວຈຶ່ງຄ່ອຍອຸ່ນອ່ຽນກ້ານກົບແຕ່ພຽງຜູ້ດຽວ ແລະ ບໍ່ມີໃຜມາຍາດກ້ານກົບນຳຕົນເອງອີກແລ້ວ. ລາວພະຍາຍາມຊອກຫາກ້ານກົບຢ່າງຕັ້ງໜ້າ ແຕ່ເວລາກໍ່ໄດ້ລ່ວງກາຍໄປຮອດຍາມເດິກ ລາວ ຕ້ອງກັບເມືອບ້ານສາກ່ອນ, ລາວຍ່າງເຂົ້າເມືອບ້ານທັງຍິ້ມທັງຫົວຕະຫຼອດ ເພາະວ່າລາວ ມີຄວາມດີໃຈຫຼາຍທີ່ຕົນເອງມີຜົນສຳເລັດ ຮູ້ຈັກວິທີຊອກຫາກິນເປັນອາຊີບແລ້ວ. ໃນເມື່ອເມືອ ຮອດເຮືອນລາວບອກເມຍວ່າ ໄດ້ກົບສອງສາມໂຕໃນກະຕ່ານັ້ນເດີ ! ເມຍລາວເອົາກົບມາປີ້ງ ໄວ້ເປັນອາຫານຍາມທ່ຽງ. ໃນເມື່ອຮຸ່ງເຊົ້າມາ ຜົວເມຍກໍ່ພາກັນໄປໄຮ່ຜູ້ເປັນຜົວກໍ່ເລົ່າເລື່ອງຕົນ ເອງໄປກ້ານກົບຕະຫຼອດທາງໃຫ້ເມຍຟັງ ສ່ວນຜູ້ເປັນເມຍບໍ່ສົນໃຈລົມກັນກ່ຽວກັບເລື່ອງການ

ຊອກຢູ່ຫາກິນຕົນເອງ ແລ້ວລາວຈະເລົ່າເລື່ອງຜີກ້ານກົບຫາກິນໃຫ້ຜູ້ອື່ນຟັງ ເຂົາເຈົ້າອາດສົນໃຈຫຼາຍນຳຕົນເອງ.

ມື້ນີ້ໜຶ່ງເປັນລະດູການເຮັດໄຮ່ແລ້ວ ໃຜໆກໍ່ອອກມາຢູ່ກາງເດີ່ນບ້ານ ບາງຄົນກໍ່ເວົ້າເລື່ອງການເຮັດໄຮ່ ບາງຄົນກໍ່ເວົ້າເລື່ອງເຮັດສວນ, ບາງຄົນກໍ່ເລື່ອງຕຶກແຫໃສ່ມອງ ເຂົາເຈົ້າລົມກັນແບບບໍ່ມີໃຜຟັງໃຜ ແຕ່ໃນມື້ນັ້ນທ້າວຕຣິກມາຊ້າໜ້ອຍໜຶ່ງ ລາວເຫັນຊາວບ້ານເຕົ້າໂຮມກັນຫຼາຍຄົນ ໄປຫາບ່ອນເຕົ້າໂຮມກັນແລ້ວ ລາວເລີຍຖາມ ພວກເພິ່ນລົມກັນເລື່ອງຫຍັງ? ເຂົາເຈົ້າຕອບກັນວ່າ ລົມກັນຫຼາຍເລື່ອງ ເຈົ້າເປັນຫຍັງຄືມາຊ້າແທ້ ມີຫຍັງເວົ້າສູ່ກັນຟັງລະບໍ? ເອີ! ຄັນໃຫ້ຂ້ອຍເວົ້າກໍ່ບໍ່ຍາກ ຂ້ອຍຈະເວົ້າເລື່ອງຂ້ອຍໄປກ້ານກົບໃນຄືນນັ້ນສູ່ຟັງ, ລາວເລົ່າໄປເລື່ອງວິທີຈັບກົບ ກ້ານກົບ ແລະ ບ່ອນກົບຢູ່ແນວໃດ? ແຕ່ວ່າຂ້ອຍງຶດງໍ້ອີ່ຫຼີ ໃນກາງຄືນມື້ນັ້ນມີຜີກ້ານກົບ ທຳອິດຂ້ອຍຄິດວ່າຄົນກ້ານກົບ ຂ້ອຍຮ້ອງໃສ່ຢ່າກ້ານລັດໜ້າຂອງຂ້ອຍໆແລ່ນໄປເຖິງແລ້ວກໍ່ບໍ່ເຫັນໃຜ ຂ້ອຍຢ້ານ ແລະ ກະດຽມຄິງຫຼາຍ ລາວເວົ້າສຸດແລ້ວ ເຂົາເຈົ້າກໍ່ໂຫໃສ່ແລ້ວເວົ້າໃສ່ວ່າມຶງໂງ່ຫຼາຍ ເຂົາເຈົ້າຫົວໃສ່ຢ່າງສະອຶກສະອື້ນ ລາວເວົ້າວ່າ ຂ້ອຍເຫັນແສງຮຸ່ງແທ້ ພວກເຈົ້າຫົວເຮັດຫຍັງ? ເຂົາເຈົ້າເວົ້າວ່າບັກຕຣິກ ສິ່ງທີ່ມຶງເຫັນນັ້ນແມ່ນແສງແມງທິງຫ້ອຍ ມັນອອກຫາກິນຍາມກາງຄືນ ເຂົາເຈົ້າລົມກັນຈົນຄ່ຳກໍ່ພໍດີ ມີແສງແມງທິງຫ້ອຍບິນອອກມາ ເຂົາເຈົ້າບອກໃຫ້ລາວເບິ່ງນັ້ນເດ່ ຜີກ້ານກົບ ເຈົ້າເຫັນບໍ່? ນັບຕັ້ງແຕ່ນັ້ນມາ ທ້າວຕຣິກ ຮູ້ຈັກແສງແມງທິງຫ້ອຍ.

ໃນເຊົ້າມື້ອື່ນມາຜົວເມຍກໍ່ຜິດກັນ ຜົວເວົ້າໃຫ້ເມຍເປັນຫຍັງ? ຄ່ອຍລົມກັນເລື່ອງຂ້ອຍໄປ ກ້ານກົບເຈົ້າກໍ່ບໍ່ບອກຂ້ອຍວ່າ ສິ່ງທີ່ເຈົ້າເຫັນນັ້ນແມ່ນແສງແມງທິງຫ້ອຍ ເຮັດໃຫ້ຂ້ອຍເສຍໜ້າ ເສຍຕາ ເຂົາເຈົ້າຫົວຂວັນຂ້ອຍ ເມຍເວົ້າວ່າດີແລ້ວຄົນເຮົາມີຄວາມໂງ່ ຈຶ່ງເປັນຄົນສະຫຼາດ, ລາວໄດ້ຍິນເມຍເວົ້າແນວນັ້ນ ລາວກໍ່ດີໃຈຫຼາຍເພາະວ່າລາວຈະປ່ຽນແປງຈາກຄົນໂງ່ຈ້າເປັນຄົນສະ ຫຼາດ, ນັບຕັ້ງແຕ່ນັ້ນມາ ທ້າວຕຣິກ ກໍ່ເປັນຄົນສະຫຼາດສະຫຼຽວ ໃຜໆກໍ່ເຄົາລົບນັບຖື ລາວເວົ້າເລື່ອງຫຍັງ? ແມ່ນເລື່ອງຄົນອື່ນບໍ່ຮູ້ຈັກ ແລະ ນັບຕັ້ງແຕ່ນັ້ນມາເມຍໄດ້ຍິນຜົວລົມເລື່ອງອັນໃດ? ກໍ່ບອກຜົວໂລດວ່າ ເລື່ອງຖືກຕ້ອງ ແລະ ເລື່ອງບໍ່ຖືກຕ້ອງ ເຮັດໃຫ້ຜົວ ແລະ ເມຍກໍ່ມີຄວາມສະຫຼາດຄືກັນ.



ບ້ານຖຸ໊ເດັ່ງ, ເມືອງກະລຶມ



ທ່ານ ຄໍາເລື່ອນ ສຸລາວັນ

ກໍາລັງອະທິບາຍຄໍາສັບ ພາສາກະຕູ



ເດັກນັກຮຽນເຜົ່າກະຕູ ບ້ານດອນສາ ເມືອງທ່າແຕງ ແຂວງເຊກອງ

ຊິດເຊ

CIDSE

ສະໜັບສະໜູນທຶນໃນການຈັດພິມໂດຍ: ອົງການຊິດເຊ-ລາວ

ສະຫງວນລິຂະສິດ

ພິມຄັ້ງທຳອິດ ຈຳນວນ 1,000 ຫົວ